# I/ ຫຼັກພື້ນຖານທີ່ສຳຄັນທີ່ສຸດ G-1.0000

## 1/ ວ່າດ້ວຍສີສະຂອງຄຣິສຕະຈັກ **G-1.0100**

### ພຣະຄຣິສ ຄືສີສະຂອງຄຣິສຕະຈັກ.

ອຳນາດທຸກຢ່າງໃນສວັນ ເທິງແຜ່ນດິນໂລກ ໄດ້ຖືກມອບໃຫ້ແກ່ພຣະເຢຊູຄຣິສ ໂດຍພຣະເຈົ້າອົງສູງສຸດ, ຜູ້ຊຶ່ງ ເປັນຜູ້ເອົາພຣະຄຣິສຟື້ນຄືນມາຈາກຕາຍ ແລະແຕ່ງຕັ້ງໃຫ້ພຣະອົງມີອຳນາດເໜືອສິ່ງສາຣະພັດ ແລະເໜືອ ນາມຊື່ໃດໆທີ່ມີ, ບໍ່ພຽງແຕ່ໃນຍຸກສະໄໝນີ້ ແຕ່ໃນສະໄໝໜ້າ ຊຶ່ງກຳລັງຈະກ້າວເຂົ້າມານັ້ນດ້ວຍ. ພຣະເຈົ້າໄດ້ຊົງ ມອບທຸກສິ່ງ ໃຫ້ຢູ່ພາຍໃຕ້ ການນຳຂອງພຣະຄຣິສ ແລະໄດ້ໃຫ້ພຣະອົງເປັນສີສະຂອງຄຣິສຕະຈັກ, ຊຶ່ງປຽບເໝືອນ ພຣະກາຍຂອງພຣະອົງ.

ພຣະຄຣິສໄດ້ເອີ້ນໃຫ້ຄຣິສຕະຈັກຕ້ອງເປັນຄຣິສຕະຈັກທີ່ມີຊີວິດຊີວາ, ພຣະອົງໄດ້ຊົງມອບອຸປກອນ ທຸກຢ່າງ ທີ່ຈຳເປັນ ແກ່ຄຣິສຕະຈັກໃນການປະກາດໃນໂລກ, ເພື່ອການເສີມສ້າງຕົວເອງແລະເພື່ອການຮັບໃຊ້ ພຣະເຈົ້າ. ພຣະຄຣິສ ໄດ້ສະຖິດຢູ່ ນຳຄຣິສຕະຈັກທັ້ງທາງດ້ານພຣະຄຳ ແລະດ້ານພຣະວິນຍານ. ມີພຽງພຣະຄຣິສ ອົງດຽວເທົ່ານັ້ນທີ່ເປັນຜູ້ປົກຄອງ, ສິດສອນ, ເອີ້ນຮຽກ, ແລະຊົງໃຊ້ຄຣິສຕະຈັກຕາມພຣະປະສົງ, ຕາມການສະແດງ ອຳນາດຂອງພຣະອົງໂດຍການທຳງານຮັບໃຊ້ຂອງ ສຸພາບ ສັດຕຣີ ແລະສຸພາບບຸຣຸດ ເພື່ອການກໍ່ສ້າງ ແລະເສີມ ຂະຫຍາຍ ພຣະຣາຊອານາຈັກຂອງພຣະອົງ.

ພຣະຄຣິສ ໄດ້ມອບຄວາມເຊື່ອ ແລະຊີວິດໃຫ້ແກ່ຄຣິສຕະຈັກຂອງພຣະອົງ, ມອບຄວາມເປັນອັນນຶ່ງອັນ ດຽວກັນ ແລະການປະກາດ, ມອບໝາຍເຈົ້າໜ້າທີ່ຮັບໃຊ້ ແລະກົດຣະບຽບພິທີການຕ່າງໆໃຫ້ຄຣິສຕະຈັກ. ຕາມພຣະ ປະສົງຂອງພຣະຄຣິສ ກ່ຽວກັບຄຣິສຕະຈັກໄດ້ຖືກອະທິບາຍຣະອຽດແລ້ວຢູ່ໃນພຣະຄຳພີ ແລະເປັນສິ່ງທີ່ຈະຕ້ອງ ປະຕິບັດຕາມ. ໃນການນະມັສການ ແລະການຮັບໃຊ້ພຣະເຈົ້າ ແລະການປົກຄອງຄຣິສຕະຈັກ, ທຸກຢ່າງຈະຕ້ອງ ອີງຕາມຣະບຽບການໂດຍອີງໃສ່ພຣະຄຳພີ ດ້ວຍເຫດຜົນ ແລະການພິຈາຣະນາທີ່ຣະອຽດ: ໂດຍພາຍໃຕ້ການນຳພາຂອງ ພຣະວິນຍານບໍຣິສຸດ.

ໃນການອີງໃສ່ການຢັ້ງຢືນຂອງຄຣິສຕຽນໃນສະໄໝເດີມທີ່ບອກວ່າ ພຣະເຢຊູ ຄືພຣະເຈົ້າ, ຄຣິສຕະຈັກ ຈະຕ້ອງຍອມຮັບວ່າ ພຣະອົງຊົງເປັນຄວາມຫວັງ ແລະຄຣິສຕະຈັກ ຊຶ່ງໝາຍເຖິງພຣະກາຍຂອງພຣະອົງນັ້ນ, ຈະຕ້ອງ ຢູ່ໃຕ້ ອຳນາດຂອງພຣະອົງ ແລະສາມາດມີອິສະຣະພາບໃນການດຳຣົງຊີວິດ, ແລະເຕັມໄປດ້ວຍຄວາມຊົມຊື່ນຍິນດີ ໃນຄວາມຈິງແຫ່ງ ພຣະຄຸນຂອງພຣະເຈົ້າ.

## 2/ ວ່າດ້ວຍ ຈຸດປະສົງອັນຍິ່ງໃຫຍ່ຂອງຄຣິສຕະຈັກ **G-1.0200**

### ຈຸດປະສົງອັນຍິ່ງໃຫຍ່ຂອງຄຣິສຕະຈັກ.

ຈຸດປະສົງອັນໃຫຍ່ຂອງຄຣິສຕະຈັກກໍຄື ການປະກາດຂ່າວປະເສີດເລື້ອງການໄຖ່ໃຫ້ພົ້ນຂອງມະນຸດ, ເປັນ ສະຖານທີ່ພັກພາ ອາສັຍ, ເປັນບ່ອນອົບຮົມສັ່ງສອນ ແລະເປັນສະຖານທີ່ສຳພັນຊຶ່ງກັນແລະກັນຂອງໄພ່ພົນຂອງ ພຣະເຈົ້າໃນດ້ານວິນຍານຈິດ,ການຢຶດຖື ຄວາມສັກສິດ ໃນການນະມັສການພຣະເຈົ້າ, ການຮັກສາຄວາມຈິງ, ການສະໜັບສະໜູນຄວາມຖືກຕ້ອງແລະຍຸຕິທັມ ຂອງສັງຄົມ, ແລະການ ສະແດງໃຫ້ເຫັນພຣະຣາຊອານາຈັກຂອງ ພຣະເຈົ້າຕໍ່ໂລກ.

## 3/ ວ່າດ້ວຍ ປະວັດສາດແຫ່ງຣະບຽບການພື້ນຖານຂອງຄຣິສຕະຈັກ G-1.0300

ປະວັດສາດແຫ່ງຣະບຽບການພື້ນຖານຂອງຄຣິສຕະຈັກ.

ໃນການອະທິບາຍກ່ຽວກັບ ຮູບແບບແຫ່ງການປົກຄອງ, ການນະມັສການ, ແລະວິນັຍຂອງຄຣິສຕະຈັກ, ຄະນະ ເພຣັສໄບທີຣຽນ ແຫ່ງສະຫະຣັດອາເມຣິກາ ໄດ້ມີການຢືນຢັນອີກຄັ້ງນຶ່ງ ຕໍ່ປະວັດສາດແຫ່ງຣະບຽບການພື້ນຖານຂອງຄຣິສຕະຈັກ ຊຶ່ງເປັນພາກສ່ວນນຶ່ງແຫ່ງມໍຣະດົກຕົກທອດຂອງພວກເຮົາໃນປະເທດນີ້ ແລະຊຶ່ງເປັນພື້ນຖານໃນດ້ານເນື້ອໃນ ແລະຣະບົບການ ໃນດ້ານການປົກຄອງຄຣິສຕະຈັກເພຣັສໄບທີຣຽນ, ສິ່ງນັ້ນກໍຄື:

## ວ່າດ້ວຍ ສິດທິໃນການພິຈາຣະນາຕັດສິນຄວາມ G-1.0301

1- "ພຣະເຈົ້າເທົ່ານັ້ນ ເປັນເຈົ້າເໜືອມະໂນທັມສຳນຶກ, ແລະເປັນຜູ້ທີ່ຢູ່ເໜືອທິສດີ ແລະເໜືອຄຳສັ່ງຂອງມະນຸດ ຊຶ່ງມີທຸກສິ່ງທີ່ເປັນສິ່ງກົງກັນຂ້າມກັບພຣະຄຳຂອງພຣະອົງ, ຫຼືໃນວຽກງານແຫ່ງ ຄວາມເຊື່ອແລະການນະມັສການ."

ຢ່າງໃດກໍຕາມ ພວກເຮົາກໍຍັງຍອມຮັບເອົາສິດທິໃນການຕັດສິນຄວາມຂອງບຸກຄົນ ໃນບັນຫາທຸກສິ່ງທີ່ກ່ຽວກັບ ການນັບຖືສາສນາ ແບບທົ່ວໄປຂອງໂລກ ແລະສິ່ງທີ່ມະນຸດຮັບໄດ້: ພວກເຮົາບໍ່ປາຖນາທີ່ຈະເຫັນສາສນາໃດໆ ຊຶ່ງຕ້ອງອາສັຍ ການຄ້ຳຈູນຈາກອຳນາດການປົກຂອງໂລກ, ອາດອາສັຍໄດ້ໃນການປົກປັກຮັກສາ ແລະໃຫ້ຄວາມປອດພັຍ ຊຶ່ງເປັນການ ເອກກະພາບກັບຄົນອື່ນໆທົ່ວໄປ ທີ່ໄດ້ຮັບຜົນປະໂຫຍດຈາກອຳນາດການປົກຄອງຂອງໂລກນັ້ນ.

## ວ່າດ້ວຍ ການຮ່ວມມືໃນການຕັດສິນຄວາມ G-1.0302

2 - ອີງຕາມຄວາມສອດຄ່ອງກົນກຽວກັນ ກ່ຽວກັບສິດທິພື້ນຖານທົ່ວໄປ, ແຕ່ລະຄຣິສຕະຈັກ ຈະເປັນແບບສະຫະພັນ ຫຼືແບບສະມາຄົມ ຈະຕ້ອງປະກາດໃຫ້ຮູ້ກ່ຽວກັບກຳໜົດການໃນການຮັບຮູ້ນັ້ນ ເຂົ້າສູ່ກຸ່ມວຽກງານຂອງຕົນ, ແລະຕ້ອງປະກາດ ກ່ຽວກັບ ຄຸນສົມບັດຂອງອາຈານ ແລະສະມາຊິກ ເຊັ່ນດຽວກັນກັບຣະບົບການທັງໝົດໃນການປົກຄອງພາຍໃນ ຊຶ່ງພຣະຄຣິສເປັນຜູ້ຊົງແຕ່ງຕັ້ງນັ້ນ. ໃນການຊົມໃຊ້ສິດທິນີ້ ພວກເຂົາຈະບໍ່ຕໍ່ຕ້ານ, ທຳຜິດ, ໃນການທີ່ຈະເຮັດໃຫ້ກຳໜົດການກ່ຽວກັບ ການຮັບຮູ້ນັ້ນຫຼວມເກີນໄປ ຫຼືຄັບແຄບເກີນໄປ. ເຖິງແມ່ນວໃດກໍຕາມ ໃນກໍຣະນີນີ້ ເຂົາຈະບໍ່ຝ່າຝືນຕໍ່ເສຣີພາບ ຫຼືສິດທິຂອງຄົນອື່ນ ຊຶ່ງຈະເປັນການກະທຳ ຫຼືນຳໃຊ້ທີ່ບໍ່ເໝາະສົມ ຂອງພວກເຂົາເອງ.

## ວ່າດ້ວຍ ເຈົ້າໜ້າທີ່ G-1.0303

3 - ດ້ວຍພຣະພອນຈາກພຣະຜູ້ໄຖ່ໃຫ້ພົ້ນຂອງເຮົາ ຊຶ່ງໄດ້ສະແດງໃຫ້ເຫັນໃນຄຣິສຕະຈັກທີ່ເປັນຕົນເປັນໂຕຢູ່ນັ້ນ ຊຶ່ງປຽບສະເໝືອນພຣະກາຍຂອງພຣະອົງ, ໄດ້ຊົງເລືອກເອົາເຈົ້າໜ້າທີ່ ຊຶ່ງບໍ່ໄດ້ໝາຍພຽງແຕ່ອາຈານທີ່ທຳການເທສນາ ໃນຂໍ້ ພຣະຄຳພີ ແລະສາມາດນຳພາໃນພິທີສິນຕ່າງໆເທົ່ານັ້ນ ແຕ່ໄດ້ທຳການປະຕິບັດວິນັຍ ເພື່ອຮັກສາໄວ້ຊຶ່ງຄວາມຈິງແລະໜ້າທີ່ ຊຶ່ງຕົກຢູ່ໃນຄວາມຮັບຜິດຊອບຂອງຜູ້ກ່ຽວ ແລະທັງໝົດຄຣິສຕະຈັກ ໂດຍອີງໃສ່ນາມຊື່ ຊຶ່ງພວກເຂົາກະທຳກິຈການນັ້ນ. ເພື່ອການຄວບຄຸມ ຫຼືຫຼີກລ່ຽງຄວາມຜິດພາດ ແລະຄວາມເຊື່ອມເສັຽຕ່າງໆ, ເພື່ອການສັ່ງເກດການ, ສິ່ງທັງໝົດນີ້ ມີກົດຣະບຽບບົ່ງໄວ້ໃນພຣະຄຳຂອງພຣະເຈົ້າ.

## ວ່າດ້ວຍ ຄວາມຈິງ ແລະຄວາມດີ G-1.0304

4- ຄວາມຈິງ ຄືທີ່ມາຂອງຄວາມດີ, ແລະພື້ນຖານແຫ່ງຄວາມດີ, ແນວໂນ້ມແຫ່ງການສົ່ງເສີມໃຫ້ມີຄວາມບໍຣິສຸດ, ໂດຍອີງໃສ່ຣະບຽບຂອງພຣະຜູ້ຊ່ອຍແລ້ວກໍຄື "ໂດຍເບິ່ງໝາກຜົນນັ້ນທ່ານຈະສາມາດຮູ້ຈັກພວກເຂົາໄດ້" ບໍ່ມີແນວ ຄິດໃດໆ ທີ່ຈະສາມາດ ເປັນອັນຕະຣາຍໃຫຍ່ຫຼວງ ຫຼືເປັນສິ່ງເຫຼວໄຫຼ ໄປກວ່າ ການທີ່ຈະນຳເອົາຄວາມຈິງ ແລະຄວາມ ບໍ່ສັດຈິງ ມາຕໍ່ສູ້ກັນໃນຣະດັບ ໃດນຶ່ງ ແລະບໍ່ນຳມາເປັນຜົນໃຫ້ຮູ້ເຖິງຄວາມຄິດຂອງຄົນໄດ້. ກົງກັນຂ້າມ ພວກເຮົາ ໄດ້ຖືກຮັບຮູ້ວ່າ ຄວາມເຊື່ອ ແລະການປະຕິບັດ, ຄວາມຈິງ ແລະໜ້າທີ່ ບໍ່ສາມາດທີ່ຈະແບ່ງແຍກຈາກກັນໄດ້. ຫາກບໍ່ ດັ່ງນັ້ນແລ້ວ, ມັນຈະບໍ່ມີຜົນໃຫ້ ເຫັນເຖິງ ຄວາມຈິງໄດ້ ຫຼືຍອມຮັບເອົາຄວາມຈິງນັ້ນໄດ້.

## ວ່າດ້ວຍ ຄວາມແຕກຕ່າງກັນໃນດ້ານທັສນະ G-1.0305

5 - ໃນເວລາທີ່ມີບັນຫາກັບສິ່ງຕ່າງໆທີ່ກ່າວມາຂ້າງເທິງນັ້ນ ພວກເຮົາຄຶດວ່າ ຄວນມີການທ້າງທາ ສິ່ງທີ່ແກ້ໄຂໄດ້ຢ່າງເໝາະສົມ ເຊັ່ນພວກທີ່ຖືກມອບໝາຍໃຫ້ເປັນຄູອາຈານ ທີ່ເປັນປາກກະບອກສຽງແຫ່ງຄວາມເຊື່ອ. ພ້ອມນີ້ ພວກເຮົາ ຍັງເຊື່ອອີກວ່າ ຄວາມຈິງ ແລະຮູບການເຊື່ອຖື ຊຶ່ງບຸກຄົນຜູ້ທີ່ມີຄຸນສົມບັດທີ່ດີ ແລະເປັນຜູ້ສຳຄັນ ອາດມີຄວາມແຕກຕ່າງກັນ. ແລະທັງໝົດນີ້ ພວກເຮົາຄິດວ່າ ມັນເປັນໜ້າທີ່ຂອງທັງສອງຝ່າຍຄື ກຸ່ມຄຣິສຕຽນ ແລະສັງຄົມ ທີ່ຈະພ້ອມກັນປະຕິບັດຄວາມ ອົດທົນຕໍ່ກັນແລະກັນ.

## ວ່າດ້ວຍ ການເລືອກຕັ້ງໂດຍຝູງຊົນ G-1.0306

6 - ຄຸນສົມບັດ, ມາຕຖານ, ແລະອຳນາດ ຂອງເຈົ້າໜ້າທີ່ໃນຄຣິສຕະຈັກ ຈະຕ້ອງອີງໃສ່ພຣະຄຳພີ, ແລະຮູບແບບ ອີງຕາມ ອຳນາດໜ້າທີ່ ແລະກົດທຳນະມູນທີ່ອະນຸຍາດເຂົາ. ການເລືອກເອົາບຸກຄົນທີ່ຢູ່ໃນສັງຄົມໃດນຶ່ງ ມາເປັນຜູ້ມີອຳນາດ ໃນການປະຕິບັດໜ້າທີ່ນີ້ ຕ້ອງແມ່ນບຸກຄົນທີ່ອອກມາຈາກສັງຄົມນັ້ນເອງ.

## ວ້າດ້ວຍ ອຳນາດຂອງຄຣິສຕະຈັກະ G-1.0307

7 - ອຳນາດທັງໝົດຂອງຄຣິສຕະຈັກ, ຈະເປັນການຖືກປະຕິບັດໂດຍອີງປະກອບທົ່ວໄປ ຫຼືໃນແບບລັກສະນະປະຕິບັດ ໂດຍອີງໃສ່ຜູ້ຕາງໜ້າກໍຕາມ, ຈະຕ້ອງເປັນອຳນາດທີ່ໃຊ້ໃນການຮັບໃຊ້ພຣະເຈົ້າ ແລະໃນການປະກາດ, ຊຶ່ງຈະເວົ້າໄດ້ວ່າ, ພຣະຄຳພີ ແມ່ນສິ່ງດຽວທີ່ເປັນກົດຣະບຽບແຫ່ງຄວາມເຊື່ອ ແລະກິຣິຍາມາຣະຍາດຕ່າງໆ ຊຶ່ງຈະບໍ່ມີການປົກຄອງຄຣິສຕະຈັກໃດໆ ຈະທຳທ່າສ້າງກົດໝາຍ ເພື່ອຈະນຳມາຮັບໃຊ້ສະຕິຄວາມຮູ້ສຶກໃນອຳນາດຂອງຕົນເອງ, ແລະທຸກການຕັດສິນບັນຫາຂອງ ພວກເຂົາ ຈະຕ້ອງອີງຕາມພຣະປະສົງຂອງພຣະເຈົ້າ. ສາມາດເວົ້າໄດ້ວ່າ ສະພາຕ່ຳທັງໝົດ ແລະສະພາບໍຣິຫານທັ້ງໝົດ ສາມາດກະທຳຄວາມຜິດອັນເນື່ອງມາຈາກຄວາມອ່ອນແອທີ່ບໍ່ສາມາດແຍກອອກຈາກຄວາມເປັນມະນຸດໄດ້, ແຕ່ກໍມີອັນຕະຣາຍ ອັນໃຫຍ່ຫຼວງ ຊຶ່ງເກີດມາຈາກການຊິງດີຊິງເດັ່ນໂດຍອ້າງອອກໃນການສ້າງກົດໝາຍ ແທນທີ່ຈະອີງໃສ່ສິດທິການຕັດສິນຄວາມ ໂດຍອີງໃສ່ກົດໝາຍທີ່ມີຢູ່ແລ້ວນັ້ນ, ແລະເປັນຢ່າງດຽວກັນກັບພວກທີ່ທຳການຢ້ຳຄືນກ່ຽວກັບພຣະຄຳພີ ເຖິງແມ່ນວ່າ ສິ່ງນີ້ເປັນການຖືກຕ້ອງກໍຕາມ ເປັນມະນຸດຈຳເປັນຈະຫຼີກລ່ຽງການຜິດພາດບໍ່ໄດ້.

## ວ່າດ້ວຍ ວິນັຍຂອງຄຣິສຕະຈັກ: G-1.0308

8 - ທ້າຍສຸດ, ຖ້າຫາກທຸກສິ່ງ ໃນດ້ານພຣະຄຳ ແລະພື້ນຖານຕ່າງໆຫາກມີການປະຕິບັດກົນກ່ຽວກັນແລ້ວ, ຄວາມເຂັ້ມແຂງ ແລະການສະຫນິດແໜ້ນໃນດ້ານວິນັຍ ຈະນຳກຽດຕິຍົດ ແລະຄວາມສຸກສົມຫວັງມາສູ່ຄຣິສຕະຈັກ. ເນື້ອງຈາກວ່າ ວິນັຍຂອງການຊຸມນຸມ ຈະຕ້ອງເປັນແບບຈະແຈ້ງຕໍ່ພິຕິກັມຂອງຄົນ ຫຼືໃນດ້ານຈິດວິນຍານກໍຕາມ ຈະຕ້ອງບໍ່ມີພົນ ສະທ້ອນມາຈາກອຳນາດຂອງໂລກ. ມັນຈະຕ້ອງມີພະລັງທີ່ມາຈາກຄວາມຍຸຕິທັມໃນຕົວຂອງມັນເອງ ຫຼືຈາກພາກສ່ວນນຶ່ງຂອງ ສາທາຣະນະ ແລະມາຈາກພຣະພອນທີ່ໄດ້ຈາກສີສະ ແຫ່ງຄຣິສຕະຈັກໃຫຍ່ໆໃນໂລກ.

## 4/ ວ່າດ້ວຍ ປະວັດແຫ່ງຫຼັກການພື້ນຖານໃນການປົກຄອງຄຣິສຕະຈັກ G-1.0400

## ວ່າດ້ວຍ ປະວັດແຫ່ງຫຼັກການພື້ນຖານໃນການປົກຄອງຄຣິສຕະຈັກ: G-10401

ຮາກຖານສຳຄັນໃນການປົກຄອງ ແລະຣະບຽບວິນັຍຂອງຊາວເພຣັສໄບທີຣຽນມີດັ່ງນີ້:

ຫຼາຍໆຄຣິສຕະຈັກຂອງພວກທີ່ມີຄວາມເຊື່ອ, ຮວບຮວມກັນ, ປະກອບເປັນຄຣິສຕະຈັກອັນນຶ່ງຂອງ ພຣະຄຣິສ ຊຶ່ງເອີ້ນຊື່ວ່າ ໂບດ, ສຽງສ່ວນຫຼາຍໃນຄຣິສຕະຈັກ ຄວນເປັນຜູ້ຄອບຄອງສຽງສ່ວນນ້ອຍ, ການຕັດສິນ ບັນຫາຂອງຄຣິສຕະຈັກ ສຽງສ່ວນໃຫຍ່ຄວນເປັນສິ່ງຕັດສິນໃນກິຈການທຸກພາກສ່ວນຂອງຄຣິສຕະຈັກ. ດ້ວຍເຫດນີ້ ການອຸທອນຕ່າງໆ ຕ້ອງມາຈາກ ທາງລຸ່ມຂຶ້ນສູ່ຂັ້ນເທິງ ຈົນກວ່າສິ່ງນັ້ນຈະຖືກພິຈາຣະນາດ້ວຍສະຕິປັນຍາ ແລະກາຍ ເປັນກະບວກສຽງອັນນຶ່ງອັນດຽວຕາງໜ້າໃຫ້ ຄຣິສຕະຈັກທັງໝົດ. ກິຈການພື້ນຖານ ແລະເຫດການດັ່ງກ່າວ ໄດ້ ສະແດງໃຫ້ເຫັນຕົວຢ່າງ ໃນວຽກງານຂອງຄຣິສຕະຈັກ ຂອງເລົ່າອັກຄະສາວົກ ແລະຂອງຄຣິສຕະຈັກເດີມ ຊຶ່ງຍອມຮັບ ເອົາສິ່ງນີ້ວ່າ ເປັນສິ່ງທີ່ມີສິດອຳນາດ ໃນຄຣິສຕະຈັກ.

## 5/ ວ່າດ້ວຍການອະທິບາຍກ່ຽວກັບກົດທຳມະນູນ G-1.0500

ກົດທຳມະນູນຂອງຄຣິສຕະຈັກ ເພຣັສໄບທີຣຽນ ແຫ່ງອາເມຣິກາ ປະກອບດ້ວຍ ປຶ້ມຫຼັກແຫ່ງຄວາມເຊື່ອ ແລະປຶ້ມກົດຣະບຽບ.

## ວ່າດ້ວຍ ສ່ວນປະກອບຂອງ ປຶ້ມແຫ່ງຫຼັກຄວາມເຊື່ອ G-1.0501

1/ ປຶ້ມແຫ່ງຫຼັກຄວາມເຊື່ອປະກອບດ້ວຍ

- ຄວາມເຊື່ອຕາມ ໄນຊີນ (The Nicence Creed)
- ຄວາມເຊື່ອຕາມເຫຼົ່າອັກຄະສາວົກ (The Apostles' Creed)
- ຫຼັກຄວາມເຊື່ອຂອງ ຂອງ ສກອດສ໌ (Scots Confession)
- ຄຳຖາມຄຳຕອບຂອງ ຮີແດລເບີກ (Heidelberg Catechism)
- ຫຼັກຄວາມເຊື່ອເທື່ອທີສອງ ຂອງ ແຮລເວີຕິກ (The Second Helvetic Confession)
- ຫຼັກການແຫ່ງຄວາມເຊື່ອຂອງ ແວສມິນສເຕີ (The Westminster Confession of Faith)
- ຄຳຖາມ ຄຳຕອບແບບຍາວ (The Large catechism)
- ຄຳຖາມ ຄຳຕອບແບບສັ້ນ (The Short Catechism)

ການປະກາດໃນຫຼັກສາສນາສາດຂອງ ບາຣເມນ (The Theological Declaration of Barmen)
ຫຼັກຄວາມເຊື່ອ ໃນປີ 1967 (The Confession of 1967)

## 2/ ວ່າດ້ວຍ ສິ່ງປະກອບໃນປຶ້ມກົດຣະບຽບ **G-1.0502**

ຣະບຽບການປົກຄອງ ( Form of Government)
ໜັງສືກ່ຽວກັບການນະມັສການ (Directory of Worship)
ຣະບຽບການກ່ຽວກັບວິນັຍ (Rule of Discipline)

# II/ ວ່າດ້ວຍຄຣິສຕະຈັກ ແລະຫຼັກຄວາມເຊື່ອຂອງຄຣິສຕະຈັກ G-2.0000

## ວ່າດ້ວຍຈຸດປະສົງ ໃນເນື້ອໃນຂອງຫຼັກຄວາມເຊື່ອ* **G-2.0100**

ຄຣິສຕະຈັກຂອງເພຣັສໄບທີຣຽນ ແຫ່ງອາເມຣິກາ ໄດ້ປະກາດກ່ຽວກັບຄວາມເຊື່ອ ແລະຢຶດຖືການເປັນພະຍານຂອງຕົນ ຕໍ່ພຣະຄຸນຂອງພຣະເຈົ້າໃນພຣະເຢຊູຄຣິສ ຢຶດໝັ້ນຫຼັກຄວາມເຊື່ອ ແລະການຍອມຮັບ ຊຶ່ງບັນທຶກໄວ້ໃນປຶ້ມຫຼັກຄວາມເຊື່ອ. ເນື້ອໃນກ່ຽວກັບຫຼັກຄວາມເຊື່ອນີ້, ຄຣິສຕະຈັກຕ້ອງໄດ້ປະກາດໃຫ້ສະມາຊິກ ແລະໂລກທັງຫຼາຍ ໄດ້ຮູ້ວ່າ ຕົນເອງເປັນໃຜ ຫຼືເປັນຫຍັງ, ມີຄວາມເຊື່ອກັນຢ່າງໃດ, ພົນໄດ້ຮັບນັ້ນມີຄືແນວໃດ.

ເນື້ອໃນດັ່ງກ່າວນີ້, ໄດ້ບົ່ງບອກເຖິງວ່າ ຄຣິສຕະຈັກ ແມ່ນກຸ່ມຄົນທີ່ຖືກຮັບຮູ້ໂດຍຍ້ອນການສະແດງອອກ ຫຼືຍ້ອນການກະທຳ.

ເນື້ອໃນດັ່ງກ່າວ ໄດ້ເປັນສິ່ງນຳພາຄຣິສຕະຈັກ ໃນການຮ່ຳຮຽນສຶກສາ ຫຼືໃນການແປພຣະຄຳພີ, ສິ່ງນີ້ໄດ້ສະລຸບໃຫ້ເຫັນສ່ວນປະກອບທີ່ສຳຄັນຂອງປະເພນີຊາວຄຣິສຕຽນ, ມັນໄດ້ເປັນສິ່ງຊີ້ນຳໃຫ້ຄຣິສຕະຈັກ ໃນການຢຶດໝັ້ນຕໍ່ທິສດີ, ມັນໄດ້ກາຍເປັນສິ່ງປະກອບອຸປກອນແກ່ຄຣິສຕະຈັກ ໃນວຽກງານການປະກາດ.

## ວ່າດ້ວຍ ເນື້ອໃນຂອງຫຼັກຄວາມເຊື່ອທີ່ໃຊ້ເປັນມາຕຖານສຳຮອງ **G-2.0200**

ເນື້ອໃນຂອງຫຼັກຄວາມເຊື່ອນີ້ ເປັນມາຕຖານສຳຮອງໃນຄຣິສຕະຈັກ ຊຶ່ງເປັນສິ່ງສະໜັບສະໜູນ ອຳນາດແຫ່ງພຣະ ເຢຊູຄຣິສ ແລະພຣະຄຳຂອງພຣະເຈົ້າ ດັ່ງທີ່ພຣະຄຳພີໄດ້ຢືນຢັນໃນການເປັນພະຍານຕໍ່ພຣະອົງ. ຢ່າງໃດກໍຕາມ, ໃນເວລາທີ່ ມາຕຖານແຫ່ງການ ຫຼັກຄວາມເຊື່ອກາຍມາເປັນສິ່ງລອງລົງມາຈາກພຣະຄຳພີແລ້ວ ມັນກໍຍັງສາມາດເປັນມາຕຖານ ຂອງຄຣິສຕະຈັກນັ້ນຢູ່. ບໍ່ແມ່ນສິ່ງທີ່ຂຽນອອກມາແບບເຜີນໆ ຫຼືສັ່ງຈອງເອົາ ຫຼືສິ່ງນີ້ບໍ່ສາມາດທີ່ຈະຖືກປະຕິເສດ ຫຼືເລີກລົ້ມ ໄປໄດ້ແບບງ່າຍດາຍ. ຄຣິສຕະຈັກ ຈະຕ້ອງຖືກກະກຽມເພື່ອການຖືກແນະນຳ ຫຼືໃນການໃສ່ວິນັຍຕໍ່ຜູ້ທີ່ຖືກສະຖາປະນາແລ້ວ ຊຶ່ງຜູ້ກ່ຽວໄດ້ປະຕິເສດຕໍ່ຫຼັກຄວາມເຊື່ອຂອງຕົນເອງຢູ່ໃນປຶ້ມຫຼັກແຫ່ງຄວາມເຊື່ອນັ້ນ. ຍິ່ງໄປກວ່ານັ້ນ, ການເຂັ້ມງວດ ໃນການແກ້ໄຂປ່ຽນແປງ ຫຼັກການຕ່າງໆ ຮຽກຮ້ອງໃຫ້ມີການປ່ຽນແປງໃນຫຼັກຄວາມເຊື່ອຂອງຄຣິສຕະຈັກຫຼາຍກ່ວາ ທີ່ຈະແກ້ກົດທຳມະນູນ ທີ່ກ່ຽວກັບການປົກຄອງ, ການນະມັສການ, ຫຼືວິນັຍ. ແນ່ນອນ, ຄຣິສຕະຈັກ, ໃນການເຊື່ອຟັງ ເດີນຕາມ ພຣະເຢຊູຄຣິສ, ຈະຕ້ອງມີການເປີດກວ້າງສູ່ຣະບົບປະຕິຮູບໃນພາກທິສດີ ແລະການປົກຄອງ. "ຄຣິສຕະຈັກແຫ່ງການປະຕິຮູບ ຈະຕ້ອງມີການປະຕິຮູບຕລອດເວລາ" ໂດຍອີງໃສ່ພຣະຄຳຂອງພຣະເຈົ້າແລະການຊີ້ງນຳຂອງພຣະວິນຍານບໍຣິສຸດ.

## ວ່າດ້ວຍ ຄວາມເຊື່ອຂອງຄຣິສຕະຈັກສາກົນ G-2.0300

ໃນຫຼັກຄວາມເຊື່ອຂອງຄຣິສຕະຈັກ, ຄະນະເພຣັສໄບທີຣຽນ ແຫ່ງອາເມຣິກາ ໄດ້ໃຫ້ຄວາມເຊື່ອຂອງຕົນເອງ ເປັນພະຍານຕໍ່ຫຼັກຄວາມເຊື່ອແຫ່ງຄຣິສຕະຈັກສາກົນ. ຫຼັກຄວາມເຊື່ອ ໄດ້ສະແດງໃຫ້ເຫັນເຖິງຄວາມເຊື່ອອັນນຶ່ງອັນດຽວ, ຄວາມບໍຣິສຸດ, ຄຣິສຕະຈັກສາກົນ, ແລະຄຣິສຕະຈັກແຫ່ງອັກຄະສາວົກ ໂດຍການຮັບຮູ້ອີງໃສ່ພຣະຄຳພີ ແລະຣະບຽບການ ພ້ອມທັງການຍອມຮັບເອົາຫຼັກຄວາມເຊື່ອຮ່ວມກັນ ຊຶ່ງໝາຍເຖິງ ຫຼັກຄວາມເຊື່ອຂອງ ໄນຊີນ ແລະເຫຼົ່າອັກຄະສາວົກ ໂດຍອີງໃສ່ນິຍາມກ່ຽວກັບຄວາມລຶກລັບແຫ່ງ ພຣະເຈົ້າຕຣີເອກະນຸພາບ ແລະການຊົງມາບັງເກີດ ເປັນມະນຸດຂອງພຣະທັມ ໂດຍທາງພຣະເຢຊູຄຣິສ.

## ວ່າດ້ວຍ ຄວາມເຊື່ອຂອງຊາວຄະນະປະຕິຮູບໂປຣແຕສຕັງ G-2.0400

ໃນຫຼັກແຫ່ງຄວາມເຊື່ອ, ຄຣິສຕະຈັກເພຣັສໄບທີຣຽນແຫ່ງອາເມຣິກາໄດ້ ຊີ້ບອກໃຫ້ເຫັນເຖິງ ການຢືນຢັນເຖິງການປະຕິຮູບຂອງຊາວໂປຣແຕສຕັງ. ເປົ້າໝາຍຂອງການຢັ້ງຢືນນີ້ ແມ່ນການເປີດເຜີຍໃຫ້ເຫັນພຣະຄຸນຂອງພຣະເຈົ້າໃນ ພຣະເຢຊູຄຣິສ ດັ່ງທີ່ໄດ້ສະແດງອອກໃນພຣະຄຳພີ. ຄຳຂວັນຂອງຊາວໂປຣແຕສຕັງກໍຄື -ພຣະຄຸນອັນດຽວ, ຄວາມຫວັງອັນດຽວ, ພຣະຄຳພີອັນດຽວ- ໄດ້ເປັນເບື້ອໃນສຳຄັນໃນຄວາມເຂົ້າໃຈ ແລະນຳພາໄຜ່ພົນຂອງພຣະເຈົ້າ.

## ວ່າດ້ວຍ ຫຼັກຄວາມເຊື່ອ ຂອງຄະນະປະຕິຮູບ G-2.0500

ໃນຫຼັກແຫ່ງຄວາມເຊື່ອ, ຄຣິສຕະຈັກເພຣັສໄບທີຣຽນແຫ່ງອາເມຣິກາໄດ້ສະແດງຄວາມເຊື່ອຂອງຕົນຕໍ່ການປະຕິຮູບ. ຈຸດກາງຂອງປະເພນີການປະຕິຮູບນີ້ ແມ່ນການຢັ້ງຢືນເຖິງ ຄວາມສັກສິດ, ຄວາມບໍຣິສຸດ, ແລະການຄຸ້ມຄອງຂອງພຣະເຈົ້າ ຊຶ່ງເປັນຜູ້ສ້າງ, ສະໜັບສະໜູນ, ປົກຄອງ, ແລະຊົງໄຖ່ໂລກໃຫ້ມີອິສະຣະພາບໃນຄວາມຊອບທັມ ແລະຄວາມຮັກ. ໃນການພົວພັນກັບຈຸດໃຈກາງຂອງຫຼັກຄວາມເຊື່ອຂອງຄະນະປະຕິຮູບຕໍ່ການປົກຄອງຂອງພຣະເຈົ້ານີ້ ກໍຍັງມີສິ່ງອື່ນທີ່ສຳຄັນໃນຣະບົບການຂອງການປະຕິຮູບນີ້ອີກເຊັ່ນ:

ການເລືອນເອົາໄຜ່ພົນຂອງພຣະເຈົ້າໃຫ້ເຂົ້າມາຮັບໃຊ້ພຣະອົງ ເຊັ່ນດຽວກັບການຮັບເອົາການໄຖ່ໃຫ້ພົ້ນ, ຄຳສັນຍາແຫ່ງຊີວິດ ໂດຍອາສັຍວິນັຍ ໃນຣະບຽບການຂອງຄຣິສຕະຈັກ ໂດຍອີງໃສ່ພຣະຄຳຂອງພຣະເຈົ້າ.

ການຖວາຍທີ່ຊື່ສັດທີ່ຫຼີກລ່ຽງຈາກການເສແສ້ງ ແລະຊອກຫາວິທີການໃຊ້ຂອງປະທານຂອງພຣະເຈົ້າຜູ້ຊົງສ້າງ,

ການຮັບຮູ້ເຖິງຄວາມນິສັຍຂອງມະນຸດຕໍ່ຮູບເຄົາຣົບແລະການປົກຄອງແບບຜະເດັດການຊຶ່ງສິ່ງດັ່ງກ່າວໄດ້ຮຽກຮ້ອງ ໃຫ້ໄຜ່ພົນຂອງພຣະເຈົ້າຕ້ອງເຂົ້າສູ່ການທຳງານເພື່ອການປະຕິຮູບສັງຄົມ ໂດຍການຊອກ ສແວງຫາຄວາມຍຸຕິທັມ ແລະການດຳຣົງຊີວິດ ໂດຍການເຊື່ອຟັງພຣະເຈົ້າ.

ດັ່ງນັ້ນ, ຫຼັກຄວາມເຊື່ອ ແລະການຍອມຮັບ ຂອງຄຣິສຕະຈັກນີ້ ຈຶ່ງໄດ້ມີຜົນສະທ້ອນເຖິງຈຸດຢືນຂອງຄຣິສຕະຈັກໃດນຶ່ງ ຊຶ່ງຢູ່ທ່າມກາງປະວັດສາດແຫ່ງໄຜ່ພົນຂອງພຣະເຈົ້າ. ນີ້ແມ່ນຜົນຈາກການອະທິຖານ, ຄວາມຄິດເຫັນ, ແລະປະສົບການ ໃນການດຳຣົງຊີວິດຢູ່ທ້າມກາງປະເພນີ. ມັນໄດ້ຊ່ວຍເສີມ ສ້າງຄວາມແຂງແກ່ນໃຫ້ແກ່ ຄຳປະຕິຍານຂອງ ບຸກຄົນ ແລະຊີວິດ ພ້ອມທັງການເປັນພະຍານແຫ່ງກຸນຊົນແຫ່ງຄວາມເຊື່ອດ້ວຍ.

# III/ ວ່າດ້ວຍ ຄຣິສຕະຈັກ ແລະກິຈການຂອງຄິຣສຕະຈັກ G-3.0000

## 1/ ກິຈການຂອງຄຣິສຕະຈັກ **G-3.0100**

ໄດ້ຖືກມອບໝາຍແບບວິທີໃຫ້ໂດຍການທຳງານຂອງພຣະເຈົ້າໃນໂລກ ຊຶ່ງໄດ້ບັນທຶກໄວ້ຢູ່ໃນພຣະຄຳພີ ແລະດ້ວຍຄວາມເຂົ້າໃຈໂດຍອາສັຍຄວາມເຊື່ອ.

## ວ່າດ້ວຍ ກິຈການຂອງພຣະເຈົ້າ **G-3.0101**

ພຣະເຈົ້າຊົງເປັນຜູ້ສ້າງຟ້າສວັນ ແລະແຜ່ນດິນໂລກ ພ້ອມທັງສ້າງມະນຸດໃຫ້ມີຮູບຮ່າງຄ້າຍຄືກັບພຣະອົງ, ພຣະອົງໄດ້ ສັ່ງໃຫ້ເບິ່ງແຍງດູແລທຸກສິ່ງທີ່ມີຊີວິດ; ພຣະເຈົ້າໄດ້ຊົງສ້າງ ຜູ້ຊາຍແລະຜູ້ຍິງ ໃຫ້ອາສັຍຢູ່ເປັນກຸ່ມຊົນ, ໂດຍຕອບສະໜອງ ພຣະອົງຜູ້ ຊົງສ້າງນັ້ນດ້ວຍການເຊື່ອຟັງ. ເຖິງແມ່ນມະນຸດຈະແຍກອອກຈາກການເປັນກຸ່ມຊົນ ແຍກກັບຜູ້ທີ່ ສ້າງຕົນມາ ຫຼືແຍກຈາກກັນເອງກໍຕາມ ພຣະເຈົ້າບໍ່ຊົງປະປ່ອຍຖິ້ມພວກເຂົາ, ແຕ່ດ້ວຍພຣະກະຣຸນາຄຸນ ຂອງພຣະອົງ ພຣະອົງໄດ້ເລືອກເອົາ ຄອບຄົວນຶ່ງເພື່ອຜົນປະໂຫຍດຂອງທັງໝົດໂລກ
ເພື່ອໃຫ້ເປັນຜູ້ສແວງຫາພຣະສັນຍາ ຂອງພຣະອົງ ໃນຊົນຊາດອິສຣາເອນ.

ພຣະເຈົ້າຊົງປົດປ່ອຍປະຊາຊົນອິສຣາເອນຈາກການໂສກເສົ້າ; ພຣະເຈົ້າໄດ້ໃຫ້ສັນຍາກັບອິສຣາເອນ ທີ່ຈະເປັນ ພຣະເຈົ້າຂອງພວກເຂົາ ແລະເປັນພຣະເຈົ້າຂອງຄົນທັງປວງ, ຊຶ່ງພວກເຂົາອາດຈະປະຕິບັດການຍຸຕິທັມ, ຄວາມຮັກ, ຄວາມເມດຕາ, ແລະເດີນກັບພຣະອົງດ້ວຍຖ່ອມໃຈ; ພຣະເຈົ້າ ພະເຊີນໜ້າກັບຊົນຊາດອິສຣາເອນ ດ້ວຍຄວາມຮັບຜິດຊອບຕໍ່ພຣະສັນຍາ ຂອງພຣະອົງ, ພິພາກສາມະນຸດ ຕໍ່ການບໍ່ເຊື່ອຂອງພວກເຂົາ ຊຶ່ງພ້ອມດຽວກັນ ກໍສະໜັບສະໜູນຄ້ຳຈູນເຂົາດ້ວຍພຣະຄຸນ ອັນສັກສິດແລະຍິ່ງໃຫຍ່ຂອງພຣະອົງ.

## ວ່າດ້ວຍ ພຣະເຈົ້າ ໃນພຣະເຢຊູຄຣິສ **G-3.0102**

ພຣະເຈົ້າໄດ້ຊົງກັບຊາດມາເກີດເປັນມະນຸດໃນພຣະເຢຊູຄຣິສ, ຜູ້ຊົງປະກາດຂ່າວປະເສີດແກ່ຜູ້ທຸກຍາກ, ປະກາດໃນ ການປົດປ່ອຍຜູ້ຖືກຄຸມຂັງ, ແລະປິ່ນປົວຄົນຕາບອດໃຫ້ເຫັນຮຸ່ງ, ເຮັດໃຫ້ຜູ້ເສັ່ງອົງຄະຍ່າງຟຣີ, ແລະປະກາດປີແຫ່ງການ ຄຸ້ມຄອງຂອງພຣະເຈົ້າ. ພຣະເຢຊູຄຣິສໄດ້ເຂົ້າມາເພື່ອຊອກສແວງຫາ ແລະຊ່ວຍເຫຼືອ ຜູ້ຫຼົງຫາຍ; ໃນການດຳຣົງຊີວິດ ແລະການວາຍພຣະຊົນຂອງພຣະເຈົ້າເພື່ອມະນຸດ ພຣະອົງໄດ້ຊົງສະແດງຄວາມຮັກ ຂອງພຣະເຈົ້າໃຫ້ແກ່ມະນຸດທຸກຄົນໄດ້ເຫັນ. ແລະການຄືນພຣະຊົນຂອງພຣະອົງ ເປັນການຢັ້ງຢືນເຖິງໄຊຊະນະຂອງ ພຣະເຈົ້າຕໍ່ ຄວາມຜິດບາບ ແລະຄວາມຕາຍ ແລະພຣະສັນຍາຂອງພຣະອົງທີ່ຈະສືບຕໍ່ການປາກົດຂອງພຣະອົງໃນໂລກ.

## ວ່າດ້ວຍ ພຣະວິນຍານບໍຣິສຸດ **G-3.0103**

ການຊົງໄຖ່ໃຫ້ພົ້ນຂອງພຣະເຈົ້າ ແລະກິຈການໃນການເຮັດໃຫ້ໂລກມີການຄືນດີກັນນັ້ນ ໄດ້ມີການສືບຕໍ່ ໂດຍຜ່ານ ການປາກົດ ແລະຣິດອຳນາດຂອງພຣະວິນຍານບໍຣິສຸດ ຊຶ່ງເປັນຜູ້ພະເຊີນໜ້າໂດຍກົງຕໍ່ບຸກຄົນ ແລະຕໍ່ສັງຄົມ ດ້ວຍອົງພຣະຄຣິສ ຊົງເປັນເຈົ້ານາຍແຫ່ງຊີວິດ ແລະເອີ້ນພວກເຂົາໃຫ້ຖິ້ມໃຈເກົ່າເອົາໃຈໃໝ່ ແລະເຊື່ອຟັງ ຂັບຕາມ ນ້ຳພຣະທັຍຂອງພຣະເຈົ້າ.

## ວ່າດ້ວຍ ຄຣິສຕະຈັກທີ່ເປັນພຣະກາຍຂອງພຣະຄຣິສ G-3.0200

2 / ຄຣິສຕະຈັກຂອງພຣະຄຣິສ ເປັນບ່ອນສະໜັບສະໜູນ ຄ້ຳຈູນ, ສະແດງໃຫ້ເຫັນສິ່ງທີ່ພຣະເຈົ້າຕັ້ງໃຈທີ່ຈະ ທຳກັບມະນຸດທັງຫຼາຍ. ຄືວ່າງວ່າ, ຄຣິສຕະຈັກ ໄດ້ຖືກເອີ້ນໃຫ້ເປັນເຄື່ອງໝາຍ ໃຫ້ເຫັນເຖິງຄວາມຈິງອັນໃໝ່ ຂອງໂລກ ຊຶ່ງພຣະເຈົ້າ ໄດ້ໃຫ້ມີໄວ້ສຳຣັບໄພ່ພົນຂອງພຣະເຢຊູຄຣິສ.

-ຄວາມຈິງອັນໃໝ່ທີ່ປາກົດໃຫ້ເຫັນໃນພຣະເຢຊູຄຣິສນັ້ນ ຄືມະນຸດຜູ້ໃໝ່, ການສ້າງສິ່ງໃໝ່, ການເລີ່ມຕົ້ນ ຊີວິດໃໝ່ ສຳຣັບມະນຸດໃນການດຳຣົງຊີວິດໃນໂລກ:

-ຄວາມບາບໄດ້ຖືກໃຫ້ອະພັຍ.

-ການຄືນດີກັນ ໄດ້ເຖິງທີ່ສຳເຣັດ.

-ຝາທີ່ກີດຂັ້ນໃນການເປັນສັດຕຣູກັນນັ້ນໄດ້ຖືກທັບມ້າງລົງ.

-ຄຣິສຕະຈັກຄືພຣະກາຍຂອງພຣະຄຣິສ, ທັ້ງຊີວິດທີ່ຮວມໝູ່ ແລະຊີວິດສະເພາະບຸກຄົນທີ່ເປັນສະມາຊິກ, ຊຶ່ງໄດ້ຖືກ ເອີ້ນໃຫ້ມີສະພາບທີ່ດີ ແລະມີທາດແທ້ທີ່ເປັນຄວາມຈິງ.

## ວ່າດ້ວຍ ຄວາມຮຽກຮ້ອງຕໍ່ຄຣິສຕະຈັກໃນກິຈກຳຂອງຕົນ G-3.0300

3 / ຄຣິສຕະຈັກ ໄດ້ຖືກຮຽກຮ້ອງໃຫ້ປະກາດຂ່າວປະເສີດແຫ່ງຄວາມພົ້ນທີ່ມາຈາກພຣະຄຸນຂອງພຣະເຈົ້າ ໂດຍອາສັຍ ຄວາມເຊື່ອໃນພຣະເຢຊູຄຣິສ ຊຶ່ງເປັນເຈົ້ານາຍ ແລະພຣະຜູ້ຊ່ວຍໃຫ້ລອດພຽງຜູ້ດຽວ. ການປະກາດນີ້ ໄດ້ມີມາທາງ ພຣະຄຳ ແລະພິທີສິນ:

ຍຸກໃໝ່ ໄດ້ເລີ່ມຕົ້ນແລ້ວ. ພຣະເຈົ້າໄດ້ຊົງສ້າງຊີວິດໃໝ່, ໃຫ້ອິສະຣະພາບແກ່ຜູ້ຖືກຈອງຈຳ, ອະພັຍໂທດຜິດບາບ, ເຮັດໃຫ້ພວກທີ່ແຕກມ້າງ ຄືນດີກັນ, ເຮັດໃຫ້ທຸກສິ່ງກາຍເປັນສິ່ງໃໝ່, ສິ່ງທັງໝົດນີ້ ຍັງກຳລັງກະທຳກັນໃນໂລກນີ້ຢູ່.

ຄຣິສຕະຈັກ ໄດ້ຖືກຮຽກຮ້ອງໃຫ້ປະກາດການປາກົດຂອງພຣະເຢຊູຄຣິສ, ນຳພາຄົນໃຫ້ໄປເຖິງການຖິ້ມໃຈເກົ່າ ເອົາໃຈໃໝ່, ຍອມຮັບເອົາພຣະອົງເປັນພຣະຜູ້ຊ່ວຍໃຫ້ລອດ,ເປັນເຈົ້າຊີວິດ, ແລະມີຊີວິດໃໝ່ ເພື່ອຕິດຕາມພຣະອົງ,

ຄຣິສຕະຈັກ ໄດ້ຖືກຮຽກຮ້ອງໃຫ້ເປັນຜູ້ປະກາດທີ່ຊື່ສັດຂອງພຣະຄຣິສ: ອອກໄປທົ່ວໂລກ, ເຮັດໃຫ້ທຸກຊາດເປັນ ລູກສິດ, ໃຫ້ບັບຕິສມາພວກເຂົາໃນພຣະນາມແຫ່ງພຣະບິດາ ພຣະບຸດ ແລະພຣະວິນຍານບໍຣິສຸດ, ສັ່ງສອນເຂົາໃຫ້ຖືຮັກສາ ສາຣະພັດທີ່ພຣະອົງຊົງສັ່ງ,

ສະແດງອອກໃນຄວາມຮັກຕໍ່ສະມາຊິກ ແລະຄົນອື່ນໆ ແລະໂດຍອີງໃສ່ຄຸນຄ່າແຫ່ງການມີຊີວິດຮ່ວມກັນໃນຄວາມຈິງອັນໃໝ່ໃນພຣະຄຣິສ, ມີສ່ວນຮ່ວມກັນໃນການນະມັສການ, ການຢູ່ຮ່ວມກັນ, ການເຕີບໃຫຍ່, ການປະຕິບັດ ເໜັ້ນໜັກໃນຊີວິດແຫ່ງການອະທິຖານ ແລະການຮັບໃຊ້ ພາຍໃຕ້ການຊົງນຳພາຈາກ ພຣະວິນຍານບໍຣິສຸດ,

ປະກອບສ່ວນ ໃນວຽກງານຂອງພຣະເຈົ້າໃນໂລກໂດຍການມີຊີວິດເພື່ອຄົນອື່ນ ໂດຍ:

ປິ່ນປົວ ແລະເຮັດໃຫ້ຄືນດີ ພ້ອມທັງປິ່ນປວດຄົນເຈັບປ່ວຍ,

ຮັບໃຊ້ຄວາມຕ້ອງການຂອງຄົນທຸກຍາກ, ຄົນເຈັບປ່ວຍ, ຄົນຢູ່ໂດດດ່ຽວ, ແລະຜູ້ອ່ອນແອ

ອອກໜ້າໃນການຕໍ່ສູ່ເພື່ອປົດປ່ອຍຄົນທັງຫຼາຍອອກຈາກຄວາມຜິດບາບ, ຈາກຄວາມຢ້ານກົວ, ຈາກຄວາມໂສກເສົ້າ, ຈາກການອຶດຫິວ, ແລະຈາກຄວາມບໍ່ຍຸຕິທັມ.

ອຸທິດຕົວເອງເພື່ອຮັບໃຊ້ພວກຄົນທີ່ພົບກັບຄວາມຍຸ້ງຍາກ.

ຊ່ວຍພຣະຄຣິສໃນການສ້າງຄວາມຍຸຕິທັມຂອງພຣະອົງ, ສັນຕິສຸກແລະຄວາມຮັກທີ່ປົກຄອງໂລກ.

## ວ່າດ້ວຍ ການຮຽກຮ້ອງໃຫ້ມີການກ້າສ່ຽງ ແລະໄວ້ວາງໃຈ G-03.0400

4/ ຄຣິສຕະຈັກ ຖືກຮຽກຮ້ອງໃຫ້ຮັບທຳໜ້າທີ່ນີ້ ເຖິງແມ່ນຈະຕ້ອງສ່ຽງຕໍ່ການສູນເສັຽຊີວິດກໍຕາມ, ການໄວ້ວາງໃຈ ໃນພຣະເຈົ້າເທົ່ານັ້ນທີ່ສາມາດນຳພາ ແລະໃຫ້ຊີວິດໄດ້, ແບ່ງປັນພຣະຄຳ, ແລະເຮັດໃຫ້ມີຜົນປະໂຫຍດແກ່ໂລກ, ຊຶ່ງມັນໄດ້ສະແດງໃຫ້ເຫັນເຖິງ ການເຫັນສິ່ງທີ່ເໜືອຈາກຊີວິດຂອງເຂົາ ຄືຄວາມຈິງແຫ່ງພຣະຄຣິສນັ້ນເອງ.

## ວ່າດ້ວຍ ການຮຽກຮ້ອງໃຫ້ມີການເປີດກວ້າງ G-3.0401

ຄຣິສຕະຈັກ ໄດ້ຖືກຮຽກຮ້ອງໃຫ້:

ເປີດກວ້າງ ໃຫ້ແກ່ການມາປາກົດຂອງພຣະເຈົ້າຕໍ່ຄຣິສຕະຈັກ ແລະຕໍ່ໂລກ, ໃຫ້ມີການເຊື່ອຟັງ ແລະຊົມຊື່ນຍິນດີໃນການນະມັສການພຣະເຈົ້າ;

ເປີດກວ້າງໃຫ້ແກ່ສະມາຊິກຂອງຕົນ ໂດຍການຍອມຮັບຕົວເອງ ເປັນພາກສ່ວນນຶ່ງຂອງກຸ່ມຊົນທີ່ແຕກຕ່າງກັນ, ຍອມຮັບເອົາຄວາມຈິງ ແລະໂດຍຄວາມເຊື່ອ ຕໍ່ກຸ່ມຊົນ ທັງຍິງ ແລະຊາຍໃນທຸກອາຍຸສັງຂານ, ຊົນຊາດຊົນເຜົ່າ, ແລະສະພາບແວດລ້ອມ, ແລະໂດຍການຕ້ອນຮັບເອົາການປາກົດຕົວຂອງກຸ່ມຊົນໃໝ່.

ເປີດກວ້າງຕໍ່ຄວາມອາດສາມາດ ແລະການສ່ຽງພັຍ ຂອງຮູບແບບແຫ່ງກິດທຳມະນູນ ເພື່ອສ້າງຄວາມເຊື່ອໝັ້ນໃນຄວາມເຊື່ອຢ່າງເຕັມປ່ຽມ ແລະການນຳໃຊ້ຮູບແບບດັ່ງກ່າວ ເພື່ອກິຈກັມຂອງພຣະເຈົ້າໃນໂລກ.

ເປີດກວ້າງ ຕໍ່ການສືບຕໍ່ປະຕິຮູບຂອງພຣະເຈົ້າຕໍ່ຄຣິສຕະຈັກທີ່ເປັນອັນນຶ່ງອັນດຽວກັນ, ດ້ວຍຄວາມຫວັງວ່າຈະກາຍເປັນ ເຄື່ອງມືທີ່ສຳຄັນແລະໃຊ້ການໄດ້ ຕໍ່ການປະກາດໃນໂລກ.

# IV ຄຣິສຕະຈັກ ແລະການເປັນອັນນຶ່ງອັນດຽວກັນ G-4.0000

## 1/ ວ່າດ້ວຍຄຣິສຕະຈັກ- ທົ່ວໄປ ແລະທ້ອງຖິ່ນ G-4.0100

## ວ່າດ້ວຍ ຄຣິສຕະຈັກທົ່ວໄປ G-4.0101

ຄຣິສຕະຈັກສາກົນປະກອບຂຶ້ນຈາກທຸກໆຄົນໃນແຕ່ລະປະເທດ ຮວມທັງເດັກຂອງພວກເຂົາ ທີ່ປະກາດຄວາມເຊື່ອ ໃນພຣະເຢຊູຄຣິສວ່າ ເປັນເຈົ້ານາຍ ແລະພຣະຜູ້ໂຜດໃຫ້ພົ້ນ ພ້ອມທັງອຸທິດຕົນເອງໃນການດຳຣົງຊີວິດດ້ວຍການນະມັສການ ພາຍໃຕ້ກົດຣະບຽບຂອງພຣະອົງ.

## ວ່າດ້ວຍ ຄິສຕະຈັກສາກົນ ແລະທ້ອງຖິ່ນ G-4.0102

ເນື່ອງຈາກທຸກຄົນບໍ່ສາມາດມາພົບພໍ້ກັນໄດ້ໃນສະຖານບ່ອນນຶ່ງບ່ອນດຽວກັນ ເພື່ອການນະມັສການ ແລະການຮັບໃຊ້ໄດ້ ດັ່ງນັ້ນມັນຈຶ່ງເປັນເຫດໃຫ້ມີການແບ່ງແຍກອອກເປັນຄຣິສຕະຈັກທ້ອງຖິ່ນ. ຄຣິສຕະຈັກທ້ອງຖິ່ນນັ້ນ ຕ້ອງເຂົ້າໃຈຕົວເອງວ່າ ເປັນພາກສ່ວນນຶ່ງຂອງຄຣິສຕະຈັກທົ່ວໄປ.

## ວ່າດ້ວຍ ຄຣິສຕະຈັກທ້ອງຖິ່ນ G-4.0103

ຄຣິສຕະຈັກທ້ອງຖິ່ນປະກອບຂຶ້ນໂດຍກຸ່ມຊົນ ແລະເດັກໆຂອງຕົນ ທີ່ຢູ່ໃນເຂດໃດນຶ່ງສະເພາະ, ຊຶ່ງເປັນຜູ້ປະກາດ ຄວາມເຊື່ອຂອງຕົນໃຫ້ພຣະເຢຊູຄຣິສເປັນເຈົ້ານາຍ ແລະເປັນພຣະຜູ້ຊ່ວຍໃຫ້ລອດ ແລະເປັນພວກຊຶ່ງເຕົ້າໂຮມກັນ ໃນການຮັບໃຊ້ພຣະເຈົ້າ ດັ່ງທີ່ໄດ້ບັງໄວ້ໃນພຣະຄຳພີ. ພວກດັ່ງກ່າວນີ້ ສາມາດປະກອບຕັ້ງຄຣິສຕະຈັກທ້ອງຖິ່ນ ຂຶ້ນໄດ້.

## ວ່າດ້ວຍ ຄຣິສຕະຈັກທ້ອງຖິ່ນຂອງເພຣັສໄບທີຣຽນ G-4.0104

ຄຣິສຕະຈັກເພຣັສໄບທີຣຽນທ້ອງຖິ່ນແຕ່ລະຄຣິສຕະຈັກ ຈະຕ້ອງມີການປົກຄອງຕາມກົດທຳນະນູນ. ເຈົ້າໜ້າທີ່ ຄຣິສຕະຈັກຕ້ອງປະກອບດ້ວຍ ອາຈານ, ຜູ້ປົກຄອງ, ແລະມັກຄະນາຍົກ. ການປົກຄອງ ແລະການນຳພາ ແມ່ນໜ້າທີ່ຮັບຜິດຊອບ ຂອງຄະນະປົກຄອງ. ຈະຕ້ອງປະຕິບັດສິດໜ້າທີ່ຮັບຜິດຊອບນີ້ ໃນນາມແຫ່ງກຸ່ມທ້ອງຖິ່ນ ໃນການຮັບໃຊ້ໝົດທຸກຄົນ ເພື່ອການ ຂະຫຍາຍຄຣິສຕະຈັກລວມ ແລະເພື່ອການຖວາຍກຽດແດ່ພຣະເຈົ້າ.

## 2 / ວ່າດ້ວຍ ຄວາມເປັນອັນນຶ່ງອັນດຽວກັນຂອງຄຣິສຕະຈັກ G-4.0200

## ວ່າດ້ວຍ ການຮ່ວມກັນໃນການປະກາດ G-4.0201

ຄວາມເປັນອັນນຶ່ງອັນດຽວກັນຂອງຄຣິສຕະຈັກ ແມ່ນຂອງປະທານທີ່ມາຈາກພຣະເຈົ້າ ຊຶ່ງສາມາດເຫັນໄດ້ຈາກການ ສະແດງອອກໃນຄວາມຊື່ສັດຕໍ່ການປະກາດຂອງມັນຊຶ່ງພຣະເຢຊູຄຣິສໄດ້ຊົງເອີ້ນໃຫ້ທຳນັ້ນ. ຄຣິສຕະຈັກ ແມ່ນກຸ່ມຊົນແຫ່ງ ຄວາມເຊື່ອ ທີ່ຊອກສແວງຫາການຂະຫຍາຍຂອບເຂດແຫ່ງຄວາມເຊື່ອຂອງຕົນ ເພື່ອກວມເອົາຄົນທັງໝົດ ແລະຈະບໍ່ສາມາດ ມີຄວາມຊົມຊື່ນຍິນດີໃນພົນປະໂຫຍດຂອງກຸ່ມຄຣິສຕຽນຂອງຕົນ ພຽງຜູ້ດຽວໄດ້.

## ວ່າດ້ວຍ ຄວາມເປັນອັນນຶ່ງອັນດຽວກັນ G-4.0202

ມີຄຣິສຕະຈັກດຽວ. ດັ່ງທີ່ພຣະຄຳພີໄດ້ບອກວ່າ ມີຮ່າງກາຍດຽວທີ່ຄຣິສຕະຈັກໄດ້ດຳຣົງຊີວິດພາຍໃຕ້ພຣະວິນຍານ ອົງດຽວ ຊຶ່ງເຮົາສາມາດຮູ້ໄດ້ໂດຍທາງພຣະເຢຊູຄຣິສ, ມັນເປັນການເຕືອນໃຫ້ເຮົາຮູ້ວ່າ "ມີເຈົ້ານາຍອົງດຽວ, ຄວາມເຊື່ອດຽວ, ບັບຕິສມາດຽວ, ພຣະເຈົ້າອົງດຽວຊຶ່ງເປັນພຣະບິດາຂອງມະນຸດທຸກຄົນ" (ເອເຟໂຊ 4:5-6)

### ວ່າດ້ວຍ ຄວາມເປັນອັນນຶ່ງອັນດຽວກັນທີ່ສາມາດເຫັນໄດ້ G-4.0203

ເຮົາສາມາດເຫັນການເປັນອັນນຶ່ງອັນດຽວກັນໄດ້ດ້ວຍການມີຫຼາຍກຸ່ມຄົນແຕກຕ່າງກັນ, ພອນສວັນ, ແລະຄວາມເຂົ້າ ອົກເຂົ້າໃຈຊຶ່ງກັນແລະກັນ ໄດ້ນຳພາໃຫ້ສາມາດໂຮມກັນໄດ້ ຊຶ່ງນີ້ເປັນເຄື່ອງໝາຍທີ່ສຳຄັນ ໃນການໂຮມກັນ ຂອງບັນດາໄຜ່ພົນຂອງພຣະເຈົ້າ. ເຊັ່ນດຽວກັນ, ມັນຍັງສະແດງອອກໃນຜົນສຳເຣັດໃນການ ຮ່ວມກັນນັ້ນ. ຍິ່ງໄປກວ່ານັ້ນ, ໃນເວລາມີການແບ່ງແຍກອອກ ເປັນຫຼາຍກຸ່ມຄະນະ ແລະບໍ່ມີການທຳລາຍການ ເຕົ້າໂຮມກັນນີ້, ພວກເຂົາໄດ້ບັງລັບຄຣິສຕະຈັກ ແລະໂລກເອົາໄວ້. ຄະນະ ເພຣັສໄບທີຣຽນ ແຫ່ງອາເມຣິກາ ໄດ້ຢັ້ງຢືນສືບຕໍ່ ປະວັດສາດຕໍ່ບັນດາຄຣິສຕະຈັກຂອງພຣະເຢຊູຄຣິສທັງໝົດ, ໄດ້ໃຫ້ຄຳໝັ້ນ ສັນຍາທີ່ຈະລຶບລ້າງ ສິ່ງທີ່ປົກບັງນັ້ນ ແລະຕ້ອງການທີ່ຈະຊອກສແວງຫາ ແລະຮ່ວມໄມ້ຮ່ວມມື ກັບຄຣິສຕະຈັກຕ່າງໆ ທີ່ເປັນອັນນຶ່ງ ອັນດຽວກັນໃນ ຄຣິສຕະຈັກສາກົນ. (G-15.0000)

## 3/ ວ່າດ້ວຍ ຫຼັກການສຳຄັນ ໃນການການປົກຄອງຂອງເພຣັສໄບທີຣຽນ G-4.0300

### ວ່າດ້ວຍ ນະໂຍບາຍຂອງເພຣັສໄບທີຣຽນ G-4.0301

ຄະນະເພຣັສໄບທີຣຽນແຫ່ງອາເມຣິກາ ໄດ້ຢືນຢັດ ໃນຈຸດເບື້ອງໃນແຫ່ງການອຸທິດຕົນຕໍ່ຄຣິສຕະຈັກສາກົນ, ການອຸທິດ ພິເສດໃນເບື້ອງໃນພື້ນຖານທີ່ສຳຄັນຂອງເພຣັສໄບທີຣຽນມີດັ່ງນີ້:

a ຄຣິສຕະຈັກສະເພາະທ້ອງຖິ່ນຂອງຄະນະເພຣັສໄບທີຣຽນແຫ່ງອາເມຣິກາ, ຈະຢູ່ທີ່ໃດກໍຕາມ, ຕ້ອງຮ່ວມກັນເປັນຄຣິສຕະຈັກອັນນຶ່ງອັນດຽວກັນຕາມກົດທຳມະນູນ.

b. ຄຣິສຕະຈັກນີ້ ຕ້ອງປົກຄອງໂດຍຄະນະປົກຄອງ (ຜູ້ປົກຄອງ ແລະອາຈານ)

c. ພວກຜູ້ປົກຄອງນີ້ຈະຕ້ອງຮ່ວມກັນໃນການປົກຄອງຕາມລຳດັບຂັ້ນ;

d. ພວກຜູ້ປົກຄອງ ບໍ່ພຽງແຕ່ສະທ້ອນໃຫ້ເຫັນເຖິງຄວາມປາຖນາຂອງມວນຊົນ, ແຕ່ຕ້ອງຊ່ວຍກັນຊອກ ສແວງຫາ ການປາກົດຕົວ ແລະນຳສເນີພຣະປະສົງຂອງພຣະເຢຊູຄຣິສ;

e. ການຕົກລົງບັນຫາຕ່າງໆຕ້ອງຜ່ານການລົງຄະແນນສຽງ ຊຶ່ງຕ້ອງໃຫ້ມີໂອກາດໃນການຕັດສິນບັນຫາ, ແລະສຽງສ່ວນຫຼາຍຄວນເປັນຝ່າຍນຳພາ;

f. ອົງການປົກຄອງຂັ້ນສູງ ຕ້ອງມີສິດທິໃນການເບິ່ງຄືນ ແລະຄວບຄຸມ ອົງການທີ່ຕ່ຳລົງມາ ແລະຕ້ອງມີ ອຳນາດ ໃນການຕິດສິນບັນຫາທີ່ຂັດແຍ້ງກັນໂດຍອີງຕາມເງື່ອນໄຂອ້າງອີງ, ການຮ້ອງຮຽນ, ຫຼືການອຸທອນ;

g. ພວກຜູ້ປົກຄອງຕ້ອງຖືກສະຖາປະນາໂດຍອຳນາດແຫ່ງອົງການປົກຄອງພຽງຜູ້ດຽວ;

h. ກ່ຽວກັບຄະນະກັມມະການນິຕິບັນຍັດຂອງຄຣິສຕະຈັກ ແມ່ນການແບ່ງເບົາສິທິອຳນາດ ເພື່ອການ ປະຕິບັດງານ ຮ່ວມກັນຂອງພວກຜູ້ປົກຄອງ ໃນອົງການປົກຄອງຕ່າງໆ;

i. ອົງການປົກຄອງເປັນຜູ້ເກັບກຳອຳນາດໃນການບໍຣິຫານເພື່ອໃຫ້ການທຳງານມີປະສິດທິພາບ ແລະອຳນາດນັ້ນ ໄດ້ຖືກມອບໝາຍໃຫ້ໂດຍອີງຕາມກົດທຳມະນູນຂອງຄຣິສຕະຈັກ.

## ວ່າດ້ວຍ ການຮອມກັນຂອງເພຣັສໄບທີຣຽນ G-4.0302

ຄຸນສົມບັດ ແຫ່ງຣະບຽບການຂອງຊາວເພຣັສໄບທີຣຽນແມ່ນການແບ່ງປັນອຳນາດ ແລະຄວາມຮັບຜິດຊອບຕໍ່ກັນ. ຮູບການໃນການປົກຄອງ, ເຖິງແມ່ນຈະມີອຳນາດເໜືອກວ່າ ຄຣິສຕະຈັກອັນນຶ່ງ ຫຼືຫຼາຍຄຣິສຕະຈັກກໍຕາມ, ຈະຕ້ອງເປັນສິ່ງເສີມສ້າງ ສາຍພົວພັນພາຍໃນການຈັດຕັ້ງນັ້ນ ເພື່ອສະແດງອອກຊຶ່ງຄວາມເປັນອັນນຶ່ງອັນດຽວກັນຂອງຄຣິສຕະຈັກ.

## ວ່າດ້ວຍ ຄວາມເອົາໃຈໃສ່ຕໍ່ປະວັດສາດ G-4.0303

ຮູບແບບການປົກຄອງຂອງເພຣັສໄບທີຣຽນ ໄດ້ມີການຮຽກຮ້ອງໃຫ້ສືບຕໍ່ ແລະຊື່ສັດໝັ້ນຄົງຕໍ່ມູນມໍຣະດົກຊຶ່ງຢູ່ ເບື້ອງຫຼັງຂອງຄຣິສຕະຈັກໃນສະໄມນີ້. ມັນຮຽກຮ້ອງໃຫ້ມີຄວາມເອກກະພາບໃນການເປີດກວ້າງ ແລະເຊື່ອໝັ້ນ ຕໍ່ກິຈການ ອັນໃໝ່ໆ ແຫ່ງກິຈກັມຂອງພຣະເຈົ້າໃນອະດີດຕະການ.

## ວ່າດ້ວຍ ຄວາມເອົາໃຈໃສ່ຕໍ່ການຮອມກຸ່ມ G-4.0304

ຮູບແບບການປົກຄອງແບບນີ້ ຖືກສ້າງຂຶ້ນໂດຍອາສັຍແສງສວ່າງແຫ່ງພຣະຄຳພີ ເພື່ອໃຫ້ຄຣິສຕະຈັກເປັນຣະບຽບ, ແຕ່ກໍບໍ່ຖືວ່າເປັນສິ່ງສຳຄັນທີ່ສຸດຕໍ່ການຍືນຍົງຄົງຕົວຂອງຄຣິສຕະຈັກແຫ່ງພຣະເຢຊູຄຣິສຫຼືບໍ່ໄດ້ຖືກຮຽກຮ້ອງໂດຍຊາວ ຄຣິສຕຽນທັງໝົດ.

## 4/ ວ່າດ້ວຍ ການແຕກຕ່າງ ແລະການເປີດກວ້າງ G-4.0400

## ວ່າດ້ວຍ ຄວາມແຕກຕ່າງ ໃນຮູບແບບ G-4.0401

ຄຣິສຕະຈັກ ເປັນບ່ອນເປັນພະຍານ ໃຫ້ແກ່ການເປັນອັນນຶ່ງອັນດຽວກັນໃນຄວາມເຊື່ອຂອງຄຣິສຕຽນຊຶ່ງຖືກເອີ້ນ ໃຫ້ມາຮັບໃຊ້ ແລະຕ້ອງຕອບສະໜອງຕໍ່ຄວາມແຕກຕ່າງກັນຢູ່ໃນຄຣິສຕະຈັກແລະໃນໂລກ. ດັ່ງນັ້ນການຮອມກຸ່ມກັນຂອງ ຄຣິສຕຽນໃນການນະມັສການ ແລະຣະບຽບການແຫ່ງການດຳຣົງຊີວິດຂອງເຂົາ ໄດ້ສະແດງອອກໃນຮູບແບບຕ່າງໆ, ໃນການ ປະຕິບັດ, ໃນພາສາ, ໂປຣແກມ, ການລ້ຽງເກືອ, ແລະການຮັບໃຊ້ ທີ່ເໝາະສົມກັບປະເພນີ ວັທນະທັມ ແລະຄວາມຕ້ອງການ.

## ວ່າດ້ວຍ ການເປີດກວ້າງຕໍ່ຄົນອື່ນໆ G-4.0402

ການເປັນອັນນຶ່ງອັນດຽວກັນຂອງພວກເຮົາໃນພຣະຄຣິສ ໄດ້ເຮັດໃຫ້ມີປະສິທິພາບ ແລະເປັນສິ່ງຕ້ອງການຂອງ ຄຣິສຕະຈັກ ເພື່ອການເປີດປະຕູແກ່ໝົດທຸກຄົນ ແລະແກ່ຄວາມຊຳນິຊຳນານທີ່ແຕກຕ່າງກັນ ແລະຂອງປະທານແຫ່ງໄຜ່ພົນ ຂອງພຣະເຈົ້າ ຊຶ່ງຮອມທັງພວກທີ່ຢູ່ໃນກຸ່ມຊົນທີ່ຢູ່ໃນອາຊີພແຫ່ງສິລປະແລະວິທະຍາສາດນຳດ້ວຍ.

### ວ່າດ້ວຍ ການປະກອບສ່ວນຢ່າງເຕັມປ່ຽມ G-4.0403

ຄະນະເພຣັສໄບທີຣຽນ ແຫ່ງອາເມຣິກາ ຈະຕ້ອງສະແດງອອກຢ່າງເຕັມສ່ວນ ຕໍ່ຄວາມຮັ່ງມີແຫ່ງການແຕກຕ່າງກັນ ຂອງສະມາຊິກ ແລະຕ້ອງໃຫ້ການສະໜັບສະໜູນອົງກາງານ ເພື່ອຈະໃຫ້ຄວາມໝັ້ນໃຈໃນການເປີດກວ້າງຍອມຮັບເອົາການນຳທັງໝົດ ໃນການມີຊີວິດຮ່ວມກັນ. ບຸກຄົນໃນກຸ່ມຊົນຊາດຕ່າງໆ, ຣະດັບອາຍຸຕ່າງໆ, ທັງສອງເພດ, ພວກທີ່ພິການຕ່າງໆ, ອາສັຍຢູ່ຖິ່ນຖານຕ່າງໆ, ມີຕຳແໜ່ງຕ່າງກັນໃນດ້ານສາສນາສາດຕ່າງກັນ ຊຶ່ງເຂົ້າຮ່ອງເຂົ້າ ຮອຍກັບ ປະເພນີແຫ່ງຊາວປະຕິຮູບ ເຊັ່ນດຽວກັນກັບພວກທີ່ຕ່າງກັນໃນດ້ານຄອບຄົວ( ແຕ່ງງານ, ເປັນໂສດ, ໝ້າຍ, ຮ້າງ )ຈະຕ້ອງມີການຮັບກັນ ໃຫ້ມີການປະກອບສ່ວນຢ່າງເຕັມປ່ຽມ ແລະມີສິດໃນການການສະແດງອອກຊຶ່ງການຕັດສິນ ບັນການຂອງ ຄຣິສຕະຈັກ 7 :ຊຈໃຂປຂຖດດໃ8

## V/ ວ່າດ້ວຍຄຣິສຕະຈັກ ແລະສະມາຊິກ G-5.0000

### 1/ ວ່າດ້ວຍ ຄວາມໝາຍຂອງການເປັນສະມາຊິກ G-5.0100

### ວ່າດ້ວຍ ການເປັນສະມາຊິກໃນຄວາມເຊື່ອ G-5.0101

ການສະເດັດມາປະສູດເປັນມະນຸດຂອງພຣະເຢຊູຄຣິສ, ການອາຍພຣະຊົນ, ແລະການຄືນພຣະຊົນຂອງພຣະອົງ ບໍ່ເປັນພຽງແຕ່ໜ້າທີ່ຂອງຄຣິສຕະຈັກທີ່ຈະຕ້ອງທຳການປະກາດເທົ່ານັ້ນ ແຕ່ເປັນການເຮັດໃຫ້ຄຣິສຕະຈັກຕ້ອງເຂົ້າໃຈເຖິງການ ເປັນສະມາຊິກນຳອີກດ້ວຍ. ບຸກຄົນຜູ້ນຶ່ງສາມາດເປັນສະມາຊິກທີ່ຫ້າວຫັນຂອງຄຣິສຕະຈັກໄດ້ໂດຍການເຊື່ອ ແລະຍອມຮັບເອົາ ພຣະເຢຊູຄຣິສເປັນເຈົ້ານາຍແຫ່ງຊີວິດ ແລະເປັນພຣະຜູ້ຊ່ວຍໃຫ້ລອດຂອງຕົນ. ການຮັບສິນບັບຕິສມາ ແລະການປະຕິຍານ ຍອມຮັບຄວາມເຊື່ອຂອງຕົນເອງຕໍ່ໜ້າຊຸມຊົນນັ້ນ ເປັນສັນຍາລັກທີ່ສາມາດສະແດງອອກໃຫ້ເຫັນໄດ້ ກ່ອນທີ່ຈະກ້າວເຂົ້າສູ່ການ ເປັນສະມາຊິກທີ່ຫ້າວຫັນຂອງຄຣິສຕະຈັກ.

ບຸກຄົນນຶ່ງທີ່ຈະເປັນສະມາຊິກຫ້າວຫັນຂອງຄຣິສຕະຈັກຄວນມີການປະຕິບັດດັ່ງນີ້: ປະຕິຍານ ແລະປະກາດຄວາມເຊື່ອ ຂອງຕົນເອງ, ຢໍ້າຄືນແລະຢືນຢັນເຖິງຄວາມເຊື່ອໃນພຣະຄຣິສຂອງຕົນ ຫາກຕົນເອງຮັບສິນບັບຕິສມາມາກ່ອນແລ້ວ, ຫຼືໂດຍການມີໜັງສືໂອນຍ້າຍສະມາຊິກມາຈາກຄຣິສຕະຈັກອື່ນ ທີ່ຕົນເອງເຄີຍເປັນສະມາຊິກຢູ່ນັ້ນ.

ຖ້າບຸກຄົນຜູ້ນຶ່ງໄດ້ຖືກຮັບສິນບັບຕິສມາແຕ່ຍັງນ້ອຍມາແລ້ວ, ຫາກເຖິງກະສຽນອາຍຸທີ່ສົມຄວນທີ່ຈະສາມາດປະກາດ ຄຳປະຕິຍານຍອມຮັບໃນຄວາມເຊື່ອຂອງຕົນເອງຕໍ່ໜ້າຊຸມຊົນ ແລະຮັບຮູ້ເຖິງຊີວິດຂອງຕົນເອງທີ່ຕ້ອງພົວພັນກັບ ຄຣິສຕະຈັກແລ້ວ, ຄະນະປົກຄອງຄວນຊຸກຍູ້ ສະໜັບສະໜູນແລະຊ່ວຍເຫຼືອຜູ້ກ່ຽວ ໃນຄວາມຮັບຜິດຊອບຂອງເຂົາຕໍ່ ຄຣິສຕະຈັກ ແລະການເປັນສະມາຊິກທີ່ຫ້າວຫັນ. ສຳຣັບອາຍຸການທີ່ຈະທຳການແບບນີ້ໄດ້ນັ້ນ ບໍ່ສາມາດຈະກຳໜົດຕາຍໂຕໄດ້ ແຕ່ຕ້ອງຂຶ້ນກັບການຕົກລົງຂອງຄະນະປົກຄອງ ຫຼັງຈາກມີການສຶກສາຄົ້ນຄວ້າກັນຢ່າງຖີ່ຖ້ວນແລ້ວ. ພ້ອມດຽວກັນກໍຕ້ອງອີງໃສ່ ການສະມັກໃຈ ການຕຽມພ້ອມຂອງບຸກຄົນນັ້ນໆ ທີ່ຈະກ້າວເຂົ້າສູ່ການເປັນສະມາຊິກຫ້າວຫັນຂອງຄຣິສຕະຈັກ.

ຖ້າບຸກຄົນນັ້ນບໍ່ທັນໄດ້ຮັບສິນບັບຕິສມາເທື່ອ ແຕ່ຕັດສິນໃຈທີ່ຈະປະກາດຄຳປະຕິຍານໃນຄວາມເຊື່ອຂອງຕົນເອງໃນ ພຣະຄຣິສ ແລະຈະຮ່ວມໄມ້ຮ່ວມມືກັບທາງຄຣິສຕະຈັກເໝືອນກັບຜູ້ທີ່ເຊື່ອແລ້ວຄົນອື່ນໆ,

ບຸກຄົນນັ້ນກໍສາມາດເປັນສະມາຊິກທີ່ຫ້າວຫັນຂອງຄຣິສຕະຈັກໄດ້ ໂດຍການປະກາດປະຕິຍານໃນຄວາມເຊື່ອຂອງຕົນ ແລະຮັບສິນບັບຕິສມາ ຫຼັງຈາກໄດ້ຮັບການ ອົບຮົມສັ່ງສອນ ແລະຜ່ານການທົດສອບຈາກຄະນະປົກຄອງແລ້ວ.

ບຸກຄົນທີ່ໄດ້ປະກາດຄຳປະຕິຍານຂອງຕົນ ແລະໄດ້ຖືກຮັບເຂົ້າເປັນສະມາຊິກຂອງໂບດນຶ່ງໆແລ້ວ, ຄະນະປົກຄອງ ສາມາດທີ່ຈະຮັບເອົາບຸກຄົນນັ້ນໆເຂົ້າເປັນສະມາຊິກຂອງຕົນ ໂດຍອີງໃສ່ໜັງສືໂອນຍ້າຍ ທີ່ທາງຄຣິສຕະຈັກບ່ອນສຸດທ້າຍ ທີ່ຜູ້ກ່ຽວສັງກັດຢູ່ນັ້ນອອກໃຫ້.

ໃນກໍຣະນີທີ່ ບຸກຄົນນຶ່ງ ຫາກເປັນສະມາຊິກທີ່ຫ້າວຫັນຂອງໂບດນຶ່ງ ແຕ່ບໍ່ມີໜັງສືໂອນຍ້າຍ ຫຼືຫຼັກຖານໃດໆທີ່ສາມາດ ຢັ້ງຢືນໃນການເປັນສະມາຊິກຂອງຜູ້ກ່ຽວໄດ້. ຫຼັງຈາກຄະນະປົກຄອງມີການສຶກສາ ແລະທຳການທົດສອບ ຜູ້ກ່ຽວຄວນມີການ ຢໍ້າຄືນຢືນຢັນເຖິງຄວາມເຊື່ອຂອງຕົນເອງອີກຄັ້ງນຶ່ງຕໍ່ໜ້າຄຣິສຕະຈັກ ພ້ອມທັງຍອມຮັບເອົາຄວາມຮັບຜິດຊອບຂອງຕົນເອງ ຕໍ່ຄຣິສຕະຈັກ ແລະການດຳຣົງຊີວິດທີ່ພົວພັນກັບໂບດ. ທັງໝົດນີ້ຕ້ອງໃຫ້ປະກາດຢູ່ໜ້າຊຸມຊົນຂອງຄຣິສຕະຈັກ.

## ວ່າດ້ວຍ ສະມາຊິກຄືຜູ້ຮັບໃຊ້ພຣະເຈົ້າ **G-5.0102**

ສະມາຊິກທີ່ມີຄວາມເຊື່ອແໜ້ນໜາໃນພຣະຄຣິສທຸກຄົນ ເປັນຜູ້ທີ່ຖືກພຣະເຈົ້າຊົງເອີ້ນມາໃຫ້ທຳການ ຮັບໃຊ້ວຽກງານ ຂອງພຣະອົງ. ການຮັບໃຊ້ພຣະເຈົ້ານັ້ນປະກອບດ້ວຍ:

- ປະກາດຂ່າວປະເສີດຂອງພຣະອົງ
- ມີສ່ວນພົວພັນກັບຊີວິດທົ່ວໆໄປ ແລະຊີວິດໃນການນະມັສການພຣະເຈົ້າພາຍໃນຄຣິສຕະຈັກ.
- ອະທິຖານ ແລະຮ່ຳຮຽນພຣະຄຳ ແລະຫຼັກຄວາມເຊື່ອໃນຄຣິສຕະຈັກ ຂອງຊາວຄຣິສຕຽນ.
- ສະໜັບສະໜູນວຽກງານຂອງຄຣິສຕະຈັກ ໂດຍການຖວາຍຊັພສິນ ເວລາ ແລະຄວາມສາມາດ.
- ປະກອບສ່ວນ ແລະຮັບຜິດຊອບໃນວຽກງານການປົກຄອງຂອງຄຣິສຕະຈັກ.
- ສະແດງປະສິດທິພາບໃນການດຳຣົງຊີວິດແບບໃໝ່ ທັງພາຍໃນແລະນອກຄຣິສຕະຈັກ.
- ຮັບຜິດຊອບຕໍ່ວຽກງານການຮັບໃຊ້ພຣະເຈົ້າຂອງຄຣິສຕະຈັກໃນໂລກ ໂດຍການຮັບໃຊ້ຜູ້ອື່ນ.
- ດຳຣົງຊີວິດຢ່າງມີຄວາມຮັບຜິດຊອບ ທັ້ງດ້ານສ່ວນຕົວ, ຄອບຄົວ, ໜ້າທີ່ການງານ, ການເມືອງ, ວັທນະທັມ ແລະສັງຄົມ.
- ທຳງານຮ່ວມກັບໂລກເພື່ອສ້າງສັນຕິພາບ, ຄວາມຍຸຕິທັມ, ອິສະຣະພາບ, ແລະເພື່ອມະນຸສທັມ.

## ວ່າດ້ວຍ ສິ່ງທີ່ຄວນທຳ **G-5.0103**

ທາງຄຣິສຕະຈັກຄວນເປີດປະຕູຕ້ອນຮັບເອົາທຸກຄົນທີ່ມີຄວາມໄວ້ວາງໃຈ ແລະເດີນຕາມພຣະຄຸນຂອງ ພຣະເຢຊູຄຣິສ ແລະພ້ອມທີ່ຈະປະກອບສ່ວນໃນການເປັນສະມາຊິກ ແລະຮັບໃຊ້ພຣະເຈົ້າໃນຄິຣສຕະຈັກຂອງຕົນ. ຫ້າມປະຕິເສດຮັບເອົາ ສະມາຊິກຍ້ອນເຫດຜົນທາງດ້ານເຊື້ອຊາດຜິວພັນ, ເຄົ້າກຳເນີດ, ເຫດຜົນທາງດ້ານສະພາບ ການຂອງສັງຄົມທີ່ເຂົາອາສັຍຢູ່, ຫຼືເຫດຜົນອື່ນໆທີ່ບໍ່ໄດ້ກ່ຽວຂ້ອງກັບການປະຕິຍານໃນຄວາມເຊື່ອຂອງບຸກຄົນ. ສະມາຊິກແຕ່ລະຄົນ ຄວນຊອກສແວງຫາ ການຂະຫຍາຍການຮ່ວມກຸ່ມນະມັສການກັບທຸກໆຄົນ (G-9.0104)

ຫາກປະຕິເສດສິ່ງດັ່ງກ່າວ ຈະເປັນສາເຫດຊຶ່ງນຳໄປສູ່ ການປະຕິເສດພຣະຄຣິສ ແລະຈະນຳຄວາມອັປຍົດມາສູ່ພຣະທັມຄຳພີ.

## 2 / ວ່າດ້ວຍປະເພດຂອງສະມາຊິກ: G-5.0200

ສະມາຊິກຂອງຄຣິສຕະຈັກໃດນຶ່ງໃນເຄືອເພຣັສໄບທີຣຽນແຫ່ງສະຫະຣັດອາເມຣິກາ ຈະຕ້ອງປະກອບດ້ວຍ: ສະມາຊິກ ທີ່ຮັບສິນແລ້ວ, ສະມາຊິກທີ່ຫ້າວຫັນ, ສະມາຊິກທີ່ບໍ່ຫ້າວຫັນ, ແລະສະມາຊິກຊົ່ວຄາວ.

## ວ່າດ້ວຍ ສະມາຊິກທີ່ຮັບສິນແລ້ວ: G-5.0201

ສະມາຊິກທີ່ຮັບສິນບັບຕິສມາແລ້ວ ຊຶ່ງທາງຄະນະປົກໄດ້ບັນທຶກຊື່ໄວ້ໃນທະບຽນຂອງພວກຮັບສິນແລ້ວ, ຫາກຜູ້ກ່ຽວຍັງບໍ່ທັນໄດ້ມີການປະກາດຄຳປະຕິຍານໃນຄວາມເຊື່ອຂອງຕົນຕໍ່ໜ້າຊຸມຊົນເທື່ອນັ້ນ, ຄວນໄດ້ຮັບການເອົາໃຈໃສ່ ເບິ່ງແຍງດູແລຈາກທາງຄຣິສຕະຈັກ ແລະໃຫ້ສາມາດຮ່ວມຮັບສິນມະຫາສະໜິດໄດ້.

## ວ່າດ້ວຍ ສະມາຊິກທີ່ຫ້າວຫັນ: G-5.0202

ສະມາຊິກທີ່ຫ້າວຫັນ ຄືສະມາຊິກທີ່ໄດ້ປະກາດຄຳປະຕິຍານໃນຄວາມເຊື່ອຂອງຕົນເອງ, ຮັບບັບຕິສມາແລ້ວ ແລະໄດ້ຖືກ ຮັບເອົາເປັນສະມາຊິກຂອງຄຣິສຕະຈັກແລ້ວ. ຜູ້ກ່ຽວໄດ້ສະເໜີຕົນເອງ ປະກອບສ່ວນໃນການປົກຄອງຄຣິສຕະຈັກ, ແລະຫ້າວຫັນໃນການປະກອບສ່ວນວຽກງານຂອງທາງຄຣິສຕະຈັກ ແລະນະມັສການຢ່າງເປັນປະຈຳ. ສະມາຊິກຫ້າວຫັນນີ້ ຈະຕ້ອງໄດ້ຮັບສິດພິເສດທຸກຢ່າງພາຍໃນຄຣິສຕະຈັກ ຊຶ່ງປະກອບດ້ວຍ ສິດໃນການປະກອບສ່ວນໃນພິທີສິນມະຫາສະໜິດ, ນຳເດັກມາສເນີເພື່ອໃຫ້ສິນບັບຕິສມາ, ມີສ່ວນໃນກອງປະຊຸມຂອງຄຣິສຕະຈັກ, ມີສິດປ່ອນບັດລົງຄະແນນສຽງ ແລະຮັບໃຊ້ວຽກງານໃນຫ້ອງການຂອງຄຣິສຕະຈັກ. ທຸກສິ່ງທີ່ສະມາຊິກປະເພດນີ້ເຮັດ ຫາກເປັນການສອດຄ້ອງກັບ ກົດທັມມະນູນຂອງທາງເພຣັສໄບທີຣຽນແລ້ວ ທາງຄະນະປົກຄອງຄວນມີການຮັບເອົາ ຫຼັງຈາກໄດ້ພິຈາຣະນາຄົ້ນຄວ້າແລ້ວ.

## ວ່າດ້ວຍ ສະມາຊິກທີ່ບໍ່ຫ້າວຫັນ G-5.0203

ສະມາຊິກປະເພດນີ້ ແມ່ນປະເພດທີ່ບໍ່ມີການປະກອບສ່ວນຢ່າງສະໝ່ຳສເນີໃນວຽກງານຂອງຄຣິສຕະຈັກ ແລະການນະມັສການ. ສະມາຊິກປະເພດນີ້ ກໍສາມາດມີສິດທຸກຢ່າງໃນຄຣິສຕະຈັກ ຍົກເວັ້ນສິດໃນການອອກສຽງ ຫຼືສເນີຄວາມຄິດຄວາມເຫັນໃນເວລາປະຊຸມ, ບໍ່ມີສິດໃນການປ່ອນບັດ ຫຼືທຳງານໃນຫ້ອງການຂອງຄຣິສຕະຈັກ.

## ວ່າດ້ວຍ ສະມາຊິກປະເພດຊົ່ວຄາວ: G-5.0204

ສະມາຊິກປະເພດນີ້ ແມ່ນສະມາຊິກທີ່ຫ້າວຫັນຂອງຄຣິສຕະຈັກໃດນຶ່ງພາຍໃນເຄືອນີ້ ຫຼືເຄືອອື່ນໆ ຫຼືໃນກຸ່ມຄຣິສຕຽນ ໃດນຶ່ງ. ເປັນຜູ້ທີ່ຍົກຍ້າຍມາຈາກບ່ອນອື່ນ ເພື່ອມາອາສັຍຢູ່ເປັນການຊົ່ວຄາວ ໂດຍມີໜັງສືຍົກຍ້າຍຢ່າງຖືກຕ້ອງ ຈາກຄຣິສຕະຈັກທີ່ຕົນເອງສັງກັດຢູ່. ສະມາຊິກປະເພດນີ້ ຕ້ອງຖືກຮັບເອົາໂດຍການເຫັນດີເຫັນພ້ອມຂອງຄະນະປົກຄອງ ເພື່ອໃຫ້ເຂົ້າຮ່ວມໃນຖານະເປັນສະມາຊິກຊົ່ວຄາວຂອງຄຣິສຕະຈັກ ເພາະຜູ້ກ່ຽວພຽງມາ

ອາສັຍຊົ່ວຄາວເທົ່ານັ້ນ. ສະມາຊິກ ປະເພດນີ້ ມີສິດພິເສດທຸກຢ່າງ ນອກຈາກສິດໃນການປ່ອນບັດ ແລະສິດໃນການຮັບໃຊ້ໃນຫ້ອງການຂອງຄຣິສຕະຈັກ.

## 3/ ວ່າດ້ວຍ ສິດທິພິເສດ ຂອງຜູ້ທີ່ບໍ່ເປັນສະມາຊິກ G-5.0300

## ສິດທິພິເສດຂອງຜູ້ທີ່ບໍ່ເປັນສະມາຊິກ: G-5.0301

ບຸກຄົນທີ່ບໍ່ແມ່ນສະມາຊິກຂອງຄຣິສຕະຈັກເພຣັສໄບທີຣຽນ ແຫ່ງສະຫະຣັດອາເມຣິກາ ສາມາດມີສິດພິເສດດັ່ງນີ້:

- ຖືກຕ້ອນຮັບເຂົ້າສູ່ການນະມັສການພຣະເຈົ້າແລະມີສ່ວນຮ່ວມໃນວຽກງານການຮັບໃຊ້ພຣະເຈົ້າຂອງທາງຄຣິສຕະຈັກ.
- ທຸກຄົນທີ່ຮັບສິນແລ້ວ ຈະເປັນເດັກຫຼືຜູ້ໃຫຍ່, ເຖິງຈະບໍ່ໄດ້ທຳການປະກາດຄຳປະຕິຍານຂອງຕົນກໍຕາມ ແຕ່ກໍຍັງມີສິດ ໃນການຮ່ວມຮັບສິນມະຫາສະໜິດ, ມີສິດໃນການສຶກສາ, ແລະຖືກເບິ່ງແຍງດູແລຈາກທາງຄຣິສຕະຈັກເໝືອນກັນ.
- ສະມາຊິກຈາກຄຣິສຕະຈັກອື່ນ ກໍມີສິດໃນການມີສ່ວນໃນສິນມະຫາສະໜິດ ແລະນຳເດັກມາສເນີຮັບສິນບັບຕິສມາໄດ້

## 4/ ວ່າດ້ວຍການຈັດຕຽມ ໃນການຮັບເອົາສະມາຊິກ: G-5.0400

## ວ່າດ້ວຍ ສິດແລະໜ້າທີ່ຂອງຄະນະປົກຄອງ: G-5.0401

ຄະນະປົກຄອງ ຈະຕ້ອງມີໜ້າທີ່ຮັບຜິດຊອບຢ່າງເຕັມປ່ຽມ ໃນການຈັດຕຽມການຕ້ອນຮັບເອົາສະມາຊິກ.

## ວ່າດ້ວຍການ ປະກາດຄຳປະຕິຍານຂອງຕົນເອງ: G-5.0402

ການກະກຽມຕ້ອນຮັບເອົາສະມາຊິກນັ້ນ ໝາຍເຖິງການທີ່ຈະເຮັດໃຫ້ຄຣິສຕະຈັກຂອງຕົນຂະຍາຍຕົວ, ດັ່ງນັ້ນ ສະມາຊິກໃໝ່ ຕ້ອງໄດ້ຮັບການເບິ່ງແຍງດູແລເປັນພິເສດ ເພື່ອຕຽມການໃຫ້ເຂົາ ໃນການປະກາດຄຳປະຕິຍານໃນຄວາມເຊື່ອ ຂອງເຂົາກ່ອນທີ່ຈະເຂົ້າເປັນສະມາຊິກຂອງຄຣິສຕະຈັກ. ຄຣິສຕະຈັກ ຄວນມີການສິດສອນໃຫ້ຜູ້ທີ່ຈະເປັນສະມາຊິກນັ້ນ ຮູ້ຈັກ ຄວາມໝາຍແລະຄວາມສຳຄັນຂອງຄຳປະຕິຍານນັ້ນ, ໃຫ້ຮັບແລະຮັບເອົາໜ້າທີ່ຮັບຜິດຊອບຂອງສະມາຊິກ, ຫຼັກຄວາມເຊື່ອ ແລະກົດທັມມະນູນຂອງຄະນະເພຣັສໄບທີຣຽນແຫ່ງສະຫະຣັດອາເມຣິກາ.

ການສຶກສາແບບນີ້ ຄວນຈັດໃຫ້ມີແກ່ຄົນອື່ນໆອີກທີ່ຕ້ອງການທີ່ຈະປະກາດຄຳປະຕິຍານແຫ່ງຄວາມເຊື່ອຂອງຕົນເອງ. ທາງຄະນະປົກຄອງ ຄວນເປັນຜູ້ຕັດສິນວ່າ ຈະໃຫ້ມີການສຶກສານີ້ ກ່ອນ ຫຼືຫຼັງການປະກາດຄຳປະຕິຍານຂອງບຸກຄົນນັ້ນໆ.

## ວ່າດ້ວຍ ການຢ້ຳຄືນ ຢືນຢັນໃນຄຳປະຕິຍານ ແລະການໂອນ: G-5.0403

ການສິດສອນທີ່ເໝາະສົມ ຄວນເປີດໃຫ້ມີ ສຳຮັບຜູ້ທີ່ຮັບສິນມາແລ້ວ ແຕ່ຢາກເຂົ້າເປັນສະມາຊິກ ຫຼືຜູ້ທີ່ຖືກໂອນມາຈາກບ່ອນອື່ນ. ທັ້ງນີ້ ເພື່ອໃຫ້ທຸກຄົນໄດ້ຮັບຮູ້ເຖິງສິດ ແລະໜ້າທີ່ໃນການເປັນສະມາຊິກຢ່າງແທ້ຈິງ.

### 5/ ວ່າດ້ວຍການສຳຮອດຄືນ ໃນການເປັນສະມາຊິກ: G-5.0500

### ວ່າດ້ວຍ ການສຳຮອດກອດຄືນຂອງສະມາຊິກເອງ: G-5.0501

ການຍອມຮັບເອົາສິດທິພິເສດ ແລະຄວາມຮັບຜິດຊອບໃນການເປັນສະມາຊິກຂອງຄຣິສຕະຈັກໃດນຶ່ງ ເປັນການອຸທິດຖວາຍຕົນເອງຕໍ່ອົງພຣະເຢຊູຄຣິສ. ເປັນການຜູກພັນຂອງສ່ວນບຸກຄົນ ໃນການປະຕິບັດໜ້າທີ່ຂອງການເປັນ ສະມາຊິກທີ່ສົມບູນແບບ. ສະມາຊິກແຕ່ລະຄົນ ຄວນມີການສຳຮອດກອດຄືນ ແລະຕີຣາຄາຕົນເອງ ໃນໜ້າທີ່ວຽກງານ ທີ່ຕົນເອງໄດ້ປະກອບສ່ວນໃນຄຣິສຕະຈັກ ຫຼັງຈາກໄດ້ມີການຊຸກຍູ້ສະໜັບສະໜູນຈາກທາງຄຣິສຕະຈັກແລ້ວ. ພ້ອມນີ້ ສະມາຊິກນັ້ນໆ ຕ້ອງມີການ ຫາຫົນທາງທີ່ຈະເພີ່ມການຮັບໃຊ້ພຣະເຈົ້າໃນຄຣິສຕະຈັກຍິ່ງຂຶ້ນ.

### ວ່າດ້ວຍ ການສຳຮອດຄືນ ໂດຍຄະນະປົກຄອງ: G-5.0502

ຄະນະປົກຄອງ ຄວນມີການສຳຮອດຄືນກ່ຽວກັບບົດບາດ ການປະກອບສ່ວນວຽກງານຂອງສະມາຊິກຢ່າງໜ້ອຍປີລະຄັ້ງ ແລະທາງຄະນະ ຄວນມີການໃຫ້ຄຳແນະນຳ ປຶກສາຫາລື ແກ່ສະມາຊິກທີ່ລະເລີຍຕໍ່ຄວາມຮັບຜິດຊອບຂອງຕົນເອງຕໍ່ຄຣິສຕະຈັກ.

## VI/ ວ່າດ້ວຍ ຄຣິສຕະຈັກ ແລະເຈົ້າໜ້າທີ່ຂອງຄຣິສຕະຈັກ G-6.0000

### 1/ ວ່າດ້ວຍ ຫ້ອງການຮັບໃຊ້ພຣະເຈົ້າ: G-6.0100

### ວ່າດ້ວຍ ການຮັບໃຊ້ພຣະຄຣິສ: G-6.0101

ການຮັບໃຊ້ພຣະເຈົ້າທັງໝົດຂອງຄຣິສຕະຈັກ ແມ່ນໜ້າທີ່ຊຶ່ງຖືກປະທານມາຈາກພຣະເຢຊູຄຣິສ. ສະມາຊິກ ແລະເຈົ້າໜ້າທີ່ຮັບໃຊ້ທັງໝົດ ຕ້ອງເປັນຜູ້ຮ່ວມກັນທຳງານພຣະເຈົ້າ ພາຍໃຕ້ຄຳສັ່ງທີ່ມາຈາກພຣະເຢຊູຄຣິສ ຊຶ່ງເປັນຜູ້ນຳຂອງ ບັນດາຜູ້ຮັບໃຊ້ພຣະເຈົ້າທັງໝົດ. ການທຳງານຂອງພຣະເຢຊູ ໄດ້ເປັນພື້ນຖານໃຫ້ແກ່ການຮັບໃຊ້ພຣະເຈົ້າທັງໝົດ. ຮາກຖານ ທັງໝົດໃນຫ້ອງການຮັບໃຊ້ພຣະເຈົ້າຂອງຄຣິສຕະຈັກ ໄດ້ຖືເອົາແບບຢ່າງຂອງພຣະອົງຄື: "ພຣະອົງຊົງມາ ບໍ່ແມ່ນເພື່ອໃຫ້ຄົນອື່ນຮັບໃຊ້ພຣະອົງ ແຕ່ຊົງຮັບໃຊ້ຄົນອື່ນ" ມັດທາຍ 20:28.

### ວ່າດ້ວຍ ບັນດາຫ້ອງການຮັບໃຊ້ພຣະເຈົ້າໃນຄຣິສຕະຈັກ: G-6.0102

ຄວາມຮັບຜິດຊອບອີກອັນນຶ່ງຂອງສະມາຊິກ ນັ້ນຄືການເລືອກຕັ້ງເອົາເຈົ້າໜ້າທີ່ພະນັກງານຮັບໃຊ້ພຣະເຈົ້າ ເພື່ອສະຖາປະນາໃຫ້ເປັນຜູ້ທຳງານຮັບໃຊ້ພຣະເຈົ້າໃນຂະແໜງການໃດນຶ່ງ. ການມີຫ້ອງການຮັບໃຊ້ພຣະເຈົ້າໃນຄຣິສຕະຈັກນີ້ ຈະບໍ່ເຮັດໃຫ້ການທຳງານຮັບໃຊ້ພຣະເຈົ້າຂອງສະມາຊິກນັ້ນຫຼຸດຜ່ອນລົງເລີຍ ເພາະເຈົ້າໜ້າທີ່ ທີ່ຖືກສະຖາປະນາໃຫ້ມາ ຮັບໃຊ້ພຣະເຈົ້າໃນຫ້ອງການນັ້ນ ມີໜ້າທີ່ສະເພາະໃນການທຳງານຊຶ່ງທາງຄຣິສຕະຈັກໄດ້ກຳໜົດໄວ້ເທົ່ານັ້ນເອງ.

## ວ່າດ້ວຍ ຊື່ຂອງບັນດາຫ້ອງການຮັບໃຊ້ໃນຄຣິສຕະຈັກ: G-6.01003

ບັນດາຊື່ຂອງຫ້ອງການຮັບໃຊ້ພຣະເຈົ້າໃນຄຣິສຕະຈັກ ໄດ້ຖືກບັນທຶກໄວ້ໃນພຣະຄຳພີໃໝ່ ຊຶ່ງທາງຄຣິສຕະຈັກໄດ້ຮັກສາໄວ້. ຫ້ອງການນີ້ປະກອບດ້ວຍ: ຫ້ອງການຂອງຄະນະປົກຄອງ (ຜູ້ຮັບໃຊ້ພຣະເຈົ້າທາງດ້ານພຣະຄຳ ແລະພິທີສິນ) ແລະຫ້ອງການນັກຄະນາຍົກ.

## ວ່າດ້ວຍ ຮູບການຂອງຜະແນກຮັບໃຊ້ພຣະເຈົ້າຕ່າງໆ G-6.0104

ເຖິງແມ່ນການຮັບໃຊ້ພຣະເຈົ້າ ເປັນວຽກງານອັນນຶ່ງອັນດຽວກັນຂອງບັນດາຜູ້ຮັບໃຊ້ພຣະອົງກໍຕາມ ແຕ່ຮູບການຂອງ ການຮັບໃຊ້ນັ້ນຕ້ອງມີການເໜັ້ນໜັກໃສ່ວຽກງານທາງດ້ານສະຕິປັນຍາ ແລະຄວາມຊຳນິຊຳນານ. ຄວາມເປັນຣະບຽບຮຽບຮ້ອຍ ຂອງຫ້ອງການທຳງານຮັບໃຊ້ພຣະເຈົ້າໃນຄຣິສຕະຈັກ ຈະຕ້ອງອີງໃສ່ເປົ້າໝາຍທີ່ກ່າວມາຂ້າງເທິງນີ້. ອາດມີຮູບການແບບອື່ນໆ ອີກເຊັ່ນ: ການເໜັ້ນໜັກໃສ່ການປະກາດພຣະຄຳ, ກ່ຽວກັບການສຶກສາ, ການຈັດຕັ້ງປົກຄອງ, ກົດໝາຍແລະການຕັດສິນຄະດີ, ແລະຮູບການທີ່ເໜັ້ນໃສ່ການທຳນອຍ.

## ວ່າດ້ວຍ ການຖືກເອີ້ນໃຫ້ຮັບໃຊ້ພຣະເຈົ້າ G-6.0105

ການເຂົ້າທຳງານຮັບໃຊ້ພຣະເຈົ້າໃນຄຣິສຕະຈັກ ສາມາດເຮັດໄດ້ທັງຊາຍແລະຍິງ. ໃນເວລາທີ່ພວກເຂົາໄດ້ມີການຈັດ ຕຽມ ແລະພວກເຂົາເອງໄດ້ມີຂອງປະທານທີ່ມາຈາກພຣະເຈົ້າ, ທາງຄຣິສຕະຈັກ ຈະຕ້ອງເອີ້ນພວກເຂົາໃຫ້ມາທຳງານຮັບໃຊ້ ພຣະເຈົ້າໃນຜະແນກໃດນຶ່ງຂອງທາງຄຣິສຕະຈັກ. ຄິຣສຕະຈັກຄວນທຳການຊ່ວຍເຫຼືອພວກຄົນເຫຼົ່ານີ້ໃຫ້ຮູ້ເຖິງການຊົງ ເອີ້ນຮຽກຂອງພຣະເຈົ້າຕໍ່ພວກເຂົາ ແລະໃຫ້ເຂົາມີຄວາມຕື່ນຕົວຕໍ່ຄວາມເຫັນດີເຫັນພ້ອມຂອງທາງຄຣິສຕະຈັກ ທີ່ເອີ້ນພວກເຂົາ ແລະພ້ອມກັນນັ້ນ ກໍໃຫ້ພວກເຂົາຮູ້ເຖິງຄວາມຮຽກຮ້ອງຕ້ອງການຂອງຄົນອື່ນໆ ທີ່ຕ້ອງການໃຫ້ພວກເຂົາມາທຳງານຮັບໃຊ້ນີ້. ຫາກບຸກຄົນໃດນຶ່ງ ສາມາດຄົ້ນພົບ ຫຼືຮູ້ຈັກວິທີການແບບໃໝ່ໃນການຮັບໃຊ້ພຣະເຈົ້າໃນຜະແນກທີ່ຕົນເອງທຳງານຢູ່ນັ້ນ ແລະຫາກເຫັນວ່າສິ່ງນີ້ເປັນສິ່ງທີ່ດີ, ທາງຄຣິສຕະຈັກຄວນມີການປະກາດເຜີຍແຜ່ ກ່ຽວກັບການຊົງນຳພາຂອງພຣະວິນຍານ ບໍຣິສຸດ ທີ່ເຮັດໃຫ້ຜູ້ກ່ຽວເຫັນນິມິດທີ່ດີ ໃນການເຮັດໃຫ້ວຽກງານນັ້ນໆກ້າວໜ້າ.

## ວ່າດ້ວຍ ຂອງປະທານ ແລະຂໍ້ກຳໜົດ G-6.0106

ຕໍ່ບັນດາພວກທີ່ຖືກເອີ້ນໃຫ້ມາຮັບໃຊ້ພຣະເຈົ້າໃນຫ້ອງການໃດນຶ່ງຂອງຄຣິສຕະຈັກເຊັ່ນ: ນັກຄະນາຍົກ, ຜູ້ປົກຄອງ, ແລະຜູ້ຮັບໃຊ້ພຣະເຈົ້າທາງດ້ານພຣະຄຳແລະພິທີສິນ (ອາຈານ), ພວກດັ່ງກ່າວນີ້ ພຣະເຈົ້າໄດ້ຊົງປະທານຂອງປະທານທີ່ເໝາະ ສົມສຳຣັບພວກເຂົາໃນການຮັບໃຊ້ພຣະເຈົ້າໃນຜະແນກຕ່າງໆ. ແຕ່ແນວໃດກໍດີ ບັນດາຄົນເຫຼົ່ານີ້, ໃນການຮັບໃຊ້ພຣະເຈົ້າ ຂອງພວກເຂົາ ພວກເຂົາຈະຕ້ອງມີຄວາມເຊື່ອຢ່າງໝັ້ນຄົງ, ອຸທິດຕົນເອງໃນການເປັນສາວົກຂອງພຣະເຈົ້າ, ມີຄວາມຮັກເປັນ ພື້ນຖານ, ໃຫ້ພຣະເຢຊູຄຣິສເປັນເຈົ້ານາຍເໜືອຊີວິດ ແລະເປັນພຣະຜູ້ຊ່ວຍໃຫ້ລອດຂອງຕົນ. ຕ້ອງມີການດຳຣົງຊີວິດທີ່ສົມ ກັບການເປັນຄຣິສຕຽນ ທັງພາຍໃນຄຣິສຕະຈັກ ແລະພາຍນອກ. ພວກເຂົາຈະຕ້ອງໄດ້ຮັບການເຫັນດີເຫັນພ້ອມຢ່າງເປັນ ເອກກະສັນ ຈາກຄະນະປົກຄອງຄຣິສຕະຈັກ ກ່ອນຈະຮັບໃຊ້ວຽກງານໄດ້.

## ວ່າດ້ວຍ ການຖືກເລືອກຕັ້ງຈາກຄຣິສຕະຈັກ: G-6.0107

ຄະນະປົກຄອງຄຣິສຕະຈັກ ແມ່ນຕົວແທນຂອງຄຣິສຕະຈັກ. ທາງຄຣິສຕະຈັກໄດ້ໃຊ້ສິດເລືອກເອົາພວກເຂົາເພື່ອເປັນຕົວແທນຂອງຕົນ. ທຸກຄົນທີ່ເຂົ້າມາທຳງານຮັບໃຊ້ພຣະເຈົ້າໃນຫ້ອງການຮັບໃຊ້ຂອງທາງຄຣິສຕະຈັກຈະຕ້ອງໄດ້ ຮັບການຕົກລົງ ເລືອກເອົາຈາກຄະນະປົກຄອງເສັຽກ່ອນ.

## ວ່າດ້ວຍ ເສຣີພາບໃນຄວາມຮັບຜິດຊອບຂອງບຸກຄົນ ແລະການຮ່ວມມື G-6.0108

ບຸກຄົນຜູ້ນຶ່ງທີ່ຖືກເລືອກໃຫ້ມາຮັບໃຊ້ພຣະເຈົ້າໃນຄຣິສຕະຈັກ ເປັນສິ່ງສຳຄັນແລະຈຳເປັນທີ່ສຸດເພື່ອຄວາມເປັນອັນນຶ່ງອັນດຽວກັນ ແລະເພື່ອຄວາມເຂັ້ມແຂງຂອງຄຣິສຕະຈັກ. ຜູ້ກ່ຽວຕ້ອງເປັນຜູ້ທີ່ຍຶດໝັ້ນຢູ່ໃນຫຼັກການ ຈຸດສຳຄັນໃນຫຼັກ ແຫ່ງຄວາມເຊື່ອຂອງຄະນະປະຕິຮູບ (Reform) ແລະນະໂຍບາຍທີ່ໄດ້ສເນີໄວ້ໃນປຶ້ມແຫ່ງຫຼັກຄວາມເຊື່ອ ແລະໃນ ແບບແຜນຂອງການຈັດຕັ້ງປົກຄອງ. ຫ້າມອອກຫ່າງຈາກຫຼັກການນີ້, ຫ້າມການລ່ວງລະເມີດສິດທິ ແລະການອອກ ຄວາມຄິດຄວາມເຫັນຂອງຄົນອື່ນ, ຫ້າມການຂັດຂວາງກິດທັມມະນູນຂອງທາງຄຣິສຕະຈັກ, ສິດເສຣີພາບໃນຫຼັກແຫ່ງ ຄວາມເຊື່ອຂອງບຸກຄົນ ແລະການຍອມຮັບຮູ້ກ່ຽວກັບການແປພຣະຄຳພີຈະຕ້ອງຮັກສາໄວ້.

ຕ້ອງຮັບຮູ້ວ່າ ຜູ້ທີ່ປາຖນາຢາກເປັນຜູ້ນຳ ຫຼືເປັນເຈົ້າໜ້າທີ່ຮັບໃຊ້ພຣະເຈົ້າຂອງຄະນະເພຣັສໄບທີຣຽນແຫ່ງສະຫະຣັດ ອາເມຣິກາ ຄືຕ້ອງເປັນຜູ້ທີ່ຕ້ອງການປະຕິບັດສິດເສຣີພາບໃນສະຕິຮັບຜິດຊອບຊື່ວດີຂອງຕົນ ຊຶ່ງຕ້ອງຢູ່ໃນຂອບເຂດໃດນຶ່ງ. ສິ່ງດັ່ງກ່າວ ຈະຕ້ອງຢູ່ໃຕ້ຂອບເຂດພຣະຄຳຂອງພຣະເຈົ້າ ດັ່ງທີ່ໄດ້ສະແດງໄວ້ໃນບັນທັດຖານຂອງຄຣິສຕະຈັກ ຊຶ່ງຈະຕ້ອງ ໃຫ້ມີການປະຕິບັດ ຕາບໃດທີ່ຜູ້ກ່ຽວຍັງທຳການຮັບໃຊ້ພຣະເຈົ້າໃນພະແນກນັ້ນໆຢູ່. ຫາກບຸກຄົນໃດນຶ່ງ ມີການປະຕິບັດທີ່ ອອກນອກຈາກຫຼັກການຂອງຄະນະປະຕິຮູບ ຈະຖືວ່າເປັນເລື້ອງສ່ວນຕົວຂອງບຸກຄົນນັ້ນໆ ແຕ່ທາງຫ້ອງການທີ່ຜູ້ກ່ຽວສັງກັດຢູ່ ຕ້ອງມີສ່ວນຮ່ວມໃນການຮັບຜິດຊອບນຳດ້ວຍ. (G-1.0301; G-1.0302)

ບຸກຄົນທີ່ປາຖນາທີ່ຈະເປັນຜູ້ຮັບໃຊ້ພຣະເຈົ້າໃນເຄືອຂອງເພຣັສໄບທີຣຽນ ແຫ່ງສະຫະຣັດອາເມຣິກາຈະຕ້ອງເປັນຜູ້ທີ່ ເອົາໃຈໃສ່ຕໍ່ກົດທັມມະນູນຂອງທາງຄຣິສຕະຈັກເພຣັສໄບທີຣຽນ ຊຶ່ງປະກອບດ້ວຍຫຼັກການຮັບຮູ້ເສຣີພາບ ແລະໃນການມີສະຕິ ຮັບຜິດຊອບຊື່ວດີຂອງຕົນເອງ.

## 2 / ວ່າດ້ວຍ ຜູ້ຮັບໃຊ້ພຣະເຈົ້າດ້ານພຣະຄຳ ແລະພິທີສິນ (ອາຈານ G-6.0200)

## ວ່າດ້ວຍ ຜູ້ຮັບໃຊ້ພຣະເຈົ້າ ແລະພາກເພຣັສໄບເທີຣີ G-6.0201

ພຣະເຈົ້າໄດ້ຊົງເອີ້ນ ແລະໄດ້ຊົງເຝິກແອບສະມາຊິກບາງຄົນໃຫ້ສາມາດເປັນຜູ້ນຳພາຮັບໃຊ້ພຣະອົງໃນການຮັບໃຊ້ ທາງດ້ານພຣະຄຳພີ ແລະພິທີສິນ, ແລະໄດ້ໃຫ້ພວກເຂົາອຸທິດຖວາຍຕົນເອງໃນການທຳງານຂອງພຣະອົງ. ຄຣິສຕະຈັກ ໄດ້ເອີ້ນເອົາບຸກຄົນດັ່ງກ່າວມາຮັບໃຊ້ວຽກງານໃນຄຣິສຕະຈັກຂອງຕົນໂດຍຜ່ານການເຫັນດີຂອງພາກເພຣັສໄບເທີຣີ. ຜູ້ຮັບໃຊ້ ຫຼືອາຈານ ດັ່ງກ່າວຕ້ອງເປັນສະມາຊິກຂອງພາກເພຣັສໄບເທີຣີ ຊຶ່ງເປັນຜູ້ມອບໝາຍວຽກງານໃຫ້ແກ່ບຸກຄົນນັ້ນ ເພື່ອທຳງານຮັບໃຊ້ພຣະເຈົ້າໃນຄຣິສຕະຈັກນັ້ນໆ.

ຜູ້ກ່ຽວຕ້ອງເປັນບຸກຄົນທີ່ທາງພາກເພຣັສໄບເທີຣີໄວ້ວາງໃຈ. ນອກຈາກ ຈະຕ້ອງເຮັດວຽກງານທີ່ທາງພາກມອບໝາຍໃຫ້ແລ້ວ ພວກເຂົາຍັງຈະຕ້ອງມີໜ້າທີ່ຮັບຜິດຊອບທີ່ກວ້າງຂວາງກວ່ານີ້ອີກ. ຜູ້ຮັບໃຊ້ພຣະເຈົ້າໃນດ້ານພຣະຄຳແລະພິທີສິນ ຈະຕ້ອງເປັນບຸກຄົນທີ່ສັງກັດຢູ່ໃນພາກນັ້ນໆ ໂດຍທີ່ ທາງພາກເປັນຜູ້ຮັບເອົາ ແລະຈະຕ້ອງຮັກສາການເປັນສະມາຊິກຂອງພາກນັ້ນໂດຍອີງໃສ່ກົດຣະບຽບທີ່ບັນທຶກໄວ້ໃນ G-11.0000

## ວ່າດ້ວຍ ອາຈານ ແລະອາຈານຊ່ວຍ Pastor, Associate Pastor **G-6.0203**

a/ ຜູ້ຮັບໃຊ້ພຣະເຈົ້າທາງດ້ານພຣະຄຳແລະພິທີສິນທີ່ຖາວອນຂອງຄຣິສຕະຈັກຄື ອາຈານ ແລະອາຈານຊ່ວຍ ໃນເວລາທີ່ ຜູ້ຮັບໃຊ້ພຣະເຈົ້ານັ້ນຖືກເອີ້ນມາເປັນອາຈານ ຫຼືອາຈານຊ່ວຍຂອງຄຣິສຕະຈັກໃດນຶ່ງ, ພວກເຂົາຈະຕ້ອງມີການຮັບຜິດຊອບຕໍ່ ຄຸນນະພາບໃນການດຳຣົງຊີວິດ ແລະການພົວພັນອື່ນໆທີ່ໄດ້ບັນທຶກໄວ້ໃນພຣະຄຳພີ. ອາຈານຕ້ອງເປັນຜູ້ຮັບຜິດຊອບຕໍ່ການ ສຶກສາຮ່ຳຮຽນ, ການສິດສອນ, ແລະການເທສນາພຣະຄຳ ; ອາຈານຕ້ອງຮັບຜິດຊອບຕໍ່ການປະກອບພິທີສິນບັບຕິສມາ ແລະສິນ ມະຫາສະໜິດ, ຮັບຜິດຊອບຕໍ່ການອະທິຖານຕໍ່ຄຣິສຕະຈັກ. ອາຈານ ຕ້ອງຮ່ວມໄມ້ຮ່ວມມືກັບຜູ້ປົກຄອງໃນການຊຸກຍູ້ ສະໜັບສະໜູນສະມາຊິກໃນຄຣິສຕະຈັກ ແລະການປະກາດໃນໂລກ. ອາຈານ ຈະຕ້ອງເປັນຜູ້ໃຫ້ການເບິ່ງແຍງດູແລ, ເອົາໃຈໃສ່ພິເສດຕໍ່ຜູ້ທຸກຍາກ, ຜູ້ເຈັບປ່ວຍ, ຜູ້ໄດ້ຮັບຄວາມຍຸ້ງຍາກ, ແລະຜູ້ທີ່ພົບກັບການລົ້ມຕາຍ. ອາຈານ ຕ້ອງມີສ່ວນ ຮ່ວມໃນການຮັບຜິດຊອບຕໍ່ການປົກຄອງຂອງຄຣິສຕະຈັກ ຊຶ່ງຮວມທັງການເປັນຜູ້ນຳໃນການສົ່ງເສີມການຮ່ວມໄມ້ຮ່ວມມື ແລະການຕັດສິນບັນຫາຕ່າງໆຂອງທາງຄຣິສຕະຈັກ ແລະແຜ່ຂະຫຍາຍວຽກງານເບິ່ງແຍງຮັບໃຊ້ຕໍ່ກຸ່ມຊົນທົ່ວໄປອີກດ້ວຍ. ອາຈານຕ້ອງມີການແບ່ງປັນວຽກງານແຫ່ງການສົງເຄາະ, ການເປັນພະຍານ, ແລະວຽກງານອື່ນໆຮ່ວມກັນຄະນະປົກຄອງ ແລະຄະນະມັກຄະ ນາຍົກ. ປະກອບກັບໜ້າທີ່ທັງໝົດຂອງອາຈານແລ້ວ, ທ່ານຍັງຈະຕ້ອງມີສ່ວນຮ່ວມໃນຄວາມຮັບ ຜິດຊອບຕໍ່ການປົກຄອງ ຂອງຄຣິສຕະຈັກ, ມີໜ້າທີ່ຢູ່ເໜືອຄະນະປົກຄອງ ແລະປະກອບສ່ວນໃນການພົວພັນທົ່ວໄປ ຂອງຄຣິສຕຽນ.

b/ ໂດຍການຍິນຍອມຈາກພາກເພຣັສໄບເທີຣີ, ທາງຄຣິສຕະຈັກຈະຕ້ອງມີການເລືອກເອົາບັນດາອາຈານຕ່າງໆໃຫ້ມາ ເປັນອາຈານຊ່ວຍ ຕາມຄວາມຮຽກຮ້ອງຕ້ອງການຂອງຄຣິສຕະຈັກ ເພື່ອຊ່ວຍອາຈານໃນວຽກງານການຮັບໃຊ້ພຣະເຈົ້າໃນດ້ານ ພຣະຄຳພີແລະພິທີສິນ.

c/ ພວກທີ່ມາເປັນອາຈານຊ່ວຍໃນເດືອນ 12/31/85 ສາມາດສືບຕໍ່ຮັບໜ້າທີ່ດັ່ງກ່າວ ນານເທົ່າທີ່ຜູ້ກ່ຽວຍັງຄົງຮັກສາ ການພົວພັນທີ່ກ່າວມາຂ້າງເທິງນັ້ນໄດ້ດີຢູ່.

## ວ່າດ້ວຍ ຄຣູ, ອະນຸສາສນາຈານ (Chaplain)ແລະພວກຮັບໃຊ້ອື່ນໆ **G-6.0203**

ໃນເວລາທີ່ຜູ້ຮັບໃຊ້ພຣະເຈົ້າໄດ້ຖືກມອບໝາຍໃຫ້ເປັນຜູ້ສອນ, ເປັນອະນຸອາຈານ, ເປັນຜູ້ຊີ້ແນະແນວທາງ, ເປັນຜູ້ ຮັບໃຊ້ໃນສະຖາບັນສຶກສາ, ເປັນຜູ້ເຜີຍແຜ່ສາສນາ, ເປັນຜູ້ຮ່ວມໄມ້ຮ່ວມມືໃນວຽກງານການປະກາດ, ເປັນຜູ້ປະກາດ, ເປັນຜູ້ ນຳພາການປົກຄອງ, ເປັນຜູ້ເຮັດວຽກງານສັງຄົມສົງເຄາະ, ເປັນຜູ້ໃຫ້ຄຳປຶກສາຫາລື, ຫຼືເປັນຜູ້ຮ່ວມງານໃນຂະແໜງການອື່ນໆ ທີ່ເໝາະສົມກັບວຽກງານຮັບໃຊ້ພຣະເຈົ້າຂອງຄຣິສຕະຈັກ; ພວກກ່ຽວຈະຕ້ອງມີສິ່ງທີ່ຢັ້ງຢືນເຖິງການດຳຣົງຊີວິດທີ່ມີຄຸນນະພາບ ຂອງຕົນເອງ ຊຶ່ງສິ່ງນັ້ນສາມາດເປັນການປະກອບສ່ວນເຂົ້າໃນວຽກງານການຮັບໃຊ້ຂອງຕົນເອງ. ພວກເຂົາຕ້ອງມີການ ເບິ່ງແຍງ ດູແລຕໍ່ບຸກຄົນທີ່ເຂົາຈະຕ້ອງຮັບຜິດຊອບ ເພື່ອການເສີມ

ຂະຫຍາຍວຽກງານຮັບໃຊ້ຂອງຕົນເອງ ໂດຍການຮັບໃຊ້ ພຣະຄຣິສ ແລະບັນດາພວກທີ່ຕິດຕາມພຣະອົງ, ສ້າງຄວາມເຂັ້ມແຂງໃນນີ້ຂຶ້ນພາຍໃນຄຣິສຕະຈັກ, ປະກອບອຸປກອນ ການທຳງານແກ່ຄຣິສຕະຈັກ ໃນການປະຕິບັດວຽກງານສົງເຄາະ ແລະການຮັບໃຊ້ສັງຄົມທົ່ວໄປ. ນອກຈາກນີ້ ພວກເຂົາຍັງຈະຕ້ອງປະກອບສ່ວນໃນວຽກງານຂອງຄຣິສຕະຈັກ, ວຽກງານຂອງພາກ, ແລະພົວພັນກັບຄຣິສຕະຈັກທົ່ວໆໄປ. ພວກເຂົາມີສິດໃນການເລືອກຕັ້ງໃນຕຳແໜ່ງທີ່ສູງກວ່າຂອງຄຣິສຕະຈັກໃນພາກ, ໃນສະພາ, ແລະ ໃນອົງການປົກຄອງອື່ນໆ.

## ૩/ ວ່າດ້ວຍ ຜູ້ປົກຄອງ G-6.0300

## ວ່າດ້ວຍ ການປະຕິບັດໃນດ້ານພຣະຄຳ G-6.0301

ໃນຍຸກສະໄໝຂອງພຣະຄຳພີເດີມ, ຜູ້ປົກຄອງ ແມ່ນພວກຄົນທີ່ທຳການປົກຄອງປະຊາຊົນ, ດັ່ງນັ້ນໃນສະໄໝຂອງ ພຣະຄຳພີໃໝ່, ຄຣິສຕະຈັກໄດ້ຊອກຫາຄົນທີ່ມີຂອງປະທານພິເສດ ເພື່ອໃຫ້ມາປະກອບສ່ວນໃນການປົກຄອງຄຣິສຕະຈັກ.

## ວ່າດ້ວຍ ຄວາມຮັບຜິດຊອບໃນການປົກຄອງ G-6.0302

ຜູ້ປົກຄອງ ຕ້ອງເປັນບຸກຄົນທີ່ຖືກເລືອກມາຈາກສະມາຊິກຄຣິສຕະຈັກ. ພວກເຫຼົ່ານີ້ຕ້ອງເປັນຜູ້ຮ່ວມໄມ້ຮ່ວມມືກັບ ອາຈານເພື່ອພ້ອມພຽງກັນໃນການປະຕິບັດວຽກງານການນຳພາ, ການປົກຄອງ, ແລະດ້ານຣະບຽບວິນັຍຂອງຄຣິສຕະຈັກ. ພ້ອມນີ້ ຜູ້ປົກຄອງຍັງຕ້ອງມີຄວາມຮັບຜິດຊອບຕໍ່ການພົວພັນພາຍໃນຄຣິສຕະຈັກ ແລະຕໍ່ຄຣິສຕະຈັກອື່ນໆທົ່ວໄປອີກດ້ວຍ. ພວກເຂົາຄວນເປັນຜູ້ຮັບໃຊ້ພຣະເຈົ້າທີ່ເຕັມໄປດ້ວຍຄວາມເຊື່ອ ແລະມີຄວາມຕ້ອງການທີ່ຈະເຂົ້າເປັນສະມາຊິກໃນຄະນະ ປົກຄອງຂອງຄຣິສຕະຈັກ. (G-10.0102)
ໃນເວລາມີການເລືອກເອົາຜູ້ນຳໃນຣະດັບສູງ, ຜູ້ປົກຄອງຕ້ອງທຳການປ່ອນ ບັດລົງຄະແນນສຽງ ດ້ວຍສິດທີແລະອຳນາດຢ່າງດຽວກັນກັບອາຈານ. ພວກເຂົາຍັງມີສິດໃນການກຳກັບຫ້ອງການຮັບໃຊ້ ພຣະເຈົ້າໃນຄຣິສຕະຈັກທຸກຢ່າງ.

## ວ່າດ້ວຍ ຂອງປະທານແລະຂໍ້ກຳໜົດ. G-6.3030

ຜູ້ປົກຄອງ ຄວນເປັນຜູ້ທີ່ມີຄວາມເຊື່ອໃນພຣະເຈົ້າ, ເປັນຜູ້ທີ່ຍອມອຸທິດຕົນເອງ, ແລະເປັນຜູ້ທີ່ສາມາດຕັດສິນບັນຫາ ໃດນຶ່ງໄດ້ດີ. ມີການດຳຣົງຊີວິດທີ່ສະແດງອອກເຖິງການເປັນຄຣິສຕຽນ ທັງພາຍໃນ ແລະພາຍນອກຄຣິສຕະຈັກ (G-6.0106).

## ວ່າດ້ວຍ ຄວາມຮັບຜິດຊອບສະເພາະ G-6.0304

ຜູ້ປົກຄອງ ມີໜ້າທີ່ສະເພາະຂອງຕົນເອງ ແລະຮ່ວມກັບຄຣິສຕະຈັກໃນການສົ່ງເສີມຂະຫຍາຍຄວາມເຊື່ອ ແລະຊີວິດການ ຮັບໃຊ້ພຣະເຈົ້າ ໃນຄຣິສຕະຈັກທີ່ຕົນເອງຖືກມອບໝາຍໃຫ້. ຮ່ວມມືກັບອາຈານ ໃນການຊຸກຍູ້ສະມາຊິກຂອງຄຣິສຕະຈັກ ໃນການນະມັສການ, ຮັບໃຊ້ພຣະເຈົ້າ, ປະກອບອຸປກອນ, ແລະຟື້ນຟູວຽກງານຮັບໃຊ້ພຣະເຈົ້າພາຍໃນຄຣິສຕະຈັກ ແລະເພື່ອການປະກາດໃນໂລກ. ໃຫ້ການຢ້ຽມຢາມ, ໃຫ້ຄວາມອົບອຸ່ນ, ແລະ ໃຫ້ການ

ເບິ່ງແຍງດູແລແກ່ຄົນອື່ນ. ໃຫ້ຄວາມສົນໃຈພິເສດຕໍ່ຄົນທຸກຍາກ, ຄົນເຈັບປ່ວຍ, ພວກຄົນທີ່ຢູ່ໂດດດ່ຽວ, ແລະມີທຸກໂສກ. ພວກຜູ້ປົກຄອງຄວນທຳການສເນີ ບັນດາບຸກຄົນທີ່ຕ້ອງການຄວາມເບິ່ງແຍງນີ້ຕໍ່ຄະນະປົກຄອງຂອງເຂົາ ແລະຕໍ່ອາຈານໃຫ້ຮັບຊາບ. ພວກເຂົາຄວນມີການປັບປຸງຕົນເອງໃຫ້ຊຳນິຊຳນານໃນການສອນພຣະຄຳພີ ຊຶ່ງບາງຄັ້ງເຂົາຈະຕ້ອງໄດ້ເປັນຜູ້ນຳພາໃນເວລາທີ່ ອາຈານບໍ່ຢູ່. ໃນກໍຣະນີພິເສດ ໂດຍຜ່ານການສຶດສອນ ແລະຮັບຮູ້ຈາກທາງພາກເພຣັສໄບເທີຣີ, ຜູ້ປົກຄອງສາມາດເປັນຜູ້ນຳ ພາໃນການໃຫ້ສິນລະທາສະຫນິດໄດ້ ໂດຍອີງໃສ່ກົດທັມມະນູນ G-11.0103. ຫນ້າທີ່ດັ່ງກ່າວຈະຕ້ອງຕົກໃສ່ຜູ້ປົກຄອງ ທັ້ງນີ້ເພາະຜູ້ປົກຄອງ ເປັນຜູ້ທີ່ຖືກເອີ້ນມາໃຫ້ຮັບໃຊ້ ແລະມີຄວາມຮັບຜິດຊອບຕໍ່ວຽກງານຄຣິສຕະຈັກທັງຫມົດ.

## 4/ ວ່າດ້ວຍ ມັກຄະນາຍົກ G-6.0400

## ວ່າດ້ວຍ ການຮັບໃຊ້ພຣະເຈົ້າ ແລະຂອງປະທານຂອງມັກຄະນາຍົກ G-6.0401

ຫ້ອງການມັກຄະນາຍົກ, ດັ່ງໄດ້ສເນີໃນພຣະຄຳພີ, ເປັນຫ້ອງການແຫ່ງການປະຕິບັດການສົງເຄາະ, ການເປັນພະຍານ, ແລະການຮັບໃຊ້ຕາມແບບຢ່າງຂອງພຣະເຢຊູຄຣິສ. ບຸກຄົນທີ່ມີອິນຍານຈິດທີ່ດີ, ມີການເຫັນອົກເຫັນໃຈຄົນອື່ນ, ຊື່ສັດສຸດຈະຣິດ, ມີຊີວິດທີ່ເປັນແບບຢ່າງ, ມີຄວາມຮັກແພງສັນພີ່ນ້ອງ, ແລະມີການຕັດສິນບັນຫາທີ່ຖືກຕ້ອງ, ບຸກຄົນດັ່ງກ່າວ ຄວນເລືອກໃຫ້ມາຮັບໃຊ້ວຽກງານໃຫ້ຫ້ອງການນີ້.

## ວ່າດ້ວຍ ຄວາມຮັບຜິດຊອບ G-6.0402

ຫນ້າທີ່ເບື້ອງຕົ້ນຂອງມັກຄະນາຍົກ ຄືຕ້ອງຮັບໃຊ້ບັນດາຜູ້ຄົນທີ່ມີຄວາມຕ້ອງການ ການຊ່ວຍເຫຼືອ, ຄົນເຈັບປ່ວຍ, ຄົນຂາດເພື່ອນ, ແລະພວກຄົນທີ່ມີຄວາມໂສກເສົ້າ. ພວກເຂົາຕ້ອງເຂົ້າໃຈວ່າ ອາດມີຫນ້າທີ່ຢ່າງອື່ນອີກທີ່ທາງຄະນະປົກຄອງ ອາດນຳມາສເນີໃຫ້ທຳເປັນບາງຄັ້ງຄາວ.

## ວ່າດ້ວຍ ການຈັດຕັ້ງແບບສະພາກັມມະການ (Board) G-6.0403

ມັກຄະນາຍົກຂອງຄຣິສຕະຈັກໃດນຶ່ງ ຈະຕ້ອງມີການປະກອບການຈັດຕັ້ງແບບສະພາກັມມະການ. ອາຈານ,ອາຈານຮອງ ຫຼືອາຈານຊ່ວຍຄວນດຳຣົງຕຳແຫນ່ງໃນຖານະເປັນສະມາຊິກທີ່ປຶກສາ (G-6.0202) ສະພາຄະນະກັມມະການ ຂອງມັກຄະນາຍົກ ຄວນເລືອກເອົາຜູ້ຄວບຄຸມນຳພາຄົນນຶ່ງ ແລະເລຂາຄົນນຶ່ງ ໃນທ່າມກາງສະມາຊິກຂອງຕົນ. ເລຂາ ຕ້ອງເປັນ ຜູ້ເກັບກຳ ຣາຍງານການດຳເນີນງານທັງຫມົດຂອງຄະນະສະພາກັມມະການ.

## ວ່າດ້ວຍ ການຢູ່ພາຍໃຕ້ການຄວບຄຸມດູແລຂອງຄະນະປົກຄອງ G-6.0404

ເຫມືອນດັ່ງກິຈການທັງຫມົດຂອງຄຣິສຕະຈັກ ຕ້ອງຢູ່ພາຍໃຕ້ອຳນາດການປົກຄອງຂອງຄະນະປົກຄອງ. ເຫດສັນນັ້ນ ຄະນະມັກຄະນາຍົກ ກໍຕ້ອງຢູ່ພາຍໃຕ້ການຄວບຄຸມດູແລຂອງຄະນະປົກຄອງເຊັ່ນກັນ. ບົດຣາຍງານຂອງຄະນະມັກຄະນາຍົກ ຄວນຕ້ອງນຳສເນີຕໍ່ຄະນະປົກຄອງຢ່າງນ້ອຍປີລະຄັ້ງ ແລະໃນທຸກຄັ້ງທີ່ທາງຄະນະປົກຄອງຮຽກຮ້ອງໃຫ້ນຳສເນີ. ຄະນະປົກຄອງ ມີສິດທີ່ຈະສເນີໃຫ້ເປັນໂນຄະ ຫຼືໃຫ້ແກ້ໄຂ ໃນທຸກໆກິຈການຂອງຄະນະມັກ

ຄະນາຍົກ, ຫຼືທາງຄະນະປົກຄອງອາດມີການຊີ້ແນະ ໃຫ້ທາງສະພາກັມມະການຂອງມັກຄະນາຍົກ ໄດ້ມີການສຶກສາກິຈການຕ່າງໆນັ້ນຄືນໃໝ່ເພື່ອພິຈາຣະນາ.

## ວ່າດ້ວຍ ການປະຊຸມ G-6.0405

ຄະນະສະພາກັມມະການຂອງມັກຄະນາຍົກ ຄວນມີການປະຊຸມກັນຢ່າງສມ່ຳສເມີ ໂດຍອີງໃສ່ຄຳຮຽກຮ້ອງຕ້ອງການຂອງ ຜູ້ຄອບຄຸມດູແລ ຫຼືໃນເວລາທີ່ມີການຊີ້ແນະຈາກຄະນະປົກຄອງ. ແຕ່ຢ່າງນ້ອຍຄວນມີການປະຊຸມທຸກໆສີ່ເດືອນ. ທາງສະພາຄະນະກັມມະການ ຄວນເປັນຜູ້ກຳໜົດຣາຍງານການປະຊຸມ. ການເຂົ້າຮ່ວມປະຊຸມກັບຄະນະປົກຄອງ ຄວນໃຫ້ມີ ປີລະຄັ້ງ ເພື່ອປຶກສາຫາລືບັນຫາຕ່າງໆທີ່ມີຜົນປະໂຫຍດຮ່ວມກັນ. ການປະຊຸມນັ້ນຕ້ອງແມ່ນຜູ້ຄອບຄຸມດູແລ ຂອງຄະນະ ປົກຄອງມາເປັນອົງປະທານຂອງກອງປະຊຸມ. ການຮ່ວມປະຊຸມແບບນີ້ ຈະບໍ່ມີການຜູກພັນຫຼືພົວພັນກັນ ໃນການຕົກລົງ ບັນຫາໃດນຶ່ງ ເພາະການຕົກລົງໃນບັນຫາໃດນຶ່ງນັ້ນ ທາງຄະນະຂອງໃຜມັນຈະຕ້ອງມີການຕົກລົງກັນເອງ ໂດຍພາຍໄຕ້ການ ຮັບຜິດຊອບຂອງຕົນເອງ.

## ວ່າດ້ວຍ ກິຈການທີ່ມີການກ່ຽວຂ້ອງພົວພັນກັນ G-6.0406

ມັກຄະນາຍົກ ອາດຖືກແຕ່ງຕັ້ງຂຶ້ນໂດຍອົງການປົກຄອງຄຣິສຕະຈັກເພື່ອໃຫ້ທຳການຮັບໃຊ້ ດູແລຊັພສິນ, ຫຼືຮັບໃຊ້ ໃນຄະນະບໍຣິຫານຕ່າງໆ. ຄະນະປົກຄອງ ຄວນເປັນຜູ້ເລືອກເອົາບຸກຄົນໃນສະມາຊິກຄຣິສຕະຈັກຂອງຕົນເພື່ອມາເປັນຜູ້ ຊ່ວຍວຽກງານຂອງມັກຄະນາຍົກ ໃນດ້ານການສົງເຄາະຕ່າງໆ.

## ວ່າດ້ວຍ ການບໍ່ຈຳເປັນຕ້ອງມີມັກຄະນາຍົກ G-6.0407

ໂດຍອີງໃສ່ສຽງສ່ວນຫຼາຍຂອງຄຣິສຕະຈັກທີ່ເຫັນດີບໍ່ໃຫ້ມີຫ້ອງການມັກຄະນາຍົກ, ໃນກໍຣະນີນີ້ ກິຈການແລະວຽກງານທັງໝົດຕ້ອງຕົກເປັນພາຣະຂອງຄະນະປົກຄອງຄຣິສຕະຈັກ.

## 5/ ວ່າດ້ວຍ ການສະຣະອຳນາດ G-6.0500

## ວ່າດ້ວຍ ການສະຣະອຳນາດ G-6.0501

ເວລາໃດກໍຕາມທີ່ຜູ້ຮັບໃຊ້ພຣະເຈົ້າທາງດ້ານພຣະຄຳແລະພິທີສິນ (ອາຈານ) ຜູ້ປົກຄອງ, ຫຼືມັກຄະນາຍົກ, ທີ່ປະກາດສະຣະສິດອຳນາດໃນຕຳແໜ່ງຂອງຕົນ ໂດຍການຂຽນເປັນລາຍລັກອັກສອນ ສເນີຕໍ່ທາງສນຽນຂອງຄະນະປົກຄອງ, ຫຼືຕໍ່ສນຽນທີ່ໄດ້ຖືກກຳໜົດໄວ້ໃນການກຳອຳນາດຂອງອົງການຈັດຕັ້ງປົກຄອງຂອງຄຣິສຕະຈັກ, ການສະຣະສິດດັ່ງກ່າວ ຕ້ອງຖືກຮັບເອົາ ໃນເວລາທີ່ຮັບເອົາຄຳຮ້ອງຂໍຂອງຜູ້ກ່ຽວນັ້ນ. ການສະຣະສິດດັ່ງກ່າວຕ້ອງໃຫ້ຜູ້ກ່ຽວອອກຈາກການ ເປັນສະມາຊິກຂອງຄະນະທີ່ຜູ້ກ່ຽວສັງກັດຢູ່ນັ້ນກ່ອນ ແລະຕ້ອງໃຫ້ຢຸດເຊົາການປະຕິບັດງານໃນຫ້ອງການນັ້ນໆຂອງຜູ້ກ່ຽວ.

### ວ່າດ້ວຍ ຄວາມດື້ດຶງ ໃນການເຮັດວຽກທີ່ບໍ່ໄດ້ມີການຕົກລົງເຫັນດີ **G-6.0502**

ຖ້າຫາກເຈົ້າໜ້າທີ່ຮັບໃຊ້ພຣະເຈົ້າຄົນໃດ ຝືນທຳໃນສິ່ງທີ່ທາງອົງການຈັດຕັ້ງປົກຄອງບໍ່ເຫັນດີ ເຫັນພ້ອມນັ້ນ,ຫຼັງຈາກ ທາງຄະນະປົກຄອງໄດ້ທຳການແນະນຳ ຕັກເຕືອນແລ້ວ ແຕ່ຍັງຝືນທຳ, ທາງຄະນະຕ້ອງປະກາດ ສະຣະສິດຜູ້ກ່ຽວອອກຈາກ ຄຣິສຕະຈັກນັ້ນໆທັນທີ.

### ວ່າດ້ວຍ ຜົນຂອງການສະຣະສິດ **G-6.0503**

ການສະຣະສິດນີ້ ຄວນນຳສເນີໂດຍທ່ານສມຽນຂອງຄຣິສຕະຈັກ ຫຼືສມຽນທີ່ໄດ້ກຳໜົດໄວ້ ໃນເວລາມີກອງປະຊຸມ ຊຸດຕໍ່ໄປ. ຈະຕ້ອງລຶບຊື່ຜູ້ທີ່ຖືກໃຫ້ສະຣະສິດນັ້ນອອກຈາກທະບຽນພົນທີ່ເໝາະສົມ, ແລະຕ້ອງປະຕິບັດ ຕາມຄະດີ ອີງໃສ່ ກົດຣະບຽບທີ່ກຳໜົດໄວ້ໃນກົດທັມມະນູນ.

## VII/ ວ່າດ້ວຍ ຄຣິສຕະຈັກທ້ອງຖິ່ນ The Particular Church G-7.0000

### 1/ ວ່າດ້ວຍ ການຈັດຕັ້ງ, ໜ້າທີ່, ແລະການປົກຄອງ **G-7.0100**

### ວ່າດ້ວຍ ຖືກແຕ່ງຕັ້ງຈາກພາກ ໃຫ້ເປັນສ່ວນນຶ່ງຂອງຄຣິສຕະຈັກທັງໝົດ **G-7.0101**

ຄຣິສຕະຈັກທັງໝົດ ບໍ່ວ່າຈະເປັນຄຣິສຕະຈັກສາກົນ ຫຼືຄຣິສຕະຈັກສະເພາະທ້ອງຖິ່ນໃດນຶ່ງ. ຮູບແບບລັກສະນະ ຂອງຄິຣສຕະຈັກທັ້ງສອງຢ່າງນີ້ ຈະຕ້ອງມີພື້ນຖານມາຈາກຄຣິສຕະຈັກທ້ອງຖິ່ນ. ຄຣິສຕະຈັກທ້ອງຖິ່ນໃນເຄືອເພຣັສໄບທີຣຽນ ແຫ່ງສະຫະຣັດອາເມຣິກາ ສາມາດຖືກກໍ່ຕັ້ງຂຶ້ນໄດ້ໂດຍສິດທິອຳນາດຂອງທາງພາກເພຣັສໄບເທີຣີ ແລະຄຣິສຕະຈັກນັ້ນໆຕ້ອງ ປະຕິບັດການຢູ່ພາຍໃຕ້ກົດທັມມະນູນຂອງຄະນະເພຣັສໄບທີຣຽນ.

### ວ່າດ້ວຍ ການຮັບໃຊ້ພຣະເຈົ້າ **G-7.0102**

ຄຣິສຕະຈັກ ຕ້ອງມີສ່ວນຮັບຜິດຊອບຕໍ່ວຽກງານການປະກາດຂອງຕົນເອງ. ໄພ່ພົນຂອງພຣະເຈົ້າ ຕ້ອງເປັນຜູ້ດຳເນີນ ວຽກງານການປະກາດ, ການນະມັສການ, ມີສ່ວນໃນພິທີສິນຕ່າງໆ, ມີສ່ວນໃນການເຜີຍແຜ່, ການອົບຮົມ, ການແນະນຳ, ການປ່ອແປງບຸກຄົນ ແລະສັງຄົມ, ພ້ອມທັງການຮັບໃຊ້ອື່ນໆ. ຄຣິສຕະຈັກ ຫາກບໍ່ມີພື້ນຖານການຮັບໃຊ້ພຣະເຈົ້າຕໍ່ສ່ວນ ບຸກຄົນ, ເພື່ອນບ້ານ, ແລະຕໍ່ຊຸມຊົນ ແລະຖ້າຫາກບໍ່ມີການ ສະໜັບສະໜູນຈາກຄຣິສຕະຈັກ ໂດຍການອະທິຖານ, ການເງິນ, ໃນດ້ານສ່ວນຕົວ ແລະສ່ວນຮວມແລ້ວ, ການເຮັດວຽກງານ ຮັບໃຊ້ພຣະເຈົ້າຂອງຄຣິສຕະຈັກ ອາດເປັນໄປບໍ່ໄດ້. ການຮັບໃຊ້ພຣະເຈົ້າຂອງຄຣິສຕະຈັກ ເປັນປັດໃຈທີ່ສຳຄັນທີ່ສຸດ ຕໍ່ການຮັບໃຊ້ພຣະເຈົ້າຂອງທາງພາກເພຣັສໄບເທີຣີ ແລະຂອງຄຣິສຕະຈັກໃຫຍ່ອັນອື່ນໆອີກ.

### ວ່າດ້ວຍ ການປົກຄອງ **G-7.**0103

ສະມາຊິກຂອງຄຣິສຕະຈັກໃດນຶ່ງ ຕ້ອງມີຄວາມຍິນດີຮັບເອົາການນຳພາຂອງເຈົ້າພະນັກງານຮັບໃຊ້ພຣະເຈົ້າທີ່ຕົນເອງ ເປັນຜູ້ເລືອກຂຶ້ນມາ. ຄະນະປົກຄອງທີ່ປະກອບດ້ວຍ ອາຈານ ຫຼືອາຈານຊ່ວຍ, ອາຈານຮອງ, ແລະບັນດາຜູ້ປົກຄອງ, ພວກນີ້ເປັນພວກທີ່ທຳງານຕົວຈິງ ໃນການປົກຄອງຄຣິສຕະຈັກນັ້ນໆ ອີງຕາມກົດທັມມະນູນ ແຫ່ງການປົກ

ຄອງຂອງ ເພຣັສໄບທີຣຽນແຫ່ງສະຫະຣັດອາເມຣິກາ. ການນະມັສການແບບເປັນກຸ່ມຄອບຄົວ, ທັ້ງຍິງແລະຊາຍ, ເປັນ ການ ພົວພັນອັນດີ ຕໍ່ກັນແລະກັນ ໃນຣະຫວ່າງພວກເຂົາແລະລູກໆ ແລະຕໍ່ພຣະເຈົ້າ ໂດຍການຊີງນຳໂດຍຜ່ານ ທາງພຣະເຢຊູຄຣິສ. ການຈັດຕັ້ງກຸ່ມນະມັສການຈະບໍ່ສາມາດທຳໄດ້ ຖ້າຫາກບໍ່ມີຄວາມໄວ້ວາງໃຈ ແລະຄວາມຮັກຊຶ່ງ ກັນແລະກັນ

## 2 / ວ່າດ້ວຍ ການຈັດຕັ້ງຂອງບາງຄຣິສຕະຈັກ G-7.0200

## ວ່າດ້ວຍ ຂໍ້ຕົກລົງແຫ່ງກິດທັມມະນູນ G-7.0201

ໃນການສ້າງຕັ້ງຄຣິສຕະຈັກ, ທາງພາກເພຣັສໄບເທີຣີຈະເປັນຜູ້ຈັດການໂດຍກົງ ຫຼືໂດຍການມອບໃຫ້ຄະນະ ກັມມາທິການທີ່ຖືກມອບໝາຍໃຫ້ ເປັນຜູ້ຈັດຕັ້ງ. ທາງຄະນະ ຕ້ອງໄດ້ຮັບຄຳຮ້ອງຂໍຈາກທາງສະມາຊິກຂອງຄຣິສຕະ ຈັກນັ້ນໆ ຊຶ່ງຈະຕ້ອງແມ່ນສະມາຊິກທີ່ປະກາດການຍອມຮັບເຊື່ອ, ສະມາຊິກທີ່ຢໍ້າຄືນຄວາມເຊື່ອ, ຫຼືສະມາຊິກໂດຍ ການໂອນມາກໍຕາມ, ພວກເຫຼົ່ານີ້ ຕ້ອງຍິນດີທີ່ຈະຮ່ວມໃຈກັນປະກອບກໍ່ຕັ້ງຄຣິສຕະຈັກໃໝ່ຂຶ້ນມາ. ພວກເຫຼົ່ານີ້ ຕ້ອງພ້ອມກັນ ໃຫ້ຄຳໝັ້ນສັນຍາ ດັ່ງນີ້ຄື:

ພວກຂ້າພຣະເຈົ້າ, ດັ່ງມີຣາຍຊື່ຕໍ່ລົງໄປນີ້, ໂດຍພາຍໃຕ້ຄວາມເມດຕາປານີຈາກພຣະເຈົ້າ, ໄດ້ມີຈຸດປະສົງຈະປະກອບ ແລະຈັດຕັ້ງກັນຂຶ້ນເປັນຄຣິສຕະຈັກ ໂດຍໃຫ້ຊື່ວ່າ:________________________. ພວກຂ້າພຣະເຈົ້າ ປະຕິຍານແລະສັນຍາວ່າ ຈະດຳຣົງຊີວິດໃຫ້ເປັນອັນນຶ່ງອັນດຽວກັນ ແລະຈະຂໍເປັນລູກສິດຮັບໃຊ້ຂອງ ອົງພຣະເຢຊູຄຣິສ ຈະຍອມຕົວ ຕໍ່ພຣະອົງ ແລະເພື່ອນຮ່ວມງານຂອງພຣະອົງ ເໝືອນດັ່ງເປັນກາຍອັນດຽວກັນ ຕໍ່ອົງ ພຣະຄຣິສ ຕໍ່ຄວາມເຊື່ອ ຕໍ່ໜ້າທີ່ ແລະຕໍ່ ຂໍ້ຣະບຽບວິນັຍຂອງຄຣິສຕະຈັກ ຕໍ່ຄະນະເພຣັສໄບທີຣຽນແຫ່ງສະຫະຣັດ ອາເມຣິກາ.

ລາຍເຊັນຂອງສະມາຊິກທັງໝົດ:_______________________

## ວ່າດ້ວຍ ການພົວພັນຕໍ່ພາກເພຣັສໄບເທີຣີ G-7.0202

a- ພວກເຂົາຕ້ອງຖືກປະກາດການແຕ່ງຕັ້ງໃຫ້ເປັນຄຣິສຕະຈັກຢ່າງເປັນທາງການ ຕໍ່ໜ້າພາກເພຣັສໄບເທີຣີ ແລະຈະຕ້ອງດຳເນີນການເລືອກຕັ້ງເອົາຄະນະປົກຄອງ, ແລະຄະນະມັກຄະນາຍົກ, ໃຫ້ຄວາມຮ່ວມມືກັບທາງພາກເພຣັສໄບເທີຣີ ໃນການຈັດຽນການທົດສອບ, ການສະຖາປະນາ, ແລະການແຕ່ງຕັ້ງ ທີ່ຈະມີຂຶ້ນ.

b- ທາງພາກເພຣັສໄບເທີຣີ ຕ້ອງມີການຕິດຕາມຢ່າງໃກ້ຊິດກັບຄຣິສຕະຈັກນັ້ນໆ ເພື່ອຄໍ້າປະກັນໃນການ ໃຫ້ມີຜູ້ນຳ, ມີໂຄງການໃນການຮັບໃຊ້ວຽກງານພຣະເຈົ້າ ແລະການເປັນພະຍານ, ໃນການໃຫ້ມີການຮ່ວມມືກັບ ຄຣິສຕະຈັກອື່ນໆ, ໃນການ ຝຶກອົບຮົມກົດຣະບຽບ ເພື່ອໃຫ້ເຂົາຮັບຮູ້ກິດທັມມະນູນຂອງຄຣິສຕະຈັກ ຄະນະເພຣັສໄບ ທີຣຽນ ແຫ່ງສະຫະຣັດອາເມຣິກາ. ພ້ອມກັນນັ້ນ ຕ້ອງຊ່ວຍໃຫ້ຄຳແນະນຳ, ໃຫ້ການຊຸກຍູ້ໜູນໃຈ ໃຫ້ມີການປະກອບ ສ່ວນຢ່າງແຂງແຮງຕໍ່ຄຣິສຕະຈັກອື່ນໆ ໃນເລື່ອງນີ້.

## 3/ ວ່າດ້ວຍ ການປະຊຸມຂອງຄຣິສຕະຈັກ G-7.0300

## ວ່າດ້ວຍ ຄຣິສຕະຈັກ G-7.0301

ຄຣິສຕະຈັກໄດ້ຖືກປະກອບຂື້ນດ້ວຍສະມາຊິກທີ່ຫ້າວຫັນ. ສະມາຊິກທຸກຄົນ ທີ່ເຂົ້າຮ່ວມໃນກອງປະຊຸມຂອງ ຄຣິສຕະຈັກ ມີສິດໃນການອອກສຽງປ່ອນບັດໄດ້.

## ວ່າດ້ວຍ ການປະຊຸມປະຈຳປີ G-7.0302

a- ຄຣິສຕະຈັກ ຄວນມີກອງປະຊຸມໃຫຍ່ປະຈຳປີ ຫຼືກອງປະຊຸມຍ່ອຍອື່ນທີ່ເຫັນວ່າຈຳເປັນ. ໃນກອງປະຊຸມໃຫຍ່ ປະຈຳປີ ຕ້ອງມີການເລືອກຕັ້ງຄະນະກັມມະການ, ຮັບເອົາບົດລາຍງານ, ແລະການວາງແຜນການປະຈຳປີຂອງຄຣິສຕະຈັກ, ຮັບເອົາລາຍງານຂອງຄະນະສະພາກັມມະການນັກຄະນາຍົກ ແລະຄະນະປົກຄອງ, ແລະຕ້ອງມີການສເນີຜ່ານ ຮັບເອົາວຽກງານ ຈຳເປັນອື່ນໆ. ການປະຊຸມທວນຄືນກ່ຽວກັບການໃຊ້ຈ່າຍເງິນເດືອນຂອງອາຈານ ຕ້ອງມີຂື້ນໃນກອງປະຊຸມຂອງຄະນະປົກຄອງ (G-10.0102m). ການແຈ້ງການກ່ຽວກັບກອງປະຊຸມຫຼວງປະຈຳປີນີ້ ຄວນປະກາດສອງອັນອາທິດ ກ່ອນເປີດກອງ ປະຊຸມ.

## ວ່າດ້ວຍ ການປະຊຸມພິເສດ

b - ກອງປະຊຸມແບບພິເສດ ອາດສາມາດມີຂື້ນໄດ້ ໃນກໍຣະນີໃດນຶ່ງ ຫຼືໃນກໍຣະນີໃດໆກໍໄດ້ ເພື່ອອຳນວຍຄວາມສະດວກໃນການເປີດກອງປະຊຸມປະຈຳປີ ຫຼືໃນການສຶກສາວຽກງານໃດນຶ່ງທີ່ສຳຄັນ ແລະຖ້າກອງປະຊຸມນັ້ນຫາກເຫັນວ່າ ເປັນທີ່ເໝາະສົມຕໍ່ວຽກງານຂອງຄຣິສຕະຈັກ. (G-7.0304). ຄວນມີການຈຳກັດກ່ຽວກັບ ຣາຍການພິເສດຕ່າງໆທີ່ ເປັນສາເຫດໃຫ້ເປີດກອງປະຊຸມນັ້ນໆຂື້ນມາ. ສາເຫດນັ້ນ ຕ້ອງເຫັນວ່າຈຳເປັນ ຈຶ່ງຄ່ອຍເປີດກອງປະຊຸມພິເສດໄດ້.

## ວ່າດ້ວຍ ການເອີ້ນຮຽກໃຫ້ມີກອງປະຊຸມ G-7.0303

a- ການເອີ້ນຮຽກໃຫ້ມີກອງປະຊຸມຄຣິສຕະຈັກ ຕ້ອງອີງໃສ່ສິ່ງດັ່ງຕໍ່ລົງໄປນີ້:

1/ ອີງໃສ່ການຕົກລົງເຫັນດີຂອງຄະນະປົກຄອງທີ່ເຫັນວ່າ ເວລາໃດທີ່ເໝາະສົມໃນການເປີດກອງປະຊຸມ

2/ ໂດຍການເຫັນດີຂອງທາງພາກເພຣັສໄບເທີຣີ ທີ່ເຫັນວ່າສົມຄວນ

3/ ຄະນະປົກຄອງເຫັນດີ ໂດຍອີງໃສ່ການຂຽນເປັນຄຳຮ້ອງຂໍໃຫ້ເປີດກອງປະຊຸມຈາກ 1/4 ຂອງສະມາຊິກການແຈ້ງການ ຂອງກອງປະຊຸມ

b- ການແຈ້ງການກ່ຽວກັບກອງປະຊຸມຄຣິສຕະຈັກ ຕ້ອງປະກາດກ່ອນເປີດກອງປະຊຸມສອງອັນອາທິດ (ໃຫ້ເບິ່ງ G-14.0502) ກ່ຽວກັບການແຈ້ງການ ໃນການເອີ້ນຮຽກເອົາອາຈານຂອງຄຣິສຕະຈັກ)

## ວ່າດ້ວຍ ວຽກງານຕ່າງໆ G-7.0304

a- ວຽກງານຕ່າງໆ ທີ່ຄວນນຳມາຊຳຣະສະສາງໃນກອງປະຊຸມຄຣິສຕະຈັກຈະຕ້ອງປະກອບດ້ວຍ:

1/ ວຽກງານກ່ຽວກັບການຈັດຕັ້ງຄະນະປົກຄອງ, ນັກຄະນາຍົກ, ແລະຜູ້ຮັບຜິດຊອບຊັບສິນຂອງຄຣິສຕະຈັກ.
2/ ວຽກງານກ່ຽວກັບການເອີ້ນຮຽກເອົາອາຈານທີ່ຈະມາຮັບໃຊ້ໃນຄຣິສຕະຈັກ.
3/ ວຽກງານທີ່ກ່ຽວພັນກັບອາຈານເຊັ່ນ: ການປ່ຽນແປງການເອີ້ນຮຽກ, ຫຼືການຮ້ອງຂໍ, ຫຼືການຕົກລົງ, ຫຼືການຍຸບເລີກ
4/ ວຽກງານກ່ຽວກັບການຊື້, ການກູ້ຢືມ, ຫຼືການຂາຍຊັບສິນຂອງຄຣິສຕະຈັກ. (G-8.0500)
5/ ວຽກງານທີ່ກ່ຽວພັນກັບການໃຫ້ສິດແກ່ຄຣິສຕະຈັກ, ເຊັ່ນການມອບໝາຍໜ້າທີ່ການປົກຄອງຄຣິສຕະຈັກໃຫ້ແກ່ ຄະນະປົກຄອງ, ຫຼືຮຽກຮ້ອງໃຫ້ທາງພາກທຳການຍົກເວັ້ນໃນມາດຕະຖານໃດນຶ່ງເພາະເຫດຜົນທາງດ້ານຈຳນວນພົນ.

## ວ່າດ້ວຍຂອບເຂດຕ່າງໆຂອງວຽກງານ.

b- ວຽກງານຂອງກອງປະຊຸມຄຣິສຕະຈັກ ຄວນໃຫ້ມີຢູ່ໃນຂອບເຂດຈຳກັດດັ່ງນີ້: ແຕ່ຂໍ້ 1/ ເຖິງຂໍ້ 5/ ໃຫ້ເຮັດໄດ້ ຖ້າຫາກກົດໝາຍພົລເຮືອນທາກອະນຸຍາດ, ວຽກງານກ່ຽວກັບຄະນະກັມມະການດ້ານສາສນາ ແລະຄະນະໜ່ວຍງານຕ່າງໆ ອາດສາມາດນຳມາກະທຳກັນໃນເວລາດຽວກັນກັບກອງປະຊຸມນີ້.

## ວ່າດ້ວຍ ອົງປະກອບຂອງກອງປະຊຸມ G-7.0305

ອົງປະກອບທີ່ຈະທຳການເປີດກອງປະຊຸມໄດ້ ບໍ່ຄວນໃຫ້ຕ່ຳກວ່າ ນຶ່ງສ່ວນສິບ ຂອງຈຳນວນສະມາຊິກທັງໝົດ. ນອກຈາກວ່າ ຄຣິສຕະຈັກໃດນຶ່ງທີ່ໄດ້ຍື່ນຄຳຮ້ອງຂໍຕໍ່ທາງພາກ ແລະໄດ້ຮັບການຮັບຮອງຈາກພາກໃຫ້ເປີດກອງປະຊຸມໄດ້ ເຖິງແມ່ນຈະມີສະມາຊິກນ້ອຍກໍຕາມ. ຈຳນວນອົງປະກອບຂອງກອງປະຊຸມອາດມີການປ່ຽນແປງໄດ້ ໂດຍອີງໃສ່ການອອກສຽງ ຂອງ ສະມາຊິກໃນຄຣິສຕະຈັກ. ກອງປະຊຸມໃດຫາກມີສະມາຊິກນ້ອຍກວ່າສາມຄົນ ຈະບໍ່ສາມາດເອີ້ນວ່າ ເປັນກອງປະຊຸມໄດ້.

## ວ່າດ້ວຍ ຜູ້ຄວບຄຸມກອດກາກອງປະຊຸມ G-7.0306

ອາຈານ ຄວນເປັນຜູ້ຄວບຄຸມກອງປະຊຸມ. ຄຣິສຕະຈັກທີ່ມີອາຈານຊ່ວຍ, ພວກເຫຼົ່ານີ້ກໍຄວນເຂົ້າຮ່ວມປະຊຸມເຊັ່ນກັນ ແລະກໍຄວນປ່ຽນກັນເປັນຜູ້ນຳກອງປະຊຸມ. ຖ້າຫາກຄຣິສຕະຈັກບໍ່ມີອາຈານ, ຜູ້ຄວບຄຸມນີ້ ຄວນຖືກມອບໝາຍມາຈາກພາກ. ຖ້າຫາກວ່າ ອາຈານ ຫຼືຜູ້ທີ່ຖືກມອບໝາຍມາຈາກພາກບໍ່ສາມາດມາໄດ້, ທາງຄະນະປົກຄອງຄຣິສຕະຈັກຄວນມີການຕົກລົງກັນ ຮ້ອງຂໍໃຫ້ອາຈານຄົນອື່ນມາເປັນຜູ້ຄວບຄຸມກອງປະຊຸມ. ຫາກສິ່ງດັ່ງກ່າວນີ້ບໍ່ສາມາດທຳໄດ້, ທາງຄະນະປົກຄອງ ຄວນເລືອກ ເອົາສະມາຊິກຜູ້ໃດຜູ້ນຶ່ງໃນຄະນະປົກຄອງນັ້ນມາເປັນຜູ້ຄວບຄຸມກອງປະຊຸມ.

## ວ່າດ້ວຍ ເລຂາ G-7.0307

ສມຽນຂອງຄະນະປົກຄອງ ຄວນມີໜ້າທີ່ເປັນເລຂາຂອງກອງປະຊຸມ. ຖ້າຫາກສມຽນບໍ່ສາມາດທຳໜ້າທີ່ນີ້ໄດ້ ທາງຄຣິສຕະຈັກຕ້ອງເລືອກເອົາເລຂາຄົນນຶ່ງມາທຳໜ້າທີ່ນີ້. ຣາຍງານກອງປະຊຸມທຸກຄັ້ງ ຄວນໃຫ້ມີການລົງນາມ

ເປັນພະຍານ ໂດຍຜູ້ຄວບຄຸມກອງປະຊຸມ ແລະທ່ານເລຂາເອງ ແລະຣາຍງານດັ່ງກ່າວຄວນຕ້ອງເກັບກຳໄວ້ໃນປື້ມບັນທຶກຂອງຄະນະປົກຄອງ.

## ວ່າດ້ວຍ ການລົງຄະແນນສຽງທີ່ມີຈຳນວນເທົ່າກັນ G-7.0308

ໃນກໍຣະນີທີ່ມີການລົງຄະແນນສຽງ ແລະຜົນອອກມາມີຄະແນນເທົ່າກັນ, ທາງອາຈານຕ້ອງເປັນຜູ້ສເນີໃຫ້ມີການ ລົງຄະແນນສຽງອີກຄັ້ງນຶ່ງ ແຕ່ຖ້າຫາກຍັງມີຄະແນນເທົ່າກັນຢູ່ ກໍໃຫ້ຖືວ່າ ການຕົກລົງນັ້ນໆ ບໍ່ຜ່ານກອງປະຊຸມ.

## 4/ ວ່າດ້ວຍ ການຮ່ວມມື ແລະການດູແລຊັພສິນ G-7.0400

## ວ່າດ້ວຍ ການຮ່ວມມື ແລະການດູແລຊັພສິນ G-7.0401

ຍາມໃດກໍຕາມ ຫາກມີການອະນຸຍາດຈາກກົດໝາຍພົລເຮືອນ, ຄຣິສຕະຈັກຄວນຕ້ອງມີການປະກອບອົງການຈັດຕັ້ງຂຶ້ນເພື່ອ ການຮ່ວມມືຂຶ້ນ ແລະຮັກສາໄວ້ຊຶ່ງຜົນປະໂຫຍດຂອງຕົນ. ມີແຕ່ສະມາຊິກທີ່ຫ້າວຫັນເທົ່ານັ້ນຈຶ່ງມີສິດເຂົ້າຮ່ວມອົງການ ຈັດຕັ້ງນີ້. ຜູ້ປົກຄອງທີ່ຮັບໜ້າທີ່ ໃນປັດຈຸບັນ ກໍຄວນເຂົ້າມາຮ່ວມເປັນສະມາຊິກຂອງການຈັດຕັ້ງນີ້ ແລະຄວນມີສິດຖືກເລືອກ ໃຫ້ເປັນຜູ້ດູແລຊັພສິນຂອງ ຄຣິສຕະຈັກ. ອົງການນີ້ ຄວນເປັນຜູ້ເລືອກຕັ້ງເອົາຄະນະກັມມະການ ແລະກຳໜົດໄລຍະ ເວລາໃນການຮັບໃຊ້ຂອງຄະນະດູແລ ຊັພສິນຂອງຄຣິສຕະຈັກເໝືອນກັບໄລຍະຮັບໃຊ້ຂອງຄະນະປົກຄອງ. ຄຣິສຕະ ຈັກທີ່ບໍ່ມີອົງການຈັດຕັ້ງແຫ່ງການຮ່ວມມືແບບນີ້ ຄວນສ້າງຕັ້ງຄະນະກັມມະການດູແລຊັພສິນຂອງຄຣິສຕະຈັກ ຈາກ ສະມາຊິກທີ່ຫ້າວຫັນ. ສິດອຳນາດ ແລະໜ້າທີ່ຂອງຄະນະດູແລ ຊັພສິນນີ້ ບໍ່ຄວນໃຫ້ມີການລ່ວງລະເມີດຕໍ່ອຳນາດ ຂອງຄະນະປົກຄອງ ຫຼືຄະນະສະພາກັມມະການສະພານັກຄະນາຍົກ. (G-10.0102, G-6.0402).

## ວ່າດ້ວຍ ສິດອຳນາດ G-7.0402

ຫຼັງຈາກທີ່ອົງການແຫ່ງຄວາມຮ່ວມມື ຫຼືຄະນະກັມມະການດູແລຊັພສິນຄຣິສຕະຈັກໄດ້ຖືກສ້າງຕັ້ງຂຶ້ນແລ້ວ ອົງການ ດັ່ງກ່າວ ຕ້ອງມີສິດແລະອຳນາດດັ່ງນີ້: ຮັບເອົາ, ຄອບຄອງ, ກົດກັນ, ຄວບຄຸມ, ແລະໂອນຍ້າຍອາຄານສິນບັດສ່ວນຮວມ ຫຼືສ່ວນບຸກຄົນ ເພື່ອຄຣິສຕະຈັກ; ທັ້ງນີ້ເພື່ອຮັກສາ ແລະປ້ອງກັນຄວາມເປັນເຈົ້າຂອງຊັພສິນບັດນັ້ນໆ. ເພື່ອຮັກສາທຸກຊັພສິນ ຂອງຄຣິສຕະຈັກ ທີ່ຢູ່ໃຕ້ສິດແລະອຳນາດຂອງຄະນະປົກຄອງ ແລະພາຍໃຕ້ການຄອບງຳຂອງກົດທັມມະນູນຂອງຄະນະ ເພຣັສໄບທີຣຽນແຫ່ງສະຫະຣັດອາເມຣິກາ. ການຊື້ຂາຍ ແລະການກູ້ຢືມ ຄວນທຳໄດ້ຫາກໄດ້ຮັບການຕົກລົງເຫັນດີຈາກທາງ ຄຣິສຕະຈັກ ອີງຕາມກົດທັມມະນູນທີ່ບົ່ງໄວ້ໃນ G-8.0500

## ວ່າດ້ວຍ ການແຍກປະຊຸມອອກຕ່າງຫາກຂອງອົງການຮ່ວມມື G-7.0403

ບ່ອນໃດທີ່ທາງກົດໝາຍພົລເຮືອນໄດ້ຮຽກຮ້ອງໃຫ້ອົງການຮ່ວມມືເປີດກອງປະຊຸມຂຶ້ນ, ອົງການນີ້ຕ້ອງມີການປະຊຸມ ຕ່າງຫາກໂດຍແຍກອອກຈາກການປະຊຸມຮ່ວມກັບກອງປະຊຸມອື່ນໆຂອງຄຣິສຕະຈັກ. ກົດທັມມະນູນ G-7.0300 ຄວນຖືກນຳເອົາມາໃຊ້ໃນກອງປະຊຸມນີ້ ຍົກເວັ້ນໃນກໍຣະນີດັ່ງນີ້:

a- ກອງປະຊຸມນັ້ນອາດຖືກເອີ້ນໂດຍຄະນະດູແລຊັບສິນຍ້ອນການບໍ່ມີການໄອ້ອາງໃຈ, ຫຼືໃນເວລາທີ່ຖືກສັ່ງຈາກຄະນະ ປົກຄອງ ຫຼືທາງພາກເປັນຜູ້ສັ່ງ.

b- ຕ້ອງໃຫ້ນິກົດໝາຍພິລເຮືອນຍອມຮັບກອງປະຊຸມນັ້ນ, ບໍ່ດັ່ງນັ້ນແລ້ວ ຄະນະດູແລຊັບສິນຕ້ອງເລືອກເອົາ ສະມາຊິກຫ້າວຫັນຜູ້ນຶ່ງ ມາເປັນ ເຈົ້າໜ້າທີ່ຄວບຄຸມ ແລະເລຂາຂອງກອງປະຊຸມນັ້ນໆ.

c- ຣາຍງານກອງປະຊຸມ ຕ້ອງມີການຢັ້ງຢືນໂດຍປະທານຂອງກອງປະຊຸມ ແລະເລຂາຕ້ອງເປັນຜູ້ເກັບກຳຣາຍງານນັ້ນ ໄວ້ໃນສະມຸດບັນທຶກຂອງທາງຄຣິສຕະຈັກ.

## ວ່າດ້ວຍ ການລົງຄະແນນສຽງໂດຍຕົວແທນ G-7.0404

ການລົງຄະແນນສຽງໂດຍຕົວແທນ ຈະຕ້ອງໄດ້ຮັບການອະນຸຍາດ ໂດຍການຍອມຮັບຮູ້ດ້ວຍຄວາມເຄົາຣົບແລະນັບຖື ຕໍ່ວຽກງານແຫ່ງການຮ່ວມມືນັ້ນ. ການທຳແບບນີ້ ຕ້ອງເຮັດໃຫ້ບ່ອນທີ່ ກົດໝາຍພິລເຮືອນໄດ້ອະນຸຍາດໃຫ້ເທົ່ານັ້ນ

# VIII ວ່າດ້ວຍຄຣິສຕະຈັກ ແລະຊັບສິນບັດຂອງຄຣິສຕະຈັກ G-8.0000

## 1/ ວ່າດ້ວຍຂໍ້ຕົກລົງກ່ຽວກັບການເປັນເຈົ້າຂອງຊັບສິນບັດ G-8.0100

## ວ່າດ້ວຍຂໍ້ຕົກລົງກ່ຽວກັບຊັບສິນບັດ G-8.0101

ອີງຕາມຂໍ້ກຳໜົດ ຂອງ G-1.0400 ແລະຂໍ້ກຳໜົດອື່ນໆ ຂອງກົດທັມມະນູນນີ້ ຊຶ່ງໄດ້ສະແດງລັກສະນະກ່ຽວກັບ ຂໍ້ຕົກລົງທີ່ໄດ້ອາງລົງ, ໄດ້ລົ້ມຄືນ, ແລະໄດ້ດັດແປງແກ້ໄຂໃຫ້ຖືກຕ້ອງ ຢູ່ພາຍໃນຄຣິສຕະຈັກນີ້ ໄດ້ເປັນສິ່ງເໝາະສົມ ແລະສາມາດນຳໃຊ້ໄດ້ໃນ ບັນຫາກ່ຽວກັບການເປັນເຈົ້າຂອງຊັບສິນບັດນັ້ນ.

## 2/ ຊັບສິນບັດທັງໝົດຕ້ອງຮັກສາໄວ້ດ້ວຍຄວາມເຊື່ອຖື G-8.0200

## ວ່າດ້ວຍ ຊັບສິນບັດທີ່ຕ້ອງຖືກຮັກສາໄວ້ດ້ວຍຄວາມເຊື່ອຖື G-8.0201

ຊັບສິນບັດທຸກສິ່ງທີ່ຖືກຮັກສາໄວ້ໂດຍຄຣິສຕະຈັກໃດນຶ່ງ ຫຼືເພື່ອຄຣິສຕະຈັກໃດນຶ່ງ, ພາກເພຣັສໄບເທີຣີ, ສະພາຕ່ຳ, ສະພາສູງ ຫຼືຄຣິສຕະຈັກເພຣັສໄບທີຣຽນແຫ່ງອາເມຣິກາ ຈະຕ້ອງຖືກຮັກສາໄວ້ດ້ວຍຄວາມເຊື່ອຖືຈາກຄຣິສຕະຈັກ ເພຣັສໄບທີຣຽນແຫ່ງອາເມຣິກາ ເຖິງແມ່ນການເປັນເຈົ້າຂອງນັ້ນ ຈະຂຶ້ນກັບພວກຜູ້ທີ່ຖືກມອບໝາຍດູແລ, ຂຶ້ນກັບ ອີງການຮ່ວມມື ຫຼືບໍ່ຮ່ວມມືກໍຕາມ, ທຸກຊັບສິນບັດທີ່ໃຊ້ໃນຄຣິສຕະຈັກນັ້ນໆ ຕ້ອງເປັນຂອງເພຣັສໄບທີຣຽນລວມ.

## 3/ ຊັບສິນບັດທີ່ນຳມາໃຊ້ ບໍ່ສອດຄ້ອງກັບກົດທັມມະນູນ G-8.0300

## ວ່າດ້ວຍ ຊັບສິນບັດທີ່ນຳມາໃຊ້ ບໍ່ຖືກຕາມກົດທັມມະນູນ G-8.0301

ເວລາໃດກໍຕາມທີ່ຊັບສິນບັດ ໄດ້ຖືກຮັກສາໄວ້ສຳລັບ ຫຼືເພື່ອຄຣິສຕະຈັກຂອງເພຣັສໄບທີຣຽນແຫ່ງອາເມຣິກາ ຊັບສິນບັດດັ່ງກ່າວຈະຕ້ອງຖືກນຳໃຊ້ໂດຍຄຣິສຕະຈັກນັ້ນໆຕາມກົດທັມມະນູນທີ່ອະນຸຍາດໃຫ້. ຊັບສິນບັດດັ່ງກ່າວ ຈະຖືນຳໃຊ້, ຮັກສາໄວ້, ຍົກຍ້າຍ, ຫຼືຂາຍ ຕາມຄຳເຫັນດີຂອງພາກເພຣັສໄບເທີຣີ.

## 4/ ວ່າດ້ວຍຊັບສິນບັດຂອງຄຣິສຕະຈັກທີ່ຖືກລົບລ້າງ ຫຼືສູນສິ້ນ G-8.0400

## ວ່າດ້ວຍຊັບສິນບັດຂອງຄຣິສຕະຈັກທີ່ຍຸບເລີກ ຫຼືສູນສິ້ນໄປແລ້ວ: G-8.0401

ເວລາໃດກໍຕາມທີ່ ຄຣິສຕະຈັກໃດນຶ່ງຖືກຍຸບເລີກຢ່າງເປັນທາງການ ຫຼືຖືກສູນສິ້ນໄປດ້ວຍເຫດຜົນໃນການແຕກກະຈາຍຂອງສະມາຊິກ, ການປະປ່ອຍວຽກງານຄຣິສຕະຈັກ, ຫຼືຍ້ອນເຫດຜົນອື່ນໆ, ຊັບສິນບັດນັ້ນຈະຖືກຮັກສາໄວ້ ນຳໃຊ້, ຍຶດໄວ້ ຕາມທິດທາງຂອງພາກເພຣັສໄບເທີຣີ. ຊັບສິນບັດດັ່ງກ່າວ ອາດຖືກຂາຍ ຫຼືຖືກໃຫ້ນ້າງຖິ້ມ ອີງໃສ່ສະພາບ ການເຫັນດີຈາກຄຣິສຕະຈັກເພຣັສໄບທີຣຽນແຫ່ງອາເມຣິກາ.

## 5/ ວ່າດ້ວຍການ ຂາຍ, ຮັບພາຣະໜີ້ສິນ, ຫຼືການໃຫ້ເຊົ່າ G-8.0500

## ວ່າດ້ວຍການຂາຍ ຫຼືໜີ້ສິນຂອງຊັບສິນບັດຄຣິສຕະຈັກ G-8.0501

ຄຣິສຕະຈັກໃດນຶ່ງ ບໍ່ມີສິດຂາຍ, ຈຳນອງ, ຫຼືເປັນໜີ້ສິນສິ່ງໃດຕໍ່ຊັບສິນຂອງຄຣິສຕະຈັກ, ແລະຈະບໍ່ສາມາດຍຶດຄອງ ເອົາຊັບສິນບັດຂອງຄຣິສຕະຈັກໂດຍອີງໃສ່ການເປັນໜີ້ສິນ ໂດຍບໍ່ໄດ້ຮັບການອະນຸຍາດເປັນຣາຍລັກອັກສອນຈາກທາງພາກ ໂດຍຜ່ານທາງຫ້ອງການປົກຄອງຂອງຄຣິສຕະຈັກນັ້ນໆ.

## ວ່າດ້ວຍ ການເຊົ່າຊັບສິນບັດຂອງຄຣິສຕະຈັກ G-8.0502

ຄຣິສຕະຈັກໃດນຶ່ງ ບໍ່ສາມາດໃຫ້ເຊົ່າຊັບສິນບັດຂອງຄຣິສຕະຈັກ ທີ່ໃຊ້ສຳຣັບການນະມັສການນັ້ນໄດ້, ຫຼືໃຫ້ເຊົ່າເກີນ ກວ່າ ຫ້າປີ ໃນຊັບສິນບັດໃດໆກໍຕາມຂອງຄຣິສຕະຈັກ ໂດຍປາສຈາກການອະນຸຍາດເປັນຣາຍລັກອັກສອນຈາກພາກ ເພຣັສໄບເທີຣີ ໂດຍຜ່ານຫ້ອງການປົກຄອງ ຂອງຄຣິສຕະຈັກນັ້ນໆ.

## 6/ ຊັບສິນບັດຂອງຄຣິສຕະຈັກທີ່ແຕກແຍກອອກຈາກກັນ G-8.0600

## ວ່າດ້ວຍຊັບສິນບັດຂອງຄຣິສຕະຈັກທີ່ແຍກແຍກອອກຈາກກັນ G-8.0601

ສາຍພົວພັນຕໍ່ຄຣິສຕະຈັກເພຣັສໄບທີຣຽນແຫ່ງ ອາເມຣິກາ ຂອງຄຣິສຕະຈັກໃດນຶ່ງຈະຖືກເຂັ້ມງວດດ້ວຍເຫດຜົນທາງກົດທັມມະນູນ ທີ່ບົ່ງໄວ້ໃນ G-11.0103i ຖ້າຫາກມີການແຍກອອກຈາກກັນຢູ່ພາຍໃນສະມາຊິກຄຣິສຕະຈັກ ແລະທາງພາກບໍ່ສາມາດເອົາກັບຄືນດີຫາກັນໄດ້ ແລະໄດ້ມີການແຍກໂບດກັນ, ທາງພາກຈະເປັນຜູ້ຕັດສິນວ່າ ຝ່າຍໃດ ຈະມີສິດເປັນເຈົ້າຂອງຊັບສິນບັດນັ້ນ ຊຶ່ງຈະຕ້ອງເປັນຄຣິສຕະຈັກທີ່ແທ້ຈິງໃນເຄືອເພຣັສໄບທີຣຽນແຫ່ງ ອາເມຣິກາ. ການຕັດສິນບັນຫານີ້ ບໍ່ແມ່ນຂຶ້ນກັບວ່າ ຝ່າຍໃດໄດ້ຮັບຄະແນນສຽງຫຼາຍຫຼືນ້ອຍໃນເວລາມີການແບ່ງແຍກກັນນັ້ນ.

### 7 / ວ່າດ້ວຍ ກໍຣະນີຍົກເວັ້ນ **G-8.0700**

### ວ່າດ້ວຍກໍຣະນີຍົກເວັ້ນ **G-8.0701**

ຂໍ້ຕົກລົງທີ່ນຳມາສເນີໃນພາກນີ້ ຈະຕ້ອງຖືກນຳໃຊ້ໃນທຸກໆຄຣິສຕະຈັກ ພາຍໃນຄຣິສຕະຈັກເພຣັສໄບທີຣຽນແຫ່ງອາເມຣິກາ ຍົກເວັ້ນຄຣິສຕະຈັກທີ່ບໍ່ໄດ້ມີຂໍ້ຕົກລົງແບບນີ້ຕາມກົດທັມນະມູນ ຊຶ່ງໝາຍເຖິງຄຣິສຕະຈັກທີ່ຢູ່ກ່ອນການ ໂຮມກັນຣະຫວ່າງ ເພຣັສໄບທີຣຽນ ໃນສະຫະຣັດ ແລະເພຣັສໄບທີຣຽນໃນສະຫະຣັດອາເມຣິກາ. ຄຣິສຕະຈັກເຫຼົ່ານີ້ ໄດ້ຖືກຍົກເວັ້ນ. ແຕ່ຫາກຄຣິສຕະຈັກໃດທີ່ເດີນຕາມການຈັດຕັ້ງຂອງ ຄຣິສຕະຈັກເພຣັສໄບທີຣຽນ ແຫ່ງອາເມຣິກາ ເປັນ ເວລາ ແປດປີ ແລະມີຜູ້ຕາງໜ້າທີ່ລົງຄະແນນສຽງໃນພາກເພຣັສໄບເທີຣີ ຈະຕ້ອງໄດ້ປະຕິບັດຕາມກົດຣະບຽບແຫ່ງການ ເປັນເຈົ້າຂອງ ຊັພສິນບັດນີ້ຢ່າງຄົບຖ້ວນ. ກົດຣະບຽບພາກນີ້ ຈະບໍ່ມີການແກ້ໄຂ.

## ພາກ ໙. ວ່າດ້ວຍການປົກຄອງ G-9.0000

### 1/ ໂດຍທົ່ວໄປ: **G-9.0100**

### ນິຍາມ: **G-9.0101**

ຄະນະເພຣັສໄບທີຣຽນແຫ່ງອາເມຣິກາ ຈະຕ້ອງຖືກປົກຄອງໂດຍພວກຜູ້ຕາງໜ້າ ຊຶ່ງປະກອບດ້ວຍພວກຜູ້ປົກຄອງ ຊຶ່ງໝາຍເຖິງເຖົ້າແກ່ ແລະອາຈານ. ການປົກຄອງດັ່ງກ່າວຈະຖືກເອີ້ນຊື່ວ່າ:

| | |
|---|---|
| ຄະນະປົກຄອງ | Session |
| ພາກເພຣັສໄບເທີຣີ | Presbytery |
| ສະພາຕ່ຳ (ຊີໂນດ) | Synod |
| ສະພາສູງ. | General Assembly |

### ວ່າດ້ວຍຣະບຽບວິນັຍກ່ຽວກັບຄະນະກຳມະການຄຣິສຕະຈັກ: **G-9.0102**

ການປົກຄອງພາຍໃນຄຣິສຕະຈັກ ແຕກຕ່າງກັບການປົກຄອງຂອງຣັດ ແລະບໍ່ມີກົດໝາຍແພ່ງຫຼືອຳນາດໃດໆ ໃນການ ໃຊ້ກົດໝາຍແພ່ງລົງໂທດ. ພວກເຂົາມີພຽງກົດໝາຍໃນການຈັດຕັ້ງຄະນະກຳມະການຄຣິສຕະຈັກ ໃນຈຸດປະສົງເພື່ອການ ຮັບໃຊ້ພຣະເຢຊູຄຣິສ ແລະການປະກາດ ພ້ອມກັບການຂັບຕາມພຣະປະສົງຂອງພຣະເຈົ້າ ໂດຍມີການພົວພັນກັບຄວາມເປັນຈິງ ແລະການຮັບໃຊ້, ຣະບຽບການ ແລະຕາມຣະບຽບວິນັຍ.

ພວກເຂົາສາມາດສ້າງຮູບແບບສັນຍາລັກແຫ່ງຄວາມເຊື່ອຂອງເຂົາ, ເປັນພະຍານຕໍ່ສູ້ກັບຄວາມຜິດພາດຂອງທິສດີ ແລະຄວາມໄຮ້ສິລທັມແຫ່ງຊີວິດ, ມີມະຕິຕົກລົງກັນ ໃນບັນຫາກ່ຽວກັບທິສດີ ແລະວິນັຍ, ໃຫ້ຄຳປຶກສາຫາລື ໃນບັນຫາກ່ຽວກັບ ສະຕິຄວາມຮູ້ສຶກຜິດຊອບຊົ່ວດີ, ແລະຕົກລົງກ່ຽວກັບເລື້ອງລາວຕ່າງໆ ເພື່ອນຳມາສຶກສາຫາລືໃນພວກເຂົາ ພາຍໃຕ້ຂໍ້ກຳນົດທີ່ ບົ່ງໄວ້ໃນປຶ້ມກົດຣະບຽບ. ພວກເຂົາອາດສາມາດໃຫ້ອະນຸດຍາດ ໃນການໃຫ້ສິນມະຫາສະໜິດ ໂດຍອີງໃສ່ຫຼັກການພື້ນຖານ ທີ່ບົ່ງໄວ້ໃນປຶ້ມກົດຣະບຽບແຫ່ງການນະມັສການ. ພວກເຂົາມີ ອຳນາດທີ່ຈະວາງແຜນການ ແລະດຳເນີນງານ ໃນການນະມັສການ, ການປະກາດ, ການປົກຄອງ, ແລະການໃຊ້ວິນັຍຂອງຄຣິສ

ຕະຈັກ ແລະການນຳໃຊ້ສິ່ງເຫຼົ່ານັ້ນ ໄປໃນທາງສັນຕິ, ບໍຣິສຸດ, ການເປັນອັນນຶ່ງອັນດຽວກັນ, ແລະເພື່ອຄວາມກ້າວໜ້າຂອງຄຣິສຕະຈັກ ພາຍໃຕ້ການຊົງນຳຂອງພຣະຄຣິສ. ພວກເຂົາມີສ່ວນ ຮັບຜິດຊອບຕໍ່ການເປັນຜູ້ນຳ, ນຳພາ, ແລະການປົກຄອງໃນຄຣິສຕະຈັກທີ່ຢູ່ພາຍໃຕ້ຂອບເຂດອຳນາດກົດໝາຍຂອງເຂົາ.

## ວ່າດ້ວຍການເປັນອັນນຶ່ງອັນດຽວກັນຂອງອົງການປົກຄອງຄຣິສຕະຈັກ G-9.0103

ທຸກການປົກຄອງຄຣິສຕະຈັກ ຕ້ອງຮວມເປັນອັນນຶ່ງອັນດຽວກັນ ໂດຍລັກສະນະທຳມະຊາດຂອງຄຣິສຕະຈັກ ແລະມີການແບ່ງເບົາຊຶ່ງກັນແລະກັນ ໃນຄວາມຮັບຜິດຊອບ, ສິດທິ, ແລະອຳນາດ ຊຶ່ງກຳໜົດໄວ້ໃນກົດທັມມະນູນ. ອົງການປົກ ຄອງຕ່າງໆ ມີການແຍກກັນ ແລະເປັນເອກກະລາດໃຜມັນໃນການປົກຄອງ, ແຕ່ຕ້ອງມີການພົວພັນຊຶ່ງກັນແລະກັນ ຊຶ່ງໝາຍ ເຖິງວ່າ ທາກມີການ ກະທຳສິ່ງໃດສິ່ງນຶ່ງ, ໂດຍຜ່ານຫ້ອງການໃດນຶ່ງ, ນັ້ນໝາຍເຖິງການກະທຳຂອງທັງໝົດ ຄຣິສຕະຈັກ. ຣະບຽບກົດໝາຍຂອງ ແຕ່ລະຫ້ອງການປົກຄອງ ໄດ້ຖືກຈຳກັດຢູ່ໃນກົດທັມມະນູນ, ຊຶ່ງໝາຍເຖິງວ່າ ການກະທຳຂອງຫ້ອງການປົກຄອງໃດນຶ່ງ ຈະຕ້ອງໄດ້ຖືກພິຈາຣະນາຈາກຫ້ອງການປົກຄອງທີ່ສູງກວ່າ.

## ວ່າດ້ວຍ ການແບ່ງປັນ ແລະເປັນຜູ້ຕາງໜ້າ G-9.0104

ອົງການປົກຄອງຄຣິສຕະຈັກ ຈະຕ້ອງຮັບຜິດຊອບຕໍ່ ກົດຂໍ້ຜູກມັດຂອງຄຣິສຕະຈັກ ໃນການເປີດກວ້າງ ແລະແບ່ງປັນ ດັ່ງທີ່ໄດ້ບົ່ງໄວ້ໃນ G-4.0403. ອົງການປົກຄອງທັງໝົດ ຕ້ອງທຳງານເພື່ອການເປີດກວ້າງ, ຮວບຮວມ ແລະ ມີແບບແຜນທີ່ຖືກຕ້ອງຕໍ່ບັນຫາ ເຊື້ອຊາດຜິວພັນ, ເພດ, ໄວ, ລັກສະນະຄອບຄົວ (ແຕ່ງງານ, ເປັນໂສດ, ຮ້າງ, ຫຼືມ້າຍ) ຫຼືເສັຽອົງຄະ.

ໃນການປະຕິບັດກົດຂໍ້ຜູກມັດນີ້, ຄວນມີການພິຈາຣະນາຕໍ່ພວນສວັນ ແລະເງື່ອນໄຂໃນການຮັບໃຊ້ (G-6.0106) ຕໍ່ບຸກຄົນທີ່ຈະເລືອກມາ ແລະແຕ່ງຕັ້ງໃຊ້ຮັບໃຊ້ໃນຫ້ອງການ ຫຼືກຸ່ມທຳງານໃດນຶ່ງ, ແລະຊອກຫາບຸກຄົນທີ່ ເໝາະສົມໃນການທີ່ຈະແຕ່ງຕັ້ງໃຫ້ເປັນເຈົ້າພະນັກງານ (G-6-0107)

## ວ່າດ້ວຍ ຄະນະກຳມະການ ຜູ້ຕາງໜ້າ G-9.0105

ແຕ່ລະອົງການປົກຄອງທີ່ຢູ່ເໜືອຄະນະປົກຄອງ ຈະຕ້ອງເລືອກເອົາຄະນະຜູ້ຕາງໜ້າ, ຊຶ່ງຈະປະກອບດ້ວຍຈຳນວນຄົນ ຊາຍຍິງເທົ່າກັນ. ສະມາຊິກສ່ວນມາກ ຈະຖືກເລືອກມາຈາກກຸ່ມຊົນຊາດສ່ວນນ້ອຍ ຊຶ່ງຢູ່ພາຍໃນອົງການປົກຄອງ ແລະຈຳນວນ ຄົນທັງໝົດຈະຕ້ອງປະກອບດ້ວຍບຸກຄົນທີ່ຢູ່ໃນກຳຣະນີນີ້:

1. ສະມາຊິກຜູ້ຊາຍທີ່ກິນຈຳນວນມາກ
2. ສະມາຊິກ ຜູ້ຍິງທີ່ກິນຈຳນວນມາກ
3. ຜູ້ຊາຍໃນກຸ່ມຊົນຊາດສ່ວນນ້ອຍ
4. ຜູ້ຍິງໃນກຸ່ມຊົນຊາດສ່ວນນ້ອຍ
5. ສະມາຊິກຊາວໜຸ່ມ ທັງຊາຍແລະຍິງ.

ກິຈກຳອັນຕົ້ນຕໍແມ່ນເພື່ອໃຫ້ຄຳປຶກສາຫາລືຕໍ່ອົງການປົກຄອງດ້ວຍຄວາມເຄົາຣົບນັບຖືໃນຖານະການເປັນສະມາຊິກ

ຂອງເຂົາ ແລະໃນຖານະແຫ່ງການເປັນຄະນະກຳມະການ, ຄະນະບອດ໌, ອົງການຕົວແທນ, ແລະອື່ນໆ ໃນການທຳງານປະຕິບັດ ການແບ່ງເບົາວຽກງານແລະ ການເປີດກວ້າງ ເພື່ອການປະຕິບັດໃຫ້ມີຄວາມຍຸຕິທັມ ແລະປະກົດຜົນໂດຍຕົກລົງກັນຂອງ ຄຣິສຕະຈັກ.

ຄະນະກຳມະການຜູ້ຕາງໜ້າ ຕ້ອງຮັບໃຊ້ທັງການເປັນຜູ້ສະໜັບສະໜູນຕໍ່ກຸ່ມຊົນຊາດສ່ວນນ້ອຍ, ຜູ້ຍິງ, ເພດໄວຕ່າງໆ, ແລະບຸກຄົນທີ່ເສັຽອົງຄະ, ແລະເປັນແຫຼ່ງອຳນວຍຄວາມສະດວກແກ່ຄຣິສຕະຈັກໃນສິ່ງດັ່ງກ່າວນັ້ນ. ຄະນະກຳມະການຜູ້ຕາງໜ້າ ຕ້ອງພິຈາຣະນາຣາຍການຕ່າງໆພາຍໃນຄະນະໃນກໍຣະນີດັ່ງກ່າວມາແລ້ວນັ້ນ ແລ້ວນຳຣາຍງານປະຈຳປີຕໍ່ຄະນະ ແລະຕໍ່ຫ້ອງການ ທີ່ສູງກວ່າ ດ້ວຍການແນະນຳກ່ຽວກັບຄວາມຕ້ອງການໃດໆທີ່ອາດມີເພື່ອການແກ້ໄຂໃຫ້ຖືກຕ້ອງ. ຄະນະຜູ້ຕາງໜ້າ ຈະຕ້ອງມີການປຶກສາຫາລືກັບຄະນະແຕ່ງຕັ້ງ ທີ່ຢູ່ພາຍໃນຄະນະຂອງຕົນເອງ.

ກ່ອນຈະມີການແຕ່ງຕັ້ງ ຫຼືການມອບໝາຍໃຫ້ບຸກຄົນໃນກຸ່ມຊົນຊາດສ່ວນນ້ອຍມາເປັນສະມາຊິກຂອງຄະນະກຳມະການ, ຄະນະບອດ໌, ຄະນະຕົວແທນ, ຫຼືພາກສ່ວນອື່ນໆ, ຄະນະກຳມະການຜູ້ຕາງໜ້າ ຈະຕ້ອງປຶກສາຫາລືກັບກຸ່ມຊົນຊາດທີ່ ກ່ຽວຂ້ອງໂດຍຜ່ານບຸກຄົນ ແລະກຸ່ມຊົນ ຊຶ່ງຖືກມອບໝາຍມາຈາກກຸ່ມຊົນຊາດນັ້ນໆ. ໃນກໍຣະນີທີ່ກຸ່ມຊົນຊາດນັ້ນມີນ້ອຍຄົນ, ຄະນະກຳມະການຜູ້ຕາງໜ້າຂອງແຕ່ລະຫ້ອງການປົກຄອງຈະຕ້ອງປຶກສາຫາລືກັບ ສະມາຊິກຂອງກຸ່ມຊົນຊາດ, ຄະນະປົກຄອງ, ຄະນະກຳມະການແຕ່ງຕັ້ງ, ແລະກຸ່ມຄົນທີ່ຖືກມອບໝາຍມາຈາກຊົນຊາດນັ້ນໆ ເພື່ອຊອກຫາຕົວແທນຂອງກຸ່ມຊົນຊາດນັ້ນໆ ເພື່ອນຳມາຊຶ່ງການມີຜູ້ຕາງໜ້າຢ່າງຄົບຖ້ວນ. ກ່ອນມີການແຕ່ງຕັ້ງ ຫຼືການມອບໝາຍຜູ້ຍິງໃຫ້ຮັບໃຊ້ໃນຫ້ອງການທີ່ກ່າວມາ, ຄະນະກຳມະການຜູ້ຕາງໜ້າຕ້ອງປຶກສາຫາລືກັບພວກຜູ້ຕ່າງໜ້າຜູ້ຍິງທີ່ເໝາະສົມ ໂດຍຜ່ານສ່ວນບຸກຄົນ ຫຼືກຸ່ມຄົນ ຊຶ່ງໄດ້ຖືກມອບໝາຍມາຈາກຄະນະຕົວແທນນັ້ນໆ.

ຄະນະກຳມະການຜູ້ຕາງໜ້າ ຕ້ອງໃຫ້ຄຳແນະນຳ ອົງການປົກຄອງ ໃນການຮັບຈ້າງຄົນງານ ໂດຍອີງໃສ່ຫຼັກການ ພື້ນຖານຂອງການແບ່ງປັນ ແລະການເປັນຜູ້ຕາງໜ້າ (G-4.0403.) ແລະດ້ວຍການເຫັນພ້ອມກັບແຜນການລວມຂອງ ຄຣິສຕະຈັກ ໃນກິດຣະບຽບແຮງງານ. (G-13.0201b).

## ວ່າດ້ວຍກໍຣະນີຍົກເວັ້ນ G-9.0106

ຫາກມີການຍົກເວັ້ນໃນກໍຣະນີທີ່ກ່າວມາຂ້າງເທິງ ຕ້ອງຖືກອະນຸຍາດຈາກອົງການປົກຄອງ ຫຼືຈາກຄະນະທີ່ຖືກເລືອກມາ ຖ້າຫາກສິ່ງດັ່ງກ່າວນັ້ນ ບໍ່ລໍ້າປະກັນຕໍ່ການແບ່ງເບົາ ຫຼືການເປັນຕົວແທນຕໍ່ກຸ່ມຄົນ, ແລະຄວາມຈິງດັ່ງກ່າວ ຕ້ອງເຮັດໄດ້ໂດຍ ພາກສ່ວນແຫ່ງການບັນທຶກຣາຍງານຂອງ ອົງການປົກຄອງ, ຫ້ອງການແຕ່ງຕັ້ງ, ຫຼືຫ້ອງການມອບໝາຍ.

## 2. ວ່າດ້ວຍ ເຈົ້າພະນັກງານ G-9.0200

## ວ່າດ້ວຍເຈົ້າໜ້າທີ່ຮັບໃຊ້ G-9.0201

ເຈົ້າໜ້າທີ່ຂອງແຕ່ລະຫ້ອງການປົກຄອງ ຈະຕ້ອງແມ່ນຜູ້ຄວບຄຸມ ແລະສມຽນ. ອົງການປົກຄອງອາດຈະຈັດຫາ ເຈົ້າໜ້າທີ່ເຂົ້າມາເພີ່ມຕາມການຮຽກຮ້ອງ.

## ວ່າດ້ວຍ ຜູ້ຄວບຄຸມດູແລ G-9.0202

ຜູ້ຄວບຄຸມ ເປັນຜູ້ໄດ້ຮັບສິດອຳນາດໃນການຮັກສາລະບຽບການ ແລະນຳພາວຽກງານຢ່າງມີປະສິດທິພາບຂອງຫ້ອງການປົກຄອງ. ຄົນຜູ້ນັ້ນ ຈະເປັນຜູ້ຮຽກປະຊຸມ ແລະເລີກຫ້ອງການການປົກຄອງ ໂດຍອີງໃສ່ປາກົດການແຫ່ງການປະພຶດຂອງ ຫ້ອງການປົກຄອງນັ້ນ. ຜູ້ຄວບຄຸມ, ໃນກໍຣະນີສຸກເສີນ, ອາດຮຽກປະຊຸມອົງການປົກຄອງໂດຍການຂຽນເປັນລາຍລັກອັກສອນ ທີ່ປະກາດເຖິງເວລາ ແລະສະຖານທີ່ ທີ່ແຕກຕ່າງກັນ ຊຶ່ງບໍ່ໄດ້ບົ່ງໂດຍອົງການປົກຄອງໃນເບື້ອງຕົ້ນ.

ອາຈານ ຂອງຄຣິສຕະຈັກ ຈະຕ້ອງເປັນຜູ້ຄວບຄຸມ ຂອງຄະນະປົກຄອງຄຣິສຕະຈັກ. ໃນຄຣິສຕະຈັກທີ່ມີອາຈານຊ່ວຍ ພວກເຂົາຕ້ອງມີການປ່ຽນກັນເປັນຜູ້ຄວບຄຸມຄະນະປົກຄອງ ໃນເວລາທີ່ພວກເຂົາມີໜ້າຢູ່ພ້ອມກັນ. ຜູ້ຄວບຄຸມຂອງພາກ ເພຣັສໄບເທີຣີ ຕ້ອງຖືກເລືອກມາດຳເນີນງານຕາມກຳໜົດທີ່ທາງພາກໄດ້ບົ່ງບອກໄວ້, ໂດຍບໍ່ກາຍນຶ່ງປີ. ຜູ້ຄວບຄຸມ ພາກສະພາຕ່ຳ ຊີໂນດ ຕ້ອງຖືກເລືອກມາທຳງານຕາມກຳໜົດທີ່ທາງ ຊີໂນດບົ່ງໄວ້ບໍ່ເກີນ ສອງປີ. ຜູ້ຄວບຄຸມຈາກສະພາສູງ ຕ້ອງຖືກມາຮັບໃຊ້ ໃນທຸກຄັ້ງທີ່ມີການປະຊຸມ. ໃນເວລາມີການເລືອກຕັ້ງເອົາ, ຜູ້ຄວບຄຸມຂອງພາກເພຣັສໄບເທີຣີ, ຊີໂນດ, ຫຼື ສະພາສູງ, ຜູ້ນັ້ນຕ້ອງຍັງເປັນສະມາຊິກ, ຫຼືຜູ້ເປັນຕົວແທນທີ່ ຖືກແຕ່ງຕັ້ງ ຂອງອົງການປົກຄອງ ຊຶ່ງບຸກຄົນຜູ້ນັ້ນໄດ້ຖືກເລືອກມາ ເປັນຜູ້ນຳ.

## ວ່າດ້ວຍ ສມຽນ: G-9.0203

ສມຽນ ຈະຕ້ອງເປັນຜູ້ເກັບກຳລາຍງານຂອງການປ່ຽນແປງຂອງອົງການປົກຄອງ, ເກັບກຳທະບຽນພົນສະມາຊິກ ແລະການມີໜ້າ, ຮັກສາບົດລາຍງານນັ້ນໃຫ້ດີ, ແລະສາມາດດຶງອອກມາລາຍງານໄດ້ໃນເວລາທີ່ຫ້ອງການປົກຄອງໃດນຶ່ງຂອງ ຄຣິສຕະຈັກມີຄວາມຕ້ອງການ. ສິ່ງທີ່ດຶງອອກມານັ້ນ ຈະຕ້ອງພິສູດໄດ້ໂດຍສມຽນ ຊຶ່ງຈະເປັນຫຼັກຖານໃຫ້ແກ່ທຸກອົງການ ປົກຄອງທີ່ກ່ຽວຂ້ອງຂອງຄຣິສຕະຈັກ.

ສມຽນຂອງຄຣິສຕະຈັກ ຈະຕ້ອງເປັນຜູ້ປົກຄອງທີ່ຖືກເລືອກມາຈາກຄະນະປົກຄອງເພື່ອການດຳເນີນວຽກງານໃນໄລຍະ ໃດນຶ່ງທີ່ບົ່ງໄວ້. ສມຽນຂອງພາກເພຣັສໄບເທີຣີ, ຊີໂນດ, ແລະສະພາສູງ ຈະຖືກເອີ້ນຊື່ວ່າ ສມຽນທີ່ເປັນທາງການ (ສມຽນທີ່ຖືກ ກຳໜົດໄວ້ຕາຍຕົວແລ້ວ) ຈະຕ້ອງເປັນຜູ້ທີ່ຖືກເລືອກມາຈາກອົງການປົກຄອງເພື່ອຮັບໃຊ້ໃນໄລຍະໃດນຶ່ງທີ່ກຳໜົດໄວ້ ແລະຈະຕ້ອງເປັນຜູ້ມີສິດເປັນສະມາຊິກໃນອົງການປົກຄອງ.

## 3/ ວ່າດ້ວຍ ການປະຊຸມ G-9.0300

## ວ່າດ້ວຍການເປີດກອງປະຊຸມ: G-9.0301

ຜູ້ຄວບຄຸມຂອງອົງການປົກຄອງ ນອກເໜືອໄປຈາກຄະນະປົກຄອງ ຈະຕ້ອງເປັນຜູ້ເປີດກອງປະຊຸມທັງໝົດໃນໄລຍະ ທີ່ຕົນເອງເປັນຜູ້ຮັບຜິດຊອບ ແລະຈະຕ້ອງເປັນຜູ້ກຳກັບຈົນກວ່າຜູ້ຄວບຄຸມຄົນໃໝ່ຖືກເລືອກມາແທນ. ຖ້າຫາກຜູ້ຄວບຄຸມຂາດ ໃນເວລາເປີດກອງປະຊຸມ, ຜູ້ຄວບຄຸມຄົນຕໍ່ໄປຈະຕ້ອງເປັນຜູ້ດຳເນີນໜ້າທີ່ແທນ.

ກອງປະຊຸມທັງໝົດຂອງອົງການປົກຄອງຈະຕ້ອງເປີດຂຶ້ນ ແລະປິດລົງດ້ວຍການອະທິຖານ. ພາກເພຣັສໄບເທີຣີ ແລະຊີໂນດ ທີ່ມີການປະຊຸມກັນເລື້ອຍໆພາຍໃນປີນຶ່ງ ຈະຕ້ອງໃຫ້ມີກອງປະຊຸມເປັນທາງການປີລະຄັ້ງ ຊຶ່ງຈະຕ້ອງປະກອບດ້ວຍ ການເທສນາພຣະຄຳ ແລະມີການຮັບສິນມະຫາສະໜິດ. ກອງປະຊຸມເປັນທາງການ

ປະຈຳປີຂອງຊີໂນດ ແລະສະພາສູງ ຈະຕ້ອງປະກອບດ້ວຍເວລາແຫ່ງການເທສນາພຣະຄຳ ແລະສລອງພິທີສິນມະຫາສະໜິດດ້ວຍ.

## ວ່າດ້ວຍແນວທາງປະຕິບັດຕາມກົດເກນຂອງຣັຖສະພາ G-9.0302

ກອງປະຊຸມຂອງອົງການປົກຄອງ, ຄະນະແຕ່ງຕັ້ງ, ແລະຄະນະກຳມະການຕ່າງໆ ຈະຕ້ອງຖືກປະຕິບັດໂດຍອີງໃສ່ ຫຼັກການທີ່ອາງອອກໃໝ່ຂອງ Robert's Rules of Order, ຍົກເວັ້ນກໍຣະນີທີ່ບ່ອນນັ້ນໆທີ່ນິກົດທຳນະມູນໃຫ້ທຳ.

## ວ່າດ້ວຍການໃຊ້ຈ່າຍ: G-9.0303

ການໃຊ້ຈ່າຍຂອງພວກຜູ້ປົກຄອງ ແລະອາຈານ ທີ່ມາຮ່ວມໃນຄະນະປົກຄອງ ໂດຍທຳມະດາແລ້ວຈະຕ້ອງຈ່າຍໂດຍ ອົງການປົກຄອງທີ່ເລືອກເອົາພວກເຂົາ ຫຼືໂດຍຄະນະທີ່ເຂົາໄປຮ່ວມ, ຖ້າຫາກການໃຊ້ຈ່າຍນັ້ນຢູ່ພາຍໃນຂອບເຂດຮັບຜິດຊອບ ຂອງອົງການປົກຄອງ. ສະພາສູງ ຕ້ອງຈ່າຍຄ່າຂອງພວກຜູ້ເປັນຕົວແທນທີ່ຖືກເລືອກໂດຍພາກເພຣັສໄບເທີຣີ ເພື່ອໃຫ້ມາ ຮ່ວມປະຊຸມຂອງສະພາສູງ.

## 4/ ຫຼັກການພື້ນຖານແຫ່ງການບໍຣິຫານງານ: G-9.0400

## ນິຍາມກ່ຽວກັບການບໍຣິຫານງານ: G-9.0401

ການບໍຣິຫານ ແມ່ນວິທີການດຳເນີນງານ ຊຶ່ງທາງອົງການປົກຄອງເປັນຜູ້ເຫັນດີ. ມັນປະກອບດ້ວຍການທຳງານ ຮ່ວມກັບກຸ່ມຄົນ ແລະໂດຍຜ່ານກຸ່ມຄົນນັ້ນໆ ເພື່ອຈະໄດ້ຮັບຜົນສຳເຣັດຕາມຈຸດປະສົງເປົ້າໝາຍ ແລະຈະຕ້ອງປະກອບດ້ວຍການ ປັບປຸງຜູ້ນຳ, ການວາງແຜນ, ການພົວພັນ, ການຈັດຕັ້ງ, ງົບປະມານ, ຄວບຄຸມ, ແລະການຕີຣາຄາສ່ອງແສງ.

## ວ່າດ້ວຍ ຮູບແບບການບໍຣິຫານ: G-9.0402

ການປະກາດ ເປັນສິ່ງທີ່ໃຫ້ກຳໜົດແກ່ຮູບແບບຂອງການບໍຣິຫານ. ຮູບແບບທັງໝົດ ຈະຕ້ອງເປັນສິ່ງທີ່ເຮັດໃຫ້ ຄຣິສຕະຈັກ ໄດ້ຮັບຜົນຈາກການເປັນພະຍານໃນການເປັນເຈົ້າຂອງພຣະຄຣິສ ໃນໂລກປັດຈຸບັນ.

ການບໍຣິຫານແຫ່ງການປະກາດ ຈະຕ້ອງທຳໂດຍອົງການປົກຄອງທີ່ຢູ່ໃກ້ສິດກັບຄຣິສຕະຈັກ ຊຶ່ງຈະສາມາດເຮັດໃຫ້ ວຽກງານທັງໝົດໄດ້ຮັບຜົນຢ່າງເຕັມເມັດເຕັມໜ່ວຍ.

ຮູບການຈັດຕັ້ງທຸກຢ່າງ ຈະຕ້ອງມີການເປີດກວ້າງຕໍ່ການປ່ຽນແປງ ແລະຮັບເອົາຮູບການອັນໃໝ່ເພື່ອການຮ່ວມກັນ ຂອງຄຣິສຕະຈັກ.

## ວ່າດ້ວຍ ຄວາມອາດສາມາດຂອງອົງການປົກຄອງ: G-9.0403

ອົງການປົກຄອງນຶ່ງ ອາດເປັນຕົວແທນໃນການທຳງານສະເພາະໃດນຶ່ງຕໍ່ການມອບໝາຍຂອງສະພາ, ບ໊ອດ, ອົງການຕາງໜ້າ, ການແຕ່ງຕັ້ງ, ແລະຄະນະກຳມະການໃດນຶ່ງ, ແຕ່ທັງໝົດຈະຕ້ອງຂຶ້ນກັບຄວາມອາດສາມາດຂອງອົງການ ປົກຄອງ. ໝາຍເຖິງວ່າ ຕ້ອງມີຄວາມຮັບຜິດຊອບຕໍ່ອົງການ ປົກຄອງທີ່ມອບໝາຍວຽກງານໃຫ້ນັ້ນ.

## ວ່າດ້ວຍ ຄຸນສົມບັດ ແຫ່ງນະໂຍບາຍຂອງເພຣັສໄບທີຣຽນ G-9.0404

ເພື່ອຈະໃຫ້ຄວາມໝາຍແກ່ການເຊື່ອມໂຍງເຂົ້າກັນຂອງຄຸນສົມບັດແຫ່ງນະໂຍບາຍເພຣັສໄບທີຣຽນ:

a. ອົງການປົກຄອງແຕ່ລະອົງການ ຈະຕ້ອງມີການແບ່ງເບົາພາຣະຊຶ່ງກັນແລະກັນ ໂດຍຜ່ານຜູ້ຕາງໜ້າໃນການວາງແຜນ ແລະໃນການບໍຣິຫານຂອງຫ້ອງການທີ່ສູງກວ່າ ທີ່ຢູ່ຕິດກັບຕົນ.

b. ອົງການປົກຄອງແຕ່ລະອົງການ ຕ້ອງມີການປຶກສາຫາລື ໂດຍຜ່ານທາງຜູ້ຕາງໜ້າທີ່ຢູ່ຕໍ່າກວ່າ ຫຼືສູງກວ່າຕົນ. ມັນຈະເໜັ້ນໜັກໃສ່ການປະກາດເປັນຈຸດໜັກ, ຣາຍການຕ່າງໆ, ງົປມານ, ການສ້າງຕັ້ງຕຳແໜ່ງຂອງເຈົ້າພະນັກງານບໍຣິຫານ, ປະຕິບັດຄວາມເປັນທັມ, ນະໂຍບາຍຄົນງານ, ແລະໃຫ້ຄວາມຍຸຕິທັມຕໍ່ນະໂຍບາຍຮັບຈ້າງແຮງງານ.

c. ອົງການປົກຄອງແຕ່ລະອົງການຕ້ອງຈ້າງພະນັກງານຂອງຕົນ ໂດຍອີງໃສ່ຫຼັກການພື້ນຖານໃນການເປີດກວ້າງ, ແລະຄວາມແຕກຕ່າງກັນ ທີ່ບັນທຶກໄວ້ໃນ (G-9.0104).

## ວ່າດ້ວຍ ຄູ່ມືແຫ່ງການດຳເນີນງານ G-9.0405

ອົງການປົກຄອງແຕ່ລະບ່ອນ, ຫຼັງຈາກໄດ້ປຶກສາຫາລືກັບຫ້ອງການທີ່ສູງກວ່າ ຫຼືຕໍ່າກວ່າແລ້ວ, ຈະຕ້ອງປະກອບຄູ່ມື ແຫ່ງການດຳເນີນວຽກງານຂຶ້ນ.

## ວ່າດ້ວຍ ການເປັນເຈົ້າຂອງ ບົດຣາຍງານ G-9.0406

ຣາຍງານກອງປະຊຸມ ແລະບົດຣາຍງາຍທັງໝົດຂອງຄະນະປົກຄອງຄຣິສຕະຈັກ, ເພັຣສໄບເທີຣີ, ຊີໂນດ, ແລະສະພາສູງ ຈະຕ້ອງເປັນສົມບັດຂອງອົງການປົກຄອງ ແລະເປັນຜູ້ສືບທອດຕລອດໄປ. ໃນເວລາທີ່ຄຣິສຕະຈັກ, ພາກເພຣັສ ໄບເທີຣີ, ຊີໂນດ ຖືກຍຸບເລີກ, ບົດຣາຍງານນີ້ ຈະຕ້ອງຖືກຫ້ອງການຂັ້ນສູງກວ່າໃນເຂດດັ່ງກ່າວເກັບຮັກສາໄວ້. ບົດເກັບກຳ ຣາຍງານການປະຊຸມທັງໝົດ ແລະເອກສານຣາຍງານທີ່ເປັນທາງການອື່ນໆຂອງຄຣິສຕະຈັກທີ່ຍັງດຳເນີນງານຢູ່ ຫຼືຖືກຍຸບໄປແລ້ວ ທັ້ງຂອງທາງ ພາກເພຣັສໄບເທີຣີ ຫຼືຊີໂນດ ທີ່ຍັງດຳເນີນງານ ຫຼືຖືກຍຸບໄປແລ້ວ ຈະບໍ່ສາມາດຖືກຮຽກຮ້ອງໃຫ້ນຳມາເປັນສິ່ງ ອ້າງອີງໃນສະພາບການປັດຈຸບັນ ແຕ່ຕ້ອງເກັບຮັກສາໄວ້ ເປັນປະວັດສາດຂອງຫ້ອງການປະວັດສາດ, ຫຼືໂຮງຮຽນພຣະ ຄຣິສທັມ ຂອງເພຣັສໄບທີຣຽນ ແລ້ວແຕ່ທາງຄະນະປົກຄອງຈະເຫັນດີ ເພື່ອການເກັບຮັກສາຣາຍງານນັ້ນໃນທີ່ ປອດພັຍ.

## 5/ ວ່າດ້ວຍ ຄະນະກຳມະການ ແລະຄະນະກຳມາທິການ G-9.0500

## ວ່າດ້ວຍ ຄະນະກຳມະການ G-9.0501

ຄະນະກຳມະການ ຖືກແຕ່ງຕັ້ງມາເພື່ອການສຶກສາ ແລະແນະນຳ ກ່ຽວກັບກິຈການໃດນຶ່ງ ຫຼືເພື່ອນຳພາປະຕິບັດ ຫຼືປະຕິບັດຕາມບັນຫາຕ່າງໆທີ່ຖືກຕົກລົງແລ້ວຈາກທາງອົງການປົກຄອງ. ຄະນະນີ້ ຕ້ອງຣາຍງານຢ່າງເຕັມສ່ວນ ຕໍ່ອົງການປົກຄອງ ທີ່ສ້າງຕັ້ງຄະນະນັ້ນຂຶ້ນມາ ແລະການແນະນຳຕ່າງໆຈາກຄະນະຕ້ອງໄດ້ຮັບການລົງມະຕິຈາກຫ້ອງການປົກຄອງນັ້ນໆເສັຽກ່ອນ.

ຄະນະກຳມະການຂອງອົງການປົກຄອງຢູ່ເໜືອຄະນະປົກຄອງ ຕ້ອງປະກອບຂຶ້ນດ້ວຍ ບັນດາພວກຜູ້ຊ່ວຍ ແລະອາຈານ ຊຶ່ງຢ່າງນ້ອຍ ຕ້ອງມີພວກຜູ້ຊ່ວຍຈຳນວນເຄິ່ງນຶ່ງ.

## ວ່າດ້ວຍ ຄະນະກຳມາທິການ (Commission) G-9.0502

ຄະນະກຳມາທິການຄະນະນຶ່ງ ມີອຳນາດໃນການພິຈາຣະນາ ແລະສະລູບວຽກງານ ຊຶ່ງທາງອົງການປົກຄອງສເນີມາ. ຄະນະທີ່ແຕ່ງຕັ້ງຄະນະກຳມາທິການນີ້ ຕ້ອງເປັນຜູ້ບອກແຈ້ງເຖິງສິດອຳນາດທຳງານຂອງຄະນະກຳມະທິການນີ້. ຄະນະນີ້ ຕ້ອງມີການເກັບກຳຣາຍງານຢ່າງເຕັມສ່ວນໃນການທຳງານ ຊຶ່ງຕ້ອງນຳສເນີຕໍ່ອົງການປົກຄອງຂອງຕົນ ຊຶ່ງຈະເປັນການປະກອບສ່ວນ ກັບບົດຣາຍງານການປະຊຸມ ແລະຊຶ່ງຈະນຳມາໃຊ້ໃນການລົງມະຕິຂອງຫ້ອງການປົກຄອງ

## ວ່າດ້ວຍ ພາກບໍຣິຫານ ແລະນິຕິບັນຍັດ G-9.0503

ຄະນະກຳມາທິການທີ່ຖືກແຕ່ງຕັ້ງຈາກຄະນະປົກຄອງ, ພາກເພຣັສໄບເທີຣີ, ຊີໂນດ, ຫຼືສະພາສູງ ອາດຈະເປັນຄະນະ ບໍຣິຫານ ຫຼືຄະນະນິຕິບັນຍັດ ນອກຈາກກໍຣະນີທີ່ຄະນະປົກຄອງ ທີ່ອາດແຕ່ງຕັ້ງຄະນະນັ້ນໃຫ້ທຳການບໍຣິຫານພຽງເທົ່ານັ້ນ. ວຽກງານຂອງຄະນະບໍຣິຫານມີດັ່ງນີ້:

a. ເພື່ອສະຖາປະນາອາຈານ ແລະເພື່ອແຕ່ງຕັ້ງໃຫ້ເຂົ້າສູ່ການດຳເນີນສາຍພົວພັນກັບອາຈານທີ່ຖາວອນ

b. ເພື່ອສ້າງຕັ້ງຄຣິສຕະຈັກ ຫຼືຮອບຮອມຄຣິສຕະຈັກເຂົ້າເປັນຄຣິສຕະຈັກດຽວ.

c. ເພື່ອປົ້ງມປາມຄຣິສຕະຈັກທ້ອງຖິ່ນ, ອົງການປົກຄອງ, ຫຼືອົງການຈັດຕັ້ງອື່ນໆຂອງຄຣິສຕະຈັກ ຣາຍງານການບໍ່ເປັນຣະບຽບ ແລະແນະນຳເຂົ້າສູ່ການແກ້ໄຂບັນຫາທີ່ຍຸ້ງຍາກພາຍໃນ.

d. ເພື່ອຕ້ອນຮັບເອົາ ຜູ້ສະໝັກ ພາຍໃຕ້ການເບິ່ງແຍງຂອງພາກເພຣັສໄບເທີຣີ (G-14.0301)

e. ໃນກໍຣະນີທີ່ ຄະນະກຳມາທິການໄດ້ຖືກແຕ່ງຕັ້ງໂດຍຄະນະປົກຄອງ, ເພື່ອການສະຖາປະນາ ແລະແຕ່ງຕັ້ງຜູ້ປົກຄອງ ແລະມັກຄະນາຍົກ, ແລະເພື່ອປົ້ງມປາມອົງການຈັດຕັ້ງຕ່າງໆທີ່ຢູ່ພາຍໃນຄຣິສຕະຈັກ ແລະແກ້ໄຂຄວາມຂັດແຍ່ງ ພາຍໃນນັ້ນ.

ການປະຕິບັດງານຂອງຄະນະນິຕິບັນຍັດ ແມ່ນເພື່ອພິຈາຣະນາ ແລະຕັດສິນ ກໍຣະນີຕ່າງໆທີ່ເຂົ້າມາສູ່ອົງການປົກຄອງ ອີງໃສ່ກົດຣະບຽບກ່ຽວກັບວິນັຍ (ໃນເບິ່ງ D-4.0000 ກ່ຽວກັບຄະນະກຳມາທິການນິຕິບັນຍັດຖາວອນ)

ຄະນະກຳມາທິການ ອາດສາມາດຖືກມອບໝາຍໃຫ້ທຳໜ້າທີ່ຕື່ມອີກ ໃນຖານະເປັນຄະນະກຳມະການ, ຊຶ່ງບົດຣາຍງານ ທີ່ນຳມາຈະຕ້ອງຖືເປັນບົດຣາຍງານຂອງຄະນະກຳມະການ.

## ວ່າດ້ວຍ ສະມາຊິກ G-9.0504

ຄະນະກຳມາທິການແຫ່ງການບໍຣິຫານຂອງຄະນະປົກຄອງ ຢ່າງນ້ອຍຈະຕ້ອງມີຜູ້ປົກຄອງຢູ່ນຳ ສອງຄົນ ແລະຜູ້ຄວບຄຸມ ຄະນະປົກຄອງ ຫຼືອາຈານຄົນອື່ນໆ ທີ່ຖືກແຕ່ງຕັ້ງມາໃຫ້ທຳງານຖາວອນໃນຄຣິສຕະຈັກ ທີ່ປົກຄອງໂດຍຄະນະປົກຄອງ.

ຄະນະບໍຣິຫານ ແລະນິຕິບັນຍັດ ແຕ່ງຕັ້ງຈາກພາກເພຣັສໄບເທີຣີ, ຊີໂນດ, ແລະສະພາສູງ ຈະຕ້ອງ ປະກອບດ້ວຍ ອາຈານ ແລະຜູ້ປົກຄອງໃນຈຳນວນທີ່ເກືອບທໍ່ກັນ. ເວລາທີ່ການແຕ່ງຕັ້ງນັ້ນຫາກມີຈຳນວນຄີກ, ຜູ້ຈະເຂົ້າມາປະກອບຕື່ມ ຕ້ອງເປັນຜູ້ປົກຄອງ ຫຼືອາຈານ. ຈຳນວນ ແລະການປະກອບສ່ວນຂອງຈຳນວນຄວນມີດັ່ງນີ້:

a. ສຳຣັບສະພາສູງ ບໍ່ໃຫ້ຫຼຸດ 15 ຄົນ ຊຶ່ງຢ່າງນ້ອຍຕ້ອງມີຄົນນຶ່ງມາຈາກຕົວແທນຂອງຊີໂນດ.

b. ສຳຣັບຊີໂນດ ບໍ່ໃຫ້ຫຼຸດ 11 ຄົນ ໂດຍໃຫ້ມີຜູ້ຕາງໜ້າຈາກພາກເພຣັສໄບເທີຣີແຕ່ລະບ່ອນຮ່ວມບໍ່ໃຫ້ ເກີນນຶ່ງຄົນ.

c. ສຳຣັບພາກເພຣັສໄບເທີຣີ ບໍ່ໃຫ້ເກີນ 11 ຄົນ ແລະບໍ່ໃຫ້ມີຜູ້ປົກຄອງເຂົ້າຮ່ວມ ເກີນກວ່ານຶ່ງຄົນ ຊຶ່ງ ເປັນຕົວແທນທີ່ມາຈາກແຕ່ລະຄຣິສຕະຈັກ. ສຳຣັບການດຳເນີນງານແມ່ນບົ່ງໄວ້ໃນ G-9.0503a. ພາກເພຣັສໄບ ເທີຣີ ອາດສາມາດຜ່ອນຈຳນວນຄົນລົງໃຫ້ມີພຽງ 5 ຄົນໄດ້ ໂດຍບໍ່ໃຫ້ມີຜູ້ປົກຄອງເກີນນຶ່ງຄົນຈາກຄຣິສຕະຈັກນຶ່ງໆ.

ອົງການປົກຄອງທີ່ເລືອກມານັ້ນ ຈະເປັນຜູ້ຕັດສິນກ່ຽວກັບອົງປະກອບແຫ່ງການແຕ່ງຕັ້ງການບໍຣິຫານໃດນຶ່ງ ຊຶ່ງຢ່າງນ້ອຍຕ້ອງມີ ຢ່າງນ້ອຍຜູ້ນຶ່ງເພື່ອໃຫ້ເກີນກວ່າເຄິ່ງຂອງຈຳນວນສະມາຊິກ.
ອົງປະກອບຂອງຄະນະນິຕິບັນຍັດກໍຄວນມີ ຜູ້ນຶ່ງເພື່ອໃຫ້ເກີນກວ່າເຄິ່ງນຶ່ງຂອງຈຳນວນສະມາຊິກ. (D-4.0400)

## ວ່າດ້ວຍ ການຕັດສິນໃຈທຳງານ G-9.0505

ການຕັດສິນທຳງານຂອງຄະນະບໍຣິຫານງານທີ່ຖືກແຕ່ງມານີ້ ຈະຕ້ອງເປັນສິ່ງທີ່ມາຈາກມະຕິຂອງອົງການ ປົກຄອງທີ່ ແຕ່ງຕັ້ງຂຶ້ນມານັ້ນ ຫຼັງຈາກທຳສຳເຣັດແລ້ວຮຽບຮ້ອຍແລ້ວ ແລະມີການປະກາດອອກໄປ ຫຼືປະກາດ ກ່ອນຈຶ່ງທຳແລ້ວແຕ່ສະດວກ. ການຕັດສິນທຳງານນັ້ນຕ້ອງຂຽນ ເປັນຣາຍລັກອັກສອນ ໃຫ້ສມຽນ ເພື່ອຈະນຳສເນີຕໍ່ ອົງການປົກຄອງໃນກອງປະຊຸມຊຸດຕໍ່ໄປ.

## ວ່າດ້ວຍການພິຈາຣະນາຄະດີ ແລະການຄືບໜ້າ

ເວລາທີ່ ຫ້ອງການບໍຣິຫານໄດ້ຖືກແຕ່ງຕັ້ງຂຶ້ນມາເພື່ອແກ້ໄຂຂໍ້ຂັດແຍ່ງໃນຄຣິສຕະຈັກ, ອົງການປົກຄອງ, ຫຼືໃນອົງການໃດນຶ່ງພາຍໃນຄຣິສຕະຈັກ, ກ່ອນຈະມີການຕັດສິນບັນຫາຄັ້ງສຸດທ້າຍນັ້ນ ການຕັດສິນຕ້ອງໃຫ້ເປັນທີ່ຍຸຕິທັມ ແລະສາມາດປະຕິບັດໄດ້ ແລະຄວນໄດ້ຮັບຟັງບັນຫາຕ່າງໆທີ່ພົວພັນກັບເຣື້ອງ ຣາວນັ້ນເສັຽກ່ອນ. (ໃຫ້ເບິ່ງ G-9.0503c, e, G-9.0505). ການແຈ້ງການທີ່ຍຸຕິທັມ ຈະຕ້ອງປະກອບດ້ວຍ ຣາຍການທີ່ສັ້ນໆ ແລະເປີດແປນ ຊຶ່ງທາງຄະນະ ຈະເປັນຜູ້ຢັ້ງຢືນກ່ຽວກັບເຣື້ອງຣາວ ແລະເວລາສະຖານທີ່ ທີ່ຄວນ ຈະຮັບຟັງຄະດີນັ້ນໆ. ການຮັບຟັງຄວນປະກອບດ້ວຍການເປີດ ໂອກາດແກ່ທຸກຄົນທີ່ສົນໃຈໃຫ້ມີໜ້າທີ່ ທີ່ຈະນຳ

ເລື້ອງຣາວນາສເປີໂດຍທາງປາກເປົ່າໂດຍການໄຕ່ຕອງຢ່າງຮອບຄອບ ຄະນະ ອາດແຈ້ງການໃຫ້ແກ່ຜູ້ທີ່ມີຄວາມຮັບຜິດຊອບເປັນຜູ້ຕາງໜ້າຂອງພວກຄົນທີ່ພົວພັນກັບຜົນປະໂຫຍດຂອງເລື້ອງ ແລະສາມາດ ຮຽກຮ້ອງຖາມເຖິງຕຳແໜ່ງ ແລະບົດບາດຂອງຄົນທີ່ຈະນາກ່າວພິຈາຣະນາຄະດີນັ້ນ.

## ດ້ວຍການໄຕ່ຕອງຢ່າງຮອບຄອບ, ຄະນະກຳມາທິການ

ອາດອະນຸຍາດໃຫ້ມີການເພີ່ມຕື່ມວິທີການປະຕິບັດເພື່ອ ຄວາມຄືບໜ້າ ທີ່ສາມາດທຳໄດ້ ໂດຍສະເພາະກໍຣະນີກ່ຽວກັບນິຕິບັນຍັດ, ຊຶ່ງຈະອີງໃສ່ຄຳສະເໜີຂອງກຸ່ມຄົນ ຫຼືຂອງຄະນະເອງ.

ເຖິງຈະມີການກ່າວຫາ ຫຼືມີກໍຣະນີຢືນຢັນ ໃດໆກໍຕາມ ທີ່ກ່ຽວກັບບຸກຄົນ ທີ່ຮູ້ສຶກວ່າເປັນເລື້ອງທີ່ສຳຄັນ ແລະມີເຫດຜົນ ທີ່ສະແດງວ່າເປັນຄວາມຈິງ, ອາດມີການກ້າວໄປເຖິງການຍົກຍ້າຍອອກຈາກຫ້ອງການ ໜ້າທີ່, ໃສ່ວິນັຍ, ຫຼືສິ່ງອື່ນໆທີ່ສຳຄັນ ຕໍ່ບຸກຄົນນັ້ນໆ. ການກະທຳສິ່ງນັ້ນຕ້ອງເຮັດຢູ່ຕໍ່ໜ້າບຸກຄົນທີ່ຟ້ອງຮ້ອງນັ້ນ, ແລະເພື່ອຈະໄດ້ຍິນສິ່ງທີ່ພວກເຂົາກ່າວຫາ ແລະການຢືນຢັນຕໍ່ສູ້ເຂົານັ້ນ,ແລະຄວນໃຫ້ໄລຍະເວລາທີ່ສົມຄວນເພື່ອການກະກຽມ ແລະຫາເຫດຜົນທີ່ຈະແກ້ຕົວຂອງຜູ້ຖືກ ກ່າວຫາ, ຮວມທັງການສອບຖາມພະຍານຕ່າງໆ. ພາກສ່ວນນີ້ແມ່ນເຂົ້າຢູ່ໃນພາກກົດຣະບຽບແຫ່ງການໃສ່ວິນັຍ.

## 6/ ວ່າດ້ວຍອົງການຈັດຕັ້ງພິເສດ: G-9.0600

## ວ່າດ້ວຍສິດ ແລະຄວາມຮັບຜິດຊອບ G-9.0601

ສະມາຊິກຂອງຄຣິສຕະຈັກໃດນຶ່ງ, ແລະອາຈານ ຂອງຄະນະເພຣັສໄບທີຣຽນແຫ່ງອາເມຣິກາ ອາດສາມາດຮວມກັນ ຢູ່ໃນ ອົງການຈັດຕັ້ງສະເພາະ ໃດນຶ່ງ ເພື່ອທຳການດຳເນີນງານໃນໜ້າທີ່ກ່ຽວກັບພະຍານ, ການຮັບໃຊ້, ຫຼືການທະນຸບຳຣຸງ. ອົງການຈັດຕັ້ງພິເສດນີ້ ເປັນອົງການເອກະລາດ ເປັນກຸ່ມທີ່ປົກຄອງຕົນເອງ ຊຶ່ງບໍ່ແມ່ນອົງການຕາງໜ້າທີ່ເປັນທາງການຂອງ ຄະນະເພຣັສໄບທີຣຽນແຫ່ງອາເມຣິກາ. ພວກເຂົາຈະເປັນຜູ້ຮັບຜິດຊອບຕົນເອງຕໍ່ແນວຄິດ ແລະການກະທຳຂອງເຂົາ. ອົງການນີ້ ກໍຍັງຕ້ອງມີການຮັບຜິດຊອບຕໍ່ຄຣິສຕະຈັກ ແລະຕ້ອງເຄົາຣົບອົງການປົກຄອງ ທີ່ສ້າງຄວາມເໝາະສົມ, ສ້າງຄວາມເປັນຣະບຽບ, ສັນຕິສຸກ, ແລະຄວາມເປັນອັນນຶ່ງອັນດຽວຂອງຄຣິສຕະຈັກ. ອົງການປົກຄອງດັ່ງກ່າວ ທີ່ເກີດຂຶ້ນຢູ່ພາຍໃນຄຣິສຕະຈັກນັ້ນ ກໍຄື ຄະນະປົກຄອງ, ສຳຣັບພວກທີ່ຄວບຄຸມເຂດແດນ ກໍຄື ພາກເພຣັສໄບເທີຣີ ຫຼືຊີໂນດ ແລະພວກທີ່ຄວບຄຸມອຳນາດກວ້າງກວ່າຊີໂນດ ກໍຄືສະພາສູງນັ້ນເອງ. ໃນຄວາມຮັບຜິດຊອບຂອງອົງການຈັດຕັ້ງ ທີ່ມີຕໍ່ອົງການປົກຄອງນີ້ ສະມາຊິກສ່ວນບຸກຄົນຂອງອົງການ ຈະຕ້ອງຢູ່ໃຕ້ວິນັຍຂອງເພຣັສໄບທີຣຽນແຫ່ງອາເມຣິກາ.

## ພາກນີ້ຂຽນຂຶ້ນຈາກມະຕິຂອງກອງປະຊຸມສະພາສູງຄັ້ງທີ 201 ປີ 1989 G-9.0602

## 7/ ວ່າດ້ວຍເຈົ້າພະນັກງານບໍຣິຫານ G-9.0700

## ວ່າດ້ວຍ ຜູ້ບໍຣິຫານ G-9.0701

ຜູ້ບໍຣິຫານງານຂອງເພຣສໄບເທີຣີ ແລະຊີໂນດຈະຕ້ອງເປັນນັກບໍຣິຫານ ຂອງອົງການປົກຄອງ, ສາມາດຊີ້ແຈ້ງ ແກ່ອົງການປົກຄອງ, ໂດຍຜ່ານຄະນະສະພາຂອງເຂົາ, ເພື່ອການຕັດສິນການດຳເນີນງານ, ຍຸທສາດ, ຣາຍການ,

ແລະແຫຼ່ງ. ພວກເຂົາຄວນຈັດຫາການບໍຣິການໂດຍເຈົ້າພະນັກງານເພື່ອອົງການຕາງໜ້າ ແລະຄະນະກຳມະການຕ່າງໆ ຂອງອົງການປົກຄອງ. ຄຽງຄູ່ກັບຄວາມຮັບຜິດຊອບນັ້ນ ໃນການເອີ້ນຮຽກນັ້ນ, ຕ້ອງມີການທວບທວນຄືນໃນ ວຽກງານປະຈຳປີ, ແລະເພື່ອການ ເລືອກຕັ້ງຄືນອີກ ຫຼືປົດເຊົາໃນການວ່າຈ້າງ, ຊຶ່ງສິ່ງນີ້ຕ້ອງມີການສເນີຢ່າງຈະແຈ້ງ ຢູ່ G-9.0405.

ເພຣັສໄບເທີຣີ ແຕ່ລະບ່ອນອາດສາມາດເລືອກເອົາຜູ້ບໍຣິຫານ ໂດຍການຂໍຄຳເຫັນຈາກສະພາຊີໂນດ, ແລະອາດທຳຢ່າງ ດຽວກັນຮ່ວມກັບເພຣັສໄບເທີຣີອື່ນໆ ຖ້າຫາກຣາຍການ ແລະແຫຼ່ງທີ່ມາ ໄດ້ສ້າງຄວາມຈຳເປັນໃຫ້ເຣັດ. ແຕ່ລະຊີໂນດ ອາດເລືອກ ຜູ້ບໍຣິຫານ ໂດຍການຂໍຄຳເຫັນຈາກຄະນະສະພາສູງ.

## ວ່າດ້ວຍ ເຈົ້າພະນັກງານບໍຣິຫານອື່ນໆ G-9.0702

ໜ້າທີ່ຂອງເຈົ້າພະນັກງານບໍຣິຫານອື່ນໆພາຍໃນເພຣັສໄບເທີຣີ ອາດຖືກອະນຸຍາດໂດຍເພຣັສໄບເທີຣີ ໂດຍການຂໍ ຄຳເຫັນຈາກຊີໂນດ ຫຼືຈາກໜ່ວຍງານອື່ນໆ ທີ່ທາງຊີໂນດມອບໝາຍ ໃນກໍຣະນີທີ່ບໍ່ມີຄະນະສະພາ. ຕຳແໜ່ງຂອງເຈົ້າພະນັກ ງານບໍຣິຫານອື່ນໆພາຍໃນ ຊີໂນດ ອາດຖືກອະນຸຍາດໂດຍຊີໂນດ ໂດຍການຂໍຄຳເຫັນຈາກສະພາສູງ.

## ວ່າດ້ວຍ ເຈົ້າພະນັກງານ ແຫ່ງສຳນັກງານ ຂອງສະພາສູງ G-9.0703

ສຳນັກງານຂອງສະພາສູງ ອາດເລືອກຂຶ້ນມາດ້ວຍຄວາມຍິນຍອມ ຂອງຄະນະສະພາສູງ, ຈາກຜູ້ບໍຣິຫານ ຫຼືຄະນະບໍຣິຫານ, ແລະຕ້ອງໄດ້ຮັບການເຫັນດີຈາກສະພາສູງ. ຕຳແໜ່ງຂອງເຈົ້າພະນັກງານອື່ນໆ ສຳຣັບຫ້ອງການ ສຳນັກງານ ຂອງສະພາສູງ ອາດຖືກອະນຸຍາດໂດຍສຳນັກງານນັ້ນໆ ໂດຍຄວາມຍິນຍອມຂອງສະພາສູງ.

## ວ່າດ້ວຍ ການມີສ່ວນ ແລະການເປັນຕົວແທນ G-9.0704

ເຈົ້າພະນັກງານຜູ້ບໍຣິຫານ ແລະຜູ້ທຳການປົກຄອງທັງໝົດ ໃນອົງການປົກຄອງ ທີ່ຢູ່ເໜືອຄະນະປົກຄອງ ຄຣິສຕະຈັກ ຈະຕ້ອງໃຫ້ມີໂດຍອີງໃສ່ຫຼັກການພື້ນຖານຂອງການປະກອບສ່ວນ ແລະການເປັນຕົວແທນ ຢູ່ບັນທຶກໄວ້ ໃນ G-9.0104

ແລະທັງໝົດນີ້ຕ້ອງອີງໃສ່ຂໍ້ຮຽກຮ້ອງທີ່ວ່າ ຜູ້ເປັນຕົວແທນ ຊຶ່ງແມ່ນຄະນະຊອກຄົ້ນຫາ ເພື່ອທຳໜ້າທີ່ ໃນຕຳແໜ່ງນີ້ ຊຶ່ງໄດ້ບັນທຶກໄວ້ໃນ G-9.0405

## ວ່າດ້ວຍ ການຍຸບເລີກ ຂອງຊີໂນດ ແລະເພຣັສໄບເທີຣີ G-9.0705

ການພົວພັນຣະຫວ່າງຜູ້ບໍຣິຫານ ກັບເຈົ້າພະນັກງານການປົກຄອງຜູ້ອື່ນໆຂອງເພຣັສໄບເທີຣີ ແລະຊີໂນດ ແລະອົງການປົກຄອງ ອາດມີການຍຸບເລີກ ໂດຍສຽງສ່ວນມາກ ຈາກອົງການປົກຄອງທີ່ຖືກເລືອກມາໂດຍການ ຮ້ອງຂໍຂອງ ສະມາຊິກແຫ່ງເຈົ້າພະນັກງານ ຫຼືດ້ວຍການສເນີຂອງຄະນະສະພາ ຫຼືຄະນະກຳມະການພິເສດ ຫຼືກຸ່ມທີ່ຖືກ ມອບໝາຍ ແຫ່ງອົງການ ປົກຄອງທີ່ຖືກເລືອກມາ. ໃນເວລາທີ່ ຄະນະສະພາ, ຄະນະກຳມະການ, ຫຼືກຸ່ມມອບໝາຍ, ໄດ້ຕົກລົງເຫັນດີທີ່ຈະ ຈັດຕຽມໃນການສເນີຍຸບນັ້ນ, ຄວນຈະຕ້ອງແຈ້ງການໃຫ້ຜູ້ກ່ຽວຊາບເປັນຣາຍລັກອັກສອນ

ຊຶ່ງຈະບອກເຖິງເຫດຜົນທີ່ຈະທຳການ ຍຸບນັ້ນ ແລະໃຫ້ໂອກາດແກ່ເຈົ້າພະນັກງານ ໃນການຂໍລາອອກ ຫຼືຂໍການອະພິປຣາຍ ຊຶ່ງຈະນຳຣາຍງານໂດຍ ຄະນະສະພາ, ຄະນະກຳມະການ ຫຼືຄະນະມອບໝາຍ ຕໍ່ອົງການປົກຄອງເພື່ອການລົງມະຕິ. ການອະພິປຣາຍ ຈະຕ້ອງໃຫ້ບຸກຄົນນັ້ນສາມາດ ເຂົ້າຮ່ວມດ້ວຍການໃຫ້ຄຳແນະນຳ (D-8.1000) ໃຫ້ສາມາດຕອບຕໍ່ສິ່ງທີ່ທາງ ຄະນະສະພາ, ຄະນະກຳມະການ, ແລະຄະນະມອບໝາຍ ໄດ້ພົບເຫັນ ແລະເພື່ອສເນີເຫດຜົນ ແລະຫຼັກຖານ ທີ່ສະແດງໃຫ້ເຫັນເຖິງເຫດຜົນທີ່ວ່າ ເຈົ້າພະນັກງານນັ້ນ ບໍ່ສົມຄວນຖືກຍຸບເລີກ. ການອະພິປຣາຍ ຄວນໃຫ້ມີການຮັກສາຄວາມປອດພັຍ ດັ່ງທີ່ໄດ້ບັນທຶກໄວ້ໃນກົດ ຣະບຽບ ກ່ຽວກັບວິນັຍ ພາກ IX (D-9.0000). ການເກັບກຳຣາຍງານຕ້ອງໃຫ້ມີໃນເວລາມີການອະພິປຣາຍ, ຊຶ່ງຈະກາຍມາເປັນພາກສ່ວນນຶ່ງໃນເອກກະສານ ການເກັບກຳ ພາຍໃຕ້ D-6.0900 ໃນເຫດການທີ່ມີການຮ້ອງທຸກໂດຍ ຫ້ອງການນິຕິບັນຍັດ ໂດຍຈະຕ້ອງຕິດຕາມດ້ວຍ ການລົງມະຕິຂັ້ນສຸດທ້າຍ ຂອງອົງການປົກຄອງ.

## 8 / ຄະນະກຳມະການແຫ່ງການເລືອກຕັ້ງ G-9.0800

## ວ່າດ້ວຍ ຄະນະກຳມະການແຫ່ງການເລືອກຕັ້ງ G-9.0801

ແຕ່ລະເພຣັສໄບເທີຣີ ແລະຊີໂນດ ຈະຕ້ອງເລືອກຄະນະກຳມະການແຫ່ງການເລືອກຕັ້ງ ຊຶ່ງປະກອບດ້ວຍສະມາຊິກຂອງຄຣິສຕະຈັກຂອງເພຣັສໄບເທີຣີຢ່າງກວ້າງຂວາງ ຊຶ່ງປະກອບດ້ວຍ ອາຈານນຶ່ງສ່ວນສາມ, ຜູ້ຊ່ວຍເພດຍິງ ນຶ່ງສ່ວນສາມ, ແລະຜູ້ຊ່ວຍເພດຊາຍ ນຶ່ງສ່ວນສາມ. ຄະນະເລືອກຕັ້ງ ຕ້ອງປະກອບດ້ວຍ ສາມກຸ່ມ ຊຶ່ງແຕ່ລະກຸ່ມ ທຳງານກຳໜົດສາມປີ ຍົກເວັ້ນບ່ອນທີ່ມີການທຳງານພຽງກຳໜົດ ນຶ່ງ ແລະສອງປີ ເພື່ອການໝູນວຽນຈະເປັນ ປົກກະຕິ.

ຄະນະເລືອກຕັ້ງ ຈະຕ້ອງເລືອກເອົາບຸກຄົນມາເສີມໃສ່ບ່ອນຫວ້າງ ໃນຄະນະກຳມະການທຳສືບຕໍ່ດຳເນີນງານ (ຍົກເວັ້ນຄະນະເລືອກຕັ້ງ) ຄະນະສະພາ, ຄະນະບອດ໌, ແລະຫ້ອງການອື່ນໆ ຊຶ່ງຮຽກຮ້ອງໃຫ້ມີການເລືອກຕັ້ງໂດຍເພຣັສ ໄບເທີຣີ, ຫຼືຊີໂນດ. ການພິຈາຣະນາ ຈະຕ້ອງຖືກມອບໃຫ້ມີການເລືອກຕັ້ງ ໂດຍມີຈຳນວນອາຈານເທົ່າທຽມກັນ, ຜູ້ຊ່ວຍເພດ ຊາຍ, ຜູ້ຊ່ວຍເພດຍິງ (ໃຫ້ມີນຶ່ງສ່ວນສາມຂອງແຕ່ລະພາກສ່ວນ) ຍົກເວັ້ນ ຜູ້ປົກຄອງທີ່ເປັນເພດຍິງ ຫຼືຊາຍຄົນນັ້ນ ອາດຖືກເລືອກໃຫ້ຢູ່ໃນຄະນະກຳມະການແຫ່ງການຮັບໃຊ້ ຊຶ່ງຈະເປັນຕົວແທນໃຫ້ແກ່ການດຳເນີນງານຂອງເພຣັສໄບເທີຣີ G-11.0501, G-12.0102d, G-13.0111, G-13.0202.)

ໃນການເລືອກເອົາຜູ້ໃດຜູ້ນຶ່ງ ເພື່ອການຮັບຜິດຊອບສິ່ງໃດນຶ່ງ ຄະນະເລືອກຕັ້ງຄວນສັງເກດເບິ່ງການອ້າງອິງທີ່ ນຳສເນີໃນກົດຣະບຽບ G-6.0106, G-9.0104, G-11.0103d, G-110302, G-12.1012d, G-13.0108, and G-13.0202.

## ໙/ ສະລູບໂຄງສ້າງ G-9.0900

## ວ່າດ້ວຍ ຄະນະສະພາ, ຄະນະມອບໝາຍ, ຄະນະກຳມະການ G-9.0901

ພາຍໃນກົດທັມມະນູນ, ມັນເປັນການສະລູບໄດ້ວ່າ ອົງການປົກຄອງທີ່ຢູ່ເໜືອຄະນະປົກຄອງ ຈະເປັນຜູ້ຕາງໜ້າໃນ ໃນການເພັ່ງເລັງໃສ່ໜ້າທີ່ຮັບຜິດຊອບຂອງພວກເຂົາ ຕໍ່ຄະນະສະພາ, ຕໍ່ຄະນະມອບໝາຍ, ແລະຄະນະກຳມະການ. ການອ້າງອິງ ກ່ຽວກັບສຳນັກງານຕາງໜ້ານັ້ນ ແມ່ນເພື່ອໃຫ້ຄວາມກະຈ່າງແຈ້ງຕໍ່ການຈັດຕັ້ງການຮັບໃຊ້,

ການສ້າງຕັ້ງຫ້ອງການຕ່າງໆ, ແລະການບໍຣິຫານຣາຍການຕ່າງໆຂອງຄຣິສຕະຈັກ. ການອ້າງອີງຢັ້ງຢືນຕໍ່ສິ່ງເຫຼົ່ານີ້ຈະຖືກມອບໃຫ້ໂດຍບໍ່ຕ້ອງມີການໃສ່ຊື່ ເພື່ອອຳນວຍຄວາມສະດວກໃຫ້ແກ່ອົງການປົກຄອງ ເພື່ອຈະມີເສຣີພາບໃນການສ້າງຕັ້ງຊື່ສຳນັກງານຕາງໜ້າຂອງເຂົາເອງ.

ໃນຫຼາຍໆກໍຣະນີ ຕົວຢ່າງວ່າ ຄະນະກຳມະການຕົວແທນ, ຄະນະສະພາສູງ, ແລະຄະນະກຳມະການແຕ່ງຕັ້ງຂອງເພຣັສໄບເທີຣີ ຊຶ່ງຊື່ທີ່ຕາຍໂຕໄດ້ຖືກມອບໝາຍໃຫ້ ເພື່ອໃຫ້ມີການປະຕິບັດງານຕາມກົດຣະບຽບເພື່ອໃຫ້ອົງການປົກຄອງ ໄດ້ຮ່ວມໄມ້ຮ່ວມ ມືກັນໃນການຮັບໃຊ້. ການອ້າງອີງ ໃນສຳນັກງານແນວນັ້ນ, ໄດ້ອີງໃສ່ຮູບການທຳງານ, ຫຼືໂດຍຊື່ທີ່ເປັນທາງການ. ສິ່ງນີ້ ບໍ່ໄດ້ ຈຳກັດການສ້າງຕັ້ງຂອງອົງການປົກຄອງ ແຕ່ຫາກແມ່ນການອະທິບາຍເພື່ອໃຫ້ຄວາມສະດວກໃນການທຳງານຂອງຄຣິສຕະຈັກ.

### ວ່າດ້ວຍ ຣາຍການຂອງການສ້າງຕັ້ງ **G-9.0902**

ການສ້າງຕັ້ງ ທີ່ຖືກກຳໜົດໃນກົດທັມມະນູນມີຄື:

ເພຣັສໄບເທີຣີ: a. ໃນພາກເພຣັສໄບເທີຣີ Presbytery

ຄະນະສະພາທີ່ໃຫ້ການພົວພັນກັບການທຳງານ ແລະຣາຍການ G-11.0103v.
ຄະນະກຳມະການຕາງໜ້າ G-9.0105, G-11.0302
ຄະນະກຳມະການ ກ່ຽວກັບການຮັບໃຊ້ G-11.0500, G-14.00502
ຄະນະກຳມະການຈັດຕຽມເພື່ອການຮັບໃຊ້ G-14.0300
ກຳມະການແຕ່ງຕັ້ງ G-9.0800, G-11.0103w
ກຳມະການນິຕິບັນຍັດທີ່ຖາວອນ D-4.0000

ຊີໂນດ: b. ໃນພາກຊີໂນດ Synod

ຄະນະສະພາແຫ່ງການພົວພັນໃນການທຳງານ ແລະຣາຍການ (G-12.0102r) (ສິ່ງດຽວທີ່ຍົກເວັ້ນໃນຂໍ້ນີ້ຈະມີຂຶ້ນ ໃນເວລາທີ່ ຊີໂນດທີ່ຈະຮັກສາກິຈກຳໃນການພົວພັນນີ້ໄວ້ສຳຮັບຕົນເອງ)
ຄະນະກຳມະການຕາງໜ້າ G-9.0105, G-12.0301
ຄະນະກຳມະການແຕ່ງຕັ້ງ G-12.0102s
ຄະນະນິຕິບັນຍັດທີ່ຖາວອນ D-4.0000

ສະພາສູງ: c. ໃນສພາສູງ General Assembly

ຄະນະສະພາສູງ G-13.0200
ຄະນະກຳມະການຕາງໜ້າ G-9.0105, G-13.0108
ຄະນະກຳມະການແຕ່ງຕັ້ງ G-13.0111
ຄະນະກຳມະການທີ່ປຶກສາກ່ຽວກັບກົດທັມມະນູນ G-13.0112
ຄະນະບອດ໌ ຮັບຜິດຊອບກ່ຽວກັບເງິນບຳນານ G-14.0506, G-16.0201t, G-17.0201j
ຄະນະນິຕິບັນຍັດທີ່ຖາວອນ D-4.0000

# X/ ວ່າດ້ວຍ ຄະນະປົກຄອງ G-10.0000

## 1/ ວ່າດ້ວຍ ຄວາມໝາຍທົ່ວໄປ **G-10.0100**

### ວ່າດ້ວຍ ສະມາຊິກຂອງຄະນະປົກຄອງ **G-10.0101**

ຄະນະປົກຄອງຂອງຄຣິສຕະຈັກໃດນຶ່ງ ປະກອບດ້ວຍ ອາຈານ, ອາຈານຮອງ, ອາຈານຊ່ວຍ, ແລະຜູ້ປົກຄອງ ພວກເຫຼົ່ານີ້ ມີໜ້າທີ່ຮັບໃຊ້ວຽກງານ ທຳງານຂອງພຣະເຈົ້າຢ່າງຫ້າວຫັນ. ສະມາຊິກຂອງຄະນະປົກຄອງທັງໝົດ, ຊຶ່ງຮວມທັງ ອາຈານ ແລະອາຈານຊ່ວຍ ພວກເຫຼົ່ານີ້ ຕ້ອງໄດ້ມີການປ່ອນບັດຂັດເລືອກເອົາ.

### ວ່າດ້ວຍ ໜ້າທີ່ຮັບຜິດຊອບ **G-10.0102**

ຄະນະປົກຄອງຕ້ອງເປັນຜູ້ຮັບຜິດຊອບຕໍ່ວຽກງານການປະກາດ, ແລະການຈັດຕັ້ງປົກຄອງຂອງຄຣິສຕະຈັກ. ພວກເຂົາ ມີໜ້າທີ່ ແລະຄວາມຮັບຜິດຊອບດັ່ງນີ້:

a- ຮັບເອົາສະມາຊິກເຂົ້າສູ່ຄຣິສຕະຈັກ ບົນພື້ນຖານແຫ່ງການປະກາດຍອມຮັບຄວາມເຊື່ອ, ຢໍ້າຄືນຢືນຢັນໃນຄວາມເຊື່ອ, ມີໜັງສືໂອນຢ່າງຖືກຕ້ອງ. ການຮັບເອົາສະມາຊິກນີ້ ບໍ່ຄວນໃຫ້ມີການປະຕິເສດຍ້ອນເຫດຜົນທາງດ້ານ ເຊື້ອຊາດຜິວພັນ, ເສຖກິດ, ຫຼືສະພາບແວດລ້ອມຂອງສັງຄົມ ຫຼືເຫດຜົນໃດນຶ່ງທີ່ບໍ່ໄດ້ພົວພັນກັບຄວາມເຊື່ອຄຣິສຕຽນ.

b- ນຳພາຄຣິສຕະຈັກໃນການແບ່ງປັນວຽກງານ ການປະກາດຂ່າວປະເສີດຂອງຄຣິສຕະຈັກແຫ່ງໂລກ ໂດຍໃຫ້ສອດຄ່ອງກັບກົດຣະບຽບຂໍ້ G-3.0000.

c- ຈັດຕຽມການນະມັສການພຣະເຈົ້າເພື່ອໄພ່ພົນຂອງພຣະອົງ ຊຶ່ງປະກອບດ້ວຍ, ການເທສນາ, ມີສ່ວນຮ່ວມໃນພິ ທີສິນຕ່າງໆ, ການດົນຕຣີສັຣເສີນ, ທັງໝົດນີ້ຕ້ອງກະທຳໂດຍອີງໃສ່ບົນພື້ນຖານໃນຂໍ້ກຳໜົດຂອງປື້ມກ່ຽວກັບການນະມັສການ. ຕ້ອງມີການປະກອບສ່ວນກັບວຽກງານຂອງພາກ ຕາມຂໍ້ກຳໜົດ ແລະການອະນຸຍາດຕາມກົດຂໍ້ G-11.0103 ເພື່ອຈະສາມາດເປັນຜູ້ແບ່ງເບົາວຽກງານຂອງອາຈານ ໃນເວລາທີ່ບໍ່ມີອາຈານມານຳພິທີສິນມະຫາສະໜິດໄດ້.

d- ຈັດຕຽມການເຕີບໃຫຍ່ຂະຫຍາຍຕົວຂອງສະມາຊິກ ແລະປະກອບອຸປກອນໃນການຮັບໃຊ້ພຣະເຈົ້າ ໂດຍຜ່ານ ສ່ວນບຸກຄົນ ຫຼືຜ່ານການເບິ່ງແຍງຂອງອາຈານ, ໂດຍຜ່ານການສຶກສາ ຊຶ່ງປະກອບດ້ວຍ ໂຮງຮຽນຂອງຄຣິສຕະຈັກ, ການຮ່ວມກຸ່ມ ແລະການຊ່ວຍເຫຼືອ, ພ້ອມທັງການຊອກຫາໂອກາດທີ່ຈະເປັນພະຍານ ແລະການຮັບໃຊ້ໂລກ.

e- ທຳການພັທນາ ແລະຄວບຄຸມໂຮງຮຽນຂອງຄຣິສຕະຈັກ ແລະຣາຍການ ການສຶກສາຂອງຄຣິສຕະຈັກ.

f- ນຳພາຄຣິສຕະຈັກ ໃນວຽກງານຮັບໃຊ້ພຣະເຈົ້າຕໍ່ສ່ວນບຸກຄົນ ແລະການປ່ຽນແປງສັງຄົມ ການຖືກຕ້ອງປອງດອງ ກັນໃນຊຸມຊົນ ຊຶ່ງເປັນບ່ອນທີ່ຄຣິສຕະຈັກຕັ້ງ ແລະເປັນພະຍານຢູ່ນັ້ນ.

g- ທ້າທາຍໄພ່ພົນຂອງພຣະເຈົ້າ ດ້ວຍສິດທິພິເສດໃນຄວາມຮັບຜິດຊອບຂອງການເປັນຄຣິສຕຽນ ໂດຍການຖວາຍ ເງິນ, ເວລາ, ພອນສວັນ, ພັທນາຕົວເອງຕາມແບບແຜນທີ່ຖືກຕ້ອງໃນການຊຸກຍູ້ ອຸ້ມຊູ

ແລະການໃຊ້ສິ່ງຖວາຍ ຂອງຄຣິສຕະຈັກ ແລະຮັບກັບການຖວາຍທັງໝົດໃຫ້ຖືກຕ້ອງແລະແທດເໝາະກັບຄວາມຕ້ອງການຂອງຜູ້ຖວາຍ.

h- ສ້າງງົບປະມານປະຈຳປີ, ກຳໜົດການຖວາຍຂອງຄຣິສຕະຈັກ, ແລະສັ່ງໃຫ້ມີການຖວາຍສຳຣັບວຽກງານຄຣິສຕຽນ, ຈັດການຣາຍງານຂ່າວຄາວຢ່າງຄົບຖ້ວນຕໍ່ຄຣິສຕະຈັກ ເພື່ອໃຫ້ມີການຕົກລົງຮັບເອົາບັນຫານັ້ນໆ.

i- ນຳພາຄຣິສຕະຈັກ ໃນການສືບຕໍ່ຄົ້ນຄວ້າເຖິງສິ່ງທີ່ພຣະເຈົ້າໄດ້ຊົງກະທຳກິຈການຂອງພຣະອົງໃນໂລກນີ້ ແລະວາງແຜນການທີ່ຈະມີການປ່ຽນແປງ, ສ້າງຂຶ້ນໃໝ່, ແລະການປະຕິຮູບ ພາຍໃຕ້ພຣະຄຳຂອງພຣະອົງ.

j- ຜູກມັດຕົນເອງຕໍ່ການສຶກສາ ແລະການພ້ອມກັນໃຫຍ່ຂຶ້ນຂອງສະມາຊິກພາຍໃນຄະນະປົກຄອງຂອງຄຣິສຕະຈັກ.

k- ສັ່ງສອນ, ທົດສອບ, ສະຖາປະນາ, ແຕ່ງຕັ້ງ, ແລະຕ້ອນຮັບເອົາການເຂົ້າສູ່ວຽກງານຮັບໃຊ້ພຣະເຈົ້າຂອງຄະນະ ປົກຄອງ ແລະມັກຄະນາຍົກ ໃນການເລືອກຕັ້ງຂອງພວກເຂົາ ແລະຮຽກຮ້ອງໃຫ້ພວກເຂົາປະຕິບັດໜ້າທີ່ຮັບຜິດຊອບຕາມ ຄວາມເຊື່ອຂອງພວກເຂົາ.

l- ຕາງໜ້າ ແລະນຳພາຄວບຄຸມວຽກງານຂອງຄະນະສະພາກັມມະການມັກຄະນາຍົກ ແລະຄະນະຄຸ້ມຄອງຊັພສິນ ພ້ອມທັງທຸກໆອົງການຈັດຕັ້ງ ແລະກຳລັງງານຂອງຄຣິສຕະຈັກ.  ຈັດຕຽມການຊ່ວຍເຫຼືອ, ຣາຍງານ, ສະລູບຄືນ, ແລະຄວບຄຸມ

m- ຈັດຕຽມການຈັດຕັ້ງຣາຍການວຽກງານຕ່າງໆຂອງຄຣິສຕະຈັກ,
ຮວມທັງການຈ້າງພະນັກງານທີ່ບໍ່ຍັງໄດ້ຖືກ ສະຖາປະນາ, ໂດຍມີການຍອມຮັບເອົາຫຼັກການສເມີພາບໃນການທຳງານ, ປະຕິບັດການຮັບຈ້າງຄົນງານຢ່າງຍຸຕິທັມ, ປະຕິບັດ ນະໂຍບາຍການບັນຈຸພະນັກງານ, ແລະການສຳຣວດຄືນປະຈຳປີໃນການໃຊ້ຄ່າຊົດເຊີຍຕໍ່ເຈົ້າໜ້າທີ່ ແລະພະນັກງານ ຮັບຈ້າງທັງໝົດ.

n- ຈັດຕຽມການຄວບຄຸມຊັພສິນບົດຂອງຄຣິສຕະຈັກ ຮວມທັງກຳໜົດການໃຊ້ອາຄານຂອງຄຣິສຕະຈັກ ແລະອຸປກອນ ທີ່ອຳນວຍຄວາມສະດວກອື່ນໆ.

o- ຮັກສາການພົວພັນຢ່າງປົກກະຕິແລະສືບຕໍ່ພົວພັນກັບອົງການຈັດຕັ້ງປົກຄອງທີ່ສູງກວ່າຊຶ່ງປະກອບດ້ວຍ:

⋆ ເລືອກເອົາຜູ້ຕາງໜ້າໄປຮ່ວມວຽກງານຂອງພາກ ແລະຮັບຣາຍງານຈາກເຂົາ.

⋆ ນຳສເນີຊື່ຜູ້ປົກຄອງທີ່ມີຄຸນສົມບັດໃນການຮັບໃຊ້ພຣະເຈົ້າຂັ້ນສະພາຕ່ຳ ແລະສະພາສູງ ເພື່ອການຕັ້ງ.

⋆ ໜ້າທີ່ຮັບຜິດຊອບທັ້ງສອງຢ່າງຂ້າງເທິງ ເປັນໜ້າທີ່ ທີ່ສົ່ງເສີມ ສະໜັບສະໜູນວຽກງານອັນໃຫຍ່ຂອງຄຣິສຕະຈັກ ເພື່ອການມີສ່ວນ ແລະເປັນສິ່ງຄວນແກ່ການກະທຳໃນການໃຫ້ມີຜູ້ຕາງໜ້າທີ່ເໝາະສົມ ເພື່ອການໃຊ້ສິດຕັດສິນບັນຫາໃດນຶ່ງ.

⋆ ສັງເກດການ ແລະນຳເຜີຍແຜ່ບົດຮຽນທັງຫຼາຍຂອງອົງການຈັດຕັ້ງປົກຄອງທີ່ສູງກວ່າ ເພື່ອໃຫ້ສອດຄ່ອງກັບ ກົດທັມມະນູນຂອງຄະນະເພຣັສໄບທີຣຽນແຫ່ງສະຫະຣັດອາເມຣິກາ.

⋆ ຕ້ອນຮັບການມາຢ້ຽມຢາມຂອງຕາງໜ້າພາກ ທີ່ຈະມາຢ້ຽມຢາມຄຣິສຕະຈັກໃນບາງໂອກາດ.

⋆ ສເນີວຽກງານຕ່າງໆຕໍ່ພາກ ແລະໂດຍຜ່ານພາກນັ້ນ ຈະສາມາດສເນີຕໍ່ໄປໃນສະພາຕ່ຳ ແລະສະພາສູງໃນຂັ້ນຕໍ່ໄປ ຕໍ່ບັນຫາທີ່ຄິດວ່າ ເປັນປະໂຫຍດຕໍ່ສ່ວນບຸກຄົນ ໃນວຽກງານການຮັບໃຊ້ພຣະເຈົ້າຂອງຄຣິສຕະຈັກທົ່ວໄປ.

p- ກໍ່ສ້າງ ແລະຍຶດໝັ້ນການພົວພັນກັບຄຣິສຕະຈັກທົ່ວໆໄປ ຊຶ່ງເປັນສິ່ງຈຳເປັນໃນຊີວິດ ແລະການປະກາດຂອງ ຄຣິສຕະຈັກໃດນຶ່ງ.

q- ຮັບໃຊ້ການຕັດສິນຄະດີຕ່າງໆ ໂດຍອີງຕາມກົດທັມມະນູນ ກ່ຽວກັບຣະບຽບວິນັຍ.

r- ຮັກສາທະບຽນພົນຂອງຄຣິສຕະຈັກ ອີງຕາມກົດຣະບຽບຂໍ້ G-10.0302 ແລະໃຫ້ໃບຍົກຍ້າຍແກ່ສະມາຊິກ ທີ່ທຳການຍົກຍ້າຍໄປຢູ່ໂບດອື່ນ ແລະຖ້າຫາກອອກໜັງສືໃຫ້ພໍ່ ກໍຕ້ອງໃຫ້ບັນທຶກບັນດາຊື່ຂອງລູກໆທັງໝົດລົງ ພ້ອມທັງແຈ້ງ ໃຫ້ຊາບເຖິງການຮັບສິນບັບຕິສມາແລ້ວຫຼືຍັງ. ຖ້າອອກໜັງສືໃຫ້ຜູ້ປົກຄອງ ຫຼືນັກຄະນາຍົກ ຄວນບັນທຶກກ່ຽວກັບການ ຖືກສະຖາປະນາໃນໜ້າທີ່ນັ້ນໆໃສ່ນຳດ້ວຍ.

## ວ່າດ້ວຍ ຜູ້ຄວບຄຸມດູແລ G-10.0103

ອາຈານ ຄວນເປັນຜູ້ຄວບຄຸມດູແລຄະນະປົກຄອງ ແລະຄະນະປົກຄອງກໍບໍ່ຄວນເປີດກອງປະຊຸມ ໂດຍທີ່ບໍ່ມີອາຈານ ຮັບຮູ້ນຳ. ໃນຄຣິສຕະຈັກທີ່ມີອາຈານຊ່ວຍ, ທັ້ງອາຈານ ແລະຜູ້ຊ່ວຍ ຄວນສັບປ່ຽນກັນເປັນຜູ້ນຳພາກອງປະຊຸມ ໃນກໍຣະນີຈຳເປັນ ເພື່ອຄວາມເໝາະສົມຂອງກອງປະຊຸມທີ່ຕ້ອງເອົາອາຈານຈາກບ່ອນອື່ນມາເປັນຜູ້ນຳກອງປະຊຸມ, ທາງຄະນະປົກຄອງຕ້ອງເຊີນເອົາອາຈານທີ່ສັງກັດຢູ່ໃນພາກນັ້ນໆມາເປັນຜູ້ນຳ ໂດຍອີງໃສ່ການເຫັນດີເຫັນພ້ອມຂອງຄະນະ. ໃນກໍຣະນີອາຈານເຈັບເປັນ ຫຼືອາຈານຕ້ອງຂາດ ໃນກໍຣະນີນີ້ ອາດເຮັດແບບທີ່ສເນີມາຂ້າງເທິງນັ້ນ, ຫຼືຫຼັງຈາກໄດ້ຮັບການ ເຫັນດີຈາກອາຈານແລ້ວ ທາງຄະນະປົກຄອງອາດຄັດເລືອກເອົາບຸກຄົນໃດນຶ່ງໃນຄະນະໃຫ້ມາເປັນຜູ້ນຳ.

ໃນກໍຣະນີທີ່ຄຣິສຕະຈັກບໍ່ມີອາຈານ, ຜູ້ຄວບຄຸມນຳພາກອງປະຊຸມຂອງຄະນະປົກຄອງ ຈະຕ້ອງເປັນອາຈານທີ່ທາງພາກ ໄດ້ມອບໝາຍ, ຫຼືອາຈານທີ່ມາຈາກພາກດຽວກັນຊຶ່ງທາງຄະນະປົກຄອງເປັນຜູ້ເຊື້ອເຊີນມາໃຫ້ເປັນຜູ້ນຳໃນບາງໂອກາດ. ຖ້າຫາກອາຈານນັ້ນມາບໍ່ໄດ້ ທາງຄະນະປົກຄອງຄວນເລືອກເອົາຄົນນຶ່ງໃນຄະນະມາເປັນຜູ້ນຳ.

ໃນທຸກກໍຣະນີທີ່ກ່ຽວກັບວິນັຍຂອງຄຣິສຕະຈັກ ຜູ້ນຳກອງປະຊຸມຄວນໃຫ້ເປັນອາຈານ ທີ່ມາຈາກພາກນັ້ນໆ

## 2/ ວ່າດ້ວຍ ການປະຊຸມຂອງຄະນະປົກຄອງ G-10.0200

## ວ່າດ້ວຍ ການປະຊຸມ G-10.0201

ຄະນະປົກຄອງ ຄວນຮັກສາກຳໜົດຂອງກອງປະຊຸມຢ່າງນ້ອຍທຸກໆສີ່ເດືອນ. ອາຈານສາມາດເອີ້ນຮຽກໃຫ້ມີກອງປະຊຸມສຸກເສີນໄດ້ ໃນເວລາທີ່ຜູ້ກ່ຽວຄິດວ່າເປັນການສົມຄວນ ຫຼັງຈາກໄດ້ຮັບການສເນີໃຫ້ມີກອງປະຊຸມເປັນລາຍລັກ ອັກສອນຈາກ ຢ່າງນ້ອຍສອງຄົນໃນສະມາຊິກຂອງຄະນະປົກຄອງ. ກອງປະຊຸມອາດມີຂຶ້ນ ໂດຍການສັ່ງຈາກພາກ. ການແຈ້ງຂ່າວກອງປະຊຸມແບບພິເສດທຸກຄັ້ງຕ້ອງໃຫ້ມີຂຶ້ນກ່ອນທີ່ວຽກງານອື່ນໆຈະນຳມາປະຕິບັດ. ຄະນະປົກຄອງອາດເຊີນ ສະມາຊິກຄຣິສຕະຈັກມາຮ່ວມ ແລະເປັນຜູ້ສັງເກດການໃນກອງປະຊຸມທີ່ເຫັນວ່າສົມຄວນ.

## ວ່າດ້ວຍ ອົງປະກອບໃນກອງປະຊຸມ G-10.0202

ອົງປະກອບໃນກອງປະຊຸມຄວນມີ ອາຈານ ແລະເຈົ້າໜ້າທີ່ຄວບຄຸມແລະນຳພາຜູ້ອື່ນໆ ພ້ອມທັງຕ້ອງມີຄະນະປົກຄອງ ຮ່ວມຈຳນວນນຶ່ງສ່ວນສາມຂອງສະມາຊິກ ແຕ່ບໍ່ໃຫ້ຕ່ຳກວ່າສອງຄົນ. ນອກຈາກການຍອມຮັບເອົາ

ຫຼືການສັ່ງຍົກເລີກຂອງ ສະມາຊິກ, ການປະຊຸມຕ້ອງໃຫ້ມີຜູ້ຄວບຄຸມດູແລ ແລະຜູ້ປົກຄອງອີກຢ່າງນ້ອຍສອງຄົນ. ໃນຈຳນວນອົງປະກອບໃນ ກອງປະຊຸມ ຄະນະປົກຄອງຄວນມີການຕົກລົງ ກຳໜົດເອົາເອງ.

## 3/ ວ່າດ້ວຍ ການບັນທຶກຣາຍງານ ແລະເກັບກຳສຳນວນ G-10.0300

## ວ່າດ້ວຍ ການບັນທຶກຣາຍງານ G-10.0301

ຄະນະປົກຄອງ ຄວນເກັບກຳ ບັນທຶກການດຳເນີນວຽກງານຂອງຄະນະປົກຄອງໄວ້ຢ່າງຄົບຖ້ວນ ແລະຕ້ອງນຳສເນີ ຣາຍງານຕໍ່ພາກປີລະຄັ້ງ ເພື່ອການສຳຣວດທົ່ວໄປ ແລະການຄວບຄຸມ. (G-11.0103x, D-3.0300) ການບັນທຶກຣາຍງານ ຈະຕ້ອງສະແດງເຖິງການປະກອບຂອງຄະນະປົກຄອງກ່ຽວກັບການເປັນສະມາຊິກຂອງກຸ່ມຊົນຊາດ ສັດຕຣີ, ຜູ້ຊາຍ, ກຸ່ມຄົນໃນຣະດັບອາຍຸໃດນຶ່ງ, ແລະສະແດງເຖິງການພົວພັນຂອງສິ່ງດັ່ງກ່າວນີ້ຕໍ່ຄຣິສຕະຈັກ ແບບໃດ. ການບັນທຶກຣາຍງານ ແລະວຽກງານອື່ນໆຂອງຄະນະປົກຄອງ ຈະຕ້ອງປະກອບດ້ວຍ ຣາຍງານກອງປະຊຸມ ຄຣິສຕະຈັກ, ສຳນວນການປະຊຸມຂອງສະພາກັມມະການນັກຄະນາຍົກ ແລະສະພາຄຸ້ມຄອງຊັບສິນ. ບັນທຶກຣາຍງານ ທັງໝົດ ຈະຕ້ອງເປັນສົມບັດຂອງຄະນະປົກຄອງທີ່ຕ້ອງເກັບກຳເອົາ ແລະສະນຽນຂອງຄະນະປົກຄອງ ຕ້ອງເປັນຜູ້ເກັບ ຮັກສາໄວ້. ສິ່ງເຫຼົ່ານີ້ ຕ້ອງໃຫ້ມີໄວ້ສຳຣັບການກວດກາຂອງພາກສເນີ ແລະຈະຕ້ອງເກັບຮັກສາໄວ້ໃນອົງການ ເກັບກຳປະວັດຂອງພາກ.

## ວ່າດ້ວຍ ທະບຽນພົນ ແລະການເກັບກຳລາຍຊື່ G-10.0302

ຄະນະປົກຄອງ ຈະຕ້ອງຮັກສາທະບຽນຂອງສະມາຊິກ ດັ່ງໄດ້ສເນີໃນ G-5.0200 ແລະການຈັດຊື່ ຄວນເຮັດດັ່ງນີ້:

a- ທະບຽນສະມາຊິກ. ຊື່ຂອງສະມາຊິກທຸກຄົນຈະຕ້ອງຈົດບັນທຶກໄວ້, ຖືກຍົກຍ້າຍອອກ, ຫຼືຖືກລຶບຖິ້ມ ຈາກທະບຽນ ຂອງຄຣິສຕະຈັກໄດ້ ກໍຕໍ່ເມື່ອໄດ້ຮັບຄຳສັ່ງຈາກຄະນະປົກຄອງ ໃນເວລາທີ່ພວກເຂົາໄດ້ທຳການ ຄົ້ນຄວ້າຢ່າງເປັນທີ່ພໍໃຈແລ້ວ ແລະກໍເຫັນວ່າການກະທຳດັ່ງກ່າວຖືກຕ້ອງແລະຍຸຕິທັມແລ້ວ.

⋆ ທະບຽນສະມາຊິກທີ່ຮັບສິນແລ້ວ. ທະບຽນນີ້ຄວນບັນທຶກຊື່ຂອງສະມາຊິກທີ່ຮັບສິນມາຈາກຄຣິສຕະຈັກ ໃດນຶ່ງແລ້ວ ແຕ່ບໍ່ທັນໄດ້ປະກາດຢືນຢັນເຖິງຄວາມເຊື່ອໃນການຍອມຮັບເອົາພຣະເຢຊູຄຣິສເປັນພຣະຜູ້ຊ່ວຍໃຫ້ລອດ ເທື່ອ. ນອກນີ້ ຍັງຕ້ອງບັນທຶກຊື່ຂອງເດັກຂອງສະມາຊິກທີ່ຫ້າວຫັນ ຊຶ່ງພວກກ່ຽວໄດ້ຮັບສິນບັບຕິສມາແລ້ວຈາກ ຄຣິສຕະຈັກອື່ນ.

⋆ ທະບຽນຂອງສະມາຊິກທີ່ຫ້າວຫັນ. ຄວນບັນທຶກຊື່ຂອງພວກທີ່ຮັບເຂົ້າເປັນສະມາຊິກຂອງຄຣິສຕະຈັກ ຊຶ່ງເປັນຜູ້ທີ່ຫ້າວຫັນໃນການປະກອບສ່ວນວຽກງານຂອງຄຣິສຕະຈັກ ແລະການນະມັສການ. ຈຳນວນຂອງສະມາ ຊິກທີ່ຫ້າວຫັນນີ້ ຕ້ອງໄດ້ນຳສເນີຕໍ່ທາງສະພາທຸກປີ.

ການໃຫ້ໜັງສືຢັ້ງຢືນເປັນສະມາຊິກຊົ່ວຄາວ. ໃນເວລາທີ່ສະມາຊິກຫ້າວຫັນ ຍ້າຍຖິ່ນທີ່ຢູ່ອາສັຍຊົ່ວຄາວ, ຜູ້ກ່ຽວອາດ ກາຍເປັນສະມາຊິກຊົ່ວຄາວຂອງຄຣິສຕະຈັກອື່ນໃນເຄືອນີ້ ຫຼືເຄືອອື່ນໆທີ່ພົວພັນກັບເຄືອນີ້ໃນຣະດັບສະພາສູງ. ໃນກໍຣະນີນີ້ ທາງຄະນະປົກຄອງຄວນອອກໜັງສືຢັ້ງຢືນໃນ ຄວາມຫ້າວຫັນຂອງຜູ້ກ່ຽວ (G-15.0201) ການອອກໜັງສືໃຫ້ນັ້ນ ກໍເພື່ອໃຫ້ຄຣິສຕະຈັກນັ້ນໆ

ໃຫ້ການເບິ່ງແຍງດູແລຜູ້ກ່ຽວ. ໜັງສືດັ່ງກ່າວມີກຳໜົດໃຊ້ພາຍໃນສອງປີ. ເຖິງແມ່ນໃຫ້ໜັງສືໂອນໄປແລ້ວກໍຕາມ, ທາງຄະນະປົກຄອງຍັງຈະຕ້ອງຮັກສາຊື່ຂອງຜູ້ກ່ຽວໄວ້ໃນທະບຽນພົນຂອງ ຄຣິສຕະຈັກ ຈົນກ່າວ ຜູ້ກ່ຽວໄດ້ຖືກຮັບເອົາເປັນສະມາຊິກຂອງຄຣິສຕະຈັກອື່ນແລ້ວ.

ໃນເວລາທີ່ສະມາຊິກທ້າວທັນຍົກຍ້າຍໄປບ່ອນອື່ນ ແລະບໍ່ສາມາດປະກອບວຽກງານແລະນະມັສການໃນ ຄຣິສຕະຈັກນີ້ອີກ, ແມ່ນໜ້າທີ່ຂອງຜູ້ກ່ຽວເອງທີ່ຈະຕ້ອງບຸກບືນ ໃຫ້ກາຍເປັນສະມາຊິກທ້າວທັນຂອງຄຣິສຕະຈັກ ທີ່ຜູ້ກ່ຽວ ສັງກັດຢູ່ນັ້ນ. ໜ້າທີ່ຂອງຄະນະປົກຄອງ ຄວນອະທິບາຍໃຫ້ຜູ້ກ່ຽວຊາບ ແລະພ້ອມດຽວກັນກໍຄວນແຈ້ງ ການໄປຍັງໂບດທີ່ ຜູ້ກ່ຽວອາສັຍຢູ່ ແລະຄວນແຈ້ງໃຫ້ທາງພາກ ຫຼືທາງສມຽນ ຫຼືໃຫ້ທັງສອງບ່ອນເລີຍ.

⋆ ທະບຽນຂອງສະມາຊິກທີ່ບໍ່ທ້າວທັນ. ທະບຽນນີ້ ບັນທຶກຊື່ຂອງພວກທີ່ຍ້າຍອອກຈາກທະບຽນຂອງພວກທີ່ ທ້າວທັນ ທັ້ງນີ້ຍ້ອນການບໍ່ສາມາດປະກອບວຽກງານ ແລະການນະມັສການຮ່ວມກັບຄຣິສຕະຈັກນັ້ນໄດ້ອີກ. ການຍົກຍ້າຍຊື່ອອກ ຄວນມີຂຶ້ນຫຼັງຈາກທີ່ຄະນະປົກຄອງໄດ້ມີການຕັດສິນຢ່າງຖືກຕ້ອງແລ້ວ. ຈະບໍ່ມີການຍົກຍ້າຍ ຊື່ຂອງສະມາຊິກທີ່ທ້າວທັນ ມາໄວ້ ໃນທະບຽນຂອງສະມາຊິກທີ່ບໍ່ທ້າວທັນໄດ້ ເວັ້ນເສັຽແຕ່ຜູ້ກ່ຽວບໍ່ຕັ້ງໃຈທີ່ຈະປະກອບ ສ່ວນໃນວຽກງານ ແລະການນະມັສການ ກັບຄຣິສຕະຈັກເປັນເວລານຶ່ງປີ ແລະຈົນກວ່າທາງຄະນະປົກຄອງໄດ້ທຳການ ຄົ້ນຄວ້າພົບເຫັນສາເຫດທີ່ຜູ້ກ່ຽວບໍ່ສາມາດຮ່ວມວຽກ ງານໄດ້ ແລະກໍໄດ້ພະຍາຍາມສຸດຂີດທີ່ຈະໃຫ້ຜູ້ກ່ຽວກັບຄືນ ສູ່ການເປັນສະມາຊິກທີ່ທ້າວທັນ ແຕ່ບໍ່ສຳເຣັດ. ການຍົກຍ້າຍຊື່ອອກນີ້ ທາງຄະນະປົກຄອງຕ້ອງແຈ້ງໃຫ້ຜູ້ກ່ຽວ ຊາບນຳ.

ສຳຣັບພວກທີ່ຍົກຍ້າຍໄປອາສັຍຢູ່ບ່ອນອື່ນດັ່ງທີ່ໄດ້ສເນີມາຂ້າງເທິງນັ້ນ ຊື່ຂອງພວກກ່ຽວຈະຕ້ອງຍັງ ຮັກສາໄວ້ ໃນທະບຽນຂອງສະມາຊິກທ້າວທັນເປັນເວລານຶ່ງປີ ກ່ອນທີ່ຈະຍ້າຍອອກໄປໃສ່ທະບຽນຂອງພວກ ບໍ່ທ້າວທັນ. ຄະນະປົກຄອງ ຕ້ອງແນະນຳໃຫ້ຜູ້ກ່ຽວສເນີເອົາໜັງສືຍົກຍ້າຍນັ້ນ ໃຫ້ກັບຄຣິສຕະຈັກທີ່ຕົນເອງອາສັຍຢູ່.

⋆ ທະບຽນຂອງສະມາຊິກຊົ່ວຄາວ. ຄວນບັນທຶກລາຍຊື່ຂອງສະມາຊິກນີ້ໄວ້ ຫຼັງຈາກໄດ້ຮັບການເຫັນດີຈາກ ຄະນະປົກຄອງແລ້ວ. ພວກນີ້ກໍເປັນພວກທີ່ທ້າວທັນໃນວຽກງານ ແລະການນະມັສການ. ສະມາຊິກນີ້ ຕ້ອງມີການ ສຳຣວດຄືນ ທຸກໆສອງປີ.

b- ຄະນະປົກຄອງມີສິດລຶບຊື່ຂອງສະມາຊິກອອກຈາກທະບຽນພົນຂອງຄຣິສຕະຈັກໄດ້ໃນກໍຣະນີດັ່ງລຸ່ມນີ້:

⋆ ຫຼັງຈາກໄດ້ຮັບການຮ້ອງຂໍຈາກສະມາຊິກເອງ ໃນກໍຣະນີຍົກຍ້າຍທີ່ຢູ່ ຊຶ່ງທາງຄະນະປົກຄອງຕ້ອງ ອອກໜັງສື ຍົກຍ້າຍທີ່ບົ່ງບອກເຖິງຖານະຂອງສະມາຊິກນັ້ນໆ. ຄຣິສຕະຈັກທີ່ຮັບໃບຍົກຍ້າຍນັ້ນຈະເປັນຜູ້ຕັດສິນ ເອງໃນການຮັບເອົາຜູ້ກ່ຽວນັ້ນເປັນສະມາຊິກຫຼືບໍ່. ຫຼັງຈາກໃຫ້ໜັງສື ໂອນແລ້ວ ຊື່ຂອງຜູ້ກ່ຽວຍັງຄວນຮັກສາໄວ້ ຈົນກວ່າຜູ້ກ່ຽວໄດ້ຖືກຮັບເອົາເປັນສະມາຊິກຂອງຄຣິສຕະຈັກອື່ນແລ້ວ. ໃນເວລາທີ່ ຄຣິສຕະຈັກນັ້ນໆ ຮັບເອົາສະມາ ຊິກທີ່ໂອນມາ ຄວນຕ້ອງຣາຍງານໃຫ້ຄຣິສຕະຈັກທີ່ໃຫ້ໜັງສືໂອນນັ້ນຊາບ ເພື່ອໃຫ້ຄຣິສຕະຈັກ ນັ້ນລຶບຊື່ຜູ້ກ່ຽວອອກ ຈາກທະບຽນພົນຂອງຕົນເອງ.

⋆ ໃນເວລາທີ່ຄຣິສຕະຈັກຖືກຍຸບເລີກ, ທາງພາກຕ້ອງເຂົ້າຍຶດເອົາບົດຣາຍງານທັງໝົດຂອງຄຣິສຕະຈັກ, ໃຫ້ການຕັດສິນແກ່ສະມາຊິກ ແລະອອກໜັງສືຍົກຍ້າຍໃຫ້ພວກກ່ຽວ ເພື່ອໄປຢູ່ກັບຄຣິສຕະຈັກອື່ນຕໍ່ໄປ.

⋆ ໃນເວລາທີ່ສະມາຊິກ, ຈະທ້າວທັນ ຫຼືບໍ່ທ້າວທັນກໍຕາມ, ໄດ້ທຳການຂໍຮ້ອງຢຸດເຊົາໃນການເປັນສະມາຊິກ ແລະຫຼັງຈາກຄະນະປົກຄອງໄດ້ທຳທຸກຢ່າງເພື່ອຮັກສາຜູ້ກ່ຽວໄວ້ ແຕ່ບໍ່ໄດ້ຜົນ, ດັ່ງນັ້ນ ຊື່ຂອງຜູ້ກ່ຽວຄວນຖືກລຶບອອກ.

⋆ ໃນເວລາທີ່ສະມາຊິກໄປຮ່ວມໂບດອື່ນ ໂດຍບໍ່ມີໜັງສືໂອນຍ້າຍ ແລະໄດ້ປະຕິເສດອົງການປົກຄອງຂອງຄຣິສຕະຈັກ ຄະນະປົກຄອງຄວນລຶບຊື່ຜູ້ກ່ຽວອອກຈາກທະບຽນທີ່ຜູ້ກ່ຽວສັງກັດຢູ່.

⋆ ໃນເວລາທີ່ສະມາຊິກໄດ້ມີການຍົກຍ້າຍໄປທີ່ອື່ນ, ໂດຍອີງຕາມການຮ້ອງຂໍຂອງຜູ້ກ່ຽວ ດັ່ງສເນີມາຂ້າງເທິງນັ້ນ, ຫາກຜູ້ກ່ຽວບໍ່ໄດ້ພົວພັນກັບຄຣິສຕະຈັກໃດໆເປັນເວລານຶ່ງປີ ຄະນະປົກຄອງຄວນລຶບຊື່ຜູ້ກ່ຽວອອກ.

⋆ ໃນເວລາທີ່ສະມາຊິກຍົກຍ້າຍໄປບ່ອນອື່ນ ໂດຍທີ່ທາງຄະນະປົກຄອງບໍ່ສາມາດຮູ້ທີ່ຢູ່ໄດ້, ຫຼັງຈາກນຶ່ງປີທີ່ຜູ້ກ່ຽວຂາດ ວຽກງານ ຂາດການພົວພັນ ກໍໃຫ້ລຶບຊື່ຜູ້ກ່ຽວອອກໄດ້.

⋆ ໃນເວລາມີການຍົກຍ້າຍລາຍຊື່ຂອງສະມາຊິກທີ່ທ້າວທັນ ມາໃສ່ທະບຽນຂອງພວກບໍ່ທ້າວທັນ, ອາຈານຄວນເປັນຜູ້ ໃຫ້ການເບິ່ງແຍງດູແລ, ຫຼັງຈາກສອງປີ ບໍ່ສາມາດນຳຜູ້ກ່ຽວຄືນມາໄດ້ ກໍຄວນລຶບຊື່ອອກ ໂດຍບໍ່ຈຳເປັນຕ້ອງບອກຜູ້ກ່ຽວ.

⋆ ໃນເວລາທີ່ສະມາຊິກຕາຍ ກໍໃຫ້ຄະນະປົກຄອງຈົດ ວັນ ເດືອນປີ ຕາຍນັ້ນ ແລ້ວລຶບຊື່ອອກ.

C- ການລົງທະບຽນສົດຣົດ, ຮັບສິນບັບຕິສມາ, ແລະການສະຖາປະນາເປັນເຈົ້າໜ້າທີ່ຮັບໃຊ້ວຽກງານ.

⋆ ຊື່ພວກທີ່ແຕ່ງງານ ຄວນຈົດໄວ້ ຊຶ່ງຈະຕ້ອງປະກອບດ້ວຍການແຕ່ງງານຂອງສະມາຊິກ, ການແຕ່ງງານທີ່ທາງຄຣິສຕະຈັກ ຫຼືອາຈານເປັນຜູ້ນຳ, ຫຼືການແຕ່ງງານທີ່ໃຊ້ສະຖານທີ່ນີ້ເປັນບ່ອນທຳພິທີ.

⋆ ພວກຮັບສິນບັບຕິສມາ:

- ສຳຣັບເດັກ ຕ້ອງຈົດຊື່ພໍ່ແມ່, ວັນ ເດືອນ ປີ ເກີດ ແລະບຸກຄົນຜູ້ສເນີຊື່ເດັກນັ້ນໃຫ້ຮັບສິນ.
- ສຳຣັບຜູ້ໃຫຍ່ ກໍຕ້ອງຈົດຊື່ພໍ່ແມ່ ແລະວັນ ເດືອນ ປີ ເກີດດ້ວຍ

⋆ ຕ້ອງຈົດຊື່ຂອງສະມາຊິກທີ່ຖືກສະຖາປະນາ ໃຫ້ມາເປັນເຈົ້າໜ້າທີ່ຮັບໃຊ້. ຕ້ອງຈົດວັນ ເດືອນ ປີ ແລະໄລຍະການຮັບໃຊ້ໃນຄະນະປົກຄອງ ພ້ອມທັງຣາຍການກ່ຽວກັບການເຄື່ອນຍ້າຍຂອງຜູ້ກ່ຽວດ້ວຍ.

⋆ ນັກຄະນາຍົກ, ຕ້ອງຈົດຊື່ຄຣິສຕະຈັກທີ່ສະຖາປະນາຜູ້ກ່ຽວ, ວັນເດືອນ ປີສະຖາປະນານັ້ນ ໄລຍະການຮັບໃຊ້ ແລະຣາຍງານການເຄື່ອນຍ້າຍຂອງຜູ້ກ່ຽວ.

⋆ ອາຈານ, ອາຈານຊ່ວຍ, ອາຈານຮອງ, ອາຈານຊົ່ວຄາວ, ແລະຜູ້ອື່ນໆ ຄວນຈົດວັນ ເດືອນ ປີ ໃນການຮັບໃຊ້ຂອງເຂົາ.

## 4/ ວ່າດ້ວຍ ການຄັງຂອງຄຣິສຕະຈັກ: **G-10.0400**

## ວ່າດ້ວຍ ການຄັງຂອງຄຣິສຕະຈັກ: **G-10.0401**

ນາຍຄັງ ຄວນມີການເລືອກປີລະຄັ້ງ ໂດຍຄະນະປົກຄອງຫາກໄດ້ຮັບການອະນຸຍາດຈາກຣັຖທີ່ຄຣິສຕະຈັກນັ້ນສັງກັດຢູ່.

ວຽກງານດ້ານນີ້ ຕ້ອງຢູ່ໃຕ້ການຄວບຄຸມຂອງຄະນະປົກຄອງ, ຫຼືດ້ວຍການມອບໝາຍໃຫ້ຄະນະອຳນວຍການນັກຄະນາຍົກ ຫຼືຄະນະກັມມະການຄຸ້ມຄອງຊັພສິນເປັນຜູ້ຄວບຄຸມດູແລ. ກອງທຶນຕ່າງໆຂອງຄຣິສຕະຈັກ ຄວນຕ້ອງຣາຍງານຢ່າງນ້ອຍ ປີລະຄັ້ງ ຫຼືເທົ່າທີ່ທາງຄະນະປົກຄອງຮ້ອງຂໍໄປ. ຫຼັກການພື້ນຖານບາງອັນທີ່ຄວນສັງເກດຄື:

- ການນັບ ແລະການເກັບກຳຣາຍງານຂອງການຖວາຍທັງໝົດຄວນມີສອງຄົນເຮັດ. ຫຼືດ້ວຍບຸກຄົນທີ່ຊື່ສັດ.

- ຕ້ອງມີການເກັບກຳປຶ້ມບັນທຶກທີ່ຄົບຖ້ວນ ແລະການຣາຍງານຕ່າງໆ ເພື່ອອຳນວຍຄວາມສະດວກແກ່ເຈົ້າໜ້າທີ່ ທີ່ມີອະນຸຍາດໃນການມາສຳຣວດກວດກາໃນເວລາທີ່ເໝາະສົມ.

- ຕ້ອງຣາຍງານຢ່າງເປັນໄລຍະປະຈຳ ແກ່ຄະນະສະພາ ແລະສະພາກວດກາການເງິນ ຢ່າງນ້ອຍປີລະຄັ້ງ ຫຼືຫຼາຍກວ່ານັ້ນ.

- ກວດກາຢ່າງຄົບຖ້ວນຕໍ່ປຶ້ມຕ່າງໆທີ່ບັນທຶກກ່ຽວພັນກັບການຄັງ ປີລະຄັ້ງໂດຍທາງການບັນຊີສາທາຣະນະ ຫຼືໂດຍຄະນະກັມມະການກ່ຽວກັບການເງິນ. ການກວດກາດັ່ງກ່າວ ຈະບໍ່ໄດ້ມີການພົວພັນກັບຄະນະຄັງຂອງຄຣິສຕະຈັກ

# XI/ ວ່າດ້ວຍ ພາກ ເພຣັສໄບເທີຣີ: G-11.0000

## 1/ ໂດຍທົ່ວໄປ: G-11.0100

## ວ່າດ້ວຍ ສະມາຊິກຂອງພາກ: G-11.0101

ພາກ ແມ່ນສິ່ງນຶ່ງທີ່ສະແດງເຖິງການຮ່ວມໄມ້ຮ່ວມມືຂອງຄຣິສຕະຈັກ ຊຶ່ງປະກອບດ້ວຍບັນດາຄຣິສຕະຈັກທັງໝົດ ແລະບັນດາອາຈານທັງໝົດທີ່ຢູ່ໃນຂອບເຂດໃດນຶ່ງ. ໃນເວລາທີ່ທາງພາກມີກອງປະຊຸມ, ແຕ່ລະຄຣິສຕະຈັກທີ່ຂຶ້ນກັບພາກນັ້ນໆ ຕ້ອງໃຫ້ມີຜູ້ຕາງໜ້າເຂົ້າຮ່ວມ ຊຶ່ງຈະຕ້ອງແມ່ນຜູ້ປົກຄອງທີ່ຖືກມອບໝາຍຈາກຄະນະປົກຄອງຄຣິສຕະຈັກ. ຈຳນວນຜູ້ປົກຄອງ ທີ່ຄວນສົ່ງເຂົ້າຮ່ວມກອງປະຊຸມມີກຳໜົດດັ່ງຕໍ່ລົງໄປນີ້:

a. ອີງໃສ່ຕາມຈຳນວນສະມາຊິກຂອງຄຣິສຕະຈັກນັ້ນໆ ເຊັ່ນ:

| | | |
|---|---|---|
| 501 - 1000 | ຕ້ອງມີຜູ້ຕາງໜ້າ | 2 ທ່ານ |
| 1881 - 1500 | = | 3 ທ່ານ |
| 1501 - 2000 | = | 4 ທ່ານ |
| 2000 + | = | 5 ທ່ານ |

b. ແຕ່ລະປີ, ໃນອາທິດທຳອິດຂອງເດືອນທີນຶ່ງ, ທາງສະນຽນທີ່ຖືກມອບໝາຍຂອງແຕ່ລະພາກຈະຕ້ອງຊອກຮູ້ ໃຫ້ຄັກແນ່ ຈຳນວນຜູ້ຮັບໃຊ້ພຣະເຈົ້າທີ່ເປັນສະມາຊິກຂອງພາກ ແລະຈຳນວນຜູ້ປົກຄອງທີ່ທາງຄຣິສຕະຈັກສົ່ງມາເປັນຜູ້ຕາງໜ້າ ຂອງຕົນໃນກອງປະຊຸມ. ໃນເວລາທີ່ຈຳນວນຜູ້ຮັບໃຊ້ພຣະເຈົ້າເພີ່ມຈຳນວນຂຶ້ນ ທາງສນຽນຄວນນຳສິ່ງທີ່ບໍ່ກ້ຳເກິ່ງກັນນັ້ນ ມາສເນີໃນກອງປະຊຸມຄັ້ງທຳອິດຂອງປີ ໂດຍການເຊີນເອົາຄະນະປົກຄອງຂອງຄຣິສຕະຈັກນັ້ນໆມາ ເພື່ອເລືອກຕັ້ງເອົາ ຜູ້ປົກຄອງໃຫ້ເປັນຜູ້ຕາງໜ້າຂອງຕົນເພີ້ມຕື່ມ ຫຼືອາດທຳສິ່ງໃດສິ່ງນຶ່ງທີ່ທາງພາກສາມາດຮັບຮູ້ນຳ. ອີງໃສ່ G-90104.

c. ຜູ້ປົກຄອງແຕ່ລະຄົນ ທີ່ເລືອກເອົາຜູ້ຄວບຄຸມ ຈະຕ້ອງມີຊື່ໃນທະບຽນແຫ່ງສະມາຊິກຂອງພາກໃນການດຳເນີນງານ ຕາມກຳໜົດ, ເຖິງແມ່ນຈະໄດ້ຮັບການແຕ່ງຕັ້ງ ຫຼືບໍ່ ຈາກຄະນະປົກຄອງຂອງຄຣິສຕະຈັກຜູ້ກ່ຽວກໍຕາມ. ຜູ້ປົກຄອງ ແຕ່ລະຄົນ ທີ່ເລືອກເອົາຜູ້ຮັບໃຊ້ໃນຫ້ອງການ (ນອກຈາກຜູ້ຄວບຄຸມ) ຫົວໜ້າຂອງຄະນະກຳມະການໃດນຶ່ງ, ຫຼືສະມາຊິກຂອງສະພາແຫ່ງ ພາກເພຣັສໄບເທີຣີ ຈະຕ້ອງຖືກມີຊື່ໃນທະບຽນແຫ່ງສະມາຊິກຂອງພາກ ໃນການຮັບໃຊ້ພຣະເຈົ້າໃນຫ້ອງການຕາມກຳໜົດ, ເຖິງແມ່ນຈະບໍ່ໄດ້ຮັບການແຕ່ງຕັ້ງຈາກຄະນະປົກຄອງຂອງຄຣິສຕະຈັກຂອງຜູ້ກ່ຽວຫຼືບໍ່ກໍຕາມ.

## ວ່າດ້ວຍຈຳນວນນ້ອຍສຸດໃນການປະກອບເປັນພາກ G-11.0102

ໃນແຕ່ລະພາກເພຣັສໄບເທີຣີ, ຕ້ອງໃຫ້ມີຈຳນວນອາຈານຢ່າງນ້ອຍ 12 ຄົນ ແລະຈຳນວນຄຣິສຕະຈັກກໍຄວນມີ ຢ່າງນ້ອຍ 12 ຄຣິສຕະຈັກ. ໃນກໍຣະນີທີ່ເປັນບ່ອນປ່ຽວໂດດດ່ຽວ, ຫາກໄດ້ຮັບການແນະນຳຈາກທາງພາກສະພາຕ່ຳ, ທາງສະພາ ສູງຄວນຈະອະນຸມັດໃຫ້ສ້າງຕັ້ງພາກເພຣັສໄບເທີຣີ ເຖິງຈະມີຈຳນວນນ້ອຍກວ່າທີ່ກຳໜົດໄວ້ກໍຕາມ, ແຕ່ແນວໃດກໍຕາມ ຈຳນວນກໍຄວນໃຫ້ມີອາຈານ ຢ່າງນ້ອຍ 5 ຄົນ ໃນແຕ່ລະພາກທີ່ມີລັກສະນະແບບນີ້.

## ວ່າດ້ວຍ ຄວາມຮັບຜິດຊອບ G-11.0103

ພາກເພຣັສໄບເທີຣີ ຕ້ອງມີອຳນາດ ແລະໜ້າທີ່ຮັບຜິດຊອບໃນການປະກາດ ແລະການປົກຄອງຂອງຄຣິສຕະຈັກໃນທ້ອງ ຂອບເຂດຮັບຜິດຊອບຂອງຕົນດັ່ງນີ້:

a. ພັທນາແຜນການໃນການປະກາດ ສຳຮັບຄຣິສຕະຈັກທີ່ຕົນເອງເປັນຜູ້ຕາງໜ້າໃຫ້ນັ້ນ ອີງໃສ່ G-3.0000;

b. ຮ່ວມມືທຳງານກັບສະມາຊິກຂອງຕົນ ໂດຍການນຳພຳພວກເຂົາ ປຸກຣະດົມພວກເຂົາໃຫ້ມີກຳລັງໃນການເປັນ ພະຍານຕໍ່ຊຸມຊົນທີ່ເຂົາມີຄວາມຮັບຜິດຊອບຕໍ່ນັ້ນ.

c. ລິງມືໃນການປະກາດ ໂດຍອາສັຍແບບວິທີຕ່າງໆ ທີ່ທາງພາກສະພາຕ່ຳ ແລະສະພາສູງວາງອອກ.

d. ສົ່ງເສີມ, ໂດຍອີງໃສ່ G-9.0104 ກ່ຽວກັບວຽກງານອັນດັບນຶ່ງ ໃນການປະກອບສ່ວນ ແລະເປີດກວ້າງການ ຮັບເອົາພະນັກງານຮັບໃຊ້ ແລະການສ້າງຕັ້ງສະມາຊິກແຫ່ງຄະນະສະພາກັມມະການຂອງພາກ, ຄະນະກັມມະການ, ແລະພວກທີ່ ເຮັດ ແລະແນະນຳນະໂຍບາຍຕ່າງໆ, ເພື່ອໃຫ້ການຄ້ຳປະກັນໃຫ້ມີການຍຸຕິທັມໃນການຕັດສິນບັນຫາຕ່າງໆ ແລະໃນການ ເລືອກຕັ້ງເອົາຜູ້ແທນໃນສະພາຕ່ຳ ແລະສະພາສູງ. ຄະນະກັມມະການຕາງໜ້ານີ້ ຄວນທຳການຣາຍງານໃຫ້ທາງພາກໂດຍກົງ, ແລະຄວນມີອຳນາດໃນການແນະນຳໃຫ້ມີການແກ້ໄຂໃນກໍຣະນີທີ່ບໍ່ມີການກ້ຳເກິ່ງກັນໃນຈຳນວນຕົວແທນ ຊຶ່ງຮວມທັງສາມາດ ແນະນຳໃຫ້ຄະນະກັມມະການແຕ່ງຕັ້ງ ເພື່ອໃຫ້ພິຈາຣະນາຄືນໃໝ່ໃນການສເນີຊື່ຜູ້ເລືອກຕັ້ງ.

e. ໃຫ້ການປຶກສາຫາລືກັບຄຣິສຕະຈັກທ້ອງຖິ່ນໃດນຶ່ງ ຊຶ່ງບໍ່ມີຕົວແທນຂອງຕົນເອງໃນຄະນະປົກຄອງ;

f. ໃຫ້ການຊຸກຍູ້, ນຳພາ, ແລະເປັນແຫຼ່ງໃຫ້ແກ່ສະມາຊິກຂອງຕົນໃນການພັທນາຜູ້ນຳ, ຝຶກຫັດເຈົ້າພະນັກງານ, ການນະມັສການ, ການລ້ຽງເກືອ, ເປັນພະຍານ, ການຖວາຍ, ໃຫ້ຄວາມເປັນທັມໃນການໃຫ້ເງິນຊົດເຊີຍ, ມີນະໂຍບາຍ ຕໍ່ພະນັກງານ, ແລະປະຕິບັດການຍຸຕິທັມໃນການຈ້າງພະນັກງານ;

g. ເບິ່ງແຍງດູແລຕໍ່ຄຣິສຕະຈັກ ແລະຕໍ່ສະມາຊິກຂອງຕົນ, ຢັ້ງມຢາມຄະນະປົກຄອງ ແລະອາຈານເປັນປະຈຳ G-11.0502c.

h. ສ້າງຕັ້ງຄຣິສຕະຈັກໃໝ່ຂຶ້ນ ແລະຮັບເອົາ ພ້ອມທັງຊ່ວຍເຮັດໃຫ້ສະມາຊິກຂອງຄຣິສຕະຈັກໃຫ້ເປັນອັນນຶ່ງ ອັນດຽວກັນ;

i. ແບ່ງແຍກ, ສັ່ງເລີກ ຫຼືຍຸບເລີກ ຄຣິສຕະຈັກ ໂດຍການປຶກສາຫາລືກັບສະມາຊິກຂອງຄຣິສຕະຈັກນັ້ນໆ.

j. ຄວບຄຸມໃນການເອົາສະຖານທີ່ໃໝ່ ຫຼືການຍົກຍ້າຍຂອງຄຣິສຕະຈັກໃດນຶ່ງ .

k. ເບິ່ງແຍງພິເສດຕໍ່ຄຣິສຕະຈັກທີ່ບໍ່ມີອາຈານ ຊຶ່ງຮວມທັງກໍາສິດທິໃນການເລືອກ, ການຝຶກຫັດ, ການທົດສອບ, ແລະການແຕ່ງຕັ້ງອາຈານຮອງ ແລະອາດໃຫ້ສິດແກ່ເຂົາໃນການໃຫ້ສິນຣະລຶກໄດ້. (G-14.0516)

l. ມີການພົວພັນສັນຍາກັບບຸກຄົນທີ່ຈະເຂົ້າມາເປັນອາຈານສົມບູນ ໂດຍການຈົດຊື່ເຂົາລົງໃນທະບຽນຜູ້ຮ້ອງຂໍ, ແລະຮັບເອົາຜູ້ຮ້ອງຂໍນັ້ນໃຫ້ເປັນຜູ້ສມັກ, ແລະສາມາດບອກເລີກ ຜູ້ຮ້ອງຂໍ ແລະຜູ້ສມັກຕໍ່ພາກອື່ນໆໄດ້.

m. ເລືອກຜູ້ປົກຄອງ ແລະອາຈານຈາກຜູ້ສມັກ ສໍາຣັບການແຕ່ງຕັ້ງສະຖາປະນາ ໂດຍອີງຕາມຄໍາຮ້ອງຂໍຂອງຄະນະກັມມະການແຫ່ງການຮ່ວມມື ເພື່ອການສອບເສັງ ຂອງຜູ້ມີຊື່ສມັກ.

n. ສະຖາປະນາ, ຮັບເອົາ, ບອກເລີກ, ແຕ່ງຕັ້ງ, ຍົກຍ້າຍ, ແລະໃສ່ວິນັຍ ອາຈານ, ວາງແຜນການໃນການໃຫ້ມີການ ກໍ້າເກິ່ງກັນໃນບັນດາອາຈານທີ່ມາຮັບໃຊ້ວຽກງານຂອງພາກ, ແລະເພື່ອເຮັດໃຫ້ມີຣະບຽບ, ຮັບຮູ້, ແລະບັນທຶກ ຢູ່ໃນການປະຊຸມ ຂອງພາກ ໃນການກໍາໜົດເວລາຮັບໃຊ້ຢ່າງເຕັມເວລາ, ແລະປ່ຽນແປງການຮັບໃຊ້ ໂດຍອີງໃສ່ການເຫັນດີເຫັນພ້ອມຂອງພາກ.

o. ສ້າງຕັ້ງສາຍພົວພັນຣະຫວ່າງອາຈານ ແລະຍຸບເລີກຕາມຄໍາຮ້ອງຂໍຂອງສອງຝ່າຍ, ຫຼືໃນເວລາທີ່ພົບວ່າວຽກງານ ຮັບໃຊ້ພຣະເຈົ້າຂອງຄຣິສຕະຈັກ ໂດຍອີງໃສ່ຂໍ້ບັງຄັບແຫ່ງພຣະຄໍາພີ.

p. ມອບໝາຍວຽກງານໃຫ້ອາຈານໃຫ້ທໍາງານເປັນຄຣູສອນ, ຜູ້ປະກາດ, ຜູ້ບໍຣິຫານ, ອະນຸສາສນາຈານ, ແລະເປັນຜູ້ ຮັບໃຊ້ວຽກງານອື່ນໆ ໂດຍການຮັບຮູ້ ແລະເຫັນດີເຫັນພ້ອມຈາກພາກ. ອາຈານດັ່ງກ່າວ ອາດສາມາດເຮັດພິທີສິນຕ່າງໆ ໃນເວລາ ແລະສະຖານທີ່ ທີ່ທາງອົງການປົກຄອງເຫັນດີ, ຫຼືວ່າ ອີງໃສ່ເຫດການສະເພາະພິເສດໃດນຶ່ງ ຊຶ່ງທາງອົງການປົກຄອງ ໄດ້ບົ່ງບອກໄວ້. ອີງໃສ່ W-2.3000, W-2.4000, W-3.3600.

q. ໂດຍພາຍໃຕ້ການດູແລຂອງຕົນ, ທາງພາກມີໜ້າທີ່ຮັບເອົາບຸກຄົນທີ່ຈະມາທໍາງານໃນຄຣິສຕະຈັກ, ແລະແຕ່ງຕັ້ງ ພວກເຂົາ ໃນເວລາທີ່ເໝາະສົມ. (G-14.0102)

r. ຮັບໃຊ້ໃນວຽກງານນິຕິບັນຍັດ ໂດຍອີງໃສ່ຣະບຽບການແຫ່ງການລົງວິນັຍ.

s. ເຂົ້າຍຸ້ງກ່ຽວກັບວຽກງານນິຕິບັນຍັດ ໃນທຸກກໍຣະນີທີ່ທາງຄະນະປົກຄອງຄຣິສຕະຈັກບໍ່ສາມາດໃຊ້ສິດຂອງຕົນໄດ້.

t. ຍຶດໝັ້ນໃນການພົວພັນຣະຫວ່າງຂັ້ນນໍາທີ່ສູງກວ່າຂອງຄຣິສຕະຈັກ ຮວມດ້ວຍ:

-ເລືອກເອົາຜູ້ທໍາງານສະເພາະກິດ ໃນສະພາຕໍ່າ ແລະສະພາສູງ, ແລະຮັບເອົາການຣາຍງານຂອງພວກເຂົາ.

-ເອົາໃຈໃສ່ສັງເກດຕໍ່ຣະບຽບການຂອງອົງການປົກຄອງທີ່ສູງກວ່າ ວ່າປະຕິບັດກັນແນວໃດ ສເນີຕໍ່ສະພາຕໍ່າ ຫຼືສະພາສູງ ຕໍ່ວຽກງານທີ່ເຫັນວ່າ ເປັນບັນຫາສ່ວນຮວມໃນການຮັບໃຊ້ຂອງຄຣິສຕະຈັກ.

u. ສ້າງຕັ້ງ ແລະຢຶດໝັ້ນ ການພົວພັນແບບທົ່ວໄປ ຊຶ່ງທໍາໃຫ້ການທໍາງານຮັບໃຊ້ຂະຫຍາຍກວ້າງໃນຊຸມຊົນ

v. ສ້າງຕັ້ງ ແລະຄວບຄຸມ ອົງການຕາງໜ້າທີ່ທໍາງານ, ຮວມໂດຍສະພາຂອງພາກ, ສໍາຣວດການທໍາງານທີ່ມີການ ພົວພັນກັນຣະຫວ່າງໂຄງຮ່າງຂອງພາກ ແລະການຮັບໃຊ້. ທາງພາກສ້າງຕັ້ງຣະບຽບການຂອງຕົນເອງຂຶ້ນ,

ມອບໝາຍໃຫ້ຄະນະ ສະພາຂອງຕົນໃຫ້ຮັບຜິດຊອບໃນກິຈກັມຕ່າງໆຣະຫວ່າງ ວາຣະກອງປະຊຸມຂອງພາກໃນບັນຫາສະເພາະກິຈຕ່າງໆ ແລະມອບໝາຍສິດອຳນາດໃຫ້ຄະນະກັມມະການ ຊຶ່ງບົ່ງໄວ້ໃນ G-11.0502h ແລະມອບໝາຍໜ້າທີ່ໃຫ້ຄະນະກັມມະການ ນັ້ນໆມີສ່ວນຮັບຜິດຊອບຕໍ່ສິດທິຂອງຜູ້ສມັກ, ບອກເລີກຜູ້ສມັກ ໂດຍໃຫ້ມີການກະກຽມເພື່ອຣາຍງານໃນກອງປະຊຸມພາກ ໃນຂັ້ນຕໍ່ໄປ ອີງໃສ່ G-9.0403, G-14.0507.

w. ສ້າງຕັ້ງຄະນະກັມມະການເລືອກຕັ້ງ ໂດຍໃຫ້ມີຄວາມສົມດູນກັນທາງດ້ານຈຳນວນອາຈານ, ຜູ້ຊ່ວຍເພດຊາຍ, ແລະຜູ້ຊ່ວຍເພດຍິງ (ເຊັ່ນໃຫ້ມີຈຳນວນ ນຶ່ງສ່ວນສາມຂອງແຕ່ລະກຸ່ມ)

x. ສຳຣວດບົດຣາຍງານ ແລະບົດບັນທຶກຢ່າງນ້ອຍປີລະຄັ້ງ

y. ພິຈາຣະນາ ແລະລົງມືປະຕິບັດງານ ໂດຍອີງໃສ່ຄຳຮ້ອງຂໍຂອງຄຣິສຕະຈັກໃນການຂໍຮ້ອງໃຫ້ອັດຖຸຊັ້ນສືບ ຊຶ່ງກ່າວໄວ້ໃນ G-8.0000;

z. ໃຫ້ອຳນາດແກ່ຜູ້ປົກຄອງແຕ່ລະຄັ້ງບໍ່ໃຫ້ເກີນປີນຶ່ງ ເພື່ອໃຫ້ຄວບຄຸມດູແລໃນການໃຫ້ສິນມະຫາສະໜິດໃນກໍຣະນີພິເສດ ແລະໂດຍການແນະນຳທີ່ຖືກຕ້ອງຈາກທາງພາກ ອີງໃສ່ທິສດີ ແລະການບໍຣິຫານກ່ຽວກັບພິທີສິນມະຫາສະໜິດ ໃນເວລາທີ່ຮູ້ສຶກວ່າ ນັ້ນເປັນຄວາມຈຳເປັນ ເພື່ອການບໍຣິຫານພິທີສິນມະຫາສະໜິດ.

## 2. ວ່າດ້ວຍ ກອງປະຊຸມ G-11.0200

## ວ່າດ້ວຍ ກອງປະຊຸມ G-11.0201

ພາກເພຣັສໄບເທີຣີ ຄວນມີກອງປະຊຸມຢ່າງນ້ອຍປີລະສອງຄັ້ງ. ຜູ້ຄວບຄຸມ ອາດທຳການເອີ້ນຮຽກປະຊຸມຕາມຄຳ ຮ້ອງຂໍ ຫຼືອີງໃສ່ການເຫັນດີເຫັນພ້ອມຂອງອາຈານ 2 ຄົນ ແລະຜູ້ປົກຄອງ 2 ຄົນ, ຜູ້ປົກຄອງນັ້ນຕ້ອງຢູ່ໃນຄຣິສຕະຈັກຕ່າງກັນ. ຫາກຜູ້ຄວບຄຸມບໍ່ສາມາດດຳເນີນງານໄດ້, ທາງເລຂາທີ່ຖືກເລືອກມານັ້ນ ຄວນມີສິດເອີ້ນໃຫ້ມີກອງປະຊຸມ ໂດຍອີງໃສ່ ຣະບຽບການຢ່າງດຽວກັນທີ່ກ່າວມານັ້ນ. ຖ້າຫາກທັ້ງສອງທ່ານຫາກບໍ່ສາມາດດຳເນີນງານໄດ້, ການເອີ້ນຮຽກປະຊຸມ ອາດສາມາດທຳໄດ້ ໂດຍການຕົກລົງຂອງ ອາຈານ 3 ຄົນ ແລະຜູ້ປົກຄອງ 3 ຄົນທີ່ບໍ່ຢູ່ຄຣິສຕະຈັກດຽວກັນ. ສະພາຕໍ່າອາດເປັນຜູ້ ຜູ້ຊີ້ແນະໃຫ້ທາງພາກໃຫ້ຮຽກປະຊຸມພິເສດເພື່ອຈັດການບັນຫາສະເພາະໃດນຶ່ງ. ແຈ້ງການໃນການປະຊຸມນັ້ນ ຕ້ອງສົ່ງໄປຍັງ ບັນດາອາຈານ ແລະຄະນະປົກຄອງໃນແຕ່ລະຄຣິສຕະຈັກລ່ວງໜ້າສິບວັນ. ໃບແຈ້ງການນັ້ນ ຕ້ອງບອກຈຸດປະສົງຂອງ ກອງປະຊຸມ ແລະຈະບໍ່ມີວາຣະການອື່ນໃດນອກຈາກທີ່ໄດ້ສເນີໃນໃບແຈ້ງການນັ້ນ.

## ວ່າດ້ວຍ ອົງປະກອບຂອງກອງປະຊຸມ G-11.0202

ອົງປະກອບຂອງພາກຄວນປະກອບດ້ວຍ ອາຈານສາມຄົນທີ່ເປັນສະມາຊິກ ແລະບັນດາຜູ້ປົກຄອງທີ່ເປັນສະມາຊິກນັ້ນ ຄວນມີໜ້າຮ່ວມດ້ວຍ, ຢ່າງນ້ອຍໃຫ້ມີຜູ້ປົກຄອງ ທີ່ເປັນຕາງໜ້າໃຫ້ສາມຄຣິສຕະຈັກຮ່ວມນຳ. ພາກອາດສາມາດປ່ຽນແປງ ອົງປະກອບຂອງຕົນໃຫ້ມີຈຳນວນຫຼາຍຂຶ້ນກໍໄດ້.

## ວ່າດ້ວຍ ສະມາຊິກທີ່ມີສ່ວນພົວພັນ G-11.0203

ຊາວເພຣັສບີເຕີ (ອາຈານ ຫຼືຜູ້ປົກຄອງ)ທີ່ມີສ່ວນປະຕິບັດງານຢ່າງຕັ້ງໜ້າຢູ່ໃນອົງການປົກຄອງອື່ນໆຂອງຄຣິສຕະຈັກ ດັ່ງກ່າວ ຫຼືໃນໂບດຄຣິສຕຽນອື່ນໆ, ທີ່ເຂົ້າຮ່ວມກອງປະຊຸມຂອງພາກ, ອາດຖືກເຊີນໃຫ້ນັ່ງໃນຖານະເປັນຜູ້ມີສ່ວນພົວພັນ ໂດຍສາມາດອອກສຽງໄດ້ ແຕ່ບໍ່ມີສິດລົງຄະແນນສຽງ. ພາກອາດສາມາດ ເຊີນອາຈານຈາກພາກອື່ນໆ ຊຶ່ງທຳງານຢູ່ໃນຣະຫວ່າງ ເຂດແດນຂອງພາກ ໃຫ້ນັ່ງໃນຖານະສະມາຊິກທີ່ມີການພົວພັນ ໂດຍສາມາດອອກສຽງ ແຕ່ບໍ່ມີສິດລົງຄະແນນສຽງ.

## ૩. ວ່າດ້ວຍ ຂໍ້ກຳໜົດອື່ນໆ G-11.0300

## ວ່າດ້ວຍ ການປະກອບສ່ວນ G-11.0301

ໃນການເລືອກຕັ້ງເອົາສະມາຊິກຂອງສະພາໃດນຶ່ງ ແລະຄະນະກັມມະການຖາວອນໃດນຶ່ງ, ພາກຕ້ອງຍຶດໝັ້ນຢູ່ໃນ ເປົ້າໝາຍຕົ້ນຕໍໃນການປະກອບສ່ວນ ແລະການສເນີ ທີ່ໄດ້ບົ່ງບອກຢູ່ໃນ G-9.0104

## ວ່າດ້ວຍ ຄະນະກັມມະການຕາງໜ້າ G-11.0302

ຄະນະກັມມະການຕາງໜ້າຂອງພາກ
ຕ້ອງເປັນຜູ້ໃຫ້ການສເນີຕໍ່ຄະນະກັມມະການແຫ່ງການເລືອກຕັ້ງຂອງພາກ ໃນທຸກກໍຣະນີ ແຫ່ງການເລືອກຕັ້ງທີ່ຈະເພີ່ມຈຳນວນຜູ້ຕາງໜ້າ ແລະຕ້ອງແຈ້ງໃຫ້ທາງພາກຊາບເຖິງຄວາມຄືບໜ້າ ເພື່ອໃຫ້ມີ ການຍຸຕິທັມກ່ຽວກັບຈຳນວນຜູ້ຕາງໜ້າ ທີ່ມາຈາກກຸ່ມຊົນຊາດສ່ວນນ້ອຍ, ຈາກສັດຕຣີ, ຈາກກຸ່ມຄົນທີ່ມີອາຍຸຕ່າງກັນ, ບຸກຄົນທີ່ ບໍ່ຕ້ອງຈຳແນກກ່ຽວກັບຄອບຄົວ (ແຕ່ງງານ, ໂສດ, ໝ້າຍ ຫຼືຮ້າງ) ແລະບຸກຄົນທີ່ເສັຽອົງຄະ.

## ວ່າດ້ວຍ ເຈົ້າພະນັກງານ G-11.0303

ພາກອາດອະນຸຍາດໃຫ້ມີ ເຈົ້າພະນັກງານບໍຣິຫານແກ່ ຜູ້ທຳງານພາກ ແລະອາດໃຫ້ມີເຈົ້າພະນັກງານຮັບໃຊ້ອື່ນໆ ທີ່ເຫັນວ່າຈຳເປັນ. ເພື່ອການປຶກສາຫາລື ພາກຄວນປຶກສາກັບຄະນະກຳມະການຕ່າງໆທີ່ຂຶ້ນກັບຕົນ (ຫຼືໂດຍຜ່ານຄະນະກຳມະການອື່ນໆ ຫຼືຄະນະຜູ້ຕາງໜ້າຕ່າງໆ) ຕ້ອງມີການປຶກສາກັບພາກສະພາຕ່ຳກ່ຽວກັບວຽກງານຄວາມຕ້ອງການຂອງທາງ ສະພາຕ່ຳ, ຮວມທັ້ງການ ຂໍການຊ່ວຍເຫຼືອດ້ານຊັພສິນ ເພື່ອສາມາດຮັກສາເຈົ້າພະນັກງານຮັບໃຊ້ຂອງພາກໄວ້. (G-12.0302) ໃນການຮັບເອົາພະນັກງານຝ່າຍບຸກຄົນ, ຮວມທັງເຈົ້າພະນັກງານບໍຣິຫານ, ພາກຄວນມີການສັງເກດ ເອົາໃຈໃສ່ຕໍ່ການໃຫ້ຄຳປຶກສາທີ່ໄດ້ບົ່ງໄວ້ໃນ G-9.0404, ແລະຂໍ້ກຳໜົດຂອງຄຣິສຕະຈັກທັງໝົດ ໃນການຮັບເອົາເຈົ້າ ພະນັກງານແບບມີລັກສະນະເອກະພາບ. (G-13.0201b)

## ວ່າດ້ວຍ ງົບປະມານ G-11.0304

ພາກຈະຕ້ອງມີງົບປະມານໃນການສະໜັບສະໜູນວຽກງານການປະກາດຂອງຄຣິສຕະຈັກພາຍໃນຂອບເຂດຂອງຕົນ. ໃນເວລາທີ່ທາງພາກໄດ້ຮັບນະຣົງທາທຶນ ແລະ ໃຊ້ຈ່າຍທຶນນີ້, ຈະຕ້ອງທຳໂດຍເພື່ອນຳຜົນປະໂຫຍດມາໃຫ້ແກ່ຄຣິສຕະຈັກ ທັງໝົດ. ພາກອາດມີແຜນການຂອງຕົນເອງ ແລະມີການຕັດສິນໃຈ ໃນວຽກງານການງົບປະມານທົ່ວໄປ

ຂອງຕົນເອງ ຫຼັງຈາກທີ່ ໄດ້ຮັບການແນະນຳຈາກທາງສະພາຕ່ຳແລ້ວ ແລະອີງໃສ່ຄວາມຊອດຄ່ອງຕໍ່ແບບວິທີການປະກາດຂອງຄຣິສຕະຈັກທັງໝົດ ດັ່ງທີ່ໄດ້ສເນີຢູ່ໃນສະພາຕ່ຳ ແລະສະພາສູງ.

## ວ່າດ້ວຍ ການບັນທຶກ G-11.0305

ພາກຄວນເກັບກຳການບັນທຶກທີ່ຄົບຖ້ວນທັງໝົດ ແລະຕ້ອງເປັນບົດບັນທຶກທີ່ຖືກຕ້ອງ ຊຶ່ງຈະຕ້ອງນຳສເນີຢ່າງນ້ອຍ ປີລະຄັ້ງ ຕໍ່ທາງສະພາຕ່ຳເພື່ອການສຳຣວດແລະຄວບຄຸມ. ສິ່ງດັ່ງກ່າວຕ້ອງຣາຍງານແກ່ສະພາຕ່ຳ ແລະສະພາສູງ ທຸກໆປີ ກ່ຽວກັບ ສະພາບການແລະການຄືບໜ້າຂອງຄຣິສຕະຈັກຕ່າງໆທີ່ຢູ່ໃນເຂດດູແລຂອງຕົນ ແລະເຫດການ ການປ່ຽນແປງທີ່ສຳຄັນຕ່າງໆ ເຊັ່ນ ການສະຖາປະນາອາຈານ, ການຮັບເອົາອາຈານ, ການບອກເລີກອາຈານ ແລະການລົ້ມຕາຍຂອງອາຈານ; ແລະການກໍ່ຕັ້ງ, ການຮວມກັນ, ຫຼືການຍຸບເລີກຄຣິສຕະຈັກຕ່າງໆ.

ບົດຣາຍງານການປະຊຸມ ແລະການບັນທຶກທີ່ເປັນທາງການອື່ນໆຂອງພາກ ເປັນສິນບັດຂອງພາກ ແລະສະມຽນຂອງພາກ ເປັນຜູ້ຮັບຜິດຊອບຕໍ່ການເກັບຮັກສາ.

## ວ່າດ້ວຍ ບົດຣາຍງານປະຈຳປີ G-11.0306

ພາກຄວນສົ່ງ, ທະບຽນຂອງບັນດາອາຈານ ແລະຄຣິສຕະຈັກ, ສະຖິຕິຕ່າງໆ ແລະຂ່າວຄາວອື່ນໆໂດຍອີງໃສ່ຂໍ້ກຳໜົດ ຂອງສະພາສູງ, ໃຫ້ແກ່ສະພາສູງທຸກປີ.

## ວ່າດ້ວຍ ການກວດສອບບັນຊີ G-11.0307

ພາກ ຄວນມີການສຳຣວດບັນຊີຢ່າງຄົບຖ້ວນໃນປຶ້ມ ແລະບົດບັນທຶກທັງໝົດທີ່ກ່ຽວກັບເງິນຄຳປີລະຄັ້ງ ໂດຍການບັນຊີ ສາທາຣະນະ ຫຼືຄະນະກຳມະການຂອງຄຣິສຕະຈັກທີ່ຮັບຜິດຊອບການບັນຊີ. ພະນັກງານສຳຣວດດັ່ງກ່າວຈະຕ້ອງບໍ່ມີສ່ວນພົວ ພັນຫຍັງກັບການຄັງ.

## 4/ ວ່າດ້ວຍ ການເປັນສະມາຊິກຂອງອາຈານ G-11.0400

## ວ່າດ້ວຍ ການເປັນສະມາຊິກຂອງອາຈານ G-11.0401

ອາຈານທຸກຄົນ ໂດຍທັມມະດາແລ້ວ ຕ້ອງເປັນສະມາຊິກຂອງພາກ ບ່ອນທີ່ຜູ້ກ່ຽວທຳງານຢູ່. ອາຈານທີ່ຖືກເອີ້ນໃຫ້ມາ ທຳງານ ແຕ່ບໍ່ໄດ້ຢູ່ໃຕ້ອຳນາດກົດໝາຍຂອງພາກ ພາກນັ້ນໆຄວນໃຊ້ວິທີແບບຕ້ອນຮັບເອົາຜູ້ກ່ຽວເຂົ້າສູ່ພາກ ຊຶ່ງເປັນບ່ອນທີ່ ຜູ້ກ່ຽວອາສັຍຢູ່, ຫຼືຕ້ອນຮັບເຂົ້າສູ່ພາກອື່ນ, ຫຼືສາມາດຮັກສາການເປັນສະມາຊິກຂອງພາກຊຶ່ງຜູ້ກ່ຽວເປັນສະມາຊິກມາກ່ອນແລ້ວ. ພາກຕ້ອງອະນຸຍາດໃຫ້ອາຈານ ສາມາດທຳງານຢູ່ນອກຂອບເຂດຮັບຜິດຊອບຂອງຕົນ ຫຼືເປັນບ່ອນທີ່ຢູ່ນອກຂອບເຂດກົດໝາຍ ຖິ່ນຄອງຂອງຕົນ, ແຕ່ທາງພາກບໍ່ສາມາດອະນຸຍາດໃຫ້ອາຈານທຳງານຢູ່ນອກຂອບເຂດຮັບຜິດຊອບຂອງຕົນ ໂດຍທີ່ບໍ່ໄດ້ຄວາມຍິນຍອມຢ່າງຈະແຈ້ງຈາກພາກນັ້ນໆ. ການອະນຸຍາດ ແລະຄວາມຍິນຍອມດັ່ງກ່າວ ຈະຕ້ອງໄດ້ນຳມາສຶກສາ ແລະລິເລີ່ມໃໝ່ໃນ ແຕ່ລະປີ. ສມຽນຂອງພາກ ຄວນແຈ້ງໃຫ້ບັນດາອາຈານທີ່ຢາກໄດ້ ອະນຸຍາດເຮັດວຽກນອກຂອບເຂດຮັບຜິດຊອບຂອງພາກ ທີ່ຕົນເອງເປັນສະມາຊິກຢູ່ ເພື່ອໃຫ້ເຂົາຮູ້ວ່າ ພວກເຂົາຕ້ອງຊອກຫາ ການອະນຸຍາດໃຫ້ເຮັດວຽກພາຍໃນຂອບເຂດຂອງ ພາກນັ້ນໆເສັຽກ່ອນ.

ໃນເດືອນນຶ່ງຂອງທຸກໆປີ, ທ່ານສນຽນຂອງພາກ ບ່ອນທີ່ອາຈານຄົນນັ້ນເປັນສະມາຊິກຢູ່ ຕ້ອງມີການ ຕິດຕໍ່ກັບພາກ ທີ່ອາຈານນັ້ນທຳງານຢູ່ເພື່ອຈະຮູ້ເຖິງທີ່ຢູ່ຂອງອາຈານນັ້ນໆ. ອາຈານ ທີ່ທຳງານ ຢູ່ຄຣິສຕະຈັກ ທີ່ຢູ່ນອກປະເທດ ສະຫະຣັດ ໂດຍການຍິນຍອມຂອງພາກ ສາມາດຮັບຮູ້ການເປັນສະມາຊິກຜູ້ຮັບໃຊ້ພຣະເຈົ້າ ໃນຄຣິສຕະຈັກນັ້ນໆ ໃນໄລຍະໃດນຶ່ງ ໂດຍທີ່ຈະບໍ່ມີຜົນສະທ້ອນໃດໆຕໍ່ການເປັນສະມາຊິກຂອງຕົນໃນພາກ ຂອງຄຣິສຕະຈັກນີ້.
(G-11.0410.)

## ວ່າດ້ວຍ ການຊອກສແວງຫາການເປັນສະມາຊິກ G-11.0402

ພາກ, ໂດຍຜ່ານຄະນະກຳມະການທີ່ເໝາະສົມ, ຕ້ອງສຳຣວດກວດກາ ກ່ຽວກັບຄວາມເຊື່ອຂອງຄຣິສ ຕຽນຂອງອາຈານ ແລະຜູ້ສະໝັກແຕ່ລະຄົນ ທີ່ຕ້ອງການເປັນສະມາຊິກ, ຕ້ອງກວດກາເບິ່ງທັສນະແຫ່ງຫຼັກສາສນາສາດ ຂອງຜູ້ກ່ຽວ, ພິທີສົມ, ແລະຣະບົບການປົກຄອງຂອງຄຣິສຕະຈັກ, ຍົກເວັ້ນສິ່ງທີ່ໄດ້ບົ່ງໄວ້ຢູ່ໃນ G-14.0314 . ອາຈານແຕ່ລະຄົນທີ່ຈະມາເປັນ ສະມາຊິກໃນພາກ ຈະຕ້ອງຖືກເອີ້ນມາໃຫ້ມີການພົວພັນກັບບັນດາອາຈານທີ່ຢູ່ໃນ ພາກນັ້ນໆ, ຫຼືປະກອບສ່ວນໃນການປົກຄອງ, ຫຼືອົງການໃດນຶ່ງຊຶ່ງໄດ້ບັນທຶກໄວ້ໃນ G-11.0410 ຫຼືເຂົ້າສູ່ການ ທຳງານຊຶ່ງໄດ້ກຳໜົດໄວ້ຢູ່ G-11.0411 ຊຶ່ງທາງພາກທີ່ຮັບເອົານັ້ນຈະເປັນຜູ້ໃຫ້ການອະນຸຍາດ, ຫຼືໃຫ້ກຽດໃນການ ກິນເບັ້ຽບຳນານ ດັ່ງໄດ້ກຳໜົດໄວ້ໃນ G-11.0412.

## ວ່າດ້ວຍ ຫຼັກການຂອງການເປັນສະມາຊິກ G-11.0403

ພາກ ຄວນເປັນຜູ້ກຳໜົດກ່ຽວກັບອາຈານທີ່ຍັງສືບຕໍ່ເປັນສະມາຊິກຂອງຕົນ. ໃນການສ້າງຂໍ້ກຳໜົດນີ້ ພາກຈະຕ້ອງ ເອົາໃຈໃສ່ເຮັດຕາມຫຼັກການດັ່ງນີ້.

a. ວຽກງານກ່ຽວກັບການສືບຕໍ່ເປັນສະມາຊິກ ຈະຕ້ອງໃຫ້ຖືກຕ້ອງຕາມວຽກງານການປະກາດຂອງບັນດາ ໄພ່ພົນຂອງພຣະເຈົ້າໃນໂລກ ດັ່ງທີ່ບອກໄວ້ໃນພຣະຄຳພີ, ໃນປື້ມຫຼັກຄວາມເຊື່ອ, ແລະປື້ມກົດຣະບຽບຂອງ ຄຣິສຕະຈັກ

b. ການຮັບໃຊ້ນັ້ນ ຈະຕ້ອງເປັນການຮັບໃຊ້ຄົນອື່ນ, ຊ່ວຍເຫຼືອຄົນອື່ນ, ສ້າງຄວາມສຳເຣັດເພີ່ມຄວາມ ສາມາດແກ່ວຽກງານຮັບໃຊ້ ຂອງຄົນອື່ນ.

c. ການຮັບໃຊ້ ຄວນໃຫ້ການເປັນພະຍານແກ່ຫຼັກສາສນາສາດທີ່ຈິງຮັກພັກດີຕໍ່ພຣະຄຳຂອງພຣະເຈົ້າ. ສິ່ງນີ້ຈະຕ້ອງຮຽກຮ້ອງໃຫ້ມີຄວາມຮູ້ເຖິງຂັ້ນປຣິນຍາໂທໃນດ້ານສາສນາສາດ ຫຼືປຣິນຍາທຽບເທົ່າ ແລະຕ້ອງທຳ ສຳເຣັດທຸກຂໍ້ກຳໜົດເງື່ອນໄຂ ໃນການຈະຖືກສະຖາປະນາ ຊຶ່ງບັນທຶກໄວ້ໃນ G-14.0402.

d. ການຮັບໃຊ້ ຈະຕ້ອງນຳມາຊຶ່ງຄວາມສາມາດຊີ້ແຈງເຖິງຄຸນສົມບັດ ແລະການປະພຶດຕໍ່ທາງພາກ ແລະຕໍ່ທາງອົງການ, ສຳນັກງານຕົວແທນ, ແລະສະຖາບັນສຶກສາຕ່າງໆຂອງເພຣັສໄບເທີຣີ.

e. ການຮັບໃຊ້ ຕ້ອງປະກອບດ້ວຍ ຄວາມຮັບຜິດຊອບໃນການປະກອບສ່ວນໃນການພິຈາຣະນາ ບັນຫາຕ່າງໆ ແລະວຽກງານພາຍໃນພາກ ແລະໃນການນະມັສການ ແລະການຮັບໃຊ້ໃນຄຣິສຕະຈັກ.

## ວ່າດ້ວຍ ອາຈານຂອງຄະນະນິກາຍອື່ນໆ G-11.0404

ອາຈານທີ່ສັງກັດໃນຄະນະນິກາຍອື່ນ ອາດຖືກຮັບເອົາເຂົ້າມາທຳງານໃນພາກ ໂດຍອີງໃສ່ຫຼັກການ ດັ່ງນີ້:

a. ຕ້ອງເປັນອາຈານທີ່ມາຈາກຄະນະປະຕິຮູບທີ່ຮັບຮູ້ຣະບຽບການ ແລະການພົວພັນກັບເພຣັສໄບທີຣຽນ ໂດຍທາງສະພາສູງ, ໃນເວລາຜູ້ກ່ຽວມີຄຳຮ້ອງເປັນສະມາຊິກຂອງພາກ, ຈະຕ້ອງໄດ້ມີການແນະນຳຕົວຢ່າງເປັນທີ່ພໍໃຈຈາກ

1/ ຣະບຽບການສະຖາປະນາຂອງພາກ ຫຼືອົງການຄອບຄຸມວຽກງານຂອງຄຣິສຕະຈັກ, 2/ ສະແດງຈຸດຢືນທີ່ດີຂອງຕົນ, ແລະ 3/ ຕັດສິນໃຈອອກຈາກຄະນະເກົ່າເພື່ອເຂົ້າສູ່ພາກເພຣັສໄບເທີຣີໃດນຶ່ງ. ພວກເຂົາຈະຕ້ອງໄດ້ສົ່ງຣາຍງານ ໃຫ້ເປັນທີ່ພໍໃຈກ່ຽວກັບຫຼັກຖານ ທີ່ສະແດງໃຫ້ເຫັນເຖິງຄຸນນະສົມບັດທີ່ເໝາະສົມ ແລະທຶນສຶກສາທີ່ຖືກຕ້ອງຕາມຂໍ້ກຳໜົດຂອງຄຣິສຕະຈັກ ແລະຈະຕ້ອງມີການສອບເສັງກ່ຽວກັບສາສນາສາດ, ແລະຫຼັກການຂອງຊາວເພຣັສໄບທີຣຽນໃນດ້ານອື່ນ, ແລະຈະຕ້ອງຕອບຄຳຖາມ ຊຶ່ງບັນທຶກໄວ້ໃນ G-14.0405 ໃນທາງບອກ .

b .ໃນເວລາທີ່ ອາຈານຈາກຄະນະອື່ນ ທີ່ໄດ້ຮັບການຕັດສິນແລ້ວຈາກທາງພາກເພື່ອໃຫ້ທຳການເປັນຜູ້ນຳທາງດ້ານ ພຣະຄຳແລະພິທີສົນ, ມີຫຼັກຖານຄົບຖ້ວນທີ່ຈະທຳງານພາຍໃຕ້ກົດຣະບຽບຂອງເພຣັສໄບເທີຣີ,ຜູ້ກ່ຽວຕ້ອງຍື່ນໜັງສືທີ່ຖືກອະນຸຍາດໃຫ້ ລາອອກຈາກຄະນະເກົ່າຂອງຜູ້ກ່ຽວ, ແລະຕ້ອງມີຄຳຮ້ອງຂໍໃຫ້ທາງພາກຮັບເອົາຜູ້ກ່ຽວເປັນອາຈານ, ທາງພາກ, ຫຼັງຈາກໄດ້ພິຈາຣະນາເປັນທີ່ພໍໃຈ ໂດຍອີງໃສ່ຂໍ້ກົດຣະບຽບແລ້ວ, ຕ້ອງຍອມຮັບຮູ້ເອົາການຖືກສະຖາປະນາເດີມຂອງອາຈານຄົນນັ້ນ ໂດຍອີງໃສ່ການສະແດງອອກຂອງອາຈານນັ້ນໆ ຕໍ່ການກ່າວຄຳສາບານກ່ຽວກັບການສະຖາປະນາ ໂດຍອີງໃສ່ກົດຣະບຽບຂອງຄຣິສຕະຈັກນີ້ G-14.0405

c. ອາຈານຂອງຄະນະອື່ນ ທີ່ມີການພົວພັນກັບສະພາສູງ ຊຶ່ງວິທີການປະກອບພິທີທາງສາສນາ ໄດ້ຮັບການຢັ້ງຢືນຮັບຮູ້ຈາກຄະນະນັ້ນໆ, ຊຶ່ງຜູ້ກ່ຽວໄດ້ເປັນອາຈານຂອງຄຣິສຕະຈັກນ້ອຍ ຫຼືໃຫຍ່ຊຶ່ງພົວພັນກັບຄຣິສຕະຈັກໃນຄະນະຕ່າງໆ ຢ່າງນ້ອຍ ນຶ່ງໃນຄຣິສຕະຈັກເຫຼົ່ານັ້ນເປັນຂອງເພຣັສໄບທີຣຽນແຫ່ງສະຫະຣັດ ອາເມຣິກາ, ຫຼືຜູ້ກ່ຽວອາດເປັນອາຈານທີ່ທຳງານພິເສດຊຶ່ງທາງຄຣິຕະຈັກນີ້ໄດ້ໃຫ້ການສະໜັບສະໜູນ, ຫຼືເປັນຜູ້ທີ່ຖືກເອີ້ນໃຫ້ຮັບໃຊ້ໃນຫຼາຍຫ້ອງການຊຶ່ງນຶ່ງໃນນັ້ນເປັນຂອງຄຣິສຕະຈັກນີ້, ຫຼືເປັນອາຈານຂອງຄຣິສຕະຈັກທີ່ຢູ່ນອກສະຫະຣັດ ຊຶ່ງມີການພົວພັນກັບສະພາສູງ ຊຶ່ງມີສິດທີໃນການທຳງານຮັບໃຊ້ຄຣິສຕະຈັກນີ້ ສາມາດຈົດທະບຽນເປັນສະມາຊິກຂອງພາກໃນໄລຍະໃດນຶ່ງ ແລະສາມາດມີສິດ ແລະສິດທີໃນການເປັນສະມາຊິກນັ້ນເປັນໄລຍະຊົ່ວຄາວ.

## ວ່າດ້ວຍ ການລົງທະບຽນ G-11.0405

ອາຈານ ຈາກຄຣິສຕະຈັກອື່ນ ທີ່ຊອກຫາການເປັນສະມາຊິກຂອງຄຣິສຕະຈັກນີ້, ອາຈານຄົນນັ້ນ ກ່ອນທີ່ຈະຖືກຈົດຊື່ຕ້ອງເຮັດໃຫ້ເປັນທີ່ພໍໃຈຂອງພາກໃນການມີຫຼັກຖານການເຄື່ອນຍ້າຍຈາກວຽກງານທັງໝົດໃນຄະນະທີ່ຕົນເອງມານັ້ນ.

## ວ່າດ້ວຍ ການຍັງສືບຕໍ່ເປັນສະມາຊິກ G-11.0406

ອາຈານຜູ້ທີ່ຍັງສາມາດສືບຕໍ່ເປັນສະມາຊິກຂອງພາກເພຣັສໄບທີຣຽນແຫ່ງສະຫະຣັດອາເມຣິການັ້ນ ມີດັ່ງນີ້: ຜູ້ທີ່ຍັງທຳງານຢູ່, ສະມາຊິກທົ່ວໄປ, ແລະຜູ້ທີ່ໝົດອາຍຸການແລ້ວ

### a. ວ່າດ້ວຍສະມາຊິກທີ່ຍັງທຳງານຢູ່ (ສະມາຊິກທີ່ຫ້າວຫັນ)

ສະມາຊິກທີ່ຍັງທຳງານຢູ່ ເປັນອາຈານທີ່ໄດ້ຖືກຍອມຮັບເຂົ້າສູ່ພາກໂດຍອີງຕາມກົດຣະບຽບ G-11.0401, ແລະໃນເວລານີ້ໄດ້ທຳງານຮັບໃຊ້ພຣະເຈົ້າໂດຍເປັນໄປຕາມຫຼັກການທັງໝົດທີ່ບັນທຶກໄວ້ໃນ G-11.0403 ໂດຍບໍ່ມີຂໍ້ຍົກເວັ້ນ. ສະມາຊິກແບບນີ້ ຕ້ອງເປັນຜູ້ທຳງານຮັບໃຊ້ພຣະເຈົ້າພາຍໃນຄຣິສຕະຈັກ (G-11.0409) ທຳງານຮັບໃຊ້ພຣະເຈົ້າໃນຂະແໜງອື່ນໆຂອງຄຣິສຕະຈັກ (G-11.0410) ເປັນຜູ້ທຳງານນອກເໜືອຈາກການຄຸ້ມຄອງໃນດ້ານ ນິຕິບັນຍັດຂອງຄຣິສຕະຈັກນີ້ (G-11.0411) ຫຼືເປັນຜູ້ທີ່ຖືກໃຫ້ກຽດໃນການກິນເບັ້ຍບຳນານ (G-11.0412). ອາຈານປະເພດນີ້ຈະຕ້ອງມີສ່ວນໃນການປະຊຸມຂອງພາກ ແລະໃນການອອກສຽງ, ປ່ອນບັດ, ແລະມີຫ້ອງການ.

### b. ວ່າດ້ວຍສະມາຊິກແບບທົ່ວໄປ.

ສະມາຊິກນີ້ ເປັນອາຈານທີ່ ເມື່ອກ່ອນໄດ້ຖືກຍອມຮັບເອົາຈາກພາກນີ້ ຫຼືພາກອື່ນໃນຖານະເປັນສະມາຊິກຫ້າວຫັນ, ແລະໃນເວລານີ້ໄດ້ຢຸດເຊົາໃນການທຳງານຮັບໃຊ້ພຣະເຈົ້ານັ້ນແລ້ວໂດຍບໍ່ໄດ້ເຈຕະນາ, ບໍ່ໄດ້ທຳງານຮັບໃຊ້ພຣະເຈົ້າຕາມ ຫຼັກການທີ່ໄດ້ບົ່ງໄວ້ໃນ G-11.0403 ແລ້ວ. ອາຈານນີ້ ອາດຖືກມອບໝາຍໃຫ້ມີຖານະເປັນສະມາຊິກແບບທົ່ວໄປ ຍ້ອນຜູ້ກ່ຽວໄດ້ມີຂໍ້ຈຳກັດໃນການຮັບໃຊ້ພຣະເຈົ້າ ໂດຍປະຕິບັດຕາມຫຼັກການທັງໝົດທີ່ໄດ້ບັນທຶກໄວ້ແລ້ວນັ້ນ ທັ້ງນີ້ຍ້ອນມີ ໜ້າທີ່ຮັບຜິດຊອບໃນດ້ານຄອບຄົວ ຫຼືຍ້ອນສະພາບແວດລ້ອມສ່ວນຕົວອື່ນໆ ຊຶ່ງທາງພາກນັ້ນໆ ໄດ້ຍອມຮັບຮູ້ວ່າ ເປັນສິ່ງສຳຄັນສຳຣັບຜູ້ກ່ຽວ. ສະມາຊິກແບບທົ່ວໄປນີ້ ຕ້ອງປະຕິບັດຕາມຫຼັກການທີ່ໄດ້ບັນທຶກໄວ້ໃນ G-11.0403 ເທົ່າທີ່ ສາມາດທຳໄດ້ ແລະຄວນຖືກຊຸກຍູ້ໃຫ້ເປັນອາຈານຊ່ວຍໃນຄຣິສຕະຈັກໃດນຶ່ງ. ສະມາຊິກນີ້ ຕ້ອງມີສ່ວນໃນການປະຊຸມພາກ ແລະອອກສຽງ, ປ່ອນບັດ ແລະມີຫ້ອງການ. ຖານະຂອງສະມາຊິກແບບທົ່ວໄປແຕ່ລະຄົນ ແມ່ນຖືກມອບໝາຍໃຫ້ໂດຍພາກ ຊຶ່ງອີງຕາມການຮ້ອງຂໍຂອງອາຈານ ແລະຈະຕ້ອງຖືກນຳມາພິຈາຣະນາປີລະຄັ້ງ.

### c. ວ່າດ້ວຍ ສະມາຊິກທີ່ບໍ່ຫ້າວຫັນ (ທີ່ບໍ່ໄດ້ທຳງານແລ້ວ)

ສະມາຊິກທີ່ບໍ່ຫ້າວຫັນນີ້ ແມ່ນສະມາຊິກທີ່ເມື່ອກ່ອນ ເຄີຍຖືກຍອມຮັບເຂົ້າສູ່ພາກໃນຖານະເປັນສະມາຊິກທີ່ຫ້າວຫັນ ແຕ່ເນື່ອງດ້ວຍເວລານີ້ ຍ້ອນວຽກງານສ່ວນຕົວເຮັດໃຫ້ຜູ້ກ່ຽວບໍ່ສາມາດທຳງານຕາມທີ່ກຳໜົດໄວ້ໃນຫຼັກການ G-11.0403 ທາງພາກ, ໂດຍອີງຕາມຄຳຮ້ອງຂໍຂອງຜູ້ກ່ຽວ, ຫຼືໂດຍການຮູ້ເຖິງການຢຸດເຊົາທຳການນັ້ນດ້ວຍຕົນເອງ ຊຶ່ງທາງພາກໄດ້ຣາຍງານ ຕໍ່ຜູ້ກ່ຽວດ້ວຍຕົນເອງ ແລະໂດຍທາງຈົດໝາຍລົງທະບຽນແລ້ວ, ຈະຕ້ອງຢຸດເຊົາໃນການເປັນສະມາຊິກທີ່ຫ້າວຫັນຂອງຜູ້ກ່ຽວ. ສະມາຊິກທີ່ບໍ່ຫ້າວຫັນ ຈະບໍ່ມີສິດສ່ວນໃນການປະຊຸມຂອງພາກ ຫຼືອອກສຽງ, ປ່ອນບັດ, ມີຫ້ອງການ, ຫຼືຮັບໃຊ້ຢູ່ໃນຄະນະ ກຳມະການຕ່າງໆ, ຍົກເວັ້ນ ສະມາຊິກທີ່ບໍ່ຫ້າວຫັນ ສາມາດອອກສຽງໄດ້ໃນກໍຣະນີທີ່ມີເລື້ອງລາວກ່ຽວຂ້ອງກັບອາຈານຄົນນັ້ນ. ການສືບຕໍ່ຖານະທີ່ເປັນສະມາຊິກທີ່ບໍ່ຫ້າວຫັນນີ້ ຈະມີການພິຈາຣະນາປີລະຄັ້ງເຖິງສາມປີ. ຫຼັງຈາກສາມປີ ຫາກຜູ້ກ່ຽວບໍ່ສາມາດ ຖືກນຳຂຶ້ນມາເປັນສະມາຊິກທີ່ຫ້າວຫັນ ຫຼືສະມາຊິກແບບທົ່ວໄປໄດ້ແລ້ວ, ທາງພາກຄວນລຶບຊື່ຜູ້ກ່ຽວອອກຈາກທະບຽນພົນທີ່ ກ່ຽວຂ້ອງຂອງພາກ ແຕ່ອາດໃຫ້ໃບປະກາດໃນການເປັນສະມາຊິກຂອງຄຣິສຕະຈັກໃດນຶ່ງໄດ້. (G-11.0414)

## ວ່າດ້ວຍທະບຽນ **G-11.0407**

ສະມຽນຂອງພາກຈະຕ້ອງເກັບກຳທະບຽນສາມນ້ອມທີ່ບັນທຶກຣາຍຊື່ຂອງບັນດາອາຈານຜູ້ທີ່ເປັນສະມາຊິກຂອງພາກ ແລະເປັນຜູ້ທີ່ຫ້າວຫັນ, ສະມາຊິກແບບທົ່ວໄປ, ແລະຜູ້ທີ່ບໍ່ຫ້າວຫັນ ແລະທະບຽນອັນທີສີ່ ຄືທະບຽນຜູ້ທີ່ຖືກ

ລຶບຊື່ອອກຈາກ ທະບຽນອື່ນໆທີ່ກ່າວມາຂ້າງເທິງນັ້ນ. ໃນວັນທີ່ 31 ຫຼືກ່ອນວັນທີ 31 ຂອງເດືອນທັນວາທຸກປີ, ທາງພາກຈະຕ້ອງມີການຕັດສິນ ກໍຣະນີແຫ່ງການສືບຕໍ່ເປັນສະມາຊິກຂອງອາຈານແຕ່ລະຄົນ ອີງໃສ່ຂໍ້ປະເດັນທີ່ໄດ້ບົ່ງໄວ້ໃນຂໍກໍາໜົດຕອນນີ້ ແລະເອົາກົດຣະບຽບ ຕອນນີ້ເປັນເຫດຜົນແຫ່ງການຕັດສິນຕ່າງໆທີ່ຈະເກີດຂຶ້ນ.

## ວ່າດ້ວຍ ອາຈານທີ່ສາມາດໃຊ້ການໄດ້ **G-11.0408**

ອາຈານທີ່ເປັນສະມາຊິກທ້າວທັນຂອງພາກພາກ ສາມາດຖືກຮັບກັນໃຫ້ 1/ ທໍາງານຮັບໃຊ້ພຣະເຈົ້າໃນຄຣິສຕະຈັກນີ້ 2/ ຮັບໃຊ້ໃນວຽກງານຮັບໃຊ້ອື່ນໆຂອງຄຣິສຕະຈັກ 3/ ທໍາງານຮັບໃຊ້ພຣະເຈົ້າທີ່ນອກເໜືອການປົກຄອງຂອງຄຣິສຕະຈັກ 4/ ໄດ້ຮັບການໃຫ້ກິນເບັ້ຍບໍານານຢ່າງມີກຽດ.

## ວ່າດ້ວຍການຮັບໃຊ້ໃນກຸ່ມນະມັສການ **G-11.0409**

ອາຈານທີ່ທ້າວທັນທີ່ທໍາງານຮັບໃຊ້ໃນກຸ່ມນະມັສການຂອງຄຣິສຕະຈັກນີ້ ຄວນມີວຽກງານຮັບໃຊ້ຢູ່ໃນຄຣິສຕະຈັກ ສະເພາະໃດນຶ່ງ ຫຼືຫຼາຍຄຣິສຕະຈັກໃນຖານະເປັນອາຈານສົມບູນ, ອາຈານທຽບເທົ່າ, ອາຈານຮອງ, ອາຈານຊ່ວຍ, ເປັນຜູ້ສໍາຮັບ ໄວ້ສົ່ງໄປບ່ອນທີ່ຂາດແຄນ, ເປັນຜູ້ຖືກຮັກສາໄວ້ຊົ່ວຄາວ, ອາຈານຊົ່ວຄາວ ຫຼືອາຈານຊ່ວຍຊົ່ວຄາວ ຕາມທີ່ໄດ້ບັນທຶກໄວ້ໃນ G-6.0202 and G-14.0513.

## ວ່າດ້ວຍ ການຮັບໃຊ້ອື່ນໆໃນຄຣິສຕະຈັກ **G-11.0410**

ອາຈານທີ່ທ້າວທັນ ມີສ່ວນໃນການຮັບໃຊ້ວຽກງານອື່ນໆຂອງຄຣິສຕະຈັກ ຕ້ອງຮັບໃຊ້ເປັນຜູ້ທໍາງານໃນພາກ, ສະພາຕໍ່າ, ຫຼືສະພາສູງຂອງຄຣິສຕະຈັກນີ້ ຫຼືໃນອົງການທີ່ກ່ຽວຂ້ອງກັບນຶ່ງໃນອົງການປົກຄອງຂອງຄຣິສຕະຈັກ ໃນຖານະເປັນ ອາຈານຮັບໃຊ້ໃນອົງການທີ່ໄດ້ຮັບການອຸ້ມຊູຈາກ ສອງຄະນະນິກາຍ ຫຼືຫຼາຍກວ່ານັ້ນ, ຊຶ່ງນຶ່ງໃນນັ້ນ ເປັນຂອງຄຣິສຕະຈັກ ແຫ່ງນີ້ເຊັ່ນສະຫະພັນຄຣິສຕະຈັກ, ວຽກງານການຮັບໃຊ້ພຣະເຈົ້າພິເສດ, ຫ້ອງການບໍຣິຫານ, ຫຼືຕາງໜ້າແກ່ອົງການຮວມຄະນະ ຫຼືການຮວມກັນໃນວຽກງານຮັບໃຊ້ໂດຍການພົວພັນກັບຄຣິສຕະຈັກທີ່ຢູ່ນອກສະຫະຣັດ. ກ່ອນທີ່ຈະເຂົ້າສູ່ວຽກງານຮັບໃຊ້ ດັ່ງກ່າວ, ອາຈານຈະຕ້ອງໄດ້ຮ້ອງຂໍ ແລະໄດ້ຮັບການເຫັນດີເຫັນພ້ອມຈາກພາກທີ່ຕົນເອງເປັນສະມາຊິກຢູ່ນັ້ນ. ການປ່ຽນແປງ ກ່ຽວກັບໄລຍະເວລາຮັບໃຊ້ນັ້ນ ຫຼືການຢຸດເຊົາ ຈະຕ້ອງມີການຣາຍງານຕໍ່ທາງພາກ.

## ວ່າດ້ວຍ ການຮັບໃຊ້ທີ່ຢູ່ນອກເຂດກົດໝາຍຄຸ້ມຄອງຂອງຄຣິສຕະຈັກ **G-11.0411**

ອາຈານທີ່ທ້າວທັນທີ່ທໍາງານຢູ່ນອກຂອບເຂດດູແລຂອງຄຣິສຕະຈັກຈະຕ້ອງທໍາງານໂດຍການຖືກເອີ້ນໃຫ້ທໍາງານຊຶ່ງ ສອດຄ່ອງກັບວຽກງານການປະກາດຂອງເພຣັສໄບເທີຣີຊຶ່ງມີຢູ່ໃນອົງການ, ອົງການຜູ້ຕາງໜ້າ, ຫຼືໃນອົງການສຶກສາ ຊຶ່ງຄຣິສຕະຈັກນີ້ບໍ່ໄດ້ມີສ່ວນຮັບຜິດຊອບຢ່າງເປັນທາງການ ຫຼືສາມາດຮັບໃຊ້ໃນຖານະເປັນອາຈານຊົ່ວຄາວ ຫຼືໃນຖານະອື່ນໆ ຕາມຄວາມສາມາດຕໍ່ຄະນະນິກາຍອື່ນໆ. ກ່ອນທີ່ຈະເຂົ້າສູ່ວຽກງານດັ່ງກ່າວນັ້ນ ອາຈານຕ້ອງຮ້ອງຂໍອະນຸຍາດຈາກທາງພາກ ທີ່ຕົນເອງເປັນສະມາຊິກນັ້ນເສັຽກ່ອນ. ຄະນະກໍາມະການກ່ຽວກັບການຮັບໃຊ້ຂອງພາກຈະຕ້ອງເປັນຜູ້ທົບທວນກ່ຽວກັບວຽກງານ ການຮັບໃຊ້ທີ່ໄດ້ສເນີມານັ້ນ ແລະຣາຍງານຜົນຮັບເອົານັ້ນຕໍ່ພາກ.

ທາງຄະນະກຳມະການຕ້ອງເປັນຜູ້ຕັດສິນ ແລະຣາຍງານ ກ່ຽວກັບວຽກງານການຮັບໃຊ້ນັ້ນວ່າ ໄດ້ຖືກຕ້ອງການກົດ ທັມມະນູນທີ່ບົ່ງໄວ້ໃນ G-11.0403 ຫຼືບໍ່. ຖ້າຫາກທາງພາກໃຫ້ ອະນຸຍາດຕາມຄຳຮ້ອງຂໍແລ້ວ: ການອະນຸຍາດ ດັ່ງກ່າວ ຕ້ອງມີການພິຈາຣະນາຄືນທຸກປີ.

## ວ່າດ້ວຍ ການໃຫ້ກິນເບັ້ຽບຳນານຢ່າງມີກຽດ G-11.0412

ພາກ ອາດແຕ່ງຕັ້ງໃຫ້ອາຈານຄົນນຶ່ງ ເປັນຜູ້ສາມາດກິນເບັ້ຽບຳນານຢ່າງມີກຽດໄດ້ ຫາກອາຈານຄົນນັ້ນ ເປັນອາຈານທີ່ດີ ແລະເປັນແບບຢ່າງ, ຫຼືຖືກຍອມຮັບຮູ້ວ່າຜູ້ກ່ຽວມີຖານະເປັນອາຈານທີ່ດີແລະເປັນຕົວຢ່າງ, ໃນເວລາ ທີ່ປະກາດໃຫ້ຜູ້ກ່ຽວກິນເບັ້ຽ ບຳນານຢ່າງມີກຽດນັ້ນ. ຖານະທີ່ເປັນອາຈານກິນເບັ້ຽບຳນານຢ່າງມີກຽດນັ້ນ ສາມາດທຳໄດ້ ເນື່ອງດ້ວຍສຸຂະພາບທາງດ້ານ ຮ່າງກາຍ ຫຼືທາງດ້ານມັນສະໝອງທີ່ບໍ່ສາມາດທຳງານໄດ້, ຫຼືເພາະອາຍຸສັງຂານ. ພາກສາມາດໃຫ້ການກິນເບັ້ຽບຳນານແບບມີກຽດນີ້ຕໍ່ອາຈານທີ່ເປັນສະມາຊິກຂອງຕົນ ຊຶ່ງຜູ້ກ່ຽວໄດ້ຮັບການປົດປ່ອຍ ໃຫ້ກິນເບັ້ຽບຳນານຈາກອົງການທີ່ໄດ້ບອກໄວ້ໃນ G-11.0410 or G-11.0411 ບົນພື້ນຖານການທຳງານຂອງຜູ້ກ່ຽວ ທີ່ເປັນສະມາຊິກອາຈານທີ່ຫ້າວຫັນ ຫຼືເປັນສະມາຊິກແບບທົ່ວໄປມາໄດ້ຊາວປີແລ້ວ.

## ວ່າດ້ວຍ ສະມາຊິກແບບທົ່ວໄປ ແລະສະມາຊິກທີ່ບໍ່ຫ້າວຫັນ G-11.0413

ສະມາຊິກແບບທົ່ວໄປ ແລະສະມາຊິກທີ່ບໍ່ຫ້າວຫັນ ຈະຕ້ອງຢູ່ພາຍໃຕ້ການເບິ່ງແຍງດູແລ ແລະຣະບຽບ ວິນັຍຂອງພາກ. ພວກເຂົາອາດຈະຖືກໂອນຍ້າຍຖານະໃນການເປັນສະມາຊິກແບບນີ້ຂອງເຂົາໄປຫາພາກອື່ນ ໂດຍອີງໃສ່ການໄດ້ຮັບອະນຸຍາດ ຈາກທັງສອງພາກທີ່ກ່ຽວຂ້ອງນັ້ນ. ບັດບັນທຶກຂອງອາຈານທັງໝົດ ຈະຕ້ອງຖືກ ສົ່ງໄປໃຫ້ແກ່ພາກທີ່ຜູ້ກ່ຽວຍ້າຍໄປນັ້ນ. ຄະນະກຳມະການກ່ຽວກັບການຮັບໃຊ້ ຕ້ອງປຶກສາກັບສະມາຊິກແບບທົ່ວໄປ ແລະສະມາຊິກທີ່ບໍ່ຫ້າວຫັນນັ້ນເປັນປະຈຳທຸກປີ ເພື່ອແນະນຳໃຫ້ພາກນັ້ນສືບຕໍ່ຖານະການເປັນສະມາຊິກຂອງ ອາຈານນັ້ນ, ປ່ຽນແປງຖານະແບບໃໝ່, ຫຼືໃຫ້ອອກຈາກວຽກງານ ໃນຫ້ອງການສະຖາປະນາ. ກິຈກຳແບບນີ້ ຕ້ອງແມ່ນພາກເປັນຜູ້ທຳ ຫຼືໂດຍອີງຕາມຄຳຮ້ອງຂໍຂອງອາຈານ.

## ວ່າດ້ວຍ ການໃຫ້ອອກຈາກວຽກງານຫ້ອງການສະຖາປະນາ G-11.0414

ຖ້າຫາກອາຈານຄົນໃດທີ່ບໍ່ໄດ້ທຳຕາມຫຼັກການໃນການດຳເນີນງານທີ່ບອກໄວ້ໃນ D-7.0200 and D-70800 ບໍ່ມີການມອບໝາຍວຽກງານຫຍັງ, ຫາກບໍ່ດັ່ງນັ້ນ ຜູ້ກ່ຽວອາດເປັນອາຈານທີ່ດີໄດ້, ຄວນຕ້ອງມີຄຳຮ້ອງສເນີ ເພື່ອໃຫ້ ປົດປ່ອຍອອກຈາກການທຳງານແບບອາຈານສົມບູນນັ້ນ, ທາງພາກຄວນລຶບຊື່ຜູ້ກ່ຽວອອກຈາກທະບຽນພົນທີ່ເໝາະສົມ ແຕ່ໃຫ້ໃບປະກາດໃນການເປັນສະມາຊິກຂອງຄຣິສຕະຈັກໃດນຶ່ງໄດ້. ພາກຄວນຍັງຮັກສາຊື່ຂອງຜູ້ກ່ຽວພ້ອມທັງ ວັນເດືອນປີ ໃນການຖືກລຶບຊື່ນັ້ນ. ຈະບໍ່ມີການຕັດສິນເຖິງຄວາມລົ້ມເຫຼວຂອງຜູ້ກ່ຽວໃນກໍຣະນີນີ້.

ການໃຫ້ອອກຈາກການເປັນອາຈານສົມບູນນັ້ນຕ້ອງປະຕິບັດດັ່ງນີ້ ຄືໃຫ້ຢຸດເຊົາທຸກກິຈກັມໃນວຽກງານ ຂອງອາຈານນັ້ນໆ. ການເປັນສາສນາຈານ, ຜູ້ຮັບໃຊ້, ອາຈານ, ຫຼືຕຳແໜ່ງໃດໆທີ່ຄ້າຍຄືກັນນີ້ ຈະບໍ່ສາມາດໃຊ້ໄດ້. ຖານະຂອງຜູ້ຮັບໃຊ້ຜູ້ນັ້ນ ຕ້ອງ ມີຖານະແບບດຽວກັນກັບສະມາຊິກທົ່ວໄປຂອງຄຣິສຕະຈັກເທົ່ານັ້ນ.

ຫາກອາຈານທີ່ຖືກໃຫ້ອອກຈາກຖານະນີ້ໄປແລ້ວ ຫາກຈະມີການກັບຄືນເປັນສະມາຊິກຂອງພາກອີກ ຜູ້ກ່ຽວຕ້ອງເຮັດ ຄຳຮ້ອງຂໍ ໄປຍັງພາກທີ່ໃຫ້ຜູ້ກ່ຽວອອກຈາກການເປັນອາຈານນັ້ນ, ແລະໂດຍການເຫັນດີຈາກພາກນັ້ນໆ, ໂດຍການຢ້ຳຄືນເຖິງ ຄຳສັນຍາຂອງການສະຖາປະນາເປັນອາຈານ, ແລະການເລີ່ມຕົ້ນໃໝ່ໃນການຮັບໃຊ້ພຣະເຈົ້ານັ້ນຫາກເໝາະສົມກັບຄົນຜູ້ນັ້ນ ເພື່ອຜູ້ກ່ຽວຈະສາມາດສືບຕໍ່ເປັນສະມາຊິກຂອງພາກ, ຜູ້ກ່ຽວຄວນຖືກເອີ້ນຄືນໃຫ້ຮັບຕຳແໜ່ງອາຈານເໝືອນເດີມ ໂດຍບໍ່ຕ້ອງ ມີການໃຫ້ການສະຖາປະນາຄືນອີກ.

## ວ່າດ້ວຍ ອາຈານທີ່ຖືກນຳເຂົ້າສູ່ທະບຽນແຫ່ງສະມາຊິກທີ່ບໍ່ຫ້າວຫັນ G-11.0415

ຫາກອາຈານ ຂາດການປະຊຸມກັບພາກໃນຖານະເປັນສະມາຊິກ ເປັນເວລານຶ່ງປີ ແລະບໍ່ສົນໃຈໃນການລາຍງານຕໍ່ພາກ ທີ່ຜູ້ກ່ຽວອາສັຍຢູ່ນັ້ນ, ທາງພາກ, ຫຼັງຈາກທີ່ພະຍາຍາມແນະນຳຕັກເຕືອນອາຈານນັ້ນແລ້ວ, ຄວນເອົາຊື່ຂອງຜູ້ກ່ຽວໃສ່ໃນທະບຽນ ແຫ່ງສະມາຊິກທີ່ບໍ່ຫ້າວຫັນ ໂດຍບໍ່ຈຳເປັນຕ້ອງການເຫດຜົນຫຍັງທັງນັ້ນ.

ອາຈານ ທີ່ໄດ້ຮັບອະນຸຍາດໃຫ້ທຳງານຢູ່ນອກຂອບເຂດຮັບຜິດຊອບຂອງພາກທີ່ຜູ້ກ່ຽວເປັນສະມາຊິກຢູ່, ແຕ່ບໍ່ໄດ້ຮັບ ອະນຸຍາດໃຫ້ທຳງານຢູ່ພາຍໃນຂອບເຂດຂອງພາກທີ່ຕົນເອງຫວັງທຳງານຢູ່ນັ້ນ, ຫຼັງຈາກສອງປີ ຜູ້ກ່ຽວຄວນຖືກບັນທຶກຊື່ໄວ້ ໃນທະບຽນແຫ່ງສະມາຊິກທີ່ບໍ່ຫ້າວຫັນ.

## ວ່າດ້ວຍ ອາຈານທີ່ໄປຮ່ວມກັບຄະນະອື່ນ G-11.0416

ຖ້າຫາກອາຈານຄົນໃດໃນຄຣິສຕະຈັກນີ້ ຫາກສືບຕໍ່ ຫຼືຍອມຮັບການເປັນສະມາຊິກ ໃນຄະນະອື່ນ, ນອກຈາກສິ່ງທີ່ໄດ້ ບັນທຶກໄວ້ໃນ G-11.0411 ແລ້ວ, ທາງພາກຕ້ອງບັນທຶກ ຄວາມຈິງທີ່ເກີດຂຶ້ນ, ລຶບຊື່ຜູ້ກ່ຽວອອກຈາກທະບຽນ, ແລະຕ້ອງ ປະຕິບັດຕໍ່ຜູ້ກ່ຽວ ຕາມທີ່ກົດທັມມະນູນໄດ້ບົ່ງໄວ້.

## 5 / ວ່າດ້ວຍ ຄະນະກຳມະການແຫ່ງການຮັບໃຊ້ G-11.0500

## ວ່າດ້ວຍ ຄຸນສົມບັດ ແລະສະມາຊິກ G-11.0501

ພາກແຕ່ລະພາກ ຕ້ອງແຕ່ງຕັ້ງຄະນະກຳມະການແຫ່ງການຮັບໃຊ້ ເພື່ອທຳງານໃນການເປັນອາຈານ ແລະທີ່ປຶກສາ ໃຫ້ແກ່ບັນດາຜູ້ຮັບໃຊ້ພຣະເຈົ້າໃນພາກ, ເພື່ອອຳນວຍຄວາມສະດວກໃນການພົວພັນຣະຫວ່າງຄຣິສຕະຈັກ, ອາຈານ, ແລະພາກ, ແລະເພື່ອແກ້ໄຂບັນຫາຕ່າງໆໃນນາມຂອງພາກຕາມຄວາມສາມາດ ແລະໃນເວລາທີ່ເໝາະສົມ.

ຄະນະກຳມະການດັ່ງກ່າວ ຕ້ອງປະກອບດ້ວຍຜູ້ປົກຄອງ ແລະອາຈານທີ່ມີຈຳນວນເທົ່າກັນ ຊຶ່ງຈຳນວນສະມາຊິກຕ້ອງ ຢ່າງນ້ອຍ ໖ ຄົນ. ບຸກຄົນທີ່ປະກອບເປັນຄະນະນີ້ ຄວນຖືກສ້າງຂຶ້ນໂດຍພາກ ແລະຢ່າງນ້ອຍຄະນະສ່ວນນາກຕ້ອງແມ່ນພາກ ເປັນຜູ້ເລືອກ. ສະມາຊິກຂອງຄະນະ ຕ້ອງມີອາຍຸຮັບໃຊ້ສາມປີ ແລະຜູ້ທີ່ຈະເລືອກມາແທນທີ່ສະມາຊິກຊຶ່ງບໍ່ທັນໝົດອາຍຸໄປນັ້ນ ຕ້ອງເລືອກເອົາມາຮັບໃຊ້ພຽງໃນໄລຍະອາຍຸກຳໜົດຂອງຜູ້ນັ້ນ. ສະມາຊິກ ບໍ່ສາມາດຮັບໃຊ້ເກີນກວ່າສອງສະໄໝຕິດຕໍ່ກັນ ຫຼືສອງພາກສ່ວນອາຍຸຕິດຕໍ່ກັນ.

## ວ່າດ້ວຍ ໜ້າທີ່ຮັບຜິດຊອບ G-11.0502

ຄະນະກຳມະການນີ້ ຕ້ອງຮັບໃຊ້ໃນພາກດ້ວຍໜ້າທີ່ດັ່ງຕໍ່ລົງໄປນີ້:

a. ຕ້ອງໄປຢ້ຽມຢາມ ແລະໃຫ້ຄຳປຶກສາຫາລືກັບອາຈານພາຍໃນພາກຢ່າງສມ່ຳສເມີ. ຕ້ອງຣາຍງານຕໍ່ພາກທຸກປີ ໃນວຽກງານຕ່າງໆທີ່ອາຈານພາຍໃນພາກແຕ່ລະຄົນໄດ້ເຮັດ. ຮຽກຮ້ອງໃນມີການຣາຍງານປະຈຳປີ ຈາກບັນດາອາຈານທີ່ທຳງານ ຢູ່ນອກຂອບເຂດດູແລຂອງພາກ ຫຼືທຳງານກັບອົງການປົກຄອງຂັ້ນສູງຂອງຄຣິສຕະຈັກ.

b. ຕ້ອງໃຫ້ການແນະນຳຢັ້ງຢືນຕໍ່ພາກ ໃນວຽກງານການຮັບໃຊ້ພຣະເຈົ້າຂອງບັນດາອາຈານພາຍໃນພາກ. ທຸກການ ເອີ້ນຮຽກໃຫ້ຮັບໃຊ້ຂອງບັນດາອາຈານ ຫຼືຜູ້ສະໝັກໃນການຮັບໃຊ້ແບບອາຈານ ຕ້ອງຖືກມອບໄວ້ໃນກຳມືຂອງຄະນະນີ້ ແລະຕ້ອງຖືກນຳສເນີຕໍ່ພາກ ໃນເວລາທີ່ການເອີ້ນຮຽກນັ້ນໄດ້ຖືກຮັບຮູ້ ແລະແນະນຳວ່າ ການເອີ້ນນັ້ນຕ້ອງມອບໃຫ້ອາຈານ ຫຼືຜູ້ສະໝັກເລືອກ. ທຸກການຮ້ອງຂໍຈາກອາຈານ ຫຼືຜູ້ສະໝັກເລືອກ ເພື່ອການລົງມະຕິຮັບເອົາຂອງພາກ ກ່ຽວກັບໜ້າທີ່ວຽກງານ ທີ່ເໝາະສົມສຳຣັບການຮັບໃຊ້, ເຖິງຈະບໍ່ມີການພົວພັນແບບອາຈານໃດໆຕໍ່ຄຣິສຕະຈັກໃດນຶ່ງກໍຕາມ, ຕ້ອງແມ່ນອາຈານ ຫຼືຜູ້ ສະໝັກເລືອກ ເປັນຜູ້ເຮັດ ໂດຍຜ່ານທາງຄະນະກຳມະການນີ້ ແລະຕ້ອງຣາຍງານໃຫ້ທາງພາກຊາບ ດ້ວຍການແນະນຳໃຫ້ພາກ ເປັນຜູ້ຕັດສິນກ່ຽວກັບວຽກງານນັ້ນໆ.

c. ຄະນະຕ້ອງໄປຢ້ຽມຢາມ ຄະນະປົກຄອງທຸກໆບ່ອນພາຍໃນພາກ ຢ່າງນ້ອຍສາມປີຕໍ່ຄັ້ງ, ຄະນະນີ້ຕ້ອງທຳການ ໂອ້ລົມກັບພວກເຂົາກ່ຽວກັບວຽກງານການປະກາດ ແລະການຮັບໃຊ້ພຣະເຈົ້າຂອງຄຣິສຕະຈັກນັ້ນໆ ແລະສະໜັບສະໜູນ ໃຫ້ພວກເຂົາຮ່ວມມືຢ່າງເຕັມສ່ວນໃນວຽກງານຄະນະປົກຄອງແຕ່ລະຄະນະ ແລະວຽກງານຂອງຄຣິສຕະຈັກນັ້ນໆ ໃນຊີວິດ ແລະການຮັບໃຊ້ວຽກງານຂອງພາກ ແລະຂອງໂບດໃຫຍ່. (W-1.4002)

d. ຕ້ອງໃຫ້ການປຶກສາກັບຄຣິສຕະຈັກຕ່າງໆກ່ຽວກັບການເອີ້ນໃຫ້ມີອາຈານຖາວອນ, ຢ້ຽມຢາມ ແລະປຶກສາຫາລື ກັບທຸກຄະນະກຳມະການທີ່ເລືອກມາໃຫ້ຮັບໃຊ້ໃນການຊອກຫາອາຈານ ແລະຊອກເອົາອາຈານຊ່ວຍ. ຕ້ອງໃຫ້ຄຳແນະນຳກັບ ຄະນະກຳມະການກ່ຽວກັບ ຄວາມດີ, ຄວາມພຽບພ້ອມ, ແລະການເໝາະສົມ ຂອງຜູ້ສະໝັກເລືອກແຕ່ລະຄົນ ແລະອາຈານ ຊຶ່ງທີ່ຖືກ ນຳຊື່ເຂົ້າມາພິຈາຣະນາ ແລະຄະນະນີ້ຄວນມີສິດພິເສດໃນການແນະນຳສເນີຊື່ຂອງບຸກຄົນຕ່າງໆຕໍ່ຄະນະກຳມະການເລືອກຕັ້ງນັ້ນ. ການເອີ້ນຮຽກເອົາອາຈານຖາວອນຈະບໍ່ສາມາດຖືກນຳໃຫ້ພາກໄປພິຈາຣະນາໄດ້ ຖ້າຫາກບໍ່ມີການຮັບເອົາຂອງຄຣິສຕະຈັກ ແລະຖືກພິຈາຣະນາຈາກຄະນະກຳມະການເສັຽກ່ອນ ກ່ອນທີ່ການເອີ້ນຮຽກນັ້ນຈະຖືກຮັບຮູ້ເອົາ. (G-14.0502) ການເອີ້ນ ໃຫ້ມີອາຈານຖາວອນ ບໍ່ຄວນມີການຮັບຮອງເອົາໃຊ້ໄດ້ຈົນກວ່າຈະຖືກມະຕິຕົກລົງຮັບເອົາຈາກພາກ. ໃນກໍຣະນີທີ່ຄຣິສຕະຈັກ ໄດ້ຮັບການຊ່ວຍເຫຼືອໃນການຄ້ຳຈຸນອາຈານນັ້ນ, ຈະຕ້ອງມີການປຶກສາຫາລືກັນຣະຫວ່າງຄຣິສຕະຈັກ ແລະອົງການກ່ຽວຂ້ອງຂອງ ພາກ ຊຶ່ງຕ້ອງໃຫ້ຄຳໝັ້ນສັນຍາກ່ຽວກັບການຄ້ຳຈຸນນັ້ນກ່ອນ ກ່ອນທີ່ຈະນຳສເນີຕໍ່ພາກວ່າ ການເອີ້ນຮຽກອາຈານສຳຣັບຄຣິສຕະຈັກນັ້ນໆຕ້ອງມອບໄວ້ໃນກຳມືຂອງອາຈານເອງ. ອົງການກ່ຽວຂ້ອງຂອງພາກ ຕ້ອງສເນີຕໍ່ຄະນະກຳມະການກ່ຽວກັບຣາຍການມີສ່ວນໃນການຄ້ຳຈຸນອາຈານນັ້ນໆ ຊຶ່ງສິ່ງດັ່ງກ່າວຕ້ອງຕິດຂັດໄປນຳຄຳຮ້ອງຂໍໃນການເອີ້ນຮຽກຂອງຄຣິສຕະຈັກ.

e. ຄະນະ ຕ້ອງປຶກສາຫາລືກັບຄຣິສຕະຈັກ ກ່ຽວກັບການໃຫ້ຄຳແນະນຳໃນການເອີ້ນຮຽກອາຈານທີ່ຖືກມອບໝາຍ ໂດຍອີງໃສ່ກົດຣະບຽບ G-14.0501.

f. ຕ້ອງໃຫ້ຄຳແນະນຳກັບຄະນະປົກຄອງຄຣິສຕະຈັກກ່ຽວກັບການຈັດຫາຜູ້ມາແທນ, ອາຈານຊົ່ວຄາວ ຫຼືອາຈານຊ່ວຍ ຊົ່ວຄາວ, ແລະຜູ້ມາແທນຊົ່ວຄາວ ໃນເວລາຄຣິສຕະຈັກບໍ່ມີອາຈານ, ແລະຄະນະຕ້ອງໃຫ້ມີຣາຍ ຊື່ຂອງອາຈານ, ອະນຸອາຈານ, ແລະຜູ້ມີຄຸນສົມບັດໃນການເປັນອະນຸອາຈານ ຊຶ່ງໄດ້ຖືກຝຶກຝົນ ແລະຖືກແຕ່ງຕັ້ງ ໂດຍພາກ ເພື່ອເອົາໄວ້ແທນບ່ອນອາຈານຫວ້າງ G-14.0513).

g. ຄະນະ ຕ້ອງຈັດໃຫ້ມີຄວາມເອກະພາບໃນການຮັບຈ້າງແຮງງານສຳຣັບອາຈານ ແລະຜູ້ສະໝັກເລືອກ ໂດຍບໍ່ອີງໃສ່ ເຊື້ອຊາດຜິວພັນ, ເຊື້ອກຳເນີດ, ເພດໄວ ແລະຖະນະຄອບຄົວ. ໃນກໍຣະນີທີ່ມີການເອີ້ນຮຽກ ຈະຕ້ອງໄດ້ມີການຣາຍງານຕໍ່ພາກ ໃນທຸກຂັ້ນຕອນໃນການປະຕິບັດງານຂອງຄະນະກຳມະການທີ່ທຳການເອີ້ນຮຽກນັ້ນ.

h. ພາກອາດໃຫ້ສິດພິເສດແກ່ຄະນະ ເພື່ອການຊອກຫາສິ່ງທີ່ຖືກຕ້ອງ ໃນການເອີ້ນທີ່ທາງຄຣິສຕະຈັກ ສເນີມາ ເພື່ອການລົງມະຕິຮັບເອົາ ແລະການສເນີການເອີ້ນໃຫ້ຮັບໃຊ້ຂອງອາຈານ, ລົງມະຕິຮັບເອົາການສອບເສັງ ຂອງອາຈານທີ່ຍົກຍ້າຍມາຈາກພາກອື່ນໆ ຕາມຫຼັກການທີ່ບົ່ງໄວ້ໃນ :ຊຢຢໃຂຖຂຟມ ເພື່ອການຍຸບເລີກໜ້າທີ່ອາຈານ ໃນກໍຣະນີທີ່ຄຣິສຕະຈັກ ແລະທາງອາຈານເຫັນພ້ອມຕ້ອງກັນ, ແລະສັ່ງຍຸບເລີກອາຈານ ເພື່ອໄປສັງກັດໃນພາກອື່ນ, ໂດຍການເກັບກຳໄວ້ເພື່ອພິຈາຣະນາ ໃນກອງປະຊຸມພາກໃນຊຸກຕໍ່ໄປ (G-9.0403, G-14.0507).

i. ຄະນະ ຕ້ອງເປັນເຄື່ອງໄມ້ເຄື່ອງມືໃຫ້ແກ່ພາກ ເພື່ອການສະໜັບສະໜູນສັນຕິພາບ ແລະກົມກຽວກັນຂອງ ຄຣິສຕະຈັກ, ໂດຍສະເພາະເລື້ອງລາວຕ່າງໆທີ່ເກີດຂື້ນ ຍ້ອນການພົວພັນຣະຫວ່າງຄຣິສຕະຈັກແລະອາຈານ. ເປົ້າໝາຍຂອງ ຄະນະ ຄືການເປັນຜູ້ຢືນກາງຢູ່ທ້າມກາງຄວາມແຕກຕ່າງກັນນັ້ນ ແລະເປັນຜູ້ໄກ່ເກັ່ຽ ເພື່ອເຮັດໃຫ້ຄວາມ ຍຸ້ງຍາກນັ້ນໄດ້ລົງເອີຍ ກັນດ້ວຍດີຈາກຄະນະປົກຄອງຂອງຄຣິສຕະຈັກຊຶ່ງຫາກເປັນໄປໄດ້ ຊຶ່ງຈະເຮັດໃຫ້ ຄວາມເປັນອັນນຶ່ງອັນດຽວກັນໃນພຣະກາຍ ຂອງພຣະຄຣິສ ສາມາດບັນລຸເຖິງຄວາມເປັນຈິງ.

j. ຈະຕ້ອງມີການໄຕ່ຕອງຢ່າງຮອບຄອບໃນການຕັດສິນບັນຫາຄວາມຍຸ້ງຍາກໃດນຶ່ງໃນຄຣິສຕະຈັກ ໂດຍອີງໃສ:

- ເປັນຜູ້ນຳເລື້ອງລາວຕ່າງໆທີ່ໄດ້ມານັ້ນ ສເນີຕໍ່ຄະນະປົກຄອງຂອງຄຣິສຕະຈັກທີ່ມີສ່ວນຮ່ວມ, ໃຫ້ຄຳແນະນຳກັບຄະນະປົກຄອງເພື່ອການກະທຳທີ່ສາມາດແກ້ໄຂຄວາມຂັດແຍ່ງກັນນັ້ນ.
- ສເນີໃຫ້ການຊ່ວຍເຫຼືອ ໂດຍການເປັນຄົນກາງ ໃນກໍຣະນີທີ່ ທາງຄະນະປົກຄອງບໍ່ມີ ຄວາມສາມາດແກ້ໄຂ ບັນຫາໂດຍສັນຕິວິທີໄດ້ ຫຼືບໍ່ໄດ້ອອກໜ້າໃນການແກ້ໄຂບັນຫາ.
- ອາດທຳສິ່ງໃດນຶ່ງເພື່ອແກ້ໄຂບັນຫາຍຸ້ງຍາກນັ້ນ ຖ້າຫາກພາກສ່ວນກ່ຽວຂ້ອງນັ້ນຮ້ອງຂໍ, ຫຼືສິດທິນີ້ ຫາກໄດ້ຮັບການມອບໝາຍຈາກພາກໃນກໍຣະນີສະເພາະໃດນຶ່ງ. ໃນເວລາປະຕິບັດງານ ແບບນີ້ ທາງຄະນະກຳມະການຕ້ອງໃຫ້ມີການພິຈາຣະນາຄະດີດັ່ງກ່າວ ໂດຍອີງຕາມກົດຣະບຽບແຫ່ງ ປື້ມວິນັຍທີ່ບົ່ງໄວ້

## **ວ່າດ້ວຍ ການສ້າງສາຍຕິດຕໍ່ພົວພັນ** **G-11.0503**

ຄະນະກຳມະການ ຕ້ອງເປີດການຕິດຕໍ່ພົວພັນກັບບັນດາອາຈານ, ຜູ້ປົກຄອງທີ່ເປັນສະມາຊິກຂອງຄະນະ ປົກຄອງ, ແລະຄະນະປົກຄອງຂອງພາກ ຢູ່ທຸກເວລາ.

### ວ່າດ້ວຍ ສະພາຕ່ຳ ແລະອົງການຕາງໜ້າສະພາສູງ G-11.0504

ຄະນະກຳມະການຂອງພາກກ່ຽວກັບການຮັບໃຊ້ ຕ້ອງອາສັຍສະພາຕ່ຳ ແລະສະພາສູງ ເພື່ອການຮັບເອົາຂ່າວຄາວຕ່າງໆ ແລະເພື່ອການຊ່ວຍເຫຼືອຕ່າງໆ ໃນວຽກງານຂອງອາຈານ ແລະການພົວພັນຂອງຄຣິສຕະຈັກ. ສະພາຕ່ຳ ຕ້ອງສ້າງ ຄະນະຜູ້ ຕາງໜ້າທີ່ແທດເໝາະ ເພື່ອຮ່ວມກັນທຳງານກັບຄະນະກຳມະການຕ່າງໆຂອງພາກ. ສະພາສູງ ຕ້ອງສ້າງຄະນະຜູ້ຕາງໜ້າ ທີ່ເໝາະສົມເພື່ອອຳນວຍຄວາມສະດວກ ແລະສະໜັບສະໜູນ ວຽກງານຂອງພາກ ແລະຂອງສະພາຕ່ຳ ໃນວຽກງານດັ່ງກ່າວນີ້.

## ຈົບພາກທີ 11

## ພາກ XII. ວ່າດ້ວຍສະພາຕ່ຳ (ຊີໂນດ) G-12.0000

### 1. ໂດຍທົ່ວໄປ: G-12.0100

### ວ່າດ້ວຍສະມາຊິກ G-12.0101

ຊີໂນດ ແມ່ນພາກສ່ວນນຶ່ງຂອງຊີວິດຄຣິສຕະຈັກ ແລະໃນວຽກງານການຮັບໃຊ້ ຊຶ່ງປະກອບດ້ວຍພາກເພຣັສໄບເທີຣີ ບໍ່ຕ່ຳກວ່າ ສາມພາກ ຢູ່ພາຍໃນຂອບເຂດສະເພາະໃດນຶ່ງ. ໃນເວລາມີກອງປະຊຸມຊີໂນດ ຈະຕ້ອງປະກອບດ້ວຍຜູ້ຕາງໜ້າທີ່ເລືອກມາຈາກ ພາກເພຣັສໄບເທີຣີຕ່າງໆນັ້ນ. ຊີໂນດຈະຕ້ອງເປັນຜູ້ກຳໜົດ ໂດຍອີງໃສ່ສຽງສ່ວນຫຼາຍຂອງພາກ ກ່ຽວກັບການລົງຄະແນນສຽງ ໃດນຶ່ງ ແລະການສົມດູນຂອງຈຳນວນຜູ້ຕາງໜ້າທີ່ມາຈາກພາກ ເຊັ່ນດຽວກັນກັບວິທີການໃນການປະກອບວຽກງານສຳລັບ ແລະການສເນີ ຊຶ່ງບົ່ງໄວ້ໃນ G-9.0104 ແລະ G-9.0105. ຜູ້ຕາງໜ້າທີ່ມາຈາກແຕ່ລະພາກຈະຕ້ອງມີການແບ່ງພາກສ່ວນ ໃຫ້ເທົ່າກັນຣະຫວ່າງຜູ້ປົກຄອງ ແລະອາຈານ. ແຕ່ລະບຸກຄົນທີ່ເລືອກມາເປັນຜູ້ຄວບຄຸມ ຈະຕ້ອງຖືກລົງທະບຽນໃນຖານະເປັນ ສະມາຊິກຂອງຊີໂນດ ຈົນກວ່າຈະມີການເລືອກຜູ້ສືບທອດຕໍ່ໄປ ແລະຜູ້ນັ້ນໄດ້ຖືກແຕ່ງຕັ້ງແທນ ແລະຜູ້ກ່ຽວຕ້ອງຖືກລົງທະບຽນ ໄວ້ໃນສະມາຊິກທີ່ສືບຕໍ່ພົວພັນກັບຊີໂນດ.

### ວ່າດ້ວຍຄວາມຮັບຜິດຊອບ: G-12.0102

ຊີໂນດ ແມ່ນອົງການປົກຄອງພາກກາງ ທີ່ມີໜ້າທີ່ຮັບຜິດຊອບຕໍ່ການຮັບໃຊ້ຂອງຄຣິສຕະຈັກໃນທົ່ວຂອບເຂດຂອງຕົນ. ດັ່ງນັ້ນ ຈຶ່ງມີໜ້າທີ່ ແລະສິດອຳນາດດັ່ງນີ້:

a. ພັທນາ, ໂດຍຮ່ວມກັບພາກ, ປະກາດຍຸທສາດໃນການຮັບໃຊ້ຂອງຄຣິສຕະຈັກອອກ ພາຍໃນຂອບເຂດຂອງຕົນ ດັ່ງທີ່ໄດ້ບົ່ງໄວ້ໃນ G-3.0000;

b. ເປັນຜູ້ລິງມືໃນການຮັບໃຊ້ໃນຮູບແບບຕ່າງໆ ເພື່ອເປັນແສງສວ່າງ ເບື້ອງທາງແກ່ຍຸທສາດອັນໃຫຍ່ຂອງສະພາສູງ.

c. ພັທນາ, ໂດຍຮ່ວມກັບພາກ, ຮ່ວມກັນໃນການວາງແຜນ ແລະຕັ້ງເປົ້າໝາຍ ເພື່ອພົບສຳເຣັດໃນ

ແຜນການຮັບໃຊ້, ຈັດສັນຫາສິ່ງຊຸກຍູ້ ແລະແນວທາງແກ່ພາກຂອງຕົນ ແລະຕິດຕາມວຽກງານຂອງພວກເຂົາ.

d. ເພື່ອສົ່ງເສີມສະໜັບສະໜູນ, ຍືນຢັດຕໍ່ກົດທັມມະນູນ G-9.0104, ໃນຫຼັກການພື້ນຖານສຳຄັນ ກ່ຽວກັບການ ປະກອບສ່ວນ ແລະການເປີດກວ້າງ ໃນການຮັບເອົາພະນັກງານແລະການເລືອກຕັ້ງສະມາຊິກ ຂອງຄະນະກຳມະການຕ່າງໆ. ຄະນະສະພາ, ຄະນະບອດ໌, ແລະຄະນະກຳມະການສ້າງຕັ້ງນະໂຍບາຍອື່ນໆ ແລະຄະນະໃຫ້ ຄຳແນະນຳອື່ນໆ, ເພື່ອເຮັດໃຫ້ການອອກສຽງຕ່າງໆນັ້ນ ມີຄວາມຍຸຕິທັມ.

e. ເພື່ອພັທນາ ແລະຈັດຫາແຫຼ່ງທີ່ຈຳເປັນ ເພື່ອອຳນວຍຄວາມສະດວກໃນການຮັບໃຊ້ພາຍໃນພາກ ພ້ອມນັ້ນກໍຈັດຫາແນວທາງ ແລະຫຼັກການ ເພື່ອການຕີຣາຄາວຽກງານ.

f. ເພື່ອໃຫ້ການປຶກສາຫາລືກັບສະມາຊິກຂອງພາກ ກ່ຽວກັບງົບປະມານທົ່ວໄປຂອງເຂົາໃນການປະກາດ, ການສ້າງຕັ້ງ ຕຳແໜ່ງຕ່າງໆຂອງເຈົ້າພະນັກງານບໍຣິຫານ, ການໃຫ້ຄ່າຊົດເຊີຍຢ່າງຍຸຕິທັມ, ນະໂຍບາຍຂອງການບັນຈຸຄົນງານ, ແລະການປະຕິບັດການຮັບເອົາຄົນງານຢ່າງຍຸຕິທັມ.

g. ເພື່ອປະສົມປະສານວຽກງານກັບຄະນະກຳມະການຂອງພາກໃນການຮັບໃຊ້ພຣະເຈົ້າ ແລະຊ່ວຍເຫຼືອສະມາຊິກ ຂອງພາກໃນວຽກງານກ່ຽວກັບການເອີ້ນຮຽກ, ການສະຖາປະນາ, ແລະການຕັ້ງອາຈານ.

h. ເພື່ອໃຫ້ຄວາມສະດວກໃນການຕິດຕໍ່ພົວພັນກັນຣະຫວ່າງພາກຕ່າງໆ, ພາຍໃນພາກເອງ, ແລະສະພາສູງ.

i. ເພື່ອໃຫ້ຄວາມສະດວກໃນການເຮັດວຽກງານຮ່ວມກັນໃນການຮັບໃຊ້ ກັບຄະນະອື່ນ ແລະຫ້ອງການຕາງໜ້າອື່ນໆພາຍໃນຂອບເຂດຂອງຕົນ.

j. ເພື່ອຈັດຫາການຮັບໃຊ້ ແລະຣາຍການຕ່າງໆໃຫ້ແກ່ພາກ, ຄະນະປົກຄອງ, ຄຣິສຕະຈັກ, ແລະສະມາຊິກຕ່າງໆ ພາຍໃນຂອບເຂດຂອງຕົນທີ່ສາມາດທຳການໄດ້ຢ່າງມີປະສິດທິພາບໃນທົ່ວຂອບເຂດທີ່ຕົນເອງຕັ້ງຢູ່.

k. ເພື່ອທຳການຈັດຕັ້ງ ແລະແບ່ງພາກໃໝ່, ໂຮມກັນ, ຫຼືທຳການເຊື່ອມທັງໝົດພາກ ຫຼືສ່ວນນຶ່ງຂອງພາກເຂົ້າກັນໂດຍອີງໃສ່ການເຫັນດີຂອງສະພາສູງ.

l. ເພື່ອຮັບໃຊ້ໃນວຽກງານກ່ຽວກັບຄະດີ ໂດຍອີງຕາມຣະບຽບທີ່ບົ່ງໄວ້ໃນປຶ້ມກົດວິນັຍນັ້ນ.

m. ເພື່ອໃຫ້ຄຳຕັກເຕືອນ ຫຼືເປັນພະຍານ ຕໍ່ສູ້ກັບຂໍ້ຜິດພາດໃນທິສດີ ຫຼືສິ່ງຜິດສິລທັມໃນການປະຕິບັດວຽກງານໃນຂອບເຂດວິນັຍທີ່ຕົນຮັບຜິດຊອບ.

n. ເພື່ອອ່ານຄືນບົດຣາຍງານຂອງພາກຕ່າງໆ ແລະເພື່ອເບິ່ງວ່າ ພວກເຂົາໄດ້ເຮັດຕາມກົດທັມມະນູນຂອງຄຣິສຕະຈັກ

o. ເພື່ອຮັກສາໄວ້ຢ່າງສມ່ຳສເມີ ຫຼືສືບຕໍ່ ໃນສາຍພົວພັນກັບສະພາສູງ ຊຶ່ງຮວມດ້ວຍ:

1/ ເຫັນວ່າຄວາມເປັນຣະບຽບ ແລະການໃຫ້ຄຳແນະນຳ ຂອງສະພາສູງໄດ້ຖືກຮັບຮູ້ ແລະນຳໄປປະຕິບັດ

2/ ສເນີໃຫ້ສະພາສູງໃນວຽກງານທີ່ຖືວ່າ ອາດເປັນສິ່ງທີ່ເປັນຫ່ວງຕໍ່ການປະກາດຂອງຄຣິສຕະຈັກ

p. ເພື່ອທຳການສ້າງຕັ້ງ ຫຼືຮັກສາ ການພົວພັນກັບພວກອື່ນ ຊຶ່ງຈະທຳໃຫ້ຊີວິດແຫ່ງການປະກາດຂອງຄຣິສຕະຈັກ ຂະຫຍາຍກ້າງອອກໄປໃນຂອບເຂດຂອງຕົນ.

q. ເພື່ອຈັດຫາແບບວິທີໃນການປົກຄອງ ເພື່ອປະຕິບັດໃຫ້ໄດ້ໃນເປົ້າໝາຍ ແລະຣາຍການຕ່າງໆຂອງຕົນ.

r. ເພື່ອສ້າງຕັ້ງ ແລະດູແລ ຫ້ອງການຕາງໜ້າ ແລະໜ່ວຍງານຕ່າງໆ ໃຫ້ທຳງານຂອງຕົນ, ຮອມທັງສະພາຊີໂນດໃນເວລາທີ່ ຊີໂນດ໌ ເຫັນວ່າສົມຄວນຕ້ອງກອດກາຄືນຢ່າງເປັນປະຈຳ ໃນຮູບການທຳງານຂອງຊີໂນດ໌ ກັບວຽກງານການປະກາດຂອງຕົນ.

S. ເພື່ອສ້າງຕັ້ງ ຄະນະກຳມະການເລືອກຕັ້ງໃຫ້ມີຈຳນວນເທົ່າທຽມກັນຣະຫວ່າງ ອາຈານ, ສັດຕຣີ, ແລະບຸຣຸດ (ເຊັ່ນໃຫ້ມີ ນຶ່ງສ່ວນສາມຂອງແຕ່ລະພາກສ່ວນ D (G-9.0801, G-11.0501, G-12.0102d, G-13.0111, G-13.0202)

t. ເພື່ອທຳການຕົກລົງຢ່າງມີໄຊ, ເປັນຕໍ່, ແລະບັນຫາຮີບດ່ວນກ່ຽວກັບການແບ່ງແຍດເຊື້ອຊາດຜິວພັນ, ການໃຊ້ຄວາມຮຸນແຮງໃນບັນຫາເຊື້ອດຊາດຜິວພັນ, ແລະຄວາມອະຍຸຕິທັມໃນບັນຫາເຊື້ອຊາດ, ເຊັ່ນດຽວກັນກັບ ຕໍ່ແນວຄິດທີ່ມີລັກສະນະສ້າງຄວາມກົດຂີ່ຂົ່ມເຫັງຕໍ່ເຊື້ອຊາດຜິວພັນຢູ່ພາຍໃນຄຣິສຕະຈັກ ແລະໃນຂອບເຂດຂອງ ການເມືອງ ແລະການສັງຄົມ.

## 2. ວ່າດ້ວຍການປະຊຸມ **G-12.0200**

### ວ່າດ້ວຍການປະຊຸມ **G-12.0201**

ຊີໂນດ໌ ຄວນຕ້ອງທຳການປະຊຸມຢ່າງນ້ອຍ ສອງປີຕໍ່ຄັ້ງ. ຜູ້ຄວບຄຸມ ອາດຈະຮຽກກອງປະຊຸມແບບພິເສດຕາມຄຳຮ້ອງຂໍ ຫຼືໂດຍ ການເຫັນພ້ອມກັນຂອງອາຈານ ສິບຄົນ ແລະຜູ້ປົກຄອງ ສິບຄົນ, ຊຶ່ງເປັນຕົວແທນໃຫ້ຢ່າງນ້ອຍ ສາມພາກເພຣັສໄບເທີຣີ, ແລະພາກເຫຼົ່ານັ້ນຕ້ອງມີຕົວແທນຂອງຕົນໃນກອງປະຊຸມຜ່ານມາ. ຜູ້ຄວບຄຸມຈະບໍ່ສາມາດທຳການປະຕິບັດໄດ້ ແຕ່ສະມຽນທີ່ຖືກ ມອບໝາຍນັ້ນສາມາດທຳການໄດ້ ຊຶ່ງໂດຍກໍຣະນີດຽວກັນນັ້ນສາມາດປະກາດເອີ້ນກອງປະຊຸມໄດ້. ຖ້າຫາກ ທັງສອງ ທັງຜູ້ຄວບຄຸມ ແລະສະມຽນ ບໍ່ສາມາດຮຽກປະຊຸມໄດ້, ຜູ້ຄວບຄຸມທີ່ຜ່ານມາກ່ອນຜູ້ປັດຈຸບັນນີ້ ສາມາດເອີ້ນກອງປະຊຸມໄດ້ ໂດຍອີໃສ່ກໍຣະນີດຽວກັນນັ້ນ. ສະພາສູງອາດແນະນຳໃຫ້ຊີໂນດ໌ ໃຫ້ເປີດກອງປະຊຸມພິເສດ ອີງໃສ່ກໍຣະນີມີທຸຣະກິດພິເສດ ໃດນຶ່ງ. ພວກຕົວແທນສຳຣັບກອງປະຊຸມພິເສດນີ້ ຈະຕ້ອງເປັນຜູ້ຕົວແທນທີ່ເຄີຍຖືກເລືອກມາໃນກອງປະຊຸມຊຸດກ່ອນ ຫຼືຜູ້ປ່ຽນແທນຂອງພວກເຂົາ. ພາກນຶ່ງ ຄວນເລືອກເອົາຕົວແທນ ຫຼືຜູ້ປ່ຽນແທນ ເພື່ອປ່ຽນແທນຜູ້ທີ່ສູນເສັຽຊີວິດ ຫຼືປ່ຽນການເປັນສະມາຊິກຂອງພາກ. ປະກາດແຈ້ງການຂອງການປະຊຸມພິເສດ ຈະບໍ່ໃຫ້ຫຼຸດ 15 ວັນ ເພື່ອແຈ້ງໃຫ້ຜູ້ເປັນຕົວແທນທີ່ຖືກ ເລືອກໄວ້ໃນກອງປະຊຸມຊຸດກ່ອນຊາບລ່ວງໜ້າ ແລະໃຫ້ທາງສະມຽນຂອງພາກຊາບ. ໃບແຈ້ງການນັ້ນຕ້ອງບອກເຖິງຈຸດປະສົງ ເປົ້າໝາຍຂອງກອງປະຊຸມພິເສດນັ້ນ ແລະຈະບໍ່ມີວຽກງານໃດໆນອກເໜືອຈາກທີ່ໄດ້ບອກໄວ້ໃນແຈ້ງການນັ້ນ ຈະນຳມາສຶກສາ.

### ວ່າດ້ວຍ ອົງປະກອບຂອງກອງປະຊຸມະ **G-12.0202**

ອົງປະກອບຂອງກອງປະຊຸມຊີໂນດ໌ ຕ້ອງມີຜູ້ເປັນຕົວແທນ 20 ທ່ານ, ຢ່າງນ້ອຍ 10 ຄົນຕ້ອງແມ່ນຜູ້ປົກຄອງ ແລະຢ່າງນ້ອຍ 10 ຄົນໃນນັ້ນຕ້ອງແມ່ນອາຈານ ຊຶ່ງເປັນຕົວແທນຢ່າງນ້ອຍ ສາມພາກ, ຫຼືສາມສ່ວນສີ່

ຂອງວພວກຜູ້ຕົວແທນ ສາມາດມີສິດ ໃນການຮັບໃຊ້ກອງປະຊຸມນັ້ນ ເປັນຕົວແທນມາຈາກ ສາມພາກເປັນຢ່າງນ້ອຍ. ຊີໂນດ໌ ສາມາດດັດແປງຈຳນວນອົງປະກອບ ຂອງກອງປະຊຸມໂດຍເອົາຈຳນວນຫຼາຍເທົ່າໃດກໍໄດ້.

### ວ່າດ້ວຍສະມາຊິກທີ່ຄວນສົ່ງການຕິດຕໍ່ພົວພັນ G-12.0203

ພວກຜູ້ປົກຄອງທີ່ຫ້າວຫັນໃນການປົກຄອງຄຣິສຕະຈັກໃດນຶ່ງ ຫຼືໃນຄຣິສຕະຈັກຂອງຊາວຄຣິສຕຽນອື່ນໆ, ຜູ້ຊຶ່ງມີໜ້າໃນກອງ ປະຊຸມຊີໂນດ໌, ຄວນຖືກເຊີນຈາກຊີໂນດ໌ ໂດຍໃຫ້ນັ່ງໃນສະຖານທີ່ຂອງພວກທີ່ມີການຕິດຕໍ່ພົວພັນນັ້ນ ໂດຍສາມາດ ອອກສຽງໄດ້ ແຕ່ບໍ່ສາມາດລົງຄະແນນສຽງ.

### ວ່າດ້ວຍການປະກອບສ່ວນ G-12.0204

ແຕ່ລະພາກ ຄວນມີພາກສ່ວນໃນຄວາມຮອບຜິດຊອບຂອງຊີໂນດ໌ ແລະທຳການຮັບໃຊ້ໂດຍຜ່ານຜູ້ເປັນຕົວແທນຂອງຕົນ, ແລະໂດຍຜ່ານສະມາຊິກທີ່ ຢ່າງນ້ອຍເປັນຜູ້ປົກຄອງ ຫຼືອາຈານ ຈາກແຕ່ລະພາກ, ຮັບການແຕ່ງຕັ້ງຈາກພາກ, ແລະໄດ້ຮັບການ ເລືອກຕັ້ງຈາກຊີໂນດ໌ ໃຫ້ຢູ່ໃນສະພາຊີໂນດ໌ ໃນບ່ອນທີ່ມີສະພານັ້ນເກີດຂຶ້ນ, ແລະໃນແຕ່ລະຄະນະກຳມະການຖາວອນຂອງຊີໂນດ໌. ຊີໂນດ໌ ຄວນຈັດໃຫ້ສະມາຊິກທີ່ມາຈາກພາກໃຫ້ຢູ່ໃນສະພາ ແລະຄະນະກຳມະການຖາວອນຂອງຊີໂນດ໌ແບບ ສັບປ່ຽນກັນ ໂດຍການມີອາຈານມາແທນຜູ້ປົກຄອງ ຫຼືໂດຍທາງກົງກັນຂ້າມ. ຄະນະກຳມະການແຕ່ງຕັ້ງຂອງຊີໂນດ໌ ຄວນປະສົມ ປະສານງານກັນໃນວຽກງານນີ້. ຄວນເຂົ້າໃຈວ່າ ຊີໂນດ໌ຕ້ອງການຜູ້ຕາງໜ້າຈາກພາກ ແລະຕ້ອງການສະມາຊິກໂດຍທົ່ວໄປ, ແລະຕ້ອງຮູ້ວ່າ ການຕິດພັນນີ້ ໄດ້ເປັນສິ່ງສຳຄັນພື້ນຖານໃນການປະກອບສ່ວນ ແລະການເປັນຜູ້ຕາງໜ້າຊຶ່ງໄດ້ບົ່ງໄວ້ໃນ G-9.0104.

### ૩. ວ່າດ້ວຍການການຈັດບໍຣິການອື່ນໆ G-12.0300

### ວ່າດ້ວຍຄະນະກຳມະການແຫ່ງຜູ້ຕາງໜ້າ G-12.0301

ຊີໂນດ໌ແຕ່ລະບ່ອນຈະຕ້ອງສ້າງຕັ້ງຄະນະກຳມະການແຫ່ງຜູ້ຕາງໜ້າດັ່ງໄດ້ບົ່ງໄວ້ໃນ G-9.0105 ຊຶ່ງຈະເປັນຜູ້ໃຫ້ຄຳປຶກສາຫາລື ແກ່ຄະນະກຳມະການເລືອກຕັ້ງຂອງຊີໂນດ໌ ໃນຄວາມຕ້ອງການອັນໃດນຶ່ງໃນການເລືອກຕັ້ງໃນກໍຣະນີທີ່ມີຄວາມຕ້ອງການ ເພີ້ມຕື່ມພວກຜູ້ຕາງໜ້າ. ຄະນະກຳມະການຜູ້ຕາງໜ້າ ຈະຕ້ອງຣາຍງານຢ່າງນ້ອຍ ສອງປີຕໍ່ຄັ້ງຕໍ່ຊີໂນດ໌ ໃນຄວາມຄືບໜ້າໃນການໃຫ້ຄວາມເປັນທຳແກ່ການເປັນຜູ້ຕາງໜ້າ ໃນກໍຣະນີຂອງບຸກຄົນທີ່ໄດ້ບົ່ງໄວ້ໃນ G--4.0403.

### ວ່າດ້ວຍ ເຈົ້າພະນັກງານຮັບໃຊ້ G-12.0302

ຊີໂນດ໌ ສາມາດອະນຸຍາດໃຫ້ມີ ເຈົ້າພະນັກງານບໍຣິຫານຂອງຊີໂນດ໌ ແລະສ້າງຕັ້ງຕຳແໜ່ງເຈົ້າພະນັກງານອື່ນໆທີ່ຈຳເປັນ. ຜູ້ບໍຣິຫານ ຈະຕ້ອງຖືກແຕ່ງຕັ້ງເຂົ້າສູ່ຊີໂນດ໌ ໂດຍຄະນະສະພາ ຫຼືໂດຍຄະນະຜູ້ຕາງໜ້າພິເສດແຫ່ງການເລືອກຕັ້ງ ຊຶ່ງຈັດຕັ້ງສະເພາະໃນເປົ້າໝາຍນັ້ນ. ໃນການຮັບສະມັກງານໃນຕຳແໜ່ງຕ່າງໆ ຊຶ່ງຮວມດ້ວຍເຈົ້າພະນັກງານການປົກຄອງ, ຊີໂນດ໌ ຈະຕ້ອງໃຫ້ຄວາມສັງເກດເຖິງພື້ນຖານສຳຄັນໃນການໃຫ້ຄວາມຍຸຕິທັມຕໍ່ການເປັນຜູ້ຕາງໜ້າ ແລະການໃຫ້ຄວາມ ແນະນຳທີ່ບົ່ງໄວ້ໃນ G-9.0404

ແລະການກະກຽມໃຫ້ຄຣິສຕະຈັກໂດຍທົ່ວໄປກ່ຽວກັບແຜນການແຫ່ງຄວາມເອກະພາບ ໃນການທຳງານ ແລະການກະທຳທີ່ຖືກຕ້ອງໃນ :ຊຢໂໃຂຟຂຢ ຊີໂນດສາມາດໃຫ້ອະນຸຍາດແກ່ເຈົ້າພະນັກງານການປົກຄອງ ໃຫ້ມີບໍລິການຮັບໃຊ້ແກ່ພາກເພຣັສໄບເທີຣີ ຕາມຄຳຮ້ອງຂໍຂອງພາກ G-11.0303

## ວ່າດ້ວຍ ງົບປະມານການປະກາດໂດຍທົ່ວໄປ G-12.0303

ຊີໂນດ໌ ຄວນມີງົບປະມານໃນການປະກາດໂດຍທົ່ວໄປ ໃນການສະໜັບສະໜູນການປະກາດຂອງຄຣິສຕະຈັກ ໃນຂອບເຂດຕົນເອງ. ໃນເວລາທີ່ຊີໂນດ໌ ເພີ້ມຂື້ນ ຫຼືໃຊ້ຈ່າຍທຶນເຫຼົ່ານັ້ນ ຄວນໃຊ້ໃນກໍຣະນີທີ່ເປັນປະໂຫຍດ ແກ່ການປະກາດຂອງຄຣິສຕະຈັກ. ຊີໂນດ໌ ຄວນສ້າງແຜນການ ແລະທຳໃຫ້ສຳເຣັດງົບປະມານການປະກາດໂດຍທົ່ວໄປນີ້ ຫຼັງຈາກໄດ້ຮັບການຢັ້ງຢືນແນະນຳຈາກສະພາສູງ ແລະໃນກໍຣະນີທີ່ສອດຄ່ອງກັບຍຸທສາດຂອງຄຣິສຕະຈັກທັງມວນ.

## ວ່າດ້ວຍການບັນທຶກເກັບກຳ G-12.0304

ຊີໂນດ໌ ຄວນເກັບກຳບັນທຶກໃຫ້ໄດ້ທັງໝົດ ແລະຖືກຕ້ອງທີ່ສຸດເພື່ອຈະສົ່ງຍື່ນໃຫ້ກອງປະຊຸມສະພາສູງຄັ້ງຕໍ່ໄປ ເພື່ອການອ່ານຄືນ ແລະການຄວບຄຸມ. ຈະຕ້ອງໄດ້ຣາຍງານຕໍ່ສະພາສູງໃນ ຈຳນວນພາກຂອງຕົນ, ແລະໂດຍທົ່ວໄປແລ້ວ, ຄືການປ່ຽນແປງສຳຄັນທີ່ເກີດຂຶ້ນຢູ່ພາຍໃນເຂດຮັບຜິດຊອບຂອງຕົນ.

## ວ່າດ້ວຍ ການກວດກາ G-12.0305

ຊີໂນດຄວນມີການອ່ານຄືນກ່ຽວກັບວຽກງານການເງິນຢ່າງຄົບຖ້ວນໃນທຸກໆປຶ້ມສະມຸດບັນຊີທີ່ກ່ຽວກັບການເງິນ ປີລະຄັ້ງ ໂດຍໜ່ວຍການບັນຊີແຫ່ງຣັດ ຫຼືເອກະຊົນ. ການກວດກາດັ່ງກ່າວຈະຕ້ອງບໍ່ກ່ຽວກັບນາຍຄັງ. ການໃຊ້ຄຳສັພໃນທີ່ນີ້ ແມ່ນເພື່ອ ຈັດໃຫ້ມີການແນະນຳໂດຍທົ່ວໄປ ແລະບໍ່ແມ່ນເຈຕນາທີ່ຖືວ່າເປັນສິ່ງຮຽກຮ້ອງໃຫ້ມີ ຫຼືບໍ່ໄດ້ສເນີໃຫ້ມີກວດກວດກາແບບ ສະເພາະເຈາະຈົງໃດນຶ່ງ ຫຼືການກະທຳໃດນຶ່ງທີ່ນັກການບັນຊີທັງຫຼາຍຄວນເຂົ້າໃຈ.

## ວ່າດ້ວຍ ການປະກັນໄພ G-12.0306

ຊີໂນດຄວນມີສັພສິນບັດ ແລະການປະກັບໄພ ເພື່ອປ້ອງກັນອັຄຖຸ, ຣາຍການ, ເຈົ້າພະນັກງານ, ແລະພະນັກງານທີ່ຖືກເລືອກຫຼື ມອບໝາຍໜ້າທີ່ໃຫ້ນັ້ນ.

# ພາກ XIII ວ່າດ້ວຍສະພາສູງ G-13.0000

## 1/ ວ່າດ້ວຍ ສະພາສູງ G-13.0100

## ວ່າດ້ວຍນິຍາມ G-13.0101

ສະພາສູງ ຄືອົງການປົກຄອງສູງສຸດຂອງຄຣິສຕະຈັກ ແລະເປັນຕົວແທນໃຫ້ແກ່ການເຕົ້າໂຮມກັນເປັນອັນນຶ່ງອັນດຽວກັນຂອງບັນດາຊີໂນດ໌, ພາກ, ຄະນະປົກຄອງ, ແລະຄຣິສຕະຈັກ ຂອງເພຣັສໄບທີຣຽນ ແຫ່ງສະຫະຣັດອາເມຣິກາ.

## ວ່າດ້ວຍ ສະມາຊິກ G-13.0102

ສະພາສູງຄອນປະກອບດ້ວຍຈຳນວນຜູ້ປົກຄອງ ແລະອາຈານ ຈາກແຕ່ລະພາກເທົ່າທຽມກັນໃນພາກສ່ວນດັ່ງລຸ່ມນີ້: ແຕ່ລະພາກ ທີ່ມີສະມາຊິກບໍ່ເກີນ ໑໐,໐໐໐ ຄອນເລືອກເອົາຜູ້ປົກຄອງຄົນນຶ່ງ ແລະອາຈານຄົນນຶ່ງ, ແລະແຕ່ລະພາກ ທີ່ມີສະມາຊິກ ເກີນກວ່າ ໑໐,໐໐໐ ຄອນເລືອກເອົາ ຜູ້ປົກຄອງຜູ້ນຶ່ງ ແລະອາຈານຜູ້ນຶ່ງ ໃນແຕ່ລະສະມາຊິກອີກ ໑໐,໐໐໐໐ ຄົນທີ່ຕື່ມເຂົ້າມານັ້ນ ຫຼືຕໍ່ ແຕ່ລະສະມາຊິກທີ່ຕື່ມເຂົ້າມາບໍ່ຕ່ຳກວ່າ ໕,໐໐໐ ຄົນ, ແລະຜູ້ທີ່ຖືກເລືອກມານີ້ ຈະຖືກເອີ້ນວ່າ ເປັນຜູ້ຕາງໜ້າຕໍ່ສະພາສູງ. ແຕ່ລະຄົນທີ່ຈະຖືກເລືອກມາເປັນຜູ້ຄອບຄຸມ ຈະຕ້ອງຖືກມີຊື່ໃນທະບຽນ ສະມາຊິກຂອງສະພາສູງ ຈົນກ່ວາຜູ້ສືບທອດຂອງຜູ້ກ່ຽວ ຈະຖືກເລືອກມາ ແລະຖືກແຕ່ງຕັ້ງໃນແທນບ່ອນນັ້ນ ແລະຈາກນັ້ນ ຜູ້ກ່ຽວຕ້ອງມີຊື່ຢູ່ໃນທະບຽນແຫ່ງສະມາຊິກທີ່ມີການພົວພັນ ຂອງສະພາສູງ.

## ວ່າດ້ວຍ ຄວາມຮັບຜິດຊອບ G-13.0103

ສະພາສູງ ເປັນອົງປະກອບແຫ່ງຂໍ້ຜູກມັດໃນການເຕົ້າໂຮມກັນ, ການຊຸມຊຸມ, ແລະການປະກາດ ທ່າມກາງ ຄຣິສຕະຈັກທັງໝົດ ແລະອົງການປົກຄອງທັງໝົດ. ດັ່ງນັ້ນ ຈຶ່ງມີສິດທິ ແລະອຳນາດໃນການ

a. ຈັກຕັ້ງວຽກງານສຳຄັນຕົ້ນຕໍຂອງຄຣິສຕະຈັກ ໂດຍການຮັກສາໄວ້ຊຶ່ງການປະກາດຂອງຄຣິສຕະຈັກ ໃຫ້ຢູ່ໃຕ້ ພຣະຄຣິສດັ່ງທີ່ໄດ້ບົ່ງໄວ້ໃນ G-3.0000

b. ພັທນາຈຸດມຸ້ງໝາຍໂດຍທົ່ວໄປໃນການປະກາດ ແລະຍຸທສາດທີ່ກວ້າງຂວາງ ເພື່ອເປັນສິ່ງນຳພາ ຄຣິສຕະຈັກ ໃນທຸກຣະດັບຊັ້ນແຫ່ງການດຳຣົງຊີວິດ

c.ຈັດຫາແບບຣາຍການດຳເນີນງານທີ່ດີເດັ່ນ ທີ່ເໝາະສົມກັບການສົມດູນກັນ ແລະການແຕກຕ່າງກັນ ພາຍໃນວຽກງານການປະກາດຂອງຄຣິສຕະຈັກ

d. ສ້າງຕັ້ງ ແລະປົກຄອງວຽກງານຮັບໃຊ້ພຣະເຈົ້າ ທັ້ງໃນປະເທດ ແລະສາກົນ ໃນການເປັນພະຍານ, ການບໍຣິການ, ໃຫ້ເຕີບໃຫຍ່, ແລະການພັທນາໃນວຽກງານພຣະເຈົ້າ

e. ຈັດຫາຣະບົບວິທີໃນການຮັບໃຊ້ປົກຄອງ ແລະຄວາມສຳເຣັດໃນເປົ້າໝາຍ ແລະຣາຍການຕ່າງໆ ຂອງຕົນ.

f. ຈັດຫາການບໍຣິການແກ່ຄຣິສຕະຈັກທັງໝົດ ທີ່ສົມຄວນຈະທຳກິຈການໄດ້ດີ ໂດຍເລີ່ມຈາກຖານທີ່ຢູ່ ໃນປະເທດ

g. ສ້າງຕັ້ງ ແລະຮັກສາຫ້ອງການຂອງສະພາສູງ

h. ສ້າງຕັ້ງ ແລະອຳນວຍການ ແກ່ອົງການຕາງໜ້າຕ່າງໆ ແລະໜ່ວຍງານຕ່າງໆ ໃຫ້ເຮັດວຽກສຳຄັນ ຂອງຕົນ, ຮວມທັງຄະນະສະພາສູງດ້ວຍ, ຈັດຫາການກວດກາຢ່າງເປັນປະຈຳໃນການດຳເນີນວຽກງານ ສາຍພົວພັນຣະຫວ່າງ ການຈັດຕັ້ງຂອງສະພາສູງ ແລະວຽກງານການປະກາດຂອງມັນ.

i. ຮັບຮອງເອົາງົບປະມານປະຈຳປີທີ່ໃຊ້ການໄດ້ຂອງສະພາສູງ, ຈັດຫາຣາຍງານຢ່າງຄົບຖ້ວນຕໍ່ຄຣິສຕະຈັກ ທັງໝົດ ໃນການຕັດສິນຂອງຕົນເອງກ່ຽວກັບບັນຫານັ້ນ.

j. ຈັດຫາ ການພົວພັນພາຍໃນຄຣິສຕະຈັກ;

k. ຄວບຄຸມວຽກງານຂອງຊີໂນດ໌ ແລະເພື່ອອຳນວຍຄວາມສະດວກໃຫ້ແກ່ການປະກອບສ່ວນໃນວຽກງານການປະກາດຂອງຄຣິສຕະຈັກ.

l. ກວດຄືນບົດລາຍງານຕ່າງໆຂອງຊີໂນດ໌ ແລະເບິ່ງວ່າ ເຂົາໄດ້ເຮັດຕາມກົດທັມະນູນຂອງຄຣິສຕະຈັກຫຼືບໍ່

m. ຈັດຕັ້ງຊີໂນດ໌ໃໝ່ ແລະແບ່ງແຍກອອກ, ໂຮມເຂົ້າກັນ, ຫຼືເຊື່ອມເຂົ້າກັນຂອງຊີໂນດ໌ ຫຼືພາກສ່ວນນຶ່ງຂອງຊີໂນດ໌ ທີ່ດຳຣົງຢູ່ແລ້ວໃນເມື່ອກ່ອນ

n. ຮັບຮູ້ອົງການຈັດຕັ້ງ, ການແບ່ງແຍກ, ການຮອມກັນ, ຫຼືການເຊື່ອມເຂົ້າກັນຂອງພາກ ຫຼືພາກສ່ວນນຶ່ງຂອງພາກໂດຍທາງຊີໂນດ໌ເປັນຜູ້ດຳເນີນການ

o. ບໍຣິການຮັບໃຊ້ໃນການຄະດີຕ່າງໆ ໂດຍອີງໃສ່ຄວາມສອດຄ່ອງຂອງກົດຣະບຽບ ແຫ່ງວິນັຍນັ້ນ

p. ໃຫ້ຄວາມອົບອຸ່ນ ຫຼືເປັນພະຍານຕໍ່ສູ້ກັບທິສດີທີ່ຜິດພາດ ຫຼືການປະຕິບັດທີ່ໄຮ້ສິນທັມຢູ່ພາຍໃນຫຼືນອກຄຣິສຕະຈັກ

q. ຕັດສິນເອົາການໂຕ້ແຍ້ງກັນທີ່ນຳມາພິຈາຣະນາ ແລະເພື່ອໃຫ້ຄຳແນະນຳ ແລະບົດຮຽນໃນກໍຣະນີທີ່ຖືກນຳສິ່ງໃຫ້ສອດຄ່ອງກັບກົດທັມະນູນ.

r. ຈັດຫາສິດອຳນາດໃນການແປປື້ມກົດຣະບຽບ ຊຶ່ງຈະຕ້ອງມີການສອດຄ່ອງຕໍ່ການປົກຄອງຂອງຄຣິສຕະຈັກ ໃນເວລາມີການມອບຄືນໃຫ້ ອີງໃສ່ກົດ G-13.0112 ຫຼືໂດຍຜ່ານຄວາມເຫັນດີຂອງຄະນະນິຕິບັນຍັດຖາວອນໃນກໍຣະນີທີ່ມີການໃສ່ວິນັຍ. ການແປເພື່ອການຈັດຫາສຳຣັບປື້ມກົດທັມະນູນຕ້ອງໃຫ້ມີຄວາມ ສອດຄ່ອງກັນ

s. ສ້າງຕັ້ງ ແລະຮັກສາການພົວພັນກັບແບບທົ່ວໄປ ເພື່ອຂະຫຍາຍວຽກງານການປະກາດຂອງຄຣິສຕະຈັກ

t. ພົວພັນກັບຄຣິສຕະຈັກອື່ນໆ

u. ພາຍໃຕ້ວິນັຍຂອງຕົນ, ຮັບເອົາໂດຍຄວາມຍິນຍອມສອງສ່ວນສາມຂອງພາກ, ໃນການຮັບເອົາຜູ້ຮັບໃຊ້ຈາກບ່ອນອື່ນ ຊຶ່ງຊີວິດຜູ້ກ່ຽວໄດ້ປະກອບດ້ວຍຄວາມເຊື່ອ ແລະຕາມກົດຣະບຽບຂອງຄຣິສຕະຈັກນີ້

v. ໃຫ້ອະນຸຍາດແກ່ຊີໂນດ໌ ໃຫ້ທຳການປະຕິບັດສິດອຳນາດໃນຮູບແບບດຽວກັນ ເພື່ອການກວດຄືນຜູ້ຮັບໃຊ້ທີ່ເໝາະສົມໃນການທີ່ຈະເປັນຜູ້ຕາງໜ້າແກ່ອົງການປົກຄອງເຫຼົ່ານັ້ນແລະຢູ່ພາຍໃຕ້ຂອບເຂດປົກຄອງຂອງຕົນເອງ.

w. ເຕົ້າໂຮມກັນກັບຄຣິສຕະຈັກອື່ນໆໂດຍອີງໃສ່ກົດຣະບຽບທີ່ບົ່ງໄວ້ໃນກົດທັມະນູນ G-15.0300

x. ກວດຄືນວຽກງານຂອງຫ້ອງການສະພາສູງ ໂດຍການປຶກສາຫາລືກັບສະມຽນທີ່ຖືກກຳໜົດໄວ້ຂອງສະພາສູງ.

## ວ່າດ້ວຍກອງປະຊຸມ **G-13.0104**

ສະພາສູງຄວນມີກອງປະຊຸມຢ່າງນ້ອຍ ສອງປີຕໍ່ຄັ້ງ. ຜູ້ຄວບຄຸມຄວນເອີ້ນຮຽກກອງປະຊຸມພິເສດອີງຕາມການຮ້ອງຂໍ ຫຼືໂດຍການເຫັນພ້ອມກັນຂອງຜູ້ປົກຄອງ 25ທ່ານ ແລະອາຈານ 25ທ່ານ ຊຶ່ງເປັນຕົວແທນຢ່າງນ້ອຍ 15 ພາກ,

ພາກໄຕ້ວິນັຍຂອງຢ່າງນ້ອຍ 5 ຊີໂນດ໌ ຊຶ່ງທັງໝົດນັ້ນຕ້ອງເປັນຄະນະຕົວແທນໃນກອງປະຊຸມສະພາສູງທີ່ຜ່ານມາ. ຫາກຜູ້ຄອບຄຸມບໍ່ສາມາດທຳໄດ້, ສນຽມທີ່ຖືກມອບໝາຍນັ້ນຕ້ອງເປັນຜູ້ທຳການ ໂດຍອີງຕາມກໍຣະນີແບບດຽວກັນນັ້ນ. ຖ້າຫາກທັງສອງທ່ານບໍ່ສາມາດທຳໄດ້ ຜູ້ທີ່ເປັນຜູ້ຄອບຄຸມຜ່ານມາ ສາມາດມີສິດເອີ້ນປະຊຸມໄດ້ ໂດຍອີງໃສ່ກໍຣະນີດຽວກັນ. ຜູ້ເປັນຕົວແທນໃຫ້ແກ່ກອງປະຊຸມພິເສດນີ້ ຈະຕ້ອງແມ່ນຜູ້ຕາງໜ້າທີ່ເລືອກເອົາໃນກອງປະຊຸມທີ່ຜ່ານມາ ຫຼືຜູ້ປ່ຽນແທນ ພວກເຂົານັ້ນ. ແນວໃດກໍຕາມ ພາກສາມາກເລືອກເອົາຕົວແທນ ຫຼືຜູ້ປ່ຽນແທນເພື່ອແທນບ່ອນຜູ້ທີ່ເສັຽຊີວິດ ຫຼືປ່ຽນແປງ ຖານະເປັນສະມາຊິກຂອງພາກນັ້ນໆ. ການແຈ້ງການຂອງກອງປະຊຸມພິເສດດັ່ງກ່າວ ຈະຕ້ອງສົ່ງອອກບໍ່ໃຫ່ຫຼຸດ ຫົກວັນລ່ວງໜ້າ ໃຫ້ແກ່ຜູ້ເປັນຕົວແທນແຕ່ລະຄົນທີ່ມີໜ້າຮ່ວມປະຊຸມໃນກອງປະຊຸມສະພາສູງຊຸດກ່ອນ ແລະສົ່ງໄປຍັງສນຽມຂອງແຕ່ລະພາກ. ແຈ້ງການດັ່ງກ່າວ ຕ້ອງບອກເຖິງຈຸດປະສົງຂອງກອງປະຊຸມ ແລະຈະບໍ່ມີວຽກງານອື່ນໆນຳມາ ນອກເໜືອຈາກສິ່ງທີ່ບັນທຶກໄວ້ ໃນໃບແຈ້ງການນັ້ນໆ.

## ວ່າດ້ວຍ ອົງປະກອບຂອງກອງປະຊຸມ **G-13.0105**

ອົງປະກອບຂອງກອງປະຊຸມສະພາສູງ ຈະຕ້ອງມີກຳມາທິການ (ຜູ້ຖືກມອບໝາຍໃຫ້ເປັນຕົວແທນ)100 ຄົນ, ໃນນັ້ນ 50 ຄົນຕ້ອງເປັນຜູ້ປົກຄອງ ແລະອີກ 50 ຄົນຕ້ອງແມ່ນອາຈານ ຊຶ່ງເປັນຕົວແທນຢ່າງນ້ອຍ ນຶ່ງສ່ວນສີ່ ຂອງພາກເພັຣສໄບເທີຣີ ທີ່ສັງກັດຢູ່ໃນ ຊີໂນດ໌ ຂອງຕົນເອງ.

## ວ່າດ້ວຍ ສະມາຊິກທີ່ມີການຕິດຕໍ່ພົວພັນ **G-13.0106**

ໂດຍອີງໃສ່ກົດຣະບຽບຂອງຕົນເອງ, ສະພາສູງຕ້ອງເປັນຜູ້ກຳໜົດວ່າ ແມ່ນໃຜຈະເປັນຜູ້ອະນຸຍາດໃຫ້ນັ່ງໃນຖານະເປັນ ສະມາຊິກທີ່ມີການຕິດຕໍ່ພົວພັນນັ້ນ.

## ວ່າດ້ວຍ ການປະກອບສ່ວນຂອງພາກ ຊີໂນດ໌ **G-13.0107**

ຊີໂນດ໌ ແຕ່ລະພາກຈະຕ້ອງມີສ່ວນໃນຮູບການຈັດຕັ້ງວຽກງານການປະກາດຂອງສະພາສູງ ໂດຍຜ່ານການເປັນສະມາຊິກຢ່າງນ້ອຍ ມີຜູ້ປົກຄອງຄົນນຶ່ງ ຫຼືອາຈານຄົນນຶ່ງ ຈາກທຸກໆຊີໂນດ໌, ສເນີໃຫ້ມີການແຕ່ງຕັ້ງ ຈາກຊີໂນດ໌ ຫຼັງຈາກໄດ້ຮັບການປຶກສາຫາລື ຈາກຄະນະກຳມະການເລືອກຕັ້ງຂອງສະພາສູງແລ້ວ, ໄດ້ຖືກເລືອກຈາກສະພາສູງ ໃຫ້ດຳຣົງຕຳແໜ່ງໃນຄະນະສະພາສູງ, ແລະຢູ່ໃນແຕ່ລະຄະນະກຳມະການຖາວອນຂອງສະພາສູງ. ຄະນະກຳມະການເລືອກຕັ້ງຂອງສະພາສູງ ຕໍ່ເປັນຜູ້ປະສານງານກ່ຽວກັບ ການຄືບໜ້າໃນເລື້ອງນີ້, ໃນຈຳສເນີວ່າ ຈຳເປັນຕ້ອງມີຜູ້ຕາງໜ້າຈາກຊີໂນດ໌, ແລະສະມາຊິກທົ່ວໄປ, ແລະຕ້ອງເຫັນວ່າ ສິ່ງທັງໝົດ ແມ່ນເພື່ອການປະກອບສ່ວນຕົ້ນຕໍ ແລະການເປັນຕົວແທນ ຊຶ່ງບັນທຶກໄວ້ໃນG-9.0104, G-13.0111, and G-13.0202.

## ວ່າດ້ວຍ ຄະນະກຳມະການຕາງໜ້າ **G-13.0108**

ສະພາສູງ ຈະຕ້ອງສ້າງຕັ້ງຄະນະກຳມະການຕາງໜ້າທີ່ຖາວອນ ດັ່ງໄດ້ບົ່ງໄວ້ໃນ G-9.0105 ຊຶ່ງຈະຕ້ອງເປັນຜູ້ໃຫ້ຄຳແນະນຳແກ່ ສະພາສູງໃນກໍຣະນີ ມີຄວາມຮຽກຮ້ອງໃຫ້ເພີ່ມຈຳນວນຜູ້ຕາງໜ້າ. ຄະນະກຳມະການຜູ້ຕາງໜ້າຈະຕ້ອງມີຣາຍງານຕໍ່ທຸກກອງ ປະຊຸມຂອງສະພາສູງ ອີງໃສ່ການຄືບໜ້າໃນການປະຕິບັດຄວາມຍຸຕິທັມໃນຈຳນວນຜູ້ຕາງໜ້າ ໃນກໍຣະນີທີ່ເອົ້າກ່ຽວກັບບຸກຄົນ ຊຶ່ງໄດ້ບົ່ງໄວ້ໃນ G-4.0403

## ວ່າດ້ວຍ ເຈົ້າພະນັກງານ G-13.0109

ຕໍາແໜ່ງຂອງເຈົ້າພະນະງານໃນຄະນະບໍຣິຫານ ຫຼືຄະນະອໍານວຍການຂອງສະພາສູງ ຈະຕ້ອງຖືກສ້າງຕັ້ງຂຶ້ນ ແລະບັນຈຸໃຫ້ພຽງພໍ ດັ່ງໄດ້ບົ່ງໄວ້ໃນ G-9.0404, G-9.0703, and G-9.0704, ແລະໃນໂຄງການຂອງຄຣິສຕະຈັກ ເພື່ອການມີຄວາມເອກພາບ ໃນການວ່າຈ້າງພະນັກງານ (G-13.0201b) . ການກະກຽມນີ້ ຄວນມີການກວດຄືນຄືນ ຢ່າງເປັນປະຈໍາ ໃນແຕ່ລະສະມາຊິກຂອງ ເຈົ້າພະນັກງານ.

## ວ່າດ້ວຍ ການເກັບກໍາຣາຍງານ G-13.0110

ສະພາສູງ ຈະຕ້ອງເກັບກໍາທັງໝົດ ໃນບົດຣາຍງານທີ່ໃຊ້ການໄດ້ ເພື່ອການຄືບໜ້າຂອງຕົນເອງ.

## ວ່າດ້ວຍ ຄະນະກໍາມະການເລືອກຕັ້ງຂອງສະພາສູງ G-13.0111

a. ເພື່ອການຮັປກັນການເລືອກຕັ້ງຂອງສະມາຊິກ ເຊັ່ນ: ຄະນະສະພາ, ອົງການຕ່າງໆ, ແລະຄະນະກໍາມະການ ຊຶ່ງສະພາສູງ ຕ້ອງມີການຈັດຕັ້ງຂຶ້ນໃນບາງຄັ້ງບາງຄາວ, ຄະນະກໍາມະການນີ້ ຕ້ອງສເນີຣາຍຊື່ຜູ້ຈະເລືອກຮັບໃຊ້ ຫ້ອງການນັ້ນໆຕໍ່ສະພາສູງ. ການພິຈາຣະນາຈະຕ້ອງຖືກສເນີໂດຍອາຈານທີ່ມີຈໍານວນເທົ່າທຽມກັນ (ທັງຊາຍແລະຍິງ) ຈໍານວນຄາຣະວາດຊາຍແລະຍິງ. ຄະນະກໍາມະການ ຄວນປະກອບດ້ວຍສະມາຊິກທີ່ມີຈໍານວນເທົ່າທຽມກັນກັບທີ່ມີຢູ່ ຊີໂນດ໌, ແຕ່ລະຄົນຕ້ອງດໍາຣົງຊີວິດຢູ່ ແຕ່ລະຊີໂນດ໌ຕ່າງກັນ, ແລະສະມາຊິກທີ່ຢູ່ແຈກຢາຍກັນ ເພື່ອຈະໄດ້ມີຈໍານວນ ອາຈານ (ຊາຍ ແລະຍິງ)ນຶ່ງສ່ວນສາມ, ຄາຣະວາດ ຊາຍນຶ່ງສ່ວນສາມ, ຄາຣະວາດຍິງ ນຶ່ງສ່ວນສາມD (G-9.0801; G-11.0501; G-12.0102d; G-13.0202) ສະມາຊິກຕ້ອງ ຖືກແຕ່ງຕັ້ງໃຫ້ຮັບໃຊ້ເປັນເວລາກໍານົດຫ້າປີ, ແລະກໍານົດ ການນີ້ຈະຕ້ອງກໍານົດໄວ້ວ່າ ໃຫ້ມີ ນຶ່ງສ່ວນຫ້າຂອງສະມາຊິກ ຈະສິ້ນສຸດກໍານົດການຮັບໃຊ້ຂອງເຂົາ ໃນເວລາທີ່ມີ ກອງປະຊຸມສາມັນຂອງສະພາສູງ. ພາຍໃນສາມສິບວັນ ກ່ອນມີກອງປະຊຸມ ສະໄໝສາມັນນັ້ນ, ຜູ້ຄວບຄຸມດູແລ ຂອງສະພາສູງສະໄໝກ່ອນໜ້ານັ້ນ ຈະຕ້ອງເປັນຜູ້ແຕ່ງຕັ້ງຜູ້ທີ່ມາແທນບ່ອນຫວ່າງນັ້ນຊຶ່ງ ຈະມີຂຶ້ນໃນສະໄໝຕໍ່ມາ. ຜູ້ຄວບຄຸມຈະຕ້ອງແຕ່ງຕັ້ງຜູ້ມາແທນບ່ອນຜູ້ທີ່ເສັຽຊີວິດ, ຜູ້ທີ່ລາອອກ, ຫຼືຜູ້ບໍ່ສາມາດປະຕິບັດງານໄດ້. ການແຕ່ງຕັ້ງນີ້ ຈະຕ້ອງມີການປຶກສາຫາລືກັບຊີໂນດ໌ ໂດຍຜ່ານຫຼັກການແຫ່ງການເລືອກຕັ້ງຂອງມັນ ແລະໂດຍແນໃສ່ ນະໂຍບາຍ ການເປີດກວ້າງຂອງສະພາສູງ. ການແຕ່ງຕັ້ງນັ້ນ ຄວນມີຂໍ້ຈໍາກັດວ່າ ຈະບໍ່ທໍາໃຫ້ສ່ວນແຫ່ງກໍານົດການ ຮັບໃຊ້ຂອງຜູ້ດໍາເນີນ ວຽກງານມາແຕ່ຫົວທີນັ້ນສິ້ນສຸດລົງ ແລະຈະບໍ່ເປັນການຂັດຂວາງການແຕ່ງນັ້ນຜູ້ກ່ຽວນັ້ນ ໃນທໍາງານເຕັມກໍານົດ. ຈະບໍ່ມີໃຜທີ່ ຮັບໃຊ້ເຕັມກໍານົດຫ້າປີນັ້ນ ຈະບໍ່ສາມາດຖືເລືອກໃຫ້ມາຮັບໃຊ້ອີກໃນປີທີສີ່ ທີ່ຜູ້ກ່ຽວທໍາງານມາ.

## ວ່າດ້ວຍການເລືອກຕັ້ງເຈົ້າໜ້າທີ່ຮັບໃຊ້

b. ຄະນະກໍາມະການຄວນເລືອກເອົາເຈົ້າໜ້າທີ່ທໍາງານຂອງຕົນໃນກອງປະຊຸມຄັ້ງສຸດທ້າຍຂອງຕົນ ກ່ອນທີ່ມີກອງປະຊຸມສະໄໝ ສາມັນຂອງສະພາສູງ. ການຄົງຕົວຂອງຄະນະກໍາມະການນີ້ຈະຕ້ອງບໍ່ໃຫ້ມີຂອບເຂດ ຫຼືມີຂີດຂັ້ນສິດທິຂອງຜູ້ໜ້າໜ້າທີ່ສົ່ງເຂົ້າ ສະພາສູງ ເພື່ອທໍາການປ່ອນບັດເລືອກຕັ້ງເອົາບຸກຄົນທີ່ເໝາະສົມ ໃຫ້ມາປະກອບສ່ວນຂອງຄະນະກໍາມະການເລືອກຕັ້ງ ຊຶ່ງສເນີໂດຍຄະນະກໍາມະການນີ້.

## ວ່າດ້ວຍ ຄະນະກຳມະການທີ່ປຶກສາ ກ່ຽວກັບກິດທັມມະມູນ G-13.0112

a. ສະພາສູງ ຄວນສ້າງຕັ້ງຄະນະກຳມະການທີ່ປຶກສາກ່ຽວກັບກິດທັມມະມູນ ຊຶ່ງປະກອບດ້ວຍ ໑ ທ່ານ, ໂດຍຄວນໃຫ້ມີຈຳນວນ ອາຈານ ແລະຜູ້ປົກຄອງເກືອບເທົ່າກັນ ເທົ່າທີ່ຈະທຳໄດ້. ຜູ້ເປັນສະນຽມ ຂອງສະພາສູງຄວນເປັນສະມາຊິກນອກທາງການ ໂດຍບໍ່ມີສິດລົງຄະແນນສຽງ. ກຳມະການ ໑ ທ່ານທີ່ສາມາດລົງຄະແນນສຽງຄວນເປັນ ອະດີດຂອງຄະນະກັມມະການບໍລິບັນຍັດຖາວອນຂອງສະພາສູງ, ສະນຽມ ຫຼືອະດີດສະນຽມຂອງ ຊີໂນດ ຫຼືຂອງພາກເພຣັສໄບເທີຣີ ຫຼືບຸກຄົນທີ່ມີຄຸນນະວຸດທິພຽບພ້ອມອື່ນໆ ໂດຍມີຄວາມຮັບຮູ້ເປັນຢ່າງດີກ່ຽວກັບກິດທັມມະມູນ ແລະນະໂຍບາຍຂອງຄຣິສຕະຈັກ. ກັມມະການທີ່ມາມາດລົງຄະແນນສຽງໄດ້ຄວນເປັນຜູ້ຖືກແຕ່ງຕັ້ງ ໂດຍສະພາສູງ ແລະຄວນຮັບໃຊ້ໃນກຳໜົດ ໓ ປີ ໂດຍແບ່ງເປັນ ໓ ລຸ້ນ. ຄະນະກຳມະການນີ້ ບໍ່ຄວນມີສິດຮັບໃຊ້ໄດ້ ເກີນກວ່າ ສອງລຸ້ນ.

b. ຄະນະກຳມະການກ່ຽວກັບກິດທັມມະມູນ ຄວນມີກອງປະຊຸມຢ່າງນ້ອຍປີລະຄັ້ງ ໃຫ້ຕົງກັບເວລາທີ່ທີ່ຄວນສົ່ງບົດຣາຍງານ ແລະບົດແນະນຳ ບໍ່ຫຼຸດ ໖ ວັນກ່ອນກອງປະຊຸມໃຫຍ່ຂອງສະພາສູງ.

c. ຄຳຖາມທັງໝົດ ຕ້ອງໃຫ້ມີການແປອະທິບາຍຈາກສະພາສູງ ອີງໃສ່ປຶ້ມກົດຣະບຽບ ຊຶ່ງນຳສເນີໂດຍ ອົງການປົກຄອງຂອງຄຣິສຕະຈັກ ຫຼືຈາກສ່ວນບຸກຄົນ ຄວນໃຫ້ມີການຂຽນເປັນຣາຍລັກອັກສອນຍື່ນໄປຫາສະນຽມຂອງສະພາສູງ ບໍ່ໃຫ້ຫຼຸດ ໑໒໐ວັນ ກ່ອນຈະມີກອງປະຊຸມສະພາສູງ.

d. ສະນຽມຄວນສເນີຄຳຖາມທັງໝົດທີ່ໄປແປອະທິບາຍແລ້ວນັ້ນ ໃຫ້ແກ່ຄະນະກຳມະການທີ່ປຶກສາ ກ່ຽວກັບກິດທຳມະມູນ ດ້ວຍຫວັງວ່າ ຄຳຖາມດັ່ງກ່າວນັ້ນ ຈະມີພາກສ່ວນນຳມາສເນີພິຈາຣະນາຕໍ່ໜ້າຄະນະກຳມະການບໍລິບັນຍັດ. ກຳມະການ ທີ່ປຶກສາຕ້ອງ ສເນີສິ່ງທີ່ພົບເຫັນຂອງຕົນແລະນຳສເນີພິຈາຣະນາຕໍ່ສະພາສູງ. ການສເນີພິຈາຣະນານັ້ນ ອາດຈະປະກອບດ້ວຍສເນີໂຄງການໃຫ້ມີການປ່ຽນແປງທັມມະມູນ. ສະພາສູງ ຄວນລົງຄະແນນສຽງ ຕໍ່ຄຳສເນີນັ້ນແລະອາດມີການດັດແປງ ຫຼືປະຕິເສດຮັບເອົາຄຳສເນີນັ້ນໄດ້.

e. ຢ່າງນ້ອຍຕ້ອງມີ ສະມາຊິກຂອງຄະນະກຳມະການທີ່ປຶກສາ ໓ ຄົນ, ຊຶ່ງຖືກແຕ່ງຕັ້ງໂດຍຜູ້ຄວບຄຸມຂອງຄະນະກຳມະການ ມີໜ້າໃນກອງປະຊຸມວຽກງານຂອງສະພາສູງ. ເຣື້ອງຣາວຕ່າງໆທີ່ນຳສເນີ ໃນຮູບແບບຂອງຫຼັກຣະກິດໃໝ່ ຊຶ່ງແທດເໝາະກັບກິດທຳມະມູນ, ຊຶ່ງປະກອບດ້ວຍການຮຽກຮ້ອງໃຫ້ມີການດຳເນີນງານໂດຍຜູ້ຄວບຄຸມ ກ່ຽວກັບ ຄຳຖາມ ຫຼືຣະບຽບການທີ່ພົວພັນກັບກິດທຳມະມູນ ຄວນສເນີດ້ວຍຣາຍລັກອັກສອນຂຽນຫາພວກບຸກຄົນດັ່ງກ່າວນີ້. ພວກເຂົາຄວນກະທຳການພິຈາຣະນາດ້ວຍເຕັມຄະນະ ແລະຄວນພິຈາຣະນາທຸກຂໍ້ທີ່ໄດ້ນຳສເນີຕໍ່ພວກເຂົາ ແລະໃຫ້ຄຳ ແນະນຳອີກຕໍ່ນຶ່ງ ຕໍ່ສະພາສູງ ໂດຍຜ່ານທ່ານຜູ້ຄວບຄຸມ.

## 2. ວ່າດ້ວຍສະພາຄະນະກຳມະການ ຂອງສະພາສູງ GAC G-13.0200

### ວ່າດ້ວຍຄວາມຮັບຜິດຊອບະ G-13.0201

ສະພາສູງ ຄວນສ້າງຕັ້ງ ສະພາຄະນະກຳມະການ ຊຶ່ງຈະມີໜ້າທີ່ດັ່ງລຸ່ມນີ້:

a. ເພື່ອທຳການຄຸດຄົ້ນ ແລະເລື່ອນຂັ້ນໃນສະວັດດີການຂອງສະພາບຈິດວິນຍານຂອງຄຣິສຕະຈັກທັງມວນ.

b. ເພື່ອໃຫ້ການສຶກສາ ແລະໃຫ້ການຮ່ວມມື ຄຣິສຕະຈັກມີການໃຫ້ນະໂຍບາຍຮັບຈ້າງຄົນຢ່າງສະເໝີພາບ, ແລະໃຫ້ຄວາມເປັນທັມແກ່ກຸ່ມຊົນຊາດສ່ວນນ້ອຍ, ສັດຕຣີ, ແລະກຸ່ມອາຍຸຄົນ, ໂດຍບໍ່ອີງໃສ່ສະພາບດ້ານຄອບຄົວ (ແຕ່ງງານ, ເປັນໂສດ, ຮ້າງ ຫຼືໝ້າຍ) ແລະຕໍ່ບຸກຄົນທີ່ເສັຽອົງຄະ.

c. ມີສ່ວນໃນໂຄງການດຳເນີນງານຂອງຄຣິສທົ່ວໄປ, ເພື່ອການພິຈາຣະນາຂັ້ນສຸດທ້າຍຂອງສະພາສູງ, ເປົ້າໝາຍຂອງໂຄງການຮັບໃຊ້, ສິ່ງຄາດຄະເນຈະໄດ້ຮັບ, ແລະຈຸດສຳຄັນຂອງຄຣິສຕະຈັກ.

d. ມີການພົວພັນຮ່ວມມືກັບວຽກງານຂອງຫ້ອງການຕ່າງໆຂອງສະພາສູງ, ຊີໂນດ, ພາກເພຣັສໄບເທີຣີ, ໂດຍອີງໃສ່ໂຄງການແນະນຳການຮັບໃຊ້, ເປົ້າໝາຍ, ຜົນຮັບ, ແລະຈຸດສຳຄັນ.

e. ສຶກສາການທຳງານຂອງຫ້ອງການຕ່າງໆຂອງສະພາສູງ ແລະຄະນະ ເພື່ອເປັນໄປຕາມໂຄງການແນະນຳວຽກງານຂອງສະພາສູງ ໃນເປົ້າໝາຍ, ຜົນຮັບ, ແລະສິ່ງສຳຄັນຕົ້ນຕໍ.

f. ເພື່ອການກະກຽມ ແລະສົ່ງຍື່ນພິຈະຣະນາ ງົບປະມານທີ່ມີເຫດຜົນພຽງພໍ ຕໍ່ສະພາສູງ.

g. ເພື່ອຕິດຕໍ່ພົວພັນ ແລະໃຫ້ຄຳປຶກສາ ກັບພາກເພຣັສໄບເທີຣີ, ຊີໂນດ, ແລະບັນດາຄະນະສະພາກຳມະການທັງຫຼາຍ ກ່ຽວກັບບັນຫາທີ່ພົວພັນກັບຄຣິສຕະຈັກໂດຍທົ່ວໄປໃນດ້ານການສ້າງງົບປະມານ, ແລະການພົວພັນກັບວຽກງານຂອງຄຣິສຕະຈັກ.

h. ເພື່ອການເຄື່ອນໄຫວ ໃນກໍຣະນີທີ່ກ່ຽວພັນກັບຜູ້ທຳງານການບໍຣິຫານ ຂອງຊີໂນດ ແລະສະພາສູງ ອີງໃສ່ກົດຣະບຽບຂໍ້ G-9.0701; G-9.0702; G-9.0703;

i. ເພື່ອໃຫ້ຄຳປຶກສາກັບ ຊີໂນດ ໃນການໃຊ້ແທນຄ່າເສັຽຫາຍ, ນະໂຍບາຍກ່ຽວກັບຫ້ອງການຮັບຄົນງານ, ແລະການປະຕິບັດ ວຽກງານການຮັບຈ້າງຄົນງານ.

j. (ຂໍ້ນີ້ ໄດ້ຖືກການເຄັ່ງຄັດຈາກ ການລົງຄະແນນສຽງຂອງສະພາສູງ ຊຸດ 206 ປີ 1994)

k. ເພື່ອການຕັດສິນກ່ຽວກັບວຽກງານສະເພາະໃດນຶ່ງທີ່ໄດ້ມອບໝາຍໃຫ້ເຮັດໂດຍສະພາສູງ ຫຼືອີງໃສ່ກົດທຳມະນູນນີ້ ການຕັດສິນວຽກງານນີ້ ຕ້ອງໄດ້ອີງໃສ່ວຽກງານທີ່ທາງສະພາສູງບໍ່ໄດ້ນຳມາປະຕິບັດກັນອີງໃສນະໂຍບາຍໃນເມື່ອກ່ອນ ຊຶ່ງໄດ້ມີການຣາຍການຢ່າງເຕັມສ່ວນຕໍ່ທຸກຄະນະກຳມະການຂອງສະພາສູງທີ່ກ່ຽວຂ້ອງ.

l. ເພື່ອຈັດການກ່ຽວກັບຄວາມຮັບຜິດຊອບເພີ້ມຕື່ມ ແລະໜ້າທີ່ ຊຶ່ງອາດຖືກມອບໝາຍໃຫ້ໂດຍທາງສະພາສູງ.

### ວ່າດ້ວຍສະມາຊິກະ G-13-0202

ສະມາຊິກ, ກຳໜົດການຂອງຫ້ອງການ, ແລະເຈົ້າໜ້າທີ່ຂອງສະພາຄະນະກຳມະການຂອງສະພາສູງ ຈະຕ້ອງຖືກປົກຄອງໂດຍກົດຣະບຽບມາດຕາ 5.1, 5.2 ແລະ 5.3 ຂອງຂໍ້ກຳນົດ ທີ່ໄດ້ຕົກລົງກັນຈົນກວ່າຈະໝົດກຳໜົດຊຶ່ງໄດ້ບົ່ງໄວ້ໃນມາດຕາຕາດັ່ງກ່າວ. ຊຶ່ງກຳນົດເວລານັ້ນຕ້ອງໃຫ້ມີຜົນນຳໃຊ້ຢ່າງອັດຕະໂນມັດ ດັ່ງທີ່ໄດ້ບົ່ງໄວ້ໃນຂໍ້ກຳນົດທີ່ວ່າ:

a. ຄະນະສະພາ ຕ້ອງປະກອບດ້ວຍສະມາຊິກທີ່ສາມາດລົງຄະແນນສຽງດັ່ງນີ້ຄື, ແຕ່ລະຄົນຕ້ອງເປັນສະມາຊິກທີ່ຫ້າວຫັນຂອງຄຣິສຕະຈັກໃດນຶ່ງ, ຫຼືເປັນສະມາຊິກຂອງພາກເພຣັສໄບເທີຣີ ແຫ່ງຄະນະເພຣັສໄບທີຣຽນ ແຫ່ງອາເມຣິກາ.

1. ເປັນຜູ້ຄອບຄຸມດູແລຂອງສະພາສູງ ແລະເປັນຜູ້ຄອບຄຸມທີ່ໃໝ່ໆທີ່ມີຜູ້ສືບທອດມາສອງຄົນເທົ່ານັ້ນ.

2. ມີຄົນດຽວເທົ່ານັ້ນທີ່ທາງຊີໂນດສາມາດສເນີເລືອກຕັ້ງ ພາຍຫຼັງທີ່ໄດ້ໃຫ້ການປຶກສາກັບຄະນະກຳມະການເລືອກຕັ້ງຂອງສະພາສູງແລ້ວ ເພື່ອຄວາມແນ່ໃຈວ່າເປັນຜູ້ທີ່ມັກເປີດກວ້າງ ແລະມີຄວາມຊຳນານ, ຜູ້ນີ້ຈະຖືກເລືອກຈາກສະພາສູງສຸດທຳອິດຊຶ່ງເປັນເວລາ 3 ປີ ແລະສາມາດສືບຕໍ່ອີກນຶ່ງຊຸດ.

3. ມີນຶ່ງຄົນເທົ່ານັ້ນທີ່ທາງພາກເພຣັສໄບເທີຣີສາມາດນຳມາສເນີຊື່ໄດ້ ດັ່ງທີ່ຖືກບົ່ງໄວ້ໃນປຶ້ມຄູ່ມືການທຳງານຂອງຄະນະກຳມະການເລືອກຕັ້ງແຫ່ງສະພາສູງ, ດັ່ງທີ່ໄດ້ຕົກລົງກັນໃນສະພາກຳມະການ ແລະໄດ້ຖືກເລືອກເອົາໂດຍສະພາສູງໃນຊຸດ 3 ປີ ແລະສາມາດສືບຕໍ່ໄດ້ອີກນຶ່ງຊຸດ. ພາກເພຣັສໄບເທີຣີທີ່ຖືກເລືອກໃຫ້ມາເປັນຜູ້ສເນີຊື່ເລືອກຕັ້ງແນີ້ຈະຕ້ອງມີການໝູນວຽນໜ້າທີ່ຮັບຜິດຊອບນີ້ ອີງໃສ່ການແຕ່ງຕັ້ງຂອງຄະນະເລືອກຕັ້ງຂອງສະພາສູງ.

4. ຈຳນວນສະມາຊິກຄະນະກຳມະການທົ່ວໄປ ໄດ້ເຮັດໄປຕາມການບົ່ງບອກໄວ້ໃນຄູ່ມືການທຳງານຂອງຄະນະສະພາໂດຍການເຫັນດີຂອງສະພາສູງ ຊຶ່ງຈະຖືກເລືອກໂດຍສະພາສູງໃຫ້ຮັບໃຊ້ວຽກງານໃນ 3 ປີ ແລະມີສິດຕໍ່ໄດ້ອີກຊຸດນຶ່ງ

5. ສະມາຊິກທີ່ເປັນຄົນໜຸ່ມ 2 ຄົນ, ມີອາຍຸຕ່ຳກວ່າ 26 ປີໃນເວລາທີ່ຖືກເລືອກຕັ້ງໂດຍສະພາສູງນັ້ນ ສາມາດຮັບໃຊ້ໄດ້ໃນລະຍະ 3ປີ ແລະຕໍ່ໄດ້ອີກນຶ່ງຊຸດ.

b. ຄຽງຄູ່ກັບສະມາຊິກທີ່ສາມາດອອກສຽງໄດ້ນັ້ນ, ທາງຄະນະສະພາສູງຄວນມີສະມາຊິກແຫ່ງການປຶກສາຫາລືຊື່ມີສິດທີ່ຢູ່ຫ້ອງປະຊຸມແຕ່ບໍ່ມີສິດອອກສຽງດັ່ງນີ້:

1. ຜູ້ປະກາດຈາກຄະນະອື່ນ 4 ທ່ານ ມາເປັນຄະນະທີ່ປຶກສາ ຊຶ່ງມາຈາກໂບດອື່ນໆໃນປະເທດອາເມຣິກາ ແລະມາຈາກໂບດເພື່ອນມິດ ໃນປະເທດອື່ນໆ ຊຶ່ງໄດ້ຖືກແຕ່ງຕັ້ງຈາກສະພາສູງ ໃຫ້ຮັບໃຊ້ກຳນົດ 1 ປີ ແລະສາມາດສືບຕໍ່ໄດ້ອີກຊຸດນຶ່ງຄືນຶ່ງປີ. ຢ່າງໃດກໍຕາມ ທາງສະພາສູງສາມາດ ເພີ່ມຈຳນວນ ຫຼືຫຼຸດຈຳນວນກຳມະການທີ່ມາຈາກຄະນະອື່ນນີ້ໄດ້

2. ຂໍ້ຄວາມຂໍ້ນີ້ ໄດ້ຖືກເຄັ່ງລັດໂດຍສະພາສູງ ຄັ້ງທີ່ 206ປີ 1994.

c. ສະມຽນຂອງສະພາສູງ ແລະອຳນວຍການບໍຣິຫານຂອງສະພາກຳມະການຈະຕ້ອງເປັນສະມາຊິກທີ່ຖືກຕິດຕໍ່ພົວພັນຂອງຄະນະສະພາສູງ ແລະມີສິດອອກສຽງ ແຕ່ບໍ່ມີສິດລົງຄະແນນສຽງ ແລະທາງຄະນະສະພາອາດຈະບົ່ງຕົວບຸກຄົນໃດນຶ່ງໃຫ້ທຳການປະຕິບັດໜ້າທີ່ໃນທຳນອງດຽວກັນນີ້.

d. ໃນການຊອກຫາຜູ້ສະໝັກເລືອກຕັ້ງແນັ້ນ, ຄະນະກຳມະການເລືອຕັ້ງຂອງສະພາສູງ ຕ້ອງໃຫ້ການປຶກສາຫາລືກັບຄະນະສະພາສູງ ເພື່ອຊອກຫາຄວາມກະຈ່າງແຈ້ງຕໍ່ຄວາມຊຳນິຊຳນານທີ່ຕ້ອງການ, ແລະຄວນໃຫ້ມີການເປີດກວ້າງແລະຮອບຮອມເອົາຄວາມແຕກຕ່າງກັນ ອີງໃສ່ກົດຣະບຽບມາດຕຣາ G-4.0403. ສິ່ງນີ້ຈະຢຶດເອົາເປົ້າໝາຍທີ່ວ່າຢ່າງນ້ອຍໃຫ້ມີ 20% ຂອງກຸ່ມຊົນຊາດສ່ວນນ້ອຍ ໃນຄະນະສະພາສູງ. ແລະຈະຕ້ອງອີງຕາມຣະບຽບການຂອງ G-9.0104, G-9.0105 and G-13.0111 ແລະຕ້ອງໃຫ້ແນ່ໃຈວ່າ ນອກຈາກບຸກຄົນທີ່ເປັນຜູ້ຄອບຄຸມແລະຜູ້ສືບທອດເປັນຜູ້ຄອບຄຸມນັ້ນແລ້ວ, ນຶ່ງສ່ວນສາມຂອງສະມາຊິກ ຄວນແມ່ນສາສນາຈານ, ນຶ່ງສ່ວນສາມ

ຄວນແມ່ນ ຄາຣະວາດຜູ້ຊາຍ, ແລະນຶ່ງສ່ວນສາມແມ່ນຄາຣະວາດຜູ້ຍິງ. ລະຄະນະກຳມະການ ຄວນແບ່ງອອກເປັນສາມຊຸດທີ່ມີຈຳນວນສະມາຊິກເທົ່າກັນ. ຫາກມີຕຳແໜ່ງຫວ້າງກາງເທີມ ຄວນຕ້ອງໃຫ້ມີການຈັດຫາມາໃຫ້ເຕັມຈຳນວນ ອີງໃສ່ຣະບຽບທີ່ບົ່ງໄວ້ໃນນະໂຍບາຍແຫ່ງສະພາສູງ.

e. ຄະນະສະພາສູງ ຈະຕ້ອງຖືກເລືອກຕັ້ງແປະທານ ແລະຮອງປະທານທຸກປີ ໂດຍເລືອກເອົາຢູ່ຖ່າມກາງສະມາຊິກທີ່ມີສິດລົງຄະແນນສຽງໄດ້ນັ້ນ. ສະໝຽນຂອງສະພາສູງຈະຕ້ອງເປັນຜູ້ບັນທຶກຣາຍງານ ຂອງຄະນະສະພາສູງ.

### ວ່າດ້ວຍ ຄູ່ມື ແລະການປະຕິບັດງານ G-13.0203

ຄະນະສະພາ ຈະຕ້ອງມີການປັບປຸງພັທນາ, ໂດຍການປຶກສາກັບຊີໂນດ, ໃນການເຮັດປຶ້ມຄູ່ມື ໃນການປະຕິບັດງານ ຊຶ່ງຄວນປະກອບດ້ວຍ ແບບແຜນໃນການບໍຣິຫານງານ ຂອງເຈົ້າພະນັກງານບໍຣິຫານ ແລະກຳນົດຈຳນວນ, ແລະການສເນີແບບສະເພາະຂອງສະມາຊິກຂອງຄະນະສະພາ, ຈັດໃຫ້ມີການປະກອບດ້ວຍບຸກຄົນທີ່ແຕກຕ່າງກັນ ທາງດ້ານເຊື້ອຊາດຜິວພັນ ແລະໃຫ້ເປັນທີ່ເປີດກວ້າງ ອີງໃສ່ G-9.0104. ປຶ້ມຄູ່ມືຄວນຖືກຮັບຮູ້ເອົາໂດຍສະພາສູງ

## ພາກ XIV ການສະຖາປະນາ, ໃຫ້ໃບປະກາດ, ແລະການແຕ່ງຕັ້ງ G-14.0000

### 1. ວ່າດ້ວຍການສະຖາປະນາເພື່ອທຳງານໃນຫ້ອງການຄຣິສຕະຈັກ G-14.0100

### ວ່າດ້ວຍການສະຖາປະນາ: G-14.0101

ບຸກຄົນທີ່ຖືກເລືອກເອົາໂດຍຄຣິສຕະຈັກ ເພື່ອມາຮັບໃຊ້ຢູ່ມນຫ້ອງການຂອງຄຣິສຕະຈັກ (G-6.0000) ຈະຕ້ອງຖືກສະຖາປະຖາໃຫ້ຮັບໃຊ້ໃນຫ້ອງການນີ້ໂດຍຄຣິສຕະຈັກ. ການສະຖາປະນາ ເປັນກິຈການນຶ່ງຊຶ່ງທາງຄຣິສຕະຈັກໄດ້ເຮັດສຳຣັບບຸກຄົນທີ່ມາເປັນເຖົ້າແກ່ (ອາຈານ, ຜູ້ປົກຄອງ) ຫຼືມັກຄະນາຍົກ, ແລະຈະຕ້ອງປະກອບດ້ວຍການອະທິຖານແລະການວາງມື. ການສະຖາປະນາ ສຳຣັບຫ້ອງການຂອງຜູ້ຮັບໃຊ້ໃນດ້ານພຣະທັມແລະພິທີສິນ ແມ່ນກິຈກັມຂອງພາກເພຣັສໄບເທີຣີ. ການສະຖາປະນາ ເພື່ອຮັບໃຊ້ໃນຫ້ອງການຄະນະປົກຄອງ ແລະຫ້ອງການມັກຄະນາຍົກ ແມ່ນກິຈກັມຂອງຄະນະປົກຄອງ, ຍົກເວັ້ນກໍຣະນີທີ່ໂບດນັ້ນ ເປັນໂບດຕັ້ງໃໝ່.

### ວ່າດ້ວຍການແຕ່ງຕັ້ງ G-14.0102

ບຸກຄົນອື່ນໆທີ່ເອີ້ນເຂົ້າມາຮັບໃຊ້ໃນວຽກໃນພິເສດໃດນຶ່ງຂອງຄຣິສຕະຈັກ ຫຼືໃນໂລກ ຈະຕ້ອງຖືກແຕ່ງຕັ້ງໂດຍຄະນະປົກຄອງທີ່ກ່ຽວຂ້ອງໃນວຽກນັ້ນຂອງຄຣິສຕະຈັກ ໂດຍຜ່ານການທຳພິທີການແຕ່ງຕັ້ງໃນວຽກງານນັ້ນໆ.

### ວ່າດ້ວຍຮູບແບບຂອງຜູ້ຮັບໃຊ້ G-14.0103

ເປົ້າໝາຍແລະຮູບແບບຂອງຜູ້ນຳຢູ່ໃນຄຣິສຕະຈັກ ໃນທຸກຮູບການປະກາດ ຕ້ອງເຂົ້າໃຈວ່າບໍ່ແມ່ນເສື້ອງຂອງການມີອຳນາດ ແຕ່ແມ່ນເສື້ອງຂອງການຮັບໃຊ້, ຊຶ່ງເປັນຂ້າຮັບໃຊ້ໃນວຽກງານຂອງອົງພຣະເຢຊູຄຣິສ.

## 2. ວ່າດ້ວຍ ການເລືອກຕັ້ງ ແລະການສະຖາປະນາ ຜູ້ປົກຄອງ ແລະນັກຄະນາຍົກ G-14.0200

## ວ່າດ້ວຍ ການຫ້າງຫາໃນການເລືອກຕັ້ງ G-14.0201

ຄຣິສຕະຈັກທຸກບ່ອນ ຕ້ອງມີການເລືອກຕັ້ງເອົາ ເພດຊາຍ ແລະຍິງໃນຖ່ານກາງສະມາຊິກທີ່ຫ້າວຫັນ, ໂດຍການເຮັດຢ່າງມີຄວາມຍຸຕິທັມຕໍ່ການເປັນຕາງໜ້າຂອງທຸກເພດວັຍ ແລະກຸ່ມຊົນຊາດສ່ວນນ້ອຍ ແລະຜູ້ທີ່ເສັງອົງຄະ ທີ່ເປັນສະມາຊິກຂອງຄຣິສຕະຈັກ, ເພື່ອໃຫ້ມາຮັບໃຊ້ໃນຫ້ອງການປົກຄອງ ແລະຫ້ອງການນັກຄະນາຍົກ ໂດຍອີງຕາມຮູບແບບທີ່ນິຍົມໃຊ້ທີ່ສຸດໃນຄຣິສຕະຈັກນັ້ນໆ, ໂດຍອີງໃຊ່ການແນະນຳດັ່ງຕໍ່ລົງໄປນີ້.

### ກຳໜົດໄລຍະຮັບໃຊ້

a. ຈະບໍ່ມີຜູ້ປົກຄອງ ຫຼືນັກຄະນາຍົກໃດ ຈະຖືກເລືອກມາຮັບໃຊ້ວຽກງານເກີນກວ່າ ຊຸດລະ 3 ປີ ແລະຈະບໍ່ມີຜູ້ປົກຄອງ ຫຼືນັກຄະນາຍົກໃດທີ່ຕ້ອງຮັບໃຊ້ຕິດຕໍ່ກັນໄປເກີນກວ່າ 6 ປີ, ຈະເປັນແບບເຄິ່ງເວລາ ຫຼືເຕັມເວລາກໍຕາມ ຜູ້ປົກຄອງຄົນນຶ່ງ ຫຼືນັກຄະນາຍົກຄົນນຶ່ງທີ່ຮັບໃຊ້ມາໄດ້ 6 ປີແລ້ວບໍ່ຄວນມີສິດເລືອກເຂົ້າຮັບໃຊ້ໃນຄະນະທຳງານອັນເກົ່າຕໍ່ກວ່ານຶ່ງປີ. ຄຣິສຕະຈັກດັ່ງກ່າວນັ້ນຄວນໃຫ້ມີການບໍ່ໃຫ້ສິດອີກຫຼັງຈາກຮັບໃຊ້ມາແລ້ວນຶ່ງຊຸດເຕັມ. ຄວນຈະມີການແບ່ງອອກເປັນສາມຫ້ອງຂອງຜູ້ປົກຄອງທີ່ຮັບໃຊ້ໃນຄະນະປົກຄອງຊຸດນຶ່ງ ແລະໃຫ້ມີສາມຫ້ອງໃນຄະນະນັກຄະນາຍົກຊຸດນຶ່ງ, ຖ້າຫາກຄຣິສຕະຈັກນັ້ນເຫັນດີໃຫ້ມີຫ້ອງການນັກຄະນາຍົກນີ້. ແຕ່ລະຫ້ອງ ຄວນໃຫ້ມີຈະນວນສະມາຊິກເທົ່າກັນ ເທົ້າທີ່ຈະທຳໄດ້ ຊຶ່ງໃນນັ້ນຄວນມີຫ້ອງທີ່ໝົດອາຍຸໃນແຕ່ລະປີ, ຍົກເວັ້ນໃນກໍຣະນີທີ່ມີການເລືອກເອົາຜູ້ປົກຄອງ ຫຼືນັກຄະນາຍົກໃຫ້ຮັບໃຊ້ໃນເວລາສັ້ນ ເພື່ອຈຸດປະສົງວ່າຈະໃຫ້ມີການເທົ່າທຽມກັນໃນຈຳນວນສະມາຊິກຂອງແຕ່ລະຫ້ອງ ຫຼືເພື່ອຈະທຳການບັນຈຸຫ້ອງທີ່ເປົ່າວ່າງນັ້ນໃຫ້ເຕັມ. ແນວໃດກໍຕາມ ຄຣິສຕະຈັກອາດສາມາດທຳສິ່ງນຶ່ງອີກໄດ້ ໂດຍການເປີດກອງປະຊຸມທັງໝົດຄຣິສຕະຈັກ ທີ່ເຫັນດີວ່າຄວນເລືອກເອົາບຸກຄົນນຶ່ງ ຫຼືຫຼາຍຄົນ ທີ່ມີອາຍຸຕ່ຳກວ່າ 25 ປີ ເພື່ອໃຫ້ມາຮັບໃຊ້ໃນຫ້ອງການປົກຄອງ ຫຼືນັກຄະນາຍົກ ໃຫ້ຮັບໃຊ້ໃນໄລຍະ 1 ປີ 2 ປີ ຫຼື 3 ປີ. ຄວາມຈິງອື່ນໆກ່ຽວກັບການເລືອກຕັ້ງ, ການສະຖາປະນາ, ແລະການຮັບໃຊ້ ຈະຕ້ອງນຳມາໃຊ້ໃນການຂັດເລືອກເອົາຜູ້ປົກຄອງ ແລະນັກຄະນາຍົກນີ້. ຍຸກເວລາຂອງຜູ້ປົກຄອງ ຫຼືນັກຄະນາຍົກຄວນສິ້ນສຸດລົງ ໃນເວລາທີ່ຜູ້ສືບທອດຂອງເຂົາໄດ້ຖືກທຳການສະຖາປະນາແລ້ວ.

### ການສເນີຊື່ຂັດເລືອກ

b. ການສເນີຊື່ຂັດເລືອກ ຄວນມາຈາກຜູ້ຕາງໜ້າຂອງຄະນະກຳມະການເລືອກຕັ້ງ ຊຶ່ງມາຈາກສະມາຊິກທີ່ຫ້າວຫັນຂອງຄຣິສຕະຈັກ ຊຶ່ງຈະຕ້ອງປະກອບດ້ວຍເພດຊາຍແລະຍິງ, ໃຫ້ຄວາມຍຸດຕິທັມແກ່ການເປັນຕາງໜ້າຂອງທຸກເພດວັຍ, ທຸກເຊື້ອຊາດຜິວພັນ, ຫຼືຜູ້ທີ່ເສັງອົງຄະ ຊຶ່ງເປັນສະມາຊິກຂອງຄຣິສຕະຈັກນີ້. ຢ່າງນ້ອຍຕ້ອງມີສະມາຊິກຂອງຄະນະນີ້ 2ຄົນ ເປັນຜູ້ປົກຄອງທີ່ຖືກແຕ່ງຕັ້ງໂດຍຄະນະປົກຄອງ, ນຶ່ງໃນນັ້ນຕ້ອງເປັນຜູ້ທີ່ຍັງມີໜ້າທີ່ຢູ່ໃນຄະນະປົກຄອງ ແລະຈະຕ້ອງເປັນຜູ້ຄວບຄຸມຂອງຄະນະກຳມະການ. ຢ່າງນ້ອຍຕ້ອງມີຜູ້ນຶ່ງຈາກຄະນະນັກຄະນາຍົກທີ່ຖືກມອບໝາຍມາໃຫ້ຮ່ວມວຽກງານ ຖ້າຫາກໂບດນັ້ນມີຄະນະນັກຄະນາຍົກ. ສະມາຊິກຄະນະກຳມະການອື່ນໆ ຄວນຖືກເລືອກມາຈາກສະມາຊິກຄຣິສຕະຈັກ ຍົກເວັ້ນອາຈານ ແລະຈະຕ້ອງບໍ່ມີໃຜໃນນັ້ນເປັນຜູ້ປົກຄອງທີ່ຍັງທຳງານຢູ່. ອາຈານ ຄວນເປັນສະມາຊິກຂອງຄະນະກຳມະການນີ້ເຊັ່ນກັນ ຮັບໃຊ້ໃນການ

ເປັນຜູ້ທຳງານທາງນອກ ໂດຍບໍ່ມີສິດລົງຄະແນນສຽງ. ຄະນະກຳມະການເລືອກຕັ້ງນີ້ຄວນມີການເລືອກ ທຸກໆປີ ແລະຄະນະກຳມະການແຕ່ລະຄົນ ບໍ່ຄວນຮັບໃຊ້ເກີນກວ່າສາມປີຊ້ອນກັນ.

c. ຄຣິສຕະຈັກໃດກໍຕາມທີ່ມີສະມາຊິກຕ່ຳກວ່າ ເຈັດສິບຄົນ, ເໝືອນກັບຄຣິສຕະຈັກທຳມະດາທົ່ວໄປ, ຕ້ອງມີການເລືອກຕັ້ງຄະນະກຳມະການກຳມະການເລືອກຕັ້ງແບບນ້ອຍຄົນ ຊຶ່ງປະກອບດ້ວຍຜູ້ປົກຄອງຈາກຄະນະປົກຄອງນຶ່ງຄົນໂດຍການຖືກແຕ່ງຕັ້ງຈາກຄະນະປົກຄອງໃຫ້ມາເປັນຜູ້ຄວບຄຸມຄະນະນີ້ ແລະຢ່າງນ້ອຍຕ້ອງມີສະມາຊິກໃນຄຣິສຕະຈັກສອງຄົນ ທີ່ບໍ່ໄດ້ຮັບໃຊ້ໃນຄະນະປົກຄອງ. ດັ່ງທີ່ໄດ້ບົ່ງໄວ້ໃນ G-14.0201b ແນໃສ່ການໃຫ້ການມີຜູ້ຕາງໜ້າທີ່ສົມດູນ, ມີໄລຍະໃນການຮັບໃຊ້ໃນຄະນະກຳມະການ, ແລະອາຈານຄວນເປັນສະມາຊິກດ້ວຍ.

d. ການເລືອກຕັ້ງແທ້ງໝົດ ຄວນອີງໃສ່ເປົ້າໝາຍສຳຄັນຕົ້ນຕໍຂອງການມີສ່ວນ ແລະການເປັນຕົວແທນ ດັ່ງທີ່ໄດ້ບົ່ງໄວ້ໃນ G-4.0403 and G-9.0104

e. ຄວນມີການໃຫ້ໂອກາດຢ່າງເຕັມສ່ວນແກ່ຄຣິສຕະຈັກ ເພື່ອການເລືອກຕັ້ງເອົາສະມາຊິກທີ່ຫ້າວຫັນຄົນໃດຄົນນຶ່ງໃນຄຣິສຕະຈັກ.

## ວ່າດ້ວຍ ກົດລະບຽບຍົກເວັ້ນແກ່ບາງຄຣິສຕະຈັກ: G-14.0202

a. ອາດມີການຍົກເວັ້ນແກ່ຄຣິສຕະຈັກບາງບ່ອນທີ່ມີກົດລະບຽບດັ່ງຕໍ່ລົງໄປນີ້:

1. ຖ້າຫາກວ່າ ຄຣິສຕະຈັກໃດກໍຕາມ ທີ່ການລົງຕັ້ງແຂອງຄຣິສຕະຈັກ ກັບຄວາມຄືບໜ້າຂອງການເລືອກຕັ້ງແນັ້ນ ໂດຍອີງໃສ່ແນວຄິດຂອງຜູ້ປົກຄອງ ຫຼືມັກຄະນາຍົກ ຊຶ່ງບໍ່ສາມາດເຮັດໃຫ້ສອດຄ່ອງກັບກົດລະບຽບທີ່ໄດ້ບອກໄວ້ກ່ຽວກັບ ການເລືອກຕັ້ງ ເອົາ "ຜູ້ຊາຍ ແລະຜູ້ຍິງ ທີ່ມາຈາກສະມາຊິກທີ່ຫ້າວຫັນ, ບໍ່ໃຫ້ຄວາມສົມດູນແກ່ການເປັນຜູ້ຕາງໜ້າກຸ່ມຄົນໃນ ເພດວັຍ, ອາຍຸ, ຊົນຊາດ ແລະຜູ້ເສັຽອົງຄະຕ່າງໆ ທີ່ເປັນສະມາຊິກຂອງຄຣິສຕະຈັກ" (G-14.0201) ຄຣິສຕະຈັກ ຄວນສເນີຄຳຮ້ອງຂໍການຍົກເວັ້ນໃນການເຮັດຕາມກົດລະບຽບທີ່ບົ່ງໄວ້ນັ້ນ. ພາກເພຣັສໄບເທີຣີ ຄວນໃຫ້ຄວາມພໍໃຈວ່າ ພວກເຂົາໄດ້ເຮັດທຸກວິທີທາງເພື່ອຈະເຮັດຕາມກົດລະບຽບທີ່ບົ່ງໄວ້ແລ້ວນັ້ນ ເພຣັສໄບເທີຣີຕ້ອງມີການລົງຄະແນນສຽງເຫັນດີ ນຶ່ງສ່ວນສາມ ເພື່ອຈະໃຫ້ອະນຸຍາດໄດ້. ການອະນຸຍາດນັ້ນຈະບໍ່ໃຫ້ເກີດນກວ່າສາມປີ ໃນແຕ່ລະຄັ້ງ ແຕ່ອາດສາມາດຂໍຕໍ່ໄດ້ໂດຍການລົງມະຕິເຫັນດີ ສາມສ່ວນສີ່ ແລະສາມາດໃຫ້ຢຸດເຊົາໄດ້ ໂດຍມີການລົງຄະແນນສຽງ ແລະສຽງສ່ວນຫຼາຍນັ້ນໄດ້ເຫັນດີ.

2. ຄຣິສຕະຈັກໃດກໍຕາມ ຖ້າຫາກກ່ອນມີການຮວມກັນຣະຫວ່າງ ຄະນະເພຣັສໄບທີຣຽນໃນສະຫະຣັດ ແລະຄະນະເພຣັສໄບທີຣຽນແຫ່ງອາເມຣິກາ ເພື່ອການສ້າງຕັ້ງຄຣິສຕະຈັກ ເພຣັສໄບທີຣຽນແຫ່ງສະຫະຣັດອາເມຣິກາ ຈະບໍ່ຈຳເປັນຕ້ອງອີງໃສ່ຣະບຽບການທີ່ບົ່ງໄວ້ໃນ G-14.0102 ຊຶ່ງບອກວ່າທັງຍິງແລະຊາຍຕ້ອງຖືກເລືອກມາເປັນພະນັກງານຮັບໃຊ້ ແລະພວກຜູ້ປົກຄອງ ແລະມັກຄະນາຍົກ ຈະຕ້ອງຖືກເລືອກໃຫ້ມາຮັບໃຊ້ໂດຍການໃຫ້ມີໄລຍະຮັບໃຊ້ຈຳກັດ. ຄຣິສຕະຈັກນີ້ ອາດບໍ່ຈຳເປັນເຮັດຕາມຣະບຽບທີ່ບົ່ງໄວ້ ແລະອາດຕັດສິນເອົາເອງສຳຮັບໄລຍະການຮັບໃຊ້ ການເລືອກຕັ້ງຜູ້ມາຮັບໃຊ້ໃນຄະນະປົກຄອງ ຄະນະມັກຄະນາຍົກ ໂດຍມີການລົງຄະແນນສຽງແຕ່ລະປີ. ແລະມີການຮຽກປະຊຸມສະໄໝສາມັນປະຈຳປີໃນການເລືອກເອົາພະນັກງານຮັບໃຊ້. ນອກຈາກນັ້ນແລ້ວ ຕ້ອງມີການຂໍຄຳເຫັນຈາກພາກເພຣັສໄບເທີຣີ ທີ່ຄຣິສຕະຈັກນັ້ນເປັນສະມາຊິກຢູ່. ການການຂໍຄວາມເຫັນນັ້ນ ຣາຍງານສິ່ງທີ່ຈຳເປັນຂອງຄຣິສຕະຈັກນັ້ນຕ້ອງຖືກນຳມາສເນີຕໍ່ພາກ. ການລົງຄະແນນສຽງສຳຮັບເລື້ອງນີ້ຄວນເຮັດເປັນການລັບ.

３. ຫາກຄຣິສຕະຈັກໃດຮູ້ວ່າ ບໍ່ສາມາດເຮັດໄດ້ ຍ້ອນຈຳນວນສະມາຊິກຈຳກັດ ເພື່ອຈະສາມາດທຳການໝູນວຽນໄລຍະການຮັບໃຊ້ ຄຣິສຕະຈັກນັ້ນຄວນສເນີຂໍການຍົກເວັ້ນຈາກກົດຣະບຽບທີ່ບອກໄວ້ໃນ G-14.0102a ພາກເພຣັສໄບເທີຣີຄວນອະນຸຍາດ ໂດຍການລົງຄະແນນສຽງສ່ວນຫຼາຍ. ການອະນຸຍາດນີ້ ບໍ່ຄວນຫາໃ້ເກີນສາມປີ ໃນແຕ່ລະຄັ້ງແຕ່ສາມາດສືບຕໍ່ໄປໄດ້ ຫຼືສັ່ງຢຸດໄດ້ ໃນເວລາທີ່ມີການລົງຄະແນນສຽງສ່ວນຫຼາຍ.

b. ໃນພາກທີ່ສອງຊຶ່ງກ່າວມາຂ້າງເທິງນັ້ນຈະບໍ່ສາມາດປ່ຽນແປງໄດ້ພາຍໃນສິບຫ້າປີ ໂດຍອີງໃສ່ການສ້າງຕັ້ງຄຣິສຕະຈັກ ເພຣັສໄບທີຣຽນແຫ່ງສະຫາຣັດອາເມຣິກາ.

## ວ່າດ້ວຍ ຫ້ອງການທີ່ເປັນແບບລັກສະນະຖາວອນ **G-14.0203**

ການກຳໜົດຂອບເຂດ ໂດຍອີງໃສ່ G-14.0201a, ຊຶ່ງກຳໜົດເຖິງໄລຍະທີ່ຜູ້ປົກຄອງ ແລະມັກຄະນາຍົກຈະຖືກເລືອກ ຫຼືທຳງານນັ້ໝາຍເຖິງບຸກຄົນທີ່ມີໜ້າທີ່ຮັບໃຊ້ໃນຫ້ອງການປົກຄອງ ຫຼືຫ້ອງການມັກຄະນາຍົກ. ນອກຈາກນີ້ແລ້ວ ຫ້ອງການຜູ້ປົກຄອງ ແລະຫ້ອງການມັກຄະນາຍົກ ເປັນຫ້ອງການທີ່ຄວນແກ່ການນັບຖື ແລະຈະບໍ່ມີຜູ້ໃດຜູ້ນຶ່ງຈະສວຍໃຊ້ນອກຈາກສິ່ງທີ່ໄດ້ກຳໜົດໄວ້ໃນກົດຣະບຽບແຫ່ງການໃຊ້ວິນັຍ. ຜູ້ປົກຄອງ ຫຼືມັກຄະນາຍົກ ຫຼັງຈາກທີ່ຖືກເລືອກແລະຖືກສະຖາປະນາແລ້ວບໍ່ແມ່ນຈະສາມາດຖືກປົດເປື້ອງອອກໄດ້ແບບງ່າຍໆ, ຫຼືບໍ່ຖືກເລືອກໃຫ້ມາຮັບໃຊ້ໃນຫ້ອງການດັ່ງກ່າວອີກ ຫຼືໃຫ້ຢຸດເຊົາໃນການເປັນສະມາຊິກຂອງຄຣິສຕະຈັກນັ້ນໆໄດ້. ພ້ອມນີ້ ຜູ້ກ່ຽວຍັງສາມາດຖືກເລືອກເປັນຄະນະກຳມະການຮັບໃຊ້ໃນຫ້ອງການຂອງ ສະພາຕ່ຳ ຫຼືສະພາສູງໃນເວລາມີການເລືອກຕັ້ງ ເຖິງແມ່ນຜູ້ກ່ຽວຍັງມີວຽກງານຮັບໃຊ້ໃນຫ້ອງການຄະນະປົກຄອງຢູ່ກໍຕາມ.

## ວ່າດ້ວຍກອງປະຊຸມຄຣິສຕະຈັກ **G-14.0204**

a. ການເລືອກຕັ້ງເອົາຜູ້ປົກຄອງ ແລະມັກຄະນາຍົກ ຄວນຈັດຕັ້ງຂຶ້ນໃນເວລາມີກອງປະຊຸມປະຈຳປີຂອງຄຣິສຕະຈັກ ຊຶ່ງຖືກຮຽກເອີ້ນໃຫ້ມີຂຶ້ນໂດຍຄະນະປົກຄອງ. (G-7.0302)

b. ຜູ້ຄວບຄຸມຄວນອະທິບາຍເຖິງຈຸດປະສົງຂອງກອງປະຊຸມ ຈາກນັ້ນກໍຕັ້ງຄຳຖາມທີ່ວ່າ "ເວລານີ້ ທ່ານພ້ອມທີ່ຈະກ້າວສູ່ການເລືອກຕັ້ງຜູ້ປົກຄອງ ແລະມັກຄະນາຍົກແລ້ວບໍ ?" ຖ້າຫາກຄຣິສຕະຈັກຕຽມພ້ອມແລ້ວກໍໃຫ້ກອງປະຊຸມສືບຕໍ່ໄປໄດ້. ໃນທຸກກໍຣະນີ ການສືບຕໍ່ນີ້ຕ້ອງໃຫ້ມີການເລືອກຕັ້ງທີ່ສເນີມາຈາກສະມາຊິກທີ່ປະຊຸມທີ່ມີໜ້າໃນທີ່ນັ້ນ. ໃນເວລາທີ່ ຈຳນວນຜູ້ສະໝັກ ເທົ່າທຽມກັບຈຳນວນຂອງຄະນະປົກຄອງ ແລະຄະນະມັກຄະນາຍົກຊຶ່ງໄດ້ກຳໜົດໄວ້ແລ້ວ, ທາງທີ່ປະຊຸມຄວນທຳການເລືອກຕັ້ງໂດຍການລົງຄະແນນສຽງ ຫຼືໂດຍການຍົກມືຖ້າຫາກວ່າ ຈຳນວນຜູ້ສມັກຫາກເກີນກວ່າ ຈຳນວນຂອງຄະນະປົກຄອງ ແລະຄະນະມັກຄະນາຍົກທີ່ໄດ້ກຳໜົດໄວ້ທີ່ປະຊຸມຄວນທຳການເລືອກຕັ້ງແບບລັບ ໂດຍການມີເຈັ້ຍປ່ອນບັດເອົາ. ສຽງສ່ວນຫຼາຍເລືອກເອົາຜູ້ໃດ ຜູ້ນັ້ນກໍໄດ້ເປັນຜູ້ຖືກເລືອກ.

## ວ່າດ້ວຍການຈັດຕຽມຫ້ອງການ **G-14.0205**

ຖ້າຫາກບຸກຄົນໃດຖືກເລືອກເອົາເພື່ອຮັບໃຊ້ໃນຫ້ອງການຜູ້ປົກຄອງ ຫຼືຫ້ອງການມັກຄະນາຍົກ, ທາງຄະນະປົກຄອງຄວນໃຫ້ການປະສານງານປຶກສາຫາລືກັບເຂົາໃນວຽກງານການຮັບຜິດຊອບຫ້ອງການນັ້ນໆ. ຣາຍງານກອງປະຊຸມ

ຄະນະປົກຄອງ ຄວນບັນທຶກໄລຍະແຫ່ງການຮ່ຳຮຽນ ແລະການກະກຽມຂອງພວກເຂົາ. ຫຼັງຈາກນັ້ນ ທາງຄະນະປົກຄອງກໍສອບເສັງກ່ຽວກັບຄວາມເຊື່ອຂອງເຂົາ, ການຮັບຮູ້ທີ່ສຕິ, ການປົກຄອງ, ແລະວິນັຍ ຊຶ່ງບັນທຶກໄວ້ໃນກິດທຳມະນູນ ຂອງຄືສຕະຈັກ; ພ້ອມທັງໃນເຂົາຮັບຮູ້ເຖິງໜ້າທີ່ຂອງເຂົາຕໍ່ຫ້ອງການປົກຄອງ. ຫາກການສອບເສັງຖືກຜ່ານແລ້ວ, ຄະນະປົກຄອງຕ້ອງຈັດຫາມື້ທີ່ຈະທຳການສະຖາປະນາ ແລະແຕ່ງຕັ້ງພວກເຂົາ. ຖ້າຫາກການສອບບໍ່ຖືກຜ່ານໃນຈຳນວນຜູ້ສະມັກຄົນນຶ່ງ ຫຼືຫຼາຍຄົນ, ຄະນະປົກຄອງຕ້ອງລາຍງານເລື້ອງລາວນີ້ ຕໍ່ຄະນະເລືອກຕັ້ງຂອງຄຣິສຕະຈັກ ຊຶ່ງຄະນະນີ້ຈະໄດ້ນຳການເລືອກຕັ້ງແນ້ ມາສເນີຕໍ່ກອງປະຊຸມພິເສດຂອງຄຣິສຕະຈັກ ຕໍ່ຫ້ອງການໃດໆທີ່ຍັງຫວ່າງຢູ່.

### ວ່າດ້ວຍພິທີການສະຖາປະນາ ແລະພິທີການແຕ່ງຕັ້ງ G-14.0206

ພິທີການສະຖາປະນາ ແລະພິທີການແຕ່ງຕັ້ງ ຄວນມີເປົ້າໝາຍແນໃສ່ພຣະເຢຊູຄຣິສ ແລະຄວາມຊົມຊື່ນຍິນດີ ແລະໜ້າທີ່ຮັບຜິດຊອບໃນການຮັບໃຊ້ພຣະອົງໂດຍການປະກາດ ແລະວຽກງານການຮັບໃຊ້ຂອງຄຣິສຕະຈັກ ແລະຄວນປະກອບດ້ວຍບົດເທສນາ ທີ່ແທດເໝາະກັບພິທີການນັ້ນ. ອາຈານ ເປັນປະທານໃນການທຳພິທີ ຄວນອະທິບາຍໂດຍສັ້ນໆກ່ຽວກັບວຽກງານຂອງຫ້ອງການປົກຄອງ ແລະຫ້ອງການນັກຄະນາຍົກ.

### ວ່າດ້ວຍກົດທຳມະນູນແຫ່ງການຕັ້ງຄຳຖາມແກ່ເຈົ້າໜ້າທີ່ ທີ່ມາຮັບຕຳແໜ່ງ G-14.0207

ອາຈານ ຕ້ອງຖາມພວກທີ່ຕຽມຕົວໃນການທີ່ຈະຖືກສະຖາປະນາ ແລະຖືກແຕ່ງຕັ້ງ ໃຫ້ຢືນຢູ່ຕໍ່ໜ້າທີ່ປະຊຸມຄຣິສຕະຈັກ ແລະໃຫ້ເຂົາຕອບຄຳຖາມດັ່ງຕໍ່ລົງໄປນີ້:

a. ທ່ານມີຄວາມເຊື່ອໃນພຣະເຢຊູຄຣິສ ພຣະຜູ້ໄຖ່ຂອງທ່ານ, ຍ້ອມຮັບຮູ້ວ່າພຣະອົງຊຶ່ງເປັນພຣະຜູ້ເປັນເຈົ້າ ແລະຊຶ່ງເປັນສີສະຂອງຄຣິສຕະຈັກ, ແລະໂດຍທາງພຣະອົງ ທ່ານໄດ້ມີຄວາມເຊື່ອວ່າ ມີພຣະເຈົ້າອົງດຽວ ຊຶ່ງປະກອບດ້ວຍພຣະບິດາ, ພຣະບຸດ ແລະພຣະວິນຍານບໍຣິສຸດ; ທ່ານເຊື່ອດັ່ງນີ້ຫຼື ?

b. ທ່ານຍອມຮັບວ່າ ພຣະຄຳພີເດີມ ແລະພຣະຄຳພີໃໝ່, ໂດຍຣິດເດດແຫ່ງພຣະວິນຍານບໍຣິສຸດ, ເປັນພຣະຄຳພີອັນນຶ່ງອັນດຽວ ແລະມີອຳນາດໃນການເປັນພະຍານແຫ່ງພຣະເຢຊູຄຣິສເຈົ້າ ແລະການທຳງານຂອງຄຣິສຕະຈັກໃນໂລກ, ແລະເປັນພຣະຄຳຂອງພຣະເຈົ້າ ທີ່ມາເຖິງທ່ານ; ທ່ານຍອມຮັບດັ່ງນີ້ຫຼື ?

c. ທ່ານຍິນດີຍອມຮັບດ້ວຍຄວາມສຸດຈະຣິດໃຈ ໃນຂໍ້ຄິດເຫັນອັນສຳຄັນໃນຄວາມເຊື່ອຂອງຄະນະປະຕິຮູບ ຊຶ່ງໄດ້ບັນທຶກໄວ້ໃນປຶ້ມຫຼັກຄວາມເຊື່ອຂອງຄຣິສຕະຈັກຂອງພວກເຮົາ ວ່າເປັນສິ່ງທ່ຽງແທ້ແນ່ນອນ ແລະສາມາດເປັນສິ່ງເອີຍອີງໄດ້ ໃນການທີ່ຈະໃຫ້ເຮົາເຂົ້າໃຈເຖິງສິ່ງທີ່ພຣະຄຳພີໄດ້ນຳພາໃຫ້ເຮົາມີຄວາມເຊື່ອ ແລະປະຕິບັດ, ແລະທ່ານຍິນດີຈະຍອມຮັບເອົາການສັ່ງສອນ ແລະການນຳພາໂດຍປຶ້ມຫຼັກແຫ່ງຄວາມເຊື່ອນີ້ ໃນເວລາທີ່ທ່ານນຳພາຝູງຊົນໃຫ້ຮູ້ຈັກພຣະເຈົ້າ, ທ່ານຍິນດີຍອມຮັບດັ່ງນີ້ຫຼື ?

d. ທ່ານຍິນດີຈະຮັບໃຊ້ວຽກງານໃນຫ້ອງການຂອງທ່ານດ້ວຍຄວາມຊື່ສັດຕໍ່ພຣະເຢຊູຄຣິສ, ໂດຍການນຳພາຈາກຣິດອຳນາດແຫ່ງພຣະຄຳພີ, ແລະສືບຕໍ່ເດີນຕາມປຶ້ມຫຼັກແຫ່ງຄວາມເຊື່ອຂອງພວກເຮົາ, ທ່ານຍິນດີຫຼື ?

e. ທ່ານຍິນດີຢູ່ໃຕ້ການປົກຄອງຂອງກົດຣະບຽບຂອງຄຣິສຕະຈັກຂອງພວກເຮົາ, ແລະຍິນດີເຮັດຕາມກົດວິນັຍບໍ່? ທ່ານຍິນດີຈະສ້າງຄວາມເປັນມິດກັບຄົນໃນຄະນະຮັບໃຊ້ດ້ວຍກັນ, ທຳງານກັບພວກເຂົາ, ໂດຍການຂັບຕາມພຣະຄຳຂອງພຣະເຈົ້າ ແລະພຣະວິນຍານຊົງນຳ, ທ່ານຍິນດີດັ່ງນີ້ຫຼື?

f. ໃນຊີວິດສ່ວນຕົວຂອງທ່ານເອງ ທ່ານຍິນດີທີ່ຈະຕິດຕາມພຣະເຢຊູຄຣິສ, ຮັກເພື່ອນບ້ານຂອງທ່ານ, ແລະທຳງານເພື່ອການຄືນດີກັນກັບພຣະເຈົ້າຂອງໂລກ. ທ່ານຍິນດີຫຼື?

g. ທ່ານຍິນດີຈະສົ່ງເສີມສັນຕິພາບ, ຄວາມເປັນອັນນຶ່ງອັນດຽວກັນ, ແລະຄວາມບໍຣິສຸດຂອງຄຣິສຕະຈັກ. ທ່ານຍິນດີຫຼື?

h. ທ່ານຍິນດີຈະຮັບໃຊ້ຄົນອື່ນດ້ວຍສຸດກຳລັງ, ສະຕິປັນຍາ, ດ້ວຍຈິນຕະນາການ, ແລະດ້ວຍຄວາມຮັກ. ທ່ານຍິນດີຫຼື?

i. (ສຳຣັບຜູ້ປົກຄອງ) ທ່ານຍິນດີທີ່ຈະເປັນຜູ້ປົກຄອງທີ່ຊື່ສັດ, ໃຫ້ການເບິ່ງແຍງພີ່ນ້ອງ, ຈັດຕຽມການນະມັສການພຣະເຈົ້າຂອງພວກເຂົາ, ສ້າງຄວາມເຕີບໃຫຍ່, ແລະທຳການຮັບໃຊ້? ທ່ານຍິນດີທີ່ຈະແບ່ງເບົາໃນການປົກຄອງ ການປະຕິບັດວິນັຍ, ການຮັບໃຊ້ໃນການປົກຄອງຄຣິສຕະຈັກ, ແລະໃນການຮັບໃຊ້ພຣະເຈົ້າຂອງທ່ານ ທ່ານຍິນດີທີ່ຈະພະຍາຍາມ ສະແດງຄວາມຮັກ ແລະຄວາມຍຸຕິທັມ ຂອງພຣະເຢຊູຄຣິສ. ທ່ານຍິນດີດັ່ງນັ້ນຫຼື?

j. (ສຳຣັບນັກຄະນາຍົກ) ່ານຍິນດີຈະເປັນນັກຄະນາຍົກທີ່ຊື່ສັດ, ສັ່ງສອນການສົງເຄາະ, ຊຸກຍູ້ສິ່ງທີ່ໜ້າເປັນຫ່ວງ ແລະຊີ້ນຳພີ່ນ້ອງໃນການຊ່ວຍເຫຼືອພວກຄົນທີ່ຂາດເພື່ອນ ແລະຜູ້ທີ່ມີຄວາມຕ້ອງການຈຳເປັນ? ໃນການຮັບໃຊ້ພຣະເຈົ້າຂອງທ່ານ ທ່ານຍິນດີທີ່ຈະພະຍາຍາມສະແດງຄວາມຮັກ ແລະຄວາມຍຸຕິທັມຂອງພຣະເຢຊູຄຣິສ. ທ່ານຍິນດີດັ່ງນີ້ຫຼື?

### ວ່າດ້ວຍຄຳຖາມແຫ່ງກົດທຳມະນູນ ຕໍ່ທີ່ປະຊຸມຄຣິສຕະຈັກ G-14.0208

ຜູ້ປົກຄອງ ແລະນັກຄະນາຍົກ ທີ່ຖືກເລືອກ ຈະຕ້ອງຕອບຄຳຖາມທັງໝົດໃນທາງສົມ, ແລະຜູ້ປົກຄອງເກົ່າຄວນຢືນຢູ່ຕໍ່ໜ້າຄຣິສຕະຈັກກັບພວກເຂົາ ແລະຄວນໃຫ້ທີ່ປະຊຸມຕອບຄຳຖາມດັ່ງຕໍ່ລົງໄປນີ້:

a. ພວກເຮົາທີ່ເປັນສະມາຊິກຂອງຄຣິສຕະຈັກ, ຍິນດີຮັບເອົາທ່ານ: ( ຊື່ນາມຜູ້ຖືກເລືອກ) ໃຫ້ເປັນຜູ້ປົກຄອງ ຫຼືເປັນນັກຄະນາຍົກ, ຊຶ່ງໄດ້ຖືກເລືອກເອົາໂດຍພຣະເຈົ້າ, ໂດຍຜ່ານສຽງຮັບເອົາຂອງຄຣິສຕະຈັກ, ເພື່ອເປັນຜູ້ຮຳພາພວກເຮົາ ໃນທາງຂອງອົງພຣະເຢຊູຄຣິສເຈົ້າ. ພວກເຮົາຍິນດີຫຼື?

c. ພວກເຮົາຍິນດີທີ່ຈະໃຫ້ການຊຸກຍູ້ພວກເຂົາ, ໃຫ້ຄວາມນັບຖືໃນການຕັດສິນວຽກງານຂອງພວກເຂົາ, ແລະເດີນຕາມສິ່ງທີ່ພວກເຂົາໄດ້ນຳພາພວກເຮົາ ໃນການຮັບໃຊ້ພຣະເຢຊູຄຣິສ ຊຶ່ງເປັນສີສະຂອງຄຣິສຕະຈັກພຽງຜູ້ດຽວ. ພວກເຮົາຍິນດີຫຼື?

### ວ່າດ້ວຍການອະທິຖານ ແລະການວາງມື G-14.0209

a. ສະມາຊິກຂອງຄຣິສຕະຈັກໄດ້ທຳການຕອບຄຳຖາມທັງໝົດໃນທາງສົມແລ້ວ, ພວກທີ່ຈະຖືກສະຖາປະນາຄວນຊຸເຂົ່າລົງ, ຖ້າຫາກສາມາດທຳໄດ້, ເພື່ອການອະທິຖານວາງມືໃສ່ໂດຍຄະນະປົກຄອງ. ພວກທີ່ໄດ້ຖືກ

ສະຖາປະນາມາກ່ອນແລ້ວນັ້ນຄວນຢືນຢູ່, ພ້ອມໆກັນກັບສະມາຊິກຂອງຄຣິສຕະຈັກສຳຣັບການອະທິຖານເພື່ອການ ສະຖາປະນາ ແລະການແຕ່ງຕັ້ງ. ຄະນະປົກຄອງ ອາດຈະເຊີນຊວນຜູ້ປົກຄອງຄົນອື່ນໆ ແລະອາຈານໃຫ້ມີສ່ວນ ໃນການວາງມືອະທິຖານນັ້ນ.

b. ກ່າວຄຳປາສັຍ

ຜູ້ຄວບຄຸມຄວນກ່າວແກ່ຜູ້ທີ່ໄດ້ຮັບການສະຖາປະນາແລະແຕ່ງຕັ້ງວ່າ:

"ແຕ່ນີ້ໄປ ພວກທ່ານໄດ້ເປັນຜູ້ປົກຄອງ ແລະນັກຄະນາຍົກຂອງຄຣິສຕະຈັກແລ້ວ. ສິ່ງໃດກໍຕາມທີ່ທ່ານເຮັດໃນວາຈາ ແລະການກະທຳກໍດີ, ຈົ່ງເຮັດທຸກສິ່ງ ໃນພຣະນາມແຫ່ງພຣະເຢຊູຄຣິສເຈົ້າ, ຈົ່ງໃນການຂອບພຣະຄຸນແດ່ພຣະບິດາເຈົ້າ ໂດຍທາງພຣະເຢຊູຄຣິສຢູ່ສເມີ. ອາແມນ.

c. ການຕ້ອຍຮັບຂອງຄະນະປົກຄອງ

ຈາກນັ້ນ ສະມາຊິກໃນຄະນະປົກຄອງ, ແລະຜູ້ອື່ນໆທີ່ເຫັນວ່າສົມຄວນ, ຄວນໃຫ້ການຕ້ອນຮັບແກ່ຜູ້ຖືກສະຖາປະນາ ແລະຖືກແຕ່ງຕັ້ງໃໝ່ ເພື່ອຕ້ອນຮັບພວກເຂົາເຂົ້າສູ່ການຮັບໃຊ້ພຣະເຈົ້າໃນຄຣິສຕະຈັກ.

d. ການຕ້ອນຮັບຂອງສະມາຊິກຄຣິສຕະຈັກ

ຫຼັງການນະມັສການ, ມັນເປັນການສົມຄວນທີ່ຈະໃຫ້ສະມາຊິກໄດ້ສະແດງຄວາມຍິນດີກັບຜູ້ປົກຄອງຄົນໃໝ່ຂອງພວກເຂົາ.

## ວ່າດ້ວຍການລົບລ້າງສາຍພົວພັນ **G-14.0210**

ຜູ້ປົກຄອງ ຫຼືນັກຄະນາຍົກ ສາມາດຂໍລາອອກຈາກຕຳແໜ່ງ ດ້ວຍເຫດຜົນທີ່ດີໆໄດ້, ໂດຍການເຫັນດີຂອງຄະນະປົກຄອງ. ໃນການຢຸດເຊົາການເປັນສະມາຊິກຂອງຄຣິສຕະຈັກໃດນຶ່ງນັ້ນ ຫຼືການຢຸດເຊົາໃນການເປັນຜູ້ປົກຄອງ ຫຼືນັກຄະນາຍົກ ຄືການຢຸດທຳງານໃນຄະນະປົກຄອງ ຫຼືຄະນະບອດ໌. ໃນເວລາທີ່ ຜູ້ປົກຄອງ ຫຼືນັກຄະນາຍົກມີການຍ້າຍທີ່ຢູ່ ຫຼືເສັ້ງອົງຄະ, ຊຶ່ງບໍ່ສາມາດຈະເຮັດໜ້າທີ່ນີ້ໄດ້ເປັນເວລາຢ່າງນ້ອຍ ນຶ່ງປີ, ການພົວພັນທີ່ເປັນແບບລັກສະນະຫ້າວຫັນນີ້ຄວນໃຫ້ສິ້ນສຸດລົງ ໂດຍຄະນະປົກຄອງ ນອກຈາກຄະນະເຫັນວ່າມີເຫດຜົນພຽງພໍທີ່ຈະໃຫ້ສືບຕໍ່ໄປໄດ້ ແລະເຫດຜົນດັ່ງກ່າວນັ້ນ ຄວນບັນທຶກໄວ້ໃນປື້ມຣາຍງານ.

## ວ່າດ້ວຍ ການປົດປ່ອຍອອກຈາກການເຮັດວຽກງານໃນຫ້ອງການສະຖາປະນາ **G-14.0211**

a. ຖ້າຫາກຜູ້ປົກຄອງ ຫຼືນັກຄະນາຍົກຄົນໃດເຮັດຜິດກົດຣະບຽບທີ່ໄດ້ບົ່ງໄວ້ໃນ D-7.0200 and D-7.0800; ເຮັດຜິດໂດຍທີ່ບໍ່ໄດ້ມີຣາຍການກ່າວຫາ, ແລະນອກຈາກສິ່ງດັ່ງກ່າວແລ້ວ ຜູ້ກ່ຽວເປັນຄົນດີບຸຄົນດັ່ງຕ້ອງຊຽນ ຄຳຮ້ອງຕໍ່ຄະນະປົກຄອງຂອງຄຣິສຕະຈັກທີ່ຜູ້ກ່ຽວເປັນສະມາຊິກຢູ່ນັ້ນເພື່ອຂໍອະນຸຍາດໃຫ້ປົດປ່ອຍຕົນເອງ ອອກຈາກຫ້ອງການສະຖາປະນາ. ຄນະປົກຄອງ, ໃນການປົດປ່ອຽຜູ້ກ່ຽວນັ້ນ ຕ້ອງລຶບຊື່ຂອງຜູ້ກ່ຽວອອກຈາກ ປື້ມທະບຽນທີ່ກ່ຽວຂ້ອງຂອງຄຣິສຕະຈັກ. ຈະບໍ່ມີການພິພາກສາໃດໆ ຕໍ່ຂໍ້ບົກພ່ອງຂອງຜູ້ປົກຄອງ ຫຼືນັກຄະນາຍົກ ຕໍ່ເຫດການດັ່ງກ່າວນີ້.

b. ການປົດປ່ອຍອອກຈາກຫ້ອງການສະຖາປະນາຂອງຄະນະປົກຄອງ ຫຼືນັກຄະນາຍົກ ຮຽກຮ້ອງໃຫ້ມີການຢຸດເຊົາກິຈການທັງໝົດໃນຫ້ອງການນັ້ນໆ. ວິທີການບົ່ງເອົາຜູ້ປົກຄອງ ຫຼືນັກຄະນາຍົກນັ້ນ ຈະບໍ່

ສາມາດນຳມາໃຊ້ໄດ້ໃນທີ່ນີ້. ຖານະຂອງຜູ້ປົກຄອງ ຫຼືນັກຄະນາຍົກໃນການຖືກປົດປ່ອຍນັ້ນ ຈະຕ້ອງ ເປັນເໝືອນກັບການປົດປ່ອຍສະມາຊິກຂອງຄຣິສຕະຈັກໂດຍທົ່ວໄປ.

c. ຖ້າຫາກຜູ້ກ່ຽວທີ່ຖືກປົດປ່ອຍອອກໄປນັ້ນ ຢາກກັບຄືນມາຮັບໃຊ້ອີກ ຜູ້ກ່ຽວຕ້ອງຂຽນຄຳຮ້ອງຂໍໄປຍັງ ຄຣິສຕະຈັກທີ່ອະນຸຍາດໃຫ້ຜູ້ກ່ຽວລາອອກມານັ້ນ. ໂດຍການເຫັນດີຂອງຄະນະປົກຄອງ ຜູ້ກ່ຽວສາມາດ ກັບຄືນມາທຳງານໃນຫ້ອງການສະຖາປະນາໄດ້ ໂດຍບໍ່ຈຳເປັນຕ້ອງຖືກສະຖາປະນາອີກ.

## ວ່າດ້ວຍການຈັດຕຽມເພື່ອຮັບໃຊ້ໃນຫ້ອງການອາຈານ G-14.0300

### ວ່າດ້ວຍໜ້າທີ່ຮັບຜິດຊອບຂອງພາກເພຣັສໄບເທີຣີ G-14.0301

ມັນເປັນສິ່ງສຳຄັນທີ່ຜູ້ທີ່ຈະຖືກສະຖາປະນາໃຫ້ເປັນອາຈານ ດ້ານພຣະທັມ ແລະພິທີສິນ ຈະໄດ້ຮັບການຕຽມ ພ້ອມຢ່າງຄົບເຕັມປ່ຽມ ພາຍໃຕ້ການຊີ້ນຳຂອງ ຄະນະກຳມະການ ຈັດຕຽມການຮັບໃຊ້ (G-9.0902) ດ້ວຍເຫດ ຜົນນີ້, ທາງພາກເພຣັສໄບເທີຣີຕ້ອງມີສັນຍາກັບຜູ້ທີ່ຈະກຽມຕົວເປັນອາຈານນັ້ນ. ການພົວພັນນີ້ ຈະຕ້ອງ ແບ່ງອອກເປັນສອງໄລຍະຄື ໄລຍະຕິດຕາມ ແລະໄລຍະສມັກເຂົ້າສອບ.

### ວ່າດ້ວຍ ນິຍາມແຫ່ງການຕິດຕາມ G-14.0302

ຈຸດປະສົງຂອງໄລຍະແຫ່ງການຕິດຕາມນີ້ ແມ່ນໄລຍະແຫ່ງການໃຫ້ໂອກາດແກ່ຄຣິສຕະຈັກ ແລະຜູ້ຖືກນີຄວາມ ເຊື່ອວ່າພຣະເຈົ້າໄດ້ເອີ້ນໃຫ້ເປັນອາຈານນັ້ນ ໃຫ້ຊອກຄົ້ນຫາການຊົງເອີ້ນນັ້ນດ້ວຍກັນ ເພື່ອໃຫ້ຮູ້ວ່າ ການຕິດ ຕາມເພື່ອໃຫ້ເປັນອາຈານນີ້ໄດ້ຖືກຮັບຮູ້ ແລະໄດ້ມີປະສົບການຮ່ວມກັນ.

### ວ່າດ້ວຍໄລຍະແຫ່ງການຕິດຕາມ G-14.0303

ຄວາມຄືບໜ້າ ແລະສິ່ງຮຽກຮ້ອງຕ້ອງການ ໃນໄລຍະມີການຕິດຕາມຄວນມີດັ່ງຕໍ່ລົງໄປນີ້:

a. ບຸກຄົນຜູ້ມີຄວາມຕ້ອງການຢາກເປັນຜູ້ຖືກຕິດຕາມ ຕ້ອງສເນີໃຫ້ຄະນະປົກຄອງຂອງຄຣິສຕະຈັກນັ້ນໆ ຊາບກ່ຽວກັບຈຸດປະສົງຂອງຕົນ ໃນການຢາກຈະເປັນອາຈານຂອງຕົນນັ້ນ.

b. ບຸກຄົນນັ້ນ ຄວນເປັນສະມາຊິກທີ່ຫ້າວຫັນຂອງຄຣິສຕະຈັກນັ້ນ ຢ່າງນ້ອຍ ຫົກເດືອນ.

c. ຄະນະປົກຄອງຄວນພົວພັນກັບຄະນະກຳມະການແຫ່ງການກະກຽມອາຈານ ເພື່ອຂໍຄຳແນະນຳໃນການ ດຳເນີນງານຊຶ່ງໄດ້ຖືກນຳໃຊ້ໃນພາກເພຣັສໄບເທີຣີນັ້ນໆ.

d. ຄະນະປົກຄອງຄວນໃຫ້ຄຳປຶກສາຫາລືກັບບຸກຄົນນັ້ນໆ, ຖ້າຫາກຜູ້ກ່ຽວຮ້ອງຂໍໃຫ້ຈົດຊື່ຕົນເອງໃຫ້ເປັນ ຜູ້ຖືກຕິດຕາມ, ຄະນະປົກຄອງຄວນສົ່ງຄຳແນະນຳຜູ້ກ່ຽວໃຫ້ພາກ ໂດຍຜ່ານທາງ ສະມຽນພາກ ດ້ວຍການສະແດງຄວາມນັບຖືຕໍ່ການຮ້ອງຂໍນັ້ນ.

e. ໃນເວລາໄດ້ຮັບໜັງສືແນະນຳຈາກຄະນະປົກຄອງແລ້ວ ຄະນະກຳມະການຈັດຕຽມການຮັບໃຊ້ ຕ້ອງແນະ ນຳໄປຫາພາກເພື່ອຈົດຊື່ຜູ້ກ່ຽວເຂົ້າໃນທະບຽນຂອງຜູ້ຖືກຕິດຕາມ. ຄະນະກຳມະການຈັດຕຽມການຮັບໃຊ້ ຕ້ອງທຳການສຳພາດຜູ້ກ່ຽວ ກ່ອນທີ່ຈະມີການສເນີແນະນຳຕົວ. ອັນເວລາທີ່ທາງພາກໄດ້ຈົດຊື່ຜູ້ກ່ຽວ

ຕ້ອງກາຍເປັນອັນເລີ່ມຕົ້ນແຫ່ງການທຳສັນຍາການພົວພັນນີ້. ໃນໄລຍະນີ້ຄວນໃຊ້ເວລາຢ່າງນ້ອຍສອງປີ, ຢ່າງນ້ອຍຕ້ອງປີນຶ່ງຈຶ່ງມີສິດເປັນຜູ້ເຂົ້າສມັກຮັບໃຊ້ໄດ້ ດັ່ງທີ່ໄດ້ບົ່ງໄວ້ໃນ G-14.0401. (see G-14.0313c ສຳຮັບກໍຣະນີພາການຍົກເວັ້ນ) ພາກອາດນອບອຸກງານໃຫ້ຄະນະກຳມະການຈັດຕຽມການຮັບໃຊ້ຂອງຕົນເອງ ມີສິດໃນການລົງທະບຽນຜູ້ຖືກຕິດຕາມ ໂດຍການຈັດຕຽມໃຫ້ມີການຣາຍງານໃນກອງປະຊຸມພາກໃນໂອກາດຕໍ່ໄປ (G-9.0403)

f. ໄລຍະແຫ່ງການເປັນຜູ້ຖືກຕິດຕາມ ຕ້ອງໃຫ້ເວລາທີ່ພຽງພໍແກ່ຜູ້ຖືກຕິດຕາມ, ຄະນະປົກຄອງ ແລະຄະນະກຳມະການຈັດຕຽມການຮັບໃຊ້ຈະເປັນຜູ້ຕັດສິນວ່າ ຜູ້ຖືກຕິດຕາມນັ້ນຄວນຈະສເນີຂໍເຂົ້າເປັນຜູ້ສມັກຮັບໃຊ້. ໃນໄລຍະນີ້, ຄະນະກຳມະການຈັດຕຽມການຮັບໃຊ້ຂອງພາກ ຕ້ອງໃຫ້ມີເອກກະສານຢ່າງພຽບພ້ອມຊຶ່ງຈະຖືກຈັດຕຽມໃຫ້ໂດຍຜູ້ຖືກຕິດຕາມ, ການແນະນຳຕົວເອງ ແລະບົດຣາຍງານຈາກບໍຣິການການໃຊ້ຄຳປຶກສາ, ຄະນະປົກຄອງ, ແລະໂຮງຮຽນບ່ອນທີ່ຜູ້ຖືກຕິດຕາມນັ້ນ, ຖ້າຫາກວ່າ ຜູ້ຖືກຕິດຕາມນັ້ນເປັນນັກຮຽນ.

g. ໄລຍະທ້າຍຂອງການເປັນຜູ້ຖືກຕິດຕາມ, ຜູ້ຖືກຕິດຕາມແຕ່ລະຄົນ ຕ້ອງສະແດງຄວາມປະຕິຍານໃນການຮັບໃຊ້ພຣະເຈົ້າຂອງໂດຍການ:

1. ຂຽນຄວາມເຂົ້າໃຈຂອງຕົນເອງໃນການຮຽນກ່ຽວກັບປະເພນີຂອງການປະຕິຮູບ ແລະໄດ້ມີການພົວພັນກັບການຊົງເອີ້ນຂອງຕົນແບບໃດ.

2. ຂຽນຫຼັກຄວາມເຊື່ອຂອງຕົນເອງ ອີງໃສ່ຄວາມເຂົ້າໃຈຂອງຕົນຕໍ່ປະເພນີຂອງຄະນະປະຕິຮູບ.

3. ໃຫ້ບັຣຍາຍ ຢ່າງນ້ອຍສ່ວນນຶ່ງຂອງແນວຄິດຂອງຕົນ ຈາກຫຼັກແຫ່ງຄວາມເຊື່ອຂອງຕົນເອງນັ້ນກ່ຽວກັບພຣະເຈົ້າ, ມະນຸດ, ແລະການພົວພັນຣະຫວ່າງພຣະເຈົ້າແລະມະນຸດ.

4. ບົດຂຽນກ່ຽວກັບຄວາມໝາຍໃນການເປັນເພຣັສໄບທີຣຽນ ໃຫ້ບອກເຖິງສິ່ງດັ່ງກ່າວນັ້ນ ມີຜົນສະທ້ອນແນວໃດຕໍ່ການຂະຫຍາຍຕົວຂອງຄຣິສຕະຈັກນັ້ນໆ.

5. ບົດຂຽນຄວາມເຂົ້າໃຈຂອງຕົນເອງ ຕໍ່ສິ່ງທີ່ມີຜົນສະທ້ອນຕໍ່ຕົນເອງ ແລະຕໍ່ເບື້ອງຫຼັງຂອງປະເພນີວັທນະທັມ ແລະໃຫ້ຮວມເຖິງສິ່ງທີ່ໜ້າເປັນຫ່ວງໃນການຮັກສາສະພາບຈິດວິນຍານ, ຮ່າງກາຍ, ແລະສະພາບແຫ່ງສຸຂະພາບຈິດຂອງຕົນ.

6. ບົດຂຽນກ່ຽວກັບໜ້າທີ່ຮັບຜິດຊອບໃນການປະຕິບັດງານຂອງອາຈານ, ຮວມທັງຄວາມເອົາໃຈໃສ່ຕໍ່ຂອງປະທານຂອງຕົນຕໍ່ການຮັບໃຊ້ນັ້ນ ແລະຕໍ່ພາກສ່ວນທີ່ສົມຄວນໃນການເຮັດໃຫ້ເຕີບໃຫຍ່.

## ວ່າດ້ວຍ ນິຍາມຂອງຜູ້ເຂົ້າສມັກຮັບໃຊ້ **G-14.0304**

ຈຸດປະສົງຂອງການສເນີເຂົ້າສມັກຮັບໃຊ້ນີ້ ແມ່ນການຈັດຕຽມບຸກຄົນທີ່ຈະມາຮັບໃຊ້ພຣະເຈົ້າໃນຄຣິສຕະຈັກຂອງອາຈານຢ່າງເຕັມສ່ວນ. ສິ່ງດັ່ງກ່າວນີ້ ຕ້ອງມີການຊີ້ນຳຢ່າງຄົບຖ້ວນ ແລະການພິຈາລະນາຂອງຜູ້ສເນີເຂົ້າສມັກ, ໂດຍການໃຊ້ເນື້ອໃນແຫ່ງການພົວພັນທີ່ມີມານັ້ນ.

## ວ່າດ້ວຍໄລຍະຄືບໜ້າແຫ່ງການເປັນຜູ້ເຂົ້າສມັກ G-14.0305

ການຄືບໜ້າຂອງຜູ້ເຂົ້າສມັກເປັນຜູ້ຮັບໃຊ້ມີດັ່ງລຸ່ມນີ້:

a. ຜູ້ຖືກຕິດຕາມຕ້ອງຍື່ນຄຳຮ້ອງໄປຍັງພາກ ໂດຍຜ່ານທາງສມຽນຂອງພາກ ເພື່ອຂໍສມັກເປັນຜູ້ຮັບໃຊ້ໃນຫ້ອງການຂອງພຣະຄຳແລະພິທີສິນ ໂດຍຜ່ານທາງຄະນະປົກຄອງຂອງຄຣິສຕະຈັກຂອງຜູ້ກ່ຽວເອງ.

b. ຄະນະປົກຄອງຕ້ອງໃຫ້ການແນະນຳກັບຜູ້ຖືກຕິດຕາມນັ້ນ, ກວດເບິ່ງເອກສານຫຼັກຖານຕ່າງຂອງໄລຍະທີ່ບຸກຄົນນັ້ນໄດ້ເປັນຜູ້ຖືກຕິດຕາມ, ຈາກນັ້ນກໍເຮັດໜັງສືແນະນຳໄປຍັງພາກ ໂດຍຜ່ານສມຽນຂອງພາກ ໂດຍໃຫ້ສອດຄ່ອງກັບຄຳຮ້ອງຂໍຂອງຜູ້ກ່ຽວນັ້ນ.

c. ຄະນະກຳມະການຈັດຕຽມຜູ້ຮັບໃຊ້ ຕ້ອງໃຫ້ການແນະນຳກັບຜູ້ຖືກຕິດຕາມ ແລະກວດຄືນເຖິງເອກສານຫຼັກຖານຕ່າງໆ ທີ່ສະແດງບອກວ່າ ຜູ້ຖືກຕິດຕາມຄົນນັ້ນ ຕຽມພ້ອມທີ່ຈະກາຍເປັນຜູ້ສມັກຮັບໃຊ້ໄດ້ແລ້ວ.

d. ຄະນະກຳມະການຈັດຕຽມຜູ້ຮັບໃຊ້ ຕ້ອງໃຫ້ການຕັດສິນໃຈຢ່າງແນ່ວແນ່ໃນການໃຫ້ໜັງສືແນະນຳຜູ້ກ່ຽວໄປຍັງພາກໂດຍການມອງເຫັນວ່າ ຜູ້ຖືກຕິດຕາມຄົນນັ້ນ ຈະຖືກຮັບເອົາເຂົ້າເປັນຜູ້ສມັກຮັບໃຊ້ໄດ້. ພາກຕ້ອງມີການລົງມະຕິໃນທຸກຄັ້ງທີ່ມີການສເນີນາຂອງຄະນະກຳມະການຈັດຕຽມຜູ້ຮັບໃຊ້.

e. ພາກຕ້ອງໄດ້ຮັບບົດຣາຍງານ ແລະໜັງສືແນະນຳຈາກຄະນະກຳມະການນັ້ນ ແລະຕ້ອງທຳການສອບຜູ້ຖືກຕິດຕາມນັ້ນດ້ວຍການສ່ວນຕົວ ໂດຍການຍອມຮັບຕໍ່ຫຼັກຄວາມເຊື່ອໃນການເປັນຄຣິສຕຽນຂອງຜູ້ກ່ຽວ, ແບບລັກສະນະໃນການຮັບໃຊ້ພຣະເຈົ້າຂອງຜູ້ກ່ຽວ, ແລະການເຄື່ອນໄຫວຂອງຜູ້ກ່ຽວໃນການເປັນຜູ້ຮັບໃຊ້.

f. ຖ້າຫາກການສອບນັ້ນຖືກຜ່ານ ພາກຄວນຮັບເອົາຜູ້ຖືກຕິດຕາມຄົນນັ້ນ ໃຫ້ກາຍເປັນຜູ້ສມັກເຂົ້າຮັບໃຊ້ໄດ້ ໂດຍຫຼັງຈາກທີ່ໄດ້ເຮັດສິ່ງດັ່ງຕໍ່ລົງໄປນີ້ ຊຶ່ງທາງຜູ້ຄວບຄຸມຈະມີຄຳຖາມສຳຣັບຜູ້ກ່ຽວດັ່ງນີ້:

1. ທ່ານເຊື່ອວ່າ ທ່ານເອງໄດ້ຖືກເອີ້ນຈາກພຣະເຈົ້າໃຫ້ມາເປັນຜູ້ຮັບໃຊ້ທາງດ້ານພຣະຄຳແລະພິທີສິນນີ້ບໍ ?
2. ທ່ານສັນຍາວ່າອີງໃສ່ພຣະຄຸນຂອງພຣະເຈົ້າ ໃນການຢຶກໝັ້ນໃນຖານະເປັນຄຣິສຕຽນຂອງທ່ານ ແລະການດຳຣົງຊີວິດ ແລະພ້ອມທັງມີຄວາມຕັ້ງໃຈ ແລະໝັ້ນໃຈໃນການຕຽມຕົວເປັນຜູ້ຮັບໃຊ້ນີ້. ທ່ານສັນຍາໄດ້ຫຼື ?
3. ທ່ານຍອມຮັບເອົາການຄວບຄຸມດູແລຂອງພາກ ໃນກໍຣະນີວຽກງານແຫ່ງການກະກຽມການຮັບໃຊ້ນີ້ບໍ ?
4. ທ່ານຕັດສິນໃຈຍອມໃຫ້ພາກເພຣັສໄບເທີຣີນີ້ ຮັບເອົາທ່ານເປັນຜູ້ເຂົ້າສມັກຮັບໃຊ້ພຣະເຈົ້າ ໃນເຄືອຂອງເພຣັສໄບທີຣຽນແຫ່ງສະຫະຣັດອາເມຣິການຫຼື ? ທ່ານຕັດສິນໃຈແນ່ຫຼື ?

g. ຖ້າຫາກຄຳຖາມດັ່ງກ່າວ ຖືກຕອບໃນທາງສິນ, ການກ່າວມອບໝາຍຢ່າງສັ້ນໆຄວນໃຫ້ມີ, ຊື່ຂອງຜູ້ເຂົ້າສມັກຄວນຖືກບັນທຶກໄວ້ໃນປຶ້ມທະບຽນຂອງຜູ້ສມັກຂອງພາກ, ແລະຄວນສືບຕໍ່ດ້ວຍການອະທິຖານ.

h. ຫາກໄດ້ຮັບການຮ້ອງຂໍຈາກຜູ້ສມັກ ແລະຄະນະປົກຄອງຂອງຜູ້ກ່ຽວ, ພາກນັ້ນອາດຈັດຫາພິທີການຕ້ອນຮັບຜູ້ກ່ຽວ ຊຶ່ງຈະຖືກນຳພາໂດຍຜູ້ຕາງໜ້າຂອງພາກ ໂດຍທຳຊ້ອງໜ້າຂອງຜູ້ເຂົ້າສມັກແລະສະມາຊິກຄຣິສຕະຈັກນັ້ນໆ.

i. ໄລຍະແຫ່ງການເປັນຜູ້ສມັກ ຈະສືບຕໍ່ໄປຈົນກວ່າຜູ້ກ່ຽວຈະໄດ້ຖືກຮັບຮູ້ໃນການເອີ້ນຮຽກນັ້ນ ແລະຖືບທຳການສອບ ແລະສະຖາປະນາ, ຫຼືຈົນກວ່າຊື່ຂອງຜູ້ກ່ຽວຖືກລຶບອອກຈາກທະບຽນແຫ່ງການເປັນຜູ້ສມັກ ອີງໃສ່ສິ່ງບົ່ງໄວ້ໃນ G-14.0312

j. ໄລຍະສຸດທ້າຍຂອງການເປັນຜູ້ສມັກ, ຜູ້ສມັກແຕ່ລະຄົນທີ່ຈະຖືກສະຖາປະນາ ຈະຕ້ອງສະແດງຄວາມພ້ອມພຽງຂອງຕົນໃນການຕຽມພ້ອມຈະເປັນຜູ້ຮັບໃຊ້ໃນດ້ານພຣະຄຳແລະພິທີສິນໂດຍ:

1. ສະແດງຫຼັກຖານແຫ່ງການສຳເຣັດໃນການສຶກສາທາງງດ້ານສາສນາສາດ, ພຣະຄຳພີ, ກິດທຳນະມູນ, ແລະການນະມັສການແລະພິທີສິນ ຊຶ່ງເປັນການຢັ້ງຢືນເຖິງຄວາມສຳເຣັດຕາມສິ່ງທີ່ບົ່ງໄວ້ໃນ G-14.0310 ແລະຫຼັກຖານຢັ້ງຢືນເຖິງຄວາມຊຳນານໃນການເປັນຜູ້ຮັບໃຊ້ ຊຶ່ງສະແດງອອກດ້ວຍຜູ້ຄວບຄຸມໃນການປະຕິບັດການຮັບໃຊ້ນັ້ນ.

2. ສະແດງຫຼັກຖານໃນຄວາມພ້ອມພຽງການການຮັບເອົາການເອີ້ນຮຽກຂອງພາກໃນໄລຍະຂ້າມຜ່ານ ແລະແຜນການທີ່ຈະສືບຕໍ່ຮ່ຳຮຽນ ແລະເຕີບໃຫຍ່ ( G-11.0103n, G-14.0506 ໃນປະໂຫຍກສຸດທ້າຍ)

3. ສະແດງຄວາມຄິດເຫັນດ້ານລັກສາສນາສາດ ທີ່ສອດຄ່ອງກັບຫຼັກແຫ່ງຄວາມເຊື່ອຂອງຄຣິສຕະຈັກ.